# ຊີ້ແນະ ກ່ຽວກັບການນະມັສການພຣະເຈົ້າ
# Directory of Worship

## ພາກນຶ່ງ Chapter I.

### ຄວາມຝຶດຟື້ນ ໃນການນະມັສການພຣະເຈົ້າ ຂອງຊາວຄຣິສຕຽນ
### The Dynamics of Christian Worship (W-1.0000)

**1. ການນະມັສການພຣະເຈົ້າຂອງຊາວຄຣິສຕຽນ: ອາຣັມພະບົດ. W-1.1000**

ວ່າດ້ວຍການນະມັສການຂອງຊາວຄຣິສຕຽນ: W-1.1001

ການນະມັສການພຣະເຈົ້າຂອງຊາວຄຣິສຕຽນ ໝາຍເຖິງການສັຣເສີນ ແລະການໃຫ້ກຽດ, ຊຶ່ງໝາຍເຖິງການສເລີນ ສລອງໄຊຊະນະ ແລະຣິດອຳນາດ ໃຫ້ແກ່ສານພຣະພາກຂອງພຣະເຈົ້າຢ່າງມີຊີວິດຊີວາ. ໃນການນະມັສການ, ບັນດາໄພ່ພົນຂອງພຣະເຈົ້າ ຕ້ອງຮັບຮູ້ວ່າ ພຣະເຈົ້າໄດ້ຊົງສະຖິດຢູ່ໃນໂລກນີ້ ແລະຊົງສະຖິດຢູ່ໃນຊີວິດຂອງພວກເຂົາ. ເພື່ອຕອບສະໜອງການ ເອີ້ນຮຽກຂອງ ພຣະເຈົ້າແລະຮັບເອົາການໄຖ່ໃຫ້ ພົ້ນຈາກ ພຣະອົງຊຶ່ງມີມາໂດຍທາງ ພຣະເຢຊູຄຣິສ. ການນະມັສການພຣະເຈົ້າ ໄດ້ເຮັດໃຫ້ພວກຄົນທີ່ ມີຄວາມເຊື່ອໄດ້ກາຍເປັນຄົນທີ່ ຖືກສ້າງຂຶ້ນໃໝ່ ແລະບັງເກີດໃໝ່. ໃນການ ນະມັສການພຣະເຈົ້າ, ຜູ້ທີ່ເຊື່ອໃນພຣະອົງ ໄດ້ຍອມຖວາຍຕົນເອງແດ່ພຣະເຈົ້າ ແລະເປັນການປະກອບອຸປກອນໃຫ້ແກ່ຕົນເອງ ໃນການຮັບໃຊ້ພຣະເຈົ້າຕໍ່ໂລກ.

ວ່າດ້ວຍການລິເລີ້ມ ແລະຄວາມພ້ອມພຽງຂອງພຣະເຈົ້າ W-1.1002

ພຣະວິນຍານຂອງພຣະເຈົ້າ ໄດ້ນຳພາມະນຸດໃຫ້ຮູ້ຈັກພຣະຄຸນຂອງພຣະອົງ



ແລະຍິນດີຕອນຮັບເອົາພຣະອົງເຂົ້າສູ່ຊີວິດຂອງຕົນເອງ. ພຣະວິນຍານຂອງພຣະເຈົ້າໄດ້ເອີ້ນພວກເຂົາຕາມຊື່ ແລະຊົງໃຫ້ພວກເຂົາເພິ່ງພາອາສັຍພຣະອົງ ໂດຍຊົງໃຫ້ພວກເຂົາຣະນຶກເຖິງກິຈກັມໃນການມາປາກົດຂອງພຣະອົງເອງໂດຍທາງພຣະທັມ ແລະການກະທຳ ໂດຍໃຫ້ພວກເຂົາຖວາຍຕົວເອງໃຫ້ຢູ່ພາຍໄຕ້ການປົກຄອງຂອງພຣະເຈົ້າໃນການດຳຣົງຊີວິດໃນໂລກ.

ພຣະເຈົ້າໄດ້ຊົງໂອ້ລົມກັບມະນຸດໂດຍຜ່ານການຊົງສ້າງ ແລະພຣະສັນຍາ, ໂດຍການເອີ້ນຮຽກໃຫ້ກັບໃຈເສັຽໃໝ່ ແລະການອະພັຍໂທດບາບ. ພຣະເຈົ້າຊົງເປັນຜູ້ປູກ ແລະເປັນຜູ້ຮື້ຖິ້ມ, ພຣະອົງຊົງເປັນຜູ້ພິພາກສາ ແລະໃຫ້ພຣະພອນ (ເຢເຣມີຢາ 1:10)

ໃນພຣະເຢຊູຄຣິສເຈົ້າ, ພຣະເຈົ້າໄດ້ລົງມາກັບເກີດເປັນມະນຸດຢ່າງເຕັມບໍຣິບູນ ຊຶ່ງເປັນການເປີດເຜີຍພຣະອົງເອງ, ການໄຖ່ໃຫ້ພົ້ນ, ແລະການໃຫ້ອະພັຍຂອງພຣະອົງຕໍ່ໂລກ. ໃນໂລກແຫ່ງຄວາມພິນາດຈິບຫາຍນີ້ ພຣະເຢຊູຄຣິສໄດ້ສະເດັດຊົງລົງມາເພື່ອໄຖ່ຄວາມຜິດບາບແລະກອບກູ້ເອົາຊີວິດຂອງມະນຸດຄືນມາ. ໃນການເຂົ້າມາສູ່ໂລກ ພຣະເຈົ້າໄດ້ຊົງກຳໜົດໄລຍະເວລາ ແລະການກະທຳຕ່າງໆຂອງມະນຸດ ເພື່ອໃຫ້ເຂົາຍອມຮັບ ແລະສັຣເສີນພຣະເຈົ້າ.

ວ່າດ້ວຍພຣະເຢຊູຄຣິສ: W-1.1003

ໃນເຮືອນຮ່າງ ແລະການທຳງານຂອງພຣະເຢຊູຄຣິສ, ພຣະເຈົ້າ ແລະມະນຸດໄດ້ຮອມກັນເປັນອັນນຶ່ງອັນອັນດຽວ ແຕ່ວ່າບໍ່ສາມາດຈະສັບປົນກັນໄດ້, ແຕກຕ່າງກັນແຕ່ບໍ່ສາມາດແຍກອອກຈາກກັນໄດ້.

ເຢຊູ ໄທນາຊາເຣັດ ເປັນມະນຸດທີ່ເປັນຕົວຢ່າງໃນການຍອມຮັບ ແລະຂັບຕາມພຣະເຈົ້າທີ່ສົມບູນແບບທີ່ສຸດ.

ຊີວິດຂອງພຣະອົງໄດ້ສະແດງໃຫ້ເຫັນ ແບບແຜນ ແລະເປົ້າໝາຍໃນການຊົງໃຊ້ຊີວິດ. ຊີວິດຂອງພຣະອົງ ເປັນຕົວຢ່າງໃນການ ນະມັສການພຣະເຈົ້າຂອງຊາວຄຣິສຕຽນທັງນອນ.

ພຣະເຢຊູຄຣິສ ຄືພຣະເຈົ້າຜູ້ຊົງບັງເກີດເປັນມະນຸດ. ເປັນຜູ້ປະກາດ ແລະເປັນພະຍານໃນຄວາມເຊື່ອທີ່ວ່າ:

ພຣະທັມ ທີ່ພຣະອົງຊົງກ່າວໃນເວລາຊົງສ້າງ,

ພຣະທັມທີ່ຊົງກ່າວໃນພຣະສັນຍາ ແລະການບັນຊາຂອງພຣະອົງ ຊຶ່ງຢູ່ໃນປະວັດສາດແຫ່ງພຣະສັນຍານັ້ນ

ພຣະທັມທີ່ຊົງກ່າວວ່າ:

ພຣະທັມຊົງບັງເກີດເປັນມານຸດ ແລະຊົງອາສັຍຢູ່ທ່າມກາງເຮົາທັງຫຼາຍ,

ຊົງຖືກວາຍພຣະຊົນ ແລະເປັນຄືນມາ, ດ້ວຍຣິດທານຸພາບ

ແລະຊົງຈະສະເດັດຄືນມາເພື່ອພິພາກສາ ແລະປົກຄອງ.

ວ່າດ້ວຍ ພຣະເຢຊູຄຣິສ ໃນພຣະຄຳ ແລະພິທີການ: W-1.1004

ພຣະຄຳພີ - ເປັນພຣະຄຳທີ່ຊົງບັນດານໃຫ້ຂຽນຂຶ້ນ,ແລະໃຊ້ການເທສນາ - ເປັນພຣະຄຳແຫ່ງການປະກາດ ແລະພິທີການ - ເປັນພຣະຄຳແຫ່ງກົດໝາຍ ແລະຖືກປະທັບຕາແລ້ວ, ເປັນບ່ອນເກັບກຳການເປັນພະຍານໃຫ້ ແກ່ພຣະເຢຊູຄຣິສ ໃນການດຳຣົງ ຊີວິດໃນໂລກ. ໂດຍຜ່ານພຣະຄຳພີ,ການປະກາດ, ພິທີການ, ການປາກົດຂອງ ພຣະເຈົ້າໃນພຣະເຢຊູຄຣິສ ໂດຍຜ່ານທາງ ພຣະວິນຍານບໍຣິສຸດ ຊຶ່ງປະຕິບັດກິຈການໃນການປັບປຸງປະຕິຮູບ, ໃຫ້ຣິດທານຸພາບ, ແລະຊ່ວຍເຫຼືອຊີວິດມະນຸດ. ໃນການ ນະມັສການພຣະເຈົ້າ ຂອງຊາວຄຣິສຕຽນ ບັນດາໄພ່ພົນຂອງພຣະອົງມີກິຈການດັ່ງນີ້:



- ຮັບຟັງພຣະຄຳຂອງພຣະເຈົ້າ ທີ່ໄດ້ປະກາດແກ່ຕົນ
- ຍອມຮັບເອົາພຣະຄຳອັນເປັນກົດບັນຍັດຂອງພຣະອົງໂດຍຜ່ານພິທີສິນ,
- ຄົ້ນພົບແລະເປີດເຜີຍພຣະຄຳທີ່ມີໃນໂລກ ແລະ
- ການສົ່ງອອກໄປປະກາດຕໍ່ໂລກ ເພື່ອນຳພຣະຄຳຂອງພຣະອົງ ໄປສູ່ຄົນທີ່ບໍ່ຮູ້ຈັກ ແລະບໍ່ໄດ້ຍິນ.

ວ່າດ້ວຍຕອບຮັບຂອງຊາວຄຣິສຕຽນຕໍ່ພຣະເຈົ້າ ໃນກຸ່ມຊົນຕ່າງໆ:

W-1.1005

ເມື່ອຕົ້ນເດີມນັ້ນ ພຣະເຈົ້າໄດ້ຊົງສ້າງ ຜູ້ຊາຍແລະຜູ້ຍິງ ເພື່ອການປະກອບເປັນກຸ່ມຊົນ ແລ້ວເອີ້ນພວກເຂົາໃຫ້ເຂົ້າສູ່ ພຣະສັນຍາຂອງພຣະອົງ. ພຣະເຢຊູຄຣິສໄດ້ເອີ້ນສັ່ງ, ມອບໝາຍ, ແລະສັນຍາວ່າ ຈະສະຖິດຢູ່ກັບພວກຄົນທີ່ໂຮມກັນ ໃນພຣະນາມຂອງພຣະອົງ. ພຣະວິນຍານບໍຣິສຸດ ໄດ້ເປັນຜູ້ຊີ້ແນະນຳພາ ໃຫ້ມີກຸ່ມຊົນແຫ່ງພຣະສັນຍາໃໝ່ເກີດຂຶ້ນ. ສະມາຊິກ ທຸກຄົນ, ພຣະວິນຍານໄດ້ຊົງໃຫ້ພອນສວັນໃຜມັນ ໃນການເສີມສ້າງພຣະກາຍຂອງພຣະຄຣິສ ແລະມີ ອຸປກອນທີ່ປະກອບສ່ວນໃນການປະກາດພຣະຄຳຂອງພຣະອົງ. ການສະແດງຕົວເອງໃນການດຳຣົງຊີວິດທີ່ເປັນ ແບບຢ່າງຂອງຄຣິສຕຽນ ກໍສາມາດເປັນຄຳຕອບຂອງພວກເຂົາໃນການທຳງານຂອງພຣະເຈົ້າຕໍ່ກຸ່ມຊົນຕ່າງໆແລ້ວ.

ໄພ່ພົນຂອງພຣະເຈົ້າ ໄດ້ຕອບຮັບພຣະເຈົ້າດ້ວຍຄຳເວົ້າແລະການກະທຳໃນການສັຣເສີນພຣະອົງ. ສະແດງການ ຂອບພຣະຄຸນ ພຣະອົງດ້ວຍການ ອະທິຖານ, ການປະກາດ, ການຣະນຶກ, ແລະດ້ວຍການຖວາຍ. ໃນພຣະນາມແຫ່ງ ພຣະມະຫາເຢຊູຄຣິສ, ໂດຍການນຳພາຂອງ ພຣະວິນຍານບໍຣິສຸດ, ກຸ່ມຊົນຄຣິສຕຽນ ໄດ້ທຳການນະມັສການ ແລະຮັບໃຊ້ພຣະເຈົ້າອົງສູງສຸດດັ່ງນີ້:

- ແລກປ່ຽນປະສົບການແຫ່ງຊີວິດ
- ທຳການປະກາດສ່ວນຕົວ ໃນຖານະເປັນສາວົກທີ່ດີ,
- ຮ່ວມກັນທຳງານຮັບໃຊ້ພຣະເຈົ້າ
- ຄຽງບ່າຄຽງໄລ່ກັນເຮັດວຽກງານຂອງພຣະເຈົ້າໃນໂລກ.

## 2. ວ່າດ້ວຍ ພາສາແຫ່ງການນະມັສການ **W-1.2000**

### ວ່າດ້ວຍພາສາທີ່ໃຊ້ເພື່ອຕອບຮັບພຣະເຈົ້າ W-1.2001

ພຣະເຈົ້າໄດ້ຊົງເຮັດໃຫ້ທຸກສິ່ງ ມີຊີວິດຂຶ້ນມາໂດຍພຣະທັມ. ພຣະເຈົ້າໄດ້ຊົງປະທານພຣະທັມທີ່ສະແດງເຖິງພຣະຄຸນ, ແລະໄພ່ພົນຂອງພຣະອົງຕ້ອງຕອບຮັບເອົາພຣະທັມອັນສັກສິດນີ້ ໂດຍຜ່ານພິທີແຫ່ງການນະມັສການ. ພວກເຂົາໄດ້ເອີ້ນ ຮຽກພຣະເຈົ້າດ້ວຍຊື່ຂອງພຣະອົງ, ວິງວອນໃຫ້ພຣະເຈົ້າສະຖິດຢູ່ນຳ, ອ້ອນວອນຕໍ່ພຣະອົງໂດຍການອະທິຖານ, ແລະຢືນຢູ່ຕໍ່ໜ້າພຣະອົງດ້ວຍການມິດງຽບສງົບແລະຢຳເກງ. ພວກເຂົາໄດ້ ໂນ້ມຕົວລົງ ຕໍ່ໜ້າພຣະເຈົ້າ, ຍົກມືຂຶ້ນ ແລະອອກສຽງສັຣເສີນພຣະອົງ, ຮ້ອງເພັງ, ແລະສຽງເສບ, ແລະການເຕັ້ນຣຳ. ຈິດວິນຍານຂອງພວກເຂົາ, ກຳລັງ, ແລະແນວຄິດຈິດໃຈ, ໄດ້ຮວມກັນ ເປັນອັນນຶ່ງອັນດຽວ, ພວກເຂົາໂຮມກັນດ້ວຍພາສາ, ສິລປະ, ແລະແລະການຄຶກຄື້ນມ່ວນຊື່ນ ໃນການນະມັສການພຣະເຈົ້າ.

### ວ່າດ້ວຍສັນຍາລັກແຫ່ງພາສາ: W-1.2002

ໃນເວລາທີ່ພວກຄົນຕອບຮັບພຣະເຈົ້າ ແລະພົວພັນຊຶ່ງກັນແລະກັນເນື່ອງໃນປະສົບການ ຂອງພວກເຂົາທີ່ມີໃນພຣະເຈົ້າ, ພວກເຂົາຕ້ອງໃຊ້ສັນຍາລັກຢ່າງມີຄວາມໝາຍ, ໃນການທີ່ພຣະເຈົ້າຊົງຢູ່ເໜືອການຊົງສ້າງທັງປວງ ແລະບໍ່ສາມາດ



ຈະເຮັດໃຫ້ພຣະເຈົ້າຕໍ່າລົງໄດ້. ບໍ່ມີເຄື່ອງໝາຍໃດ ໃນໃຕ້ຟ້າ ທີ່ຈະເຮັດໃຫ້ມະນຸດສາມາດເຂົ້າໃຈພຣະເຈົ້າໄດ້, ແລະບໍ່ມີສິ່ງໃດ ໃນໂລກ ທີ່ສາມາດບົ່ງບອກເຖິງຄວາມຈິງຂອງພຣະເຈົ້າ ໄດ້ຢ່າງຖືກຕ້ອງ. ແຕ່ສັນຍາລັກຕ່າງໆ ທີ່ມະນຸດໄດ້ໃຊ້ສາມາດເປັນສິ່ງພຽງພໍໃນການທີ່ຈະເຂົ້າໃຈແບ່ງປັນຄວາມຮູ້ເລື້ອງຂອງພຣະອົງ, ແລະໃຫ້ຄຳຕອບກ່ຽວກັບພຣະຄຸນຂອງພຣະອົງ ທີ່ມີຕໍ່ມະນຸດ ຊຶ່ງໃນເວລາທີ່ພຣະອົງເອງຊົງ ຕ້ອງການປາກົດພຣະອົງເອງແກ່ມະນຸດ:

- ໂດຍຜ່ານຣະບຽບການຕ່າງໆຂອງສິ່ງທີ່ພຣະອົງສ້າງມາ
- ໃນກິຈການຕ່າງໆ ໃນປະວັດສາດແຫ່ງພຣະສັນຍາ, ແລະ
- ໂດຍສະເພາະ ການມາບັງເກີດເປັນມະນຸດຂອງພຣະທັມ, ຄືພຣະເຢຊູຄຣິສ.

ສັນຍາລັກໃນການປາກເວົ້າ ຫຼືການກະທຳຕ່າງໆ ຈະຕ້ອງເປັນຂອງແທ້ແລະເໝາະສົມ ໃນການນະມັສການຂອງຊາວ ຄຣິສຕຽນ ເພື່ອປະກາດ ໃຫ້ຮູ້ວ່າພວກເຂົາເປັນຜູ້ມີຄວາມເຊື່ອກ່ຽວກັບການກຳເນີດ, ການວາຍພຣະຊົນ, ແລະການຄືນພຣະຊົນ ຂອງພຣະເຢຊູຄຣິສ ຢ່າງແທ້ຈິງ.

### ວ່າດ້ວຍ ສັນຍາລັກໃນພຣະຄຳພີເດີມ: W-1.2003

ໃນຖານະທີ່ເປັນໄພ່ພົນຂອງພຣະເຈົ້າ ທີ່ຈະນະມັສການພຣະເຈົ້າອົງບໍຣິສຸດ, ພວກເຂົາຕ້ອງໃຊ້ສັນຍາລັກທີ່ນອກເໜືອໄປຈາກປະສົບການຢ່າງມະນຸດ, ເວົ້າເຖິງພຣະເຈົ້າຜູ້ຊົງສ້າງ, ເປັນຜູ້ໃຫ້ພັນທະສັນຍາ, ເປັນຜູ້ໃຫ້ອິສະຣະພາບ, ເປັນຜູ້ພິພາກສາ, ເປັນຜູ້ໄຖ່, ເປັນຜູ້ລ້ຽງ, ເປັນຜູ້ເລົ້າໂລມໃຈ, ເປັນກະສັດ, ເປັນຜູ້ໃຫ້ກຳເນີດ, ເປັນຜູ້ສະໜັບສະໜູນ.

ໃນທັສນະ ແຫ່ງທັມມະຊາດ ຂອງພວກເຂົາ ການບັລຍາຍກ່ຽວກັບເລື້ອງຂອງພຣະເຈົ້າ ຕ້ອງປຽບພຣະອົງເປັນເໝືອນ ຫີນທີ່ແຂງແກ່ນ, ເປັນບໍ່ນໍ້າ, ເປັນໄຟ,

ເປັນນົກອິນຊີ, ເປັນໄກ່, ເປັນສິງ, ຫຼືເປັນແສງສວ່າງ. ການນະມັສການຂອງພວກເຂົາ ກໍຕ້ອງເຕັມໄປດ້ວຍ ພາສາ ທີ່ເປັນສັນຍາລັກສະແດງອອກຊຶ່ງການກະທຳດັ່ງນີ້:

ອົດອາຫານ ແລະ ຈັດງານລ້ຽງຢ່າງໃຫຍ່ໂຕ
ດີໃຈມ່ວນຊື່ນ ແລະໂສກເສົ້າຮ້ອງໄຫ້
ເຕັ້ນຮຳ ແລະຕົບມື
ທຳຕົວໃຫ້ບໍລິສຸດ ແລະ ອຸທິດຕົນເອງ
ເຂົ້າພິທີຕັດ ແລະການສະໂລມ ຫຼືເຈີມ
ເຜົາເຄື່ອງບູຊາ ແລະມອບຄວາມຜິດບາບ,
ເຮັດວຽກງານເພື່ອຄວາມຍຸຕິທັມ ແລະຄວາມເອັນດູສົງສານ,
ສ້າງການດົນຕຣີ ແລະຮ້ອງເພັງສັຣເສີນພຣະເຈົ້າ.

## ວ່າດ້ວຍ ພຣະຄຳພີໃໝ່: W-1.2004

ພຣະເຢຊູ ໄດ້ໃຊ້ສັນຍາລັກ ແລະເປັນຮູບພາບ ຊຶ່ງພຣະຄຳພີເດີມເພື່ອເວົ້າກ່ຽວກັບພຣະເຈົ້າ. ພຣະອົງໄດ້ມີສ່ວນ ປະກອບ ໃນກິຈການທີ່ເປັນສັນຍາລັກແຫ່ງການນະມັສການພຣະເຈົ້າຂອງຊາວອິສຣາເອນ. ມີຫຼາຍຄັ້ງ ທີ່ພຣະອົງຊົງ ສະແດງພຣະອົງເອງ ແລະປາກົດໃຫ້ເຫັນກ່ຽວກັບໝາຍສຳຄັນຂອງພຣະເຈົ້າ, ໂດຍສະເພາະໃນການທີ່ພຣະອົງຊົງໃຊ້ສັບວ່າ ອັບບາ, ພຣະບິດາ. ພຣະອົງໄດ້ເວົ້າກ່ຽວກັບພຣະອົງເອງ ໃນກໍຣະນີກ່ຽວກັບໝາຍສຳຄັນໃນພຣະຄຳພີເດີມ:

- ເປັນຜູ້ລ້ຽງແກະທີ່ດີ, ເປັນເຈົ້າບ່າວຂອງ ຊາວອິສຣາເອນ, ບຸດມະນຸດ
- ແລະພຣະອົງອະທິບາຍ ຄວາມໝາຍໃນສິ່ງດັ່ງ ກວ່າຢ່າງໜັກແໜ້ນ.

ພຣະອົງໄດ້ນຳເອົາຄວາມໝາຍ ອັນໃໝ່ ມາສູ່ການປະຕິບັດຂອງສາສນາເຊັ່ນ:



ການບໍຣິຈາກ, ບັບຕິສມາ, ສົມມະຫາສະໜິດ. ໃນຊີວິດປະຈຳວັນ, ພຣະເຢຊູຊົງປະຕິບັດກິຈການຢ່າງມະນຸດທັມມະດາທີ່ມີຄວາມເມດຕາ

- ປິ່ນປົວຄົນເຈັບ, ໃຫ້ອາຫານແກ່ຄົນອຶດຫິວ, ລ້າງຕີນ
- ແລະອະທິບາຍໃຫ້ພວກເຂົາ ໃຫ້ເຂົ້າສູ່ການຮັບ ໃຊ້ພຣະເຈົ້າ.

ໃນຖານະທີ່ເປັນພຣະເຈົ້າຜູ້ຊົງຄືນພຣະຊົນ, ພຣະອົງຊົງກາຍເປັນສັນຍາລັກອັນໃໝ່. ຜູ້ບັນທຶກພຣະຄຳພີໃໝ່ ມັກຈະໃຊ້ ສັນຍາລັກ ໃນພາສາຂອງພຣະຄຳພີເດີມ ເພື່ອບັນລະຍາຍເຖິງຄວາມຈິງອັນໃໝ່ທີ່ພົວພັນກັບ ຂ່າວປະເສີດ ທີ່ບັນຣະຍາຍເຖິງ ພຣະເຢຊູຄຣິສ ເປັນອາດາມຜູ້ທີສອງ ແລະເປັນແກະຂອງພຣະເຈົ້າ. ພວກເຂົາໄດ້ໃຊ້ສັນຍາລັກ ໃນພາສາໃໝ່ນີ້ເປັນ:

- ພຣະທັມອັນຕລອດໄປເປັນນິດ, ເປັນຜົນແຣກໃນການຊົງສ້າງ, ເປັນຜູ້ທັບມ້າງການຂີດຂັ້ນ ຣະຫວ່າງ ເຮົາກັບພຣະເຈົ້າ ເພື່ອນຳສັນຕິມາສູ່ເຮົາ. ໃນບົດເພັງສັຣເສີນ ຫຼືຮູບແບບການສັຣເສີນອື່ນໆ, ພຣະເຢຊູຄຣິສ ໄດ້ຖືກ ຖວາຍພຣະກຽດຢ່າງຜູ້ທີ່ເປັນສັນຍາລັກອັນແທ້ຈິງຂອງພຣະເຈົ້າທີ່ພຣະອົງຊົງປາກົດພຣະອົງເອງຕໍ່ໂລກ.

(W-1.1003-1.1005)

## ວ່າດ້ວຍຄວາມຈິງ ແລະຄວາມເໝາະສົມຂອງພາສາທີ່ໃຊ້ໃນການນະມັສການ: W-1.2005

ຄຣິສຕະຈັກໃນທຸກໆຍຸກທຸກສະໄໝ ບໍ່ວ່າໃນສມັຍໃດ ກໍໃຊ້ແລະຍອມຮັບເອົາສັນຍາລັກ ໃນພຣະຄຳພີ, ຮູບພາບ, ປວັດສາດ, ແລະຄຳເວົ້າຕ່າງໆ ເພື່ອນຳມາໃຊ້ໃນການນະມັສການ. ແຕ່ຄຣິສຕະຈັກທີ່ໃຊ້ສິ່ງດັ່ງກ່າວນີ້ ກໍບໍ່ໄດ້ໝາຍ ຄວາມວ່າເປັນຄຣິສຕະຈັກທີ່ແທ້ຈິງ ແລະເໝາະສົມໄດ້ໝົດທຸກບ່ອນ. ສຳຣັບ ພວກປະຕິຮູບແລ້ວ, ການສະແດງເຖິງ ເຫດການ ໃນປວັດສາດ ແລະວັທນະທັມຂອງພາສາ

ເປັນການສະແດງເຖິງຄວາມຈິງ ຊຶ່ງມັນໄດ້ບົ່ງບອກໃນການເປັນ ພະຍານຂອງພຣະຄຳພີ ກ່ຽວກັບພຣະເຈົ້າໃນພຣະເຢຊູຄຣິສ. ພາສາທີ່ໃຊ້ ຖືວ່າເໝາະສົມໃນກໍຣະນີທີ່ ກຸ່ມຊົນນັ້ນໆ ຫາກສາມາດຮັບເອົາເປັນຂອງ ຕົນເອງໄດ້ ໃນເວລາທີ່ມີການສັຣເສີນ ແລະຂອບພຣະຄຸນພຣະເຈົ້າ. ພາສາທີ່ເໝາະສົມ ນັ້ນຕ້ອງ:

- ມີລັກສະນະທີ່ສະແດງອອກຕົວຈິງດ້ວຍຄຳເວົ້າ ຫຼາຍກ່ວາທີ່ຈະຍຶດຖືເປັນຫຼັກເຫດຜົນ.
- ເປັນການເພີ່ມພູນ ແລະຊັກຊວນ ເຊັ່ນດຽວກັນກັບການ ໃຫ້ບອກເຣື້ອງຣາວແລະບັລຍາຍ
- ສ້າງຄວາມກະຕືລືລົ້ນ ເຊັ່ນດຽວກັນກັບ ການເຮັດໃຫ້ມີຣະບຽບແບບແຜນ,
- ເປັນພາສາທີ່ເວົ້າຈາກັນໄດ້ໃນກຸ່ມຊົນແຫ່ງຄວາມເຊື່ອ ເຊັ່ນດຽວກັບທີ່ສາມາດໃຊ້ໄດ້ໃນການນະມັສການຂອງສ່ວນບຸກຄົນ.

ພາສາທີ່ເໝາະສົມນັ້ນ ຕ້ອງຍອມຮັບເອົາປະເພນີ ແລະອັທນະທັມແຫ່ງຄວາມຈິງທີ່ເກີດຂຶ້ນໃນພຣະຄຳພີ ໃນຮູບ ແບບໃນການ ເວົ້າ ຫຼືການກະທຳ ທີ່ເປັນຂອງມັນເອງ. ໃນການຍອມຮັບສິ່ງດັ່ງກ່າວນີ້ ຄຣິສຕະຈັກ ຕ້ອງຍອມຮັບ ແລະໃຊ້ພາສາຂອງຮີດຄອງ ປະເພນີນັ້ນໆຢ່າງຖືກຕ້ອງ. ຄຣິຕະຈັກ ມີສິດໃນການຊອກໃຊ້ພາສາທີ່ເໝາະສົມໃນ ການນະມັສການພຣະເຈົ້າ.

ວ່າດ້ວຍການຮອບຮອມເຂົ້າດ້ວຍກັນຂອງພາສາ: W-1.2006

ເພຣັສໄບທີຣຽນແຫ່ງອາເມຣິກາ ກໍເປັນຄອບຄົວນຶ່ງ ໃນພຣະຄຣິສ, ການໃຊ້ພາສາທີ່ເໝາະສົມໃນການນະມັສການ ຕ້ອງເປັນໄປ ຕາມກຸ່ມຄົນຕ່າງໆເຫຼົ່ານີ້. ເພື່ອຂະຫຍາຍແບບວິທີດັ່ງກ່າວ, ກິຈກັມ, ການໃຊ້ພາສາ, ຫຼືຮູບແບບການນະມັສການ ຕ້ອງຫຼີກລ່ຽງການສະແດງອອກເຖິງຄວາມແຕກຕ່າງກັນໃນຮີດຄອງປະເພນີ



ທີ່ປາກົດໃນຄຣິສຕະຈັກນັ້ນໆ, ຫຼືປະຕິເສດປາກົດ ການແຫ່ງຄວາມ ຕ້ອງການແລະບຸຄລິພາບແຫ່ງຄວາມເຊື່ອຖືຂອງກຸ່ມຄົນ ໂດຍຖືວ່າ ການນະມັສການນັ້ນບໍ່ຈິງໃຈຕໍ່ຄວາມ ເຊື່ອໃນຊີວິດ, ການວາຍພຣະຊົນ, ແລະການຄືນພຣະຊົນຂອງພຣະເຢຊູຄຣິສ.

ຄຣິສຕະຈັກ ໃນເວລານະມັສການ ຕ້ອງໃຊ້ຄວາມພະຍາຍາມທີ່ສຸດ ໃນການໃຊ້ພາສາກ່ຽວກັບພຣະເຈົ້າ ຊຶ່ງພຣະຄຳພີ ແລະນັກສາສນາສາດ ໄດ້ໃຊ້ມາແລ້ວນັ້ນ. ຄຣິສຕະຈັກຕ້ອງໃຊ້ພາສາດັ່ງກ່າວເພື່ອໃຫ້ກຸ່ມຊົນແຫ່ງຄວາມເຊື່ອ ໄດ້ຮັບຮູ້ວ່າຕົນເອງໄດ້ມີສ່ວນຮ່ວມດ້ວຍ, ມີສ່ວນໃນການປະກາດ, ແລະມີຄວາມສເມີພາບກັບຄົນອື່ນໆ ຕໍ່ໜ້າພຣະເຈົ້າ. ໃນການເປັນພະຍານສຳຣັບພຣະເຈົ້າ, ຄຣິສຕະຈັກຕ້ອງໃຊ້ພາສາຄຳເວົ້າຕາມຄວາມເປັນຈິງແຫ່ງພຣະຄຳພີ ແລະຈະ ຕ້ອງບໍ່ມີການຈຳແນກ ຝ່າຍຊົນໂດຍອີງໃສ່ເພດວັຍ, ຜິວພັນ, ແລະສະພາບການດຳຣົງຊີວິດອື່ນໆ.

## **ຣ. ເວລາ, ສະຖານທີ່, ແລະວັດຖຸ ໃນການນະມັສການພຣະເຈົ້າ**

**W-1.3000**

ກ. ເວລາ W-1.3010

ວ່າດ້ວຍວັນສະບາໂຕ, ວັນສັກສິດຂອງພຣະເຈົ້າ: W-1.3011

ຄຣິສຕຽນ ສາມາດນະມັສການພຣະເຈົ້າໄດ້ທຸກເວລາ, ຫາກທຸກຄັ້ງນັ້ນ ເປັນການທຳຢ່າງສັກສິດຕໍ່ພຣະເຈົ້າ. ບັນດາ ກຸ່ມຊົນ ແຫ່ງພຣະສັນຍາຂອງພຣະເຈົ້າ ຄວນນະມັສການພຣະເຈົ້າທຸກວັນ. ແຕ່ພຣະເຈົ້າຊົງເລືອກເອົາວັນນຶ່ງໃນ ຈຳນວນເຈັດວັນໃຫ້ຖືເປັນວັນສັກສິດຂອງພຣະອົງ. ໃນພຣະຄຳພີເດີມ ວັນສະບາໂຕ ຖືເປັນວັນບໍຣິສຸດສຳຣັບ ພຣະເຈົ້າ. ໃນພຣະຄຳພີໃໝ່ ພວກທີ່ເຊື່ອກໍນັບຖືເອົາວັນຕົ້ນສັປດາ ຊຶ່ງເປັນວັນແຫ່ງການຄືນພຣະຊົນເປັນວັນສັກສິດ ຊຶ່ງເວລານັ້ນ ພວກຄົນທີ່ບັງເກີດໃໝ່

ໃນພຣະສັນຍາໃໝ່ຈະພ້ອມພຽງກັນນະມັສການພຣະເຈົ້າ ໃນພຣະນາມແຫ່ງພຣະມະຫາເຢຊູຄຣິສ. ພວກເຂົາຖືວ່າ ວັນນີ້ ເປັນວັນຂອງພຣະເຈົ້າ ເປັນວັນສັກສິດຂອງພຣະອົງ.

ໃນສະໄໝເດີມ, ຝູງຊົນໄດ້ເຕົ້າໂຮມກັນໃນວັນຂອງພຣະເຈົ້າເພື່ອການປະກາດ ແລະເປີດເຜີຍພຣະທັມຂອງ ພຣະເຈົ້າ ແລະສະເລີມສລອງ ພິທີກັມຕ່າງໆ. ໃນຣະບົບຂອງກຸ່ມປະຕິຮູບ ໄດ້ຖືຄວາມສຳຄັນຂອງວັນບໍຣິສຸດຂອງພຣະເຈົ້າ ເປັນວັນແຫ່ງການ ຮັບຟັງພຣະທັມຂອງພຣະອົງ ແລະສເລີມສລອງພິທີກັມ ເພາະການຄືນພຣະຊົນຂອງ ພຣະເຈົ້າ ແລະເພື່ອການຕອບຮັບພຣະອົງ ໂດຍການອະທິຖານ ແລະການຮັບໃຊ້. (W-3.2001; W-5.5001)

## ວ່າດ້ວຍ ການນະມັສການພຣະເຈົ້າປະຈຳວັນ: W-1.3012

ການນະມັສການຂອງຊາວອິສຣາເອນ, ມີໂມງທີ່ເຂົາໄດ້ຕັ້ງໄວ້ ຊຶ່ງຖືເປັນເວລາທີ່ຄວນມີການຖວາຍບູຊາ ສັຣເສີນ ແລະຂອບພຣະຄຸນພຣະເຈົ້າ. ເຖິງແມ່ນວ່າ ໃນເວລາຫຼັງຈາກທີ່ວິຫານໄດ້ຖືກທຳລາຍນັ້ນ, ທັງຕອນເຊົ້າ, ຕອນສວາຍ, ແລະຕອນແລງ ພວກເຂົາຍັງມີການ ນະມັສການພຣະເຈົ້າຢູ່. ພຣະເຢຊູຄຣິສເອງ ກໍຍັງມີການອະທິຖານ ເປັນປະຈຳ ແລະພວກ ໄພ່ພົນຂອງພຣະອົງກໍຕ້ອງມີການໂຮມຊຸມນຸມກັນ ໃນການອະທິຖານທຸກວັນ ໃນພຣະວິຫານ, ໃນຫ້ອງຊັ້ນໃນ, ແລະໃນບ້ານເຮືອນຂອງຕົນເອງ. ໃນພຣະຄຳພີໃໝ່ ພວກຊຽນທັງຫຼາຍ ໄດ້ເນັ້ນໜັກໃຫ້ຄຣິສຕະຈັກທັງຫຼາຍ ມີການອະທິຖານ ຢ່າງບໍ່ຂາດ. ຜ່ານຫຼາຍສະໄໝ ຄຣິສຕະຈັກໄດ້ຈັດເວລາພິເສດ ໃນການ ອະທິຖານປະຈຳວັນ, ຊຶ່ງຖືເປັນເໝືອນການທຳງານໃນຫ້ອງການ.



ປະເພນີຂອງຊາວປະຕິຮູບ ໄດ້ຍອມຮັບເອົາແບບວິທີໃນການນະມັສການເໝືອນກັບການທຳງານໃນຫ້ອງການ, ເພື່ອເປີດໃຫ້ ຄົນໄດ້ມີການ ອະທິຖານ ແລະອ່ານ ພ້ອມທັງຄົ້ນຄວ້າພຣະຄຳພີອີກດ້ວຍ. ການນະມັສການຂອງ ສາທາຣະນະ ໄດ້ຖືກຖືເປັນ ກິຈການປະຈຳວັນໃນການດຳຣົງຊີວິດ ແລະການເປັນພະຍານຂອງຄຣິສຕະຈັກ ແລະການຮັບໃຊ້ພຣະເຈົ້າໃນກຸ່ມຊົນ. ການປ່ຽນ ແປງໃນຊີວິດປະຈຳວັນ ກໍເປັນຜົນສະທ້ອນມາຈາກ ການອະທິຖານພາຍໃນ ຄອບຄົວ ຊຶ່ງເປັນເຫດໃຫ້ກາຍເປັນຣະບຽບ ວິນັຍຂອງຊາວຄຣິສຕຽນ. (W-3.4000;W-5.2000;)

## ວ່າດ້ວຍຣາຍການປະຈຳປີຂອງຄຣິສຕະຈັກ: W-1.3013

ພຣະເຈົ້າຊົງເປັນຜູ້ສ້າງ ແລະແຕ່ງຕັ້ງວັນເວລາ. ພຣະອົງໄດ້ຊົງກຳໜົດວັນເວລາ ແລະຣະດູການສຳຣັບການ ນະມັສການ ໃນພຣະຄຳພີເດີມ, ຝູງຊົນໄດ້ສັງເກດເອົາຣະດູການອົດອາຫານ ແລະຣະດູການກິນລ້ຽງສເລີມສລອງ ເປັນຣະດູການສຳຣັບການນະມັສການພຣະເຈົ້າ. ພຣະເຢຊູເອງກໍຮັກສາຣະດູການແບບນີ້ເຊັ່ນກັນ. ສຳຣັບຄຣິສຕະຈັກ ໃນພຣະສັນຍາໃໝ່ ພິທີການ ສເລີມສລອງຕ່າງໆ ໄດ້ປ່ຽນມາເປັນການເວົ້າເຖິງຄວາມໝາຍແຫ່ງຊີວິດຂອງພຣະເຢຊູ ຄຣິສ, ການສັ່ງສອນ, ການວາຍພຣະຊົນ ແລະການຄືນພຣະຊົນ ພ້ອມທັງຂອງປະທານ ແຫ່ງພຣະວິນຍານບໍຣິສຸດ. ການກຳເນີດ, ການມີຊີວິດ, ການວາຍພຣະຊົນ, ການຄືນພຣະຊົນ, ການຄືນສູ່ສວັນສະຖານ, ແລະການຊົງສັນຍາຈະ ກັບຄືນມາອີກຂອງພຣະເຢຊູຄຣິສ ໄດ້ກາຍເປັນຄວາມໝາຍ ແຫ່ງຣະດູການນະມັສການພຣະເຈົ້າ ແລະເປັນການນຳໄປ ສູ່ການຄັດເລືອກເອົາບົດຮຽນທີ່ຈະອ່ານ ແລະປະກາດ ໃນກິຈການຂອງ ຄຣິສຕະຈັກ.
(W-3.2002).

## ຂ. ສະຖານທີ່: W-1.3020

### ວ່າດ້ວຍສະຖານທີ່ໃນພຣະຄຳພີເດີມ: W-1.3021

ຄຣິສຕຽນສາມາດນະມັສການພຣະເຈົ້າໄດ້ໃນທຸກສະຖານທີ່ ເພາະວ່າພຣະເຈົ້າຊົງສ້າງເວລາ ແລະພຣະອົງກໍຊົງສ້າງ ແລະກຳໜົດສະຖານທີ່ດ້ວຍ. ໃນພຣະຄຳພີເດີມ ພຣະເຈົ້າໄດ້ຊົງພົບກັບມະນຸດໃນສະຖານທີ່ ທີ່ແຕກຕ່າງກັນ. ແນ່ນອນ ແຕ່ລະສະຖານທີ່ນັ້ນໄດ້ຖືກບັນທຶກໄວ້ ເປັນບ່ອນທີ່ຝູງຊົນຈະທຳການເຂົ້າເຝົ້າພຣະເຈົ້າ, ດັ່ງນັ້ນພວກເຂົາ ໄດ້ຈັດຕັ້ງສະຖານທີ່ ຂຶ້ນເພື່ອຣະນຶກເຖິງການພົບປະກັນຣະຫວ່າງມະນຸດແລະພຣະເຈົ້າ. ຊຶ່ງຈະເປັນແທ່ນທີ່ນບູຊາ, ເຕັນສຳຣັບການພົບປະກັນຣະຫວ່າງໄພ່ພົນຂອງພຣະເຈົ້າ, ພຣະວິຫານໃນກຸງເຢຣູຊາເລັມ, ຫຼືໂຮງທັມເທສນາ, ແຕ່ລະບ່ອນຖືວ່າເປັນບ່ອນທີ່ຕ້ອງ ອັນເຊີນພຣະເຈົ້າໃຫ້ມາສະຖິດຢູ່ນຳ.

### ວ່າດ້ວຍພຣະເຢຊູຄຣິສ: W-1.3022

ຊີວິດຂອງພຣະເຢຊູຄຣິສ
ໄດ້ສະແດງໃຫ້ຜູ້ຕິດຕາມພຣະອົງໄດ້ຮູ້ແລະເຂົ້າໃຈເຖິງສະຖານທີ່ໃນການນະມັສການ. ພຣະອົງຊົງ ນະມັສການ ເປັນປະຈຳທີ່ໂຮງທັມະເທສນາ ແລະທີ່ພຣະວິຫານ, ຢູ່ໃນປ່າ ແລະເທິງພູຂອງແຄວ້ນຄາລີເລ. ພຣະອົງໄດ້ຊົງ ປະຕິເສດ ເຖິງການທີ່ພຣະເຈົ້າຈະຊົງສະຖິດຢູ່ແຕ່ບ່ອນນຶ່ງບ່ອນດຽວ. ພຣະອົງຊົງສະຖິດຢູ່ທຸກທີ່ນ ທຸກແຫ່ງ.

### ວ່າດ້ວຍຄຣິສຕະຈັກຕັ້ງເດີມ. W-1.3023

ເນື່ອງຈາກຄວາມໝາຍທີ່ແທ້ຈິງຂອງການນະມັສການພຣະເຈົ້າຂອງຊາວຄຣິສຕຽນບໍ່ແມ່ນເພາະບ່ອນ ຫຼືສະຖານທີ່ ແຕ່ການປາກົດ ຂອງພຣະເຈົ້ານັ້ນເປັນສິ່ງສຳຄັນ.



ຄຣິສຕະຈັກ ໃນສະໄໝເດີມ ໄດ້ມີການນະມັສການຢູ່ ພຣະວິຫານ, ໂຮງທັມເທສນາ, ໃນບ້ານເຮືອນ, ໃນວຸໂມງໃຕ້ດິນ, ແລະໃນຄຸກ. ຫາກພຣະຄຣິສຊົງສະຖິດຢູ່ກັບພວກເຂົາ ບໍ່ວ່າຈະຢູ່ໃນ ສະຖານທີ່ໃດໆ ການແປພຣະຄຳພີ ແລະການທັກເຂົ້າຈີ່ກໍເປັນການສັກສິດໃນທີ່ນັ້ນໆ. ໃນປັດຈຸບັນການນະມັສການ ພຣະເຈົ້າຈຶ່ງຖືເປັນການສະເລີນສລອງການຄືນພຣະຊົນຂອງພຣະຄຣິສ ຊຶ່ງໄພ່ພົນຂອງພຣະອົງຕ້ອງ ສະແດງອອກໃນການເຕົ້າໂຮມກັນຢູ່ໃນສະຖານທີ່ໃດນຶ່ງ ເພື່ອພ້ອມກັນສັຣເສີນ ແລະຮັບໃຊ້ພຣະອົງ. ການສະຖິດ ຢູ່ນຳຂອງພຣະເຈົ້າໃນເວລານະມັສການ ຄືຄວາມຈິງແຫ່ງການນະມັສການພຣະເຈົ້າ.

### ວ່າດ້ວຍການຈັດຕຽມສະຖານທີ່: W-1.3024

ໃນເວລາທີ່ສະຖານທີ່ບໍ່ສຳຄັນພໍເທົ່າໃດນັ້ນ ບ່ອນນະມັສການພຣະເຈົ້າຄວນເປັນບ່ອນທີ່ເໝາະສົມ ແລະສະດວກ ແກ່ການໂຮມ ຊຸມນຸມກັນ, ຄວນໃຫ້ມີຄວາມໝາຍສຳຣັບກຸ່ມຊົນ, ເປີດກວ້າງແກ່ຝູງຄົນທີ່ຕ້ອງການເຂົ້າຫາພຣະເຈົ້າ. ຈະຕ້ອງປະກອບດ້ວຍ ບ່ອນສຳຣັບອ່ານພຣະຄຳ, ແລະການເທສນາ ຫຼືການຄົ້ນຄວ້າພຣະທັມ. ຄວນມີການຈັດຕຽມ ຫ້າງຫາໃນການສເລີນສລອງ ແລະການກະທຳພິທີການທີ່ຖືກຕ້ອງ ຊຶ່ງຕ້ອງມີບ່ອນສຳຣັບໃຫ້ສົມບັບຕິສມາ ແລະໂຕະທີ່ ເໝາະສົມສຳຣັບການຮັບສົມ ມະຫາສະໜິດ. ການຈັດຕຽມສະຖານທີ່ ຄວນເປັນບ່ອນເປີດກວ້າງ ແລະເປັນຈຸດກາງ ຂອງຊາວຄຣິສຕຽນ ໃນການນະມັສການ ພຣະເຈົ້າ.

## ຄ. ວັດຖຸ ທີ່ໃຊ້ໃນການນະມັສການ: W-1.3030

### ວ່າດ້ວຍ ວັດຖຸໃນພຣະຄຳພີເດີມ: W-1.3031

ພຣະເຈົ້າໄດ້ຊົງສ້າງວັດຖຸໃນໂລກ ແລະປະກາດວ່າ ດີ. ໄພ່ພົນຂອງພຣະອົງໄດ້ເຂົ້າໃຈວ່າ ວັດຖຸໃນໂລກ ສະແດງ ເຖິງຄວາມ ຍິ່ງໃຫຍ່ ຂອງພຣະເຈົ້າ. ພວກເຂົາໄດ້ໃຊ້ວັດຖຸນັ້ນໃນການສັຣເສີນ ແລະຂອບພຣະຄຸນພຣະເຈົ້າ. ສິລປະ, ເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງ, ການຕ່ຳຜ້າຫຳໄໝ ແລະຫຍິບປັກຖັກຮ້ອຍ, ອ່າງຊາມ, ນ້ຳມັນ, ໄຟ, ດົນຕຣີ, ເມັດພືດ, ໝາກໄມ້, ແລະສັດ ທັງໝົດໄດ້ໂຮມກັນເປັນກຸ່ມນະມັສການພຣະເຈົ້າ. ພວກຜູ້ປະກາດພຣະທັມໄດ້ເຕືອນວ່າ ການຖວາຍວັດຖຸນັ້ນເປັນຕົວແທນ ແກ່ການຖວາຍຕົນເອງແດ່ພຣະເຈົ້າ.

## ວ່າດ້ວຍວັດຖຸໃນພຣະເຢຊູຄຣິສ: W-1.3032

ໃນພຣະເຢຊູຄຣິສ, ພຣະທັມໄດ້ຊົງບັງເກີດເປັນມະນຸດ, ແລະພຣະເຈົ້າໄດ້ໃຫ້ຄວາມຈິງກ່ຽວກັບວັດຖຸ ເປັນສິ່ງ ສັກສິດ. ພຣະເຢຊູຄຣິສ ໄດ້ຊົງເອົາພຣະກາຍຂອງພຣະອົງ ເປັນເຄື່ອງຖວາຍທີ່ມີຊີວິດ. ໃນການຮັບໃຊ້ພຣະເຈົ້າ ຂອງພຣະອົງ, ພຣະອົງໄດ້ໃຊ້ວັດຖຸທັມະດາເຊັ່ນ ນອງ, ປາ, ກະຕ່າ, ໄຫ, ນ້ຳມັນ, ດິນປັ້ນໝໍ້, ແພເຊັດແລະອ່າງ, ນ້ຳ, ເຂົ້າຈີ່, ແລະເຫຼົ້າອະງຸ່ນ. ພຣະອົງໄດ້ໃຊ້ວັດຖຸດັ່ງກ່າວ ໃນການ ໃຫ້ພອນ ແລະປົວຄົນເຈັບ, ການຄືນດີກັນ ແລະຜູກມັດພວກເຂົາ ໃຫ້ເຂົ້າໃນກຸ່ມຊົນ ແຫ່ງຄວາມເຊື່ອ, ແລະສະແດງພຣະຄຸນ, ຣິດອຳນາດ, ແລະຣາຊອານາຈັກ ຂອງພຣະເຈົ້າໃຫ້ເຂົາໄດ້ເຫັນ.

## ວ່າດ້ວຍຄຣິສຕະຈັກ ແລະພິທີສິນໃນການນະມັສການ: W-1.3033

ຄຣິສຕະຈັກສະໄໝເດີມ ໄດ້ໃຊ້ວັດຖຸສາມຢ່າງຕາມທີ່ພຣະເຢຊູຄຣິສໄດ້ກະທຳໃນການນະມັສການພຣະເຈົ້າຄື: ນ້ຳ, ເຂົ້າຈີ່, ແລະເຫຼົ້າອະງຸ່ນ ເປັນສັນຍາລັກເບື້ອງ



ຕົ້ນໃນການຖວາຍຂອງຖວາຍທີ່ມີຊີວິດແກ່ພຣະເຈົ້າ ເໝືອນຢ່າງທີ່ພຣະເຢຊູຄຣິສເອງໄດ້ ຖວາຍຊີວິດຂອງພຣະອົງນັ້ນ. ຕ້ອງຖືກຊຳຣະລ້າງດ້ວຍນ້ຳໃນການຮັບສິນບັບຕິສມາ, ເຮັດໃຫ້ ຄຣິສຕຽນໄດ້ຮັບຊີວິດໃໝ່ ໃນພຣະຄຣິສ ແລະໃຊ້ຊີວິດຂອງພວກເຂົາໃນການ ຖວາຍຕົວແດ່ພຣະເຈົ້າ. ໂດຍການກິນ ເຂົ້າຈີ່ ແລະດື່ມນ້ຳອະງຸ່ນ ພວກເຂົາໄດ້ຮັບການສະຖິດຢູ່ຂອງພຣະຄຣິສໃນພວກເຂົາ, ເປັນການຣະນຶກເຖິງພຣະສັນຍາ ຂອງພຣະເຈົ້າ, ແລະອຸທິດຕົນ ເຊື່ອຟັງພຣະເຈົ້າ.

ໃນປະເພນີຂອງພວກປະຕິຮູບ ພວກເຂົາໄດ້ຮັບຮູ້ການຮັບສິນບັບຕິສມາ ແລະພິທີສິນມະຫາສະໜິດ ວ່າເປັນກິຈກັມ ທີ່ຕັ້ງຂຶ້ນ ໂດຍພຣະເຈົ້າ ແລະກາຍເປັນຄຳສັ່ງໂດຍພຣະເຢຊູຄຣິສ. ພິທີສິນ ເປັນສັນຍາລັກແຫ່ງການສະຖິດຢູ່ນຳ ແລະຣິດອຳນາດຂອງພຣະເຄຣິສຢູ່ໃນຄຣິສຕະຈັກ, ເປັນສັນຍາລັກແຫ່ງການທຳງານຂອງພຣະເຈົ້າ. ໂດຍຜ່ານພິທີ ສິນຕ່າງໆ, ພຣະເຈົ້າໄດ້ຊົງໝາຍ ປະທັບກາແຫ່ງການໄຖ່ໃຫ້ພົ້ນຂອງພຣະອົງ ໃຫ້ພວກທີ່ເຊື່ອໃນພຣະອົງ, ເປັນການ ຟື້ນຟູຊີວິດ ແລະຈິດວິນຍານຂອງໄພ່ພົນ ຂອງພຣະອົງ, ແລະເປັນການເອີ້ນຮຽກພວກນີ້ ໃຫ້ເຂົ້າສູ່ການຮັບໃຊ້ພຣະອົງ.

## ວ່າດ້ວຍວັດຖຸໃຊ້ ໃນການນະມັສການພຣະເຈົ້າ: W-1.3034

ຄຣິສຕະຈັກຕ້ອງຍອມຮັບຮູ້ວ່າ ຊີວິດຂອງຄຣິສຕຽນ ແລະສິ່ງທັງໝົດທີ່ເຂົາມີນັ້ນເປັນຂອງພຣະເຈົ້າຜູ້ຊົງສ້າງ ແລະສິ່ງດັ່ງກ່າວ ພວກເຂົາຕ້ອງມີການຖວາຍໃຫ້ກັບພຣະເຈົ້າ ໃນເວລານະມັສການ. ສັນຍາລັກ ແລະເຄື່ອງໝາຍແຫ່ງ ການຖວາຍນີ້, ໄພ່ພົນ ຂອງພຣະເຈົ້າ ໄດ້ສະແດງອອກໃຫ້ເຫັນວ່າ ທຸກສິ່ງໄດ້ຖືກສ້າງຂຶ້ນຈາກພຣະເຈົ້າ ແລະພຣະອົງຊົງເປັນເຈົ້າຂອງ. ທຸກຢ່າງ ສຽງ ສັນ ສີ ແລະອື່ນໆ ຕ້ອງນຳເຂົ້າມາເປັນກິຈກຳໃນການນະມັສການພຣະເຈົ້າ.

ປະເພນີຂອງຊາວປະຕິຮູບ ໄດ້ເອີ້ນຮຽກໃຫ້ ຜູ້ເຊື່ອທັງຫຼາຍໄດ້ນຳວັດຖຸມາຖວາຍໃນເວລານະມັສການພຣະເຈົ້າ ເພື່ອເປັນການສະແດງອອກເຖິງສິ່ງທີ່ພຣະເຈົ້າໄດ້ກະທຳ ແລະເປັນການອ້າງອອກເຖິງສິ່ງພຣະເຈົ້າໄດ້ກະທຳຕໍ່ຊີວິດ ຂອງມະນຸດ. ໄພ່ພົນຂອງພຣະອົງ ຕ້ອງຕອບສນອງດ້ວຍຫົວຄິດປະດິດສ້າງໃນດ້ານ ການຊ່າງ, ການຕົບແຕ່ງ, ການແຕ່ງຕັ້ງ, ເຄື່ອງນຸ່ງ, ດົນຕຣີ,ສິລປະການຂີດຂຽນ, ພາສາ, ແລະການເຄື່ອນໄຫວໄປມາຕ່າງໆ. ສິ່ງດັ່ງກ່າວນີ້ ຖ້າກະຕຸ້ນໃຫ້ເຮົາຮູ້ວ່າ ພຣະເຈົ້າຊົງສະຖິດຢູ່ນຳສິ່ງນີ້ ກໍເປັນການເໝາະໃນການ ໃຊ້ນະມັສການພຣະເຈົ້າ. ແຕ່ຖ້າສິ່ງດັ່ງກ່າວ ນຳຄົນໃຫ້ສົນໃຈຄວາມງາມ ແລະການມ່ວນຊື່ນໃນຕົວມັນເອງ ໂດຍທີ່ບໍ່ມີພຣະເຈົ້າ ສິ່ງນີ້ກໍກາຍເປັນ ຮູບເຄົາຣົບ. ສິ່ງດັ່ງກ່າວຕ້ອງເປັນສິ່ງສ້າງໃຫ້ເຫັນເຖິງພຣະຄຸນແລະຄວາມຍິ່ງໃຫຍ່ຂອງພຣະເຈົ້າ ຈຶ່ງຖືກຕ້ອງ.

ວ່າດ້ວຍການປະຕິບັດ ໃນການນະມັສການພຣະເຈົ້າ: W-1.3040

ທຸກເວລາ, ທຸກສະຖານທີ່, ແລະວັດຖຸທຸກຢ່າງ ຖືກສ້າງຂຶ້ນໂດຍພຣະເຈົ້າ ແລະນຳມາຊຶ່ງເຮັດໃຫ້ມີການເຄົາບູຊາ ໂດຍພຣະເຢຊູຄຣິສ. ການນະມັສການພຣະເຈົ້າຂອງຊາວຄຣິສຕຽນໃນສະເພາະເວລາໃດນຶ່ງ ໃນສະຖານທີ່ພິເສດ ໃດນຶ່ງ ໂດຍການໃຊ້ວັດຖຸທີ່ພຣະເຈົ້າປະທານໃຫ້ ຄວນເປັນການນຳພາຄຣິສຕະຈັກຂອງພຣະເຈົ້າເຂົ້າສູ່ຊາວໂລກ ເພື່ອໃຫ້ເຂົາສາມາດ ມີສ່ວນ ໃນເປົ້າໝາຍຂອງພຣະເຈົ້າໃນເວລາແຫ່ງການໄຖ່ໃຫ້ພົ້ນ, ເປັນການເຮັດໃຫ້ສະຖານທີ່ ນັ້ນສັກສິດດ ແລະເປັນການປ່ຽນຮູບແບບຂອງຄວາມຈິງແຫ່ງວັດຖຸ ສຳຣັບການສັຣເສີນພຣະເຈົ້າ.

## 4. ການຮັບຜິດຊອບ ແລະຄວາມສາມາດ ໃນການນະມັສການພຣະເຈົ້າ: W-1.4000



ວ່າດ້ວຍຄວາມຮັບຜິດຊອບ: W-1.4001

ໃນການນະມັສການພຣະເຈົ້າ, ຄຣິສຕະຈັກຕ້ອງຈົດຈຳສເນີວ່າ ອິສະຣະພາບໃນພຣະຄຣິສ ແລະຄຳສັ່ງໃນພຣະຄຳພີ ໄດ້ເຮັດໃຫ້ ພວກເຮົາເຮັດທຸກສິ່ງ ຢ່າງມີຣະບຽບແບບແຜນ. ຫາກການນະມັສການພຣະເຈົ້າຂອງຄຣິສຕຽນ ບໍ່ເຮັດ ຕາມຣະບຽບແບບແຜນ, ບໍ່ໃຫ້ຄວາມສຳຄັນຫຼາຍ ຫຼືບໍ່ມີຣະບຽບ ການນະມັສການນັ້ນ ເປັນການຕໍ່ຕ້ານພຣະເຈົ້າ ແລະເປັນການຂັດຂວາງ ຝູງຊົນທີ່ຈະມານະມັສການນັ້ນ. ຄວາມຮັບຜິດຊອບໃນການນະມັສການນັ້ນ ຄວນໄດ້ຖືກການ ນຳພາຈາກພຣະວິນຍານບໍຣິສຸດດັ່ງທີ່ບັນທຶກໄວ້ໃນພຣະຄຳພີ, ສືບຕໍ່ເຮັດຕາມປະສົບການຂອງຄຣິສຕະຈັກສາກົນທີ່ນິຍົມທຳກັນ, ເຮັດຕາມແບບປະເພນີ ຂອງການປະຕິຮູບ, ຕາມປຶ້ມແຫ່ງການສາຣະພາບ ຍອມຮັບ, ອີງໃສ່ຄວາມ ຕ້ອງການຂອງກຸ່ມນະມັສການ ໃນກຸ່ມຊົນໃດນຶ່ງ, ອີງໃສ່ການບັນທຶກຕາມຮູບແບບທີ່ບັນທຶກໄວ້ໃນທັມມະນູນ ກ່ຽວກັບການປົກຄອງ ແລະໃນປຶ້ມແນະນຳສະບັບນີ້.

ວ່າດ້ວຍການສຶກສາອົບຮົມ ແລະການສັງເກດການ: W-1.4002

ເພື່ອເປັນການແນ່ນອນວ່າ ສິ່ງສຳຄັນເຫຼົ່ານີ້ ຈະຖືກນຳມາປະຕິບັດ, ທາງພາກເພຣັສໄບເທີຣີ ຈະຕ້ອງເປັນຜູ້ໃຫ້ການ ສຶກສາ ແລະສັງເກດການເບິ່ງການນະມັສການຂອງຄຣິສຕະຈັກໃດນຶ່ງ ໂດຍການໂອ້ລົມກັບຄະນະປົກຄອງກ່ຽວກັບຄຸນ ນະພາບຂອງການ ນະມັສການພຣະເຈົ້າ, ຣະບຽບພື້ນຖານໃນການປົກຄອງຄຣິສຕະຈັກ, ແລະໝາກຜົນໃນການທີ່ເປັນ ຜູ້ນຳພາຊີວິດຂອງ ໄພ່ພົນຂອງພຣະເຈົ້າ ໃນເວລາທີ່ພວກເຂົາທຳການປະກາດພຣະທັມ ແລະມີການພົວພັນຢ່າງມ່ວນຊື່ນ ແລະຍຸຕິທັມ. (G-11.0502c)

## ວ່າດ້ວຍບຸກຄົນທີ່ມີສ່ວນຮ່ວມ ແລະຜູ້ຈະນຳພາໃນການນະມັສການ:

W-1.4003

ໃນພຣະເຢຊູຄຣິສ, ຄຣິສຕະຈັກ ເປັນບ່ອນທີ່ທຸກຄົນຕ້ອງເຂົ້າສູ່ການນະມັສການພຣະເຈົ້າ. ໄພ່ພົນຂອງພຣະອົງຊົງ ຖືກເອີ້ນໃຫ້ຮ່ວມ ສາມັກຄີທັມນຳກັນ ດ້ວຍການນະມັສການ. ບໍ່ມີໃຜຈະຖືກຍົກເວັ້ນບໍ່ໃຫ້ມີສ່ວນ,ຫຼືເປັນຜູ້ນຳພາໃນການ ນະມັສການພຣະເຈົ້າໃນທີ່ສາທາຣະນະ ອັນເປັນເຮືອນຮັງຂອງພຣະເຈົ້າ ໂດຍຈຳແນກ ຜົວພັນ, ສີສັນ, ຊົນຊັ້ນ, ອາຍຸສັງຂານ, ເພດວັຍ, ຫຼືການເສັຽອົງຄະຕ່າງໆ. ມີບາງຄົນທີ່ຖືກຝຶກຝົນ ຮ່ຳຮຽນ ອາດກາຍມາເປັນຜູ້ນຳ ໃນການນະມັສການໄດ້. ເປັນການທີ່ ເໝາະສົມສຳຣັບການຊຸກຍູ້ສະມາຊິກ ແລະເຈົ້າໜ້າທີ່ ທີ່ຖືກສະຖາປະນາແລ້ວ ໃຫ້ເຮັດວຽກງານການນຳພານັ້ນໆ.

## ວ່າດ້ວຍຄະນະປົກຄອງຄຣິສຕະຈັກ: W-1.4004

ໃນຄຣິສຕະຈັກນຶ່ງ, ຄະນະປົກຄອງ ເປັນຜູ້ຈັດຕຽມການນະມັສການພຣະເຈົ້າ ແລະຄອນຊຸກຍູ້ຝູງຊົນທົ່ວໄປໃຫ້ ປະກອບສ່ວນ ຢ່າງເຕັມເມັດເຕັມໜ່ວຍ ແລະປົກກະຕິ. ຄະນະປົກຄອງຄອນຈັດຕຽມການນະມັສການພຣະເຈົ້າ:

- ດ້ວຍການເທສນາທັມ,
- ດ້ວຍການສເລີມສລອງພິທີສິນຕ່າງໆ,
- ຮ່ວມມືກັນອະທິຖານ, ແລະ
- ຖວາຍການສັຣເສີນພຣະເຈົ້າດ້ວຍການຮ້ອງເພັງ. (W-2.0000; W-3.0000)

ສິດອຳນາດຂອງຄະນະປົກຄອງມີດັ່ງນີ້:



- ມີສິດໃຫ້ການສັງເກດ ແລະຮັບຮອງເອົາທຸກການນະມັສການຂອງຊຸມຊົນ ໃນຊີວິດແຫ່ງການດຳເນີນງານຂອງຄຣິສຕະຈັກນຶ່ງໆ ດ້ວຍການຍົກເວັ້ນສິດທິພິເສດຊຶ່ງເປັນ ຂອງອາຈານ. (W-1.4005)
- ຕັດສິນກ່ຽວກັບໂອກາດ, ວັນ, ເວລາ, ແລະສະຖານທີ່ໃນການນະມັສການພຣະເຈົ້າ.

ໜ້າທີ່ຮັບຜິດຊອບຂອງຄະນະປົກຄອງມີດັ່ງນີ້:

- ຮັບຜິດຊອບໃນການຈັດຕຽມທ້າງທາ ສະຖານທີ່ ແລະຕົບແຕ່ງສະຖານທີ່,
- ຮັບຜິດຊອບການເລືອກສັນອຸປກອນ ເຊັ່ນ ດອກໄມ້, ທຽນ, ປ້າຍຄຳຂວັນ, ແລະອື່ນໆ,
- ຈັດຕຽມດົນຕຣີ ແລະການສິລປະອື່ນໆ ສຳຣັບຄຣິສຕະຈັກ,
- ຈັດຕຽມພວກທີ່ຈະນຳພາໃນການນະມັສການດ້ວຍສຽງດົນຕຣີ, ຣະຄອນ, ຟ້ອນຣຳ, ແລະສິລປະອື່ນໆ. (G-10.0102c)

## ວ່າດ້ວຍ ອາຈານ: W-1.4005

ຜູ້ຮັບໃຊ້ພຣະເຈົ້າທີ່ເປັນອາຈານ ຕ້ອງມີໜ້າທີ່ຮັບຜິດຊອບພິເສດ ທີ່ບໍ່ຂຶ້ນກັບການອະນຸມັດຂອງຄະນະປົກຄອງ. ໃນການນະມັສການຂອງຄຣິສຕະຈັກນຶ່ງໆ ອາຈານຕ້ອງມີໜ້າທີ່ຮັບຜິດຊອບດັ່ງນີ້:

- ເລືອກສັນຂໍ້ພຣະຄຳທີ່ຈະອ່ານ,
- ທຳການຈັດຕຽມ ທ້າງທາ ໃນການເທສນາ ຫຼືຄົ້ນຄວ້າ ເປີດເຜີຍຂໍ້ພຣະຄຳພີ,
- ອະທິຖານໃນນາມຂອງຊຸມຊົນ ແລະໃນນາມພວກຜູ້ຈັດຕຽມຝູງຊົນທີ່ມານະມັສການນັ້ນ,
- ເລືອກບົດເພັງທີ່ຈະຮ້ອງ

- ເລືອກການໃຊ້ລະຄອນ, ການຟ້ອນຣຳ, ແລະສິລປະແບບອື່ນໆ.

ອາຈານ ອາດຕ້ອງໃຫ້ການປຶກສາກັບຄະນະກັມມະການຮັບຜິດຊອບການນະມັສການໃນການຈັດຕຽມການນະມັສການ ຫຼືໃນກໍຣະນີ ພິເສດໃດນຶ່ງ.

ບ່ອນທີ່ມີ ຜູ້ອຳນວຍການດົນຕຣີ ຫຼືການທົວໜ້າການດົນຕຣີອື່ນໆ, ອາຈານພ້ອມດ້ວຍບຸກຄົນນັ້ນໆ ຕ້ອງປຶກສາ ຫາລື ຊຶ່ງກັນແລະກັນເພື່ອຂັດເລືອກດົນຕຣີທີ່ຈະນຳມາໃຊ້ນັ້ນ ໃຫ້ຖືກຕ້ອງແລະແທດເໝາະກັບການນະມັສການນັ້ນໆ. ຄະນະປົກຄອງຕ້ອງເຫັນວ່າ ການພົວພັນຊຶ່ງກັນແລະກັນແບບນີ້ເປັນສິ່ງປະຈຳເປັນແລະຖືກຕ້ອງ ເພື່ອທຳໃຫ້ການນະມັສການນັ້ນໃຫ້ມີປະສິດທິພາບ.

## ວ່າດ້ວຍ ຄະນະປົກຄອງ ແລະອາຈານ: W-1.4006

ໄລຍະ ເວລາ ແລະອຸປກອນໃນການນະມັສການ ຕ້ອງຂຶ້ນກັບຄວາມຮັບຜິດຊອບຂອງອາຈານ ອີງໃສ່ການເຫັນດີເຫັນພ້ອມ ຈາກຄະນະປົກຄອງ. ການເລືອກບົດພັງ, ປື້ມເພັງ, ປື້ມພິທີການ, ພຣະຄຳພີ, ແລະອື່ນໆ ທີ່ນຳມາໃຊ້ ໃນການນະມັສການພຣະເຈົ້າ ຂອງຄຣິສຕະຈັກນຶ່ງໆ ຕ້ອງຂຶ້ນກັບຄະນະປົກຄອງ ໂດຍອີງໃສ່ການເຫັນດີເຫັນພ້ອມຂອງອາຈານ ແລະໂດຍການປຶກສາຫາລື ກັບນັກການດົນຕຣີ ແລະພະແນກສຶກສາຂອງຄຣິສຕະຈັກ.

## ວ່າດ້ວຍການຮັບຜິດຊອບຂອງຄະນະປົກຄອງກ່ຽວກັບການສຶກສາ: W-1.4007

ໃນການປະຕິບັດໜ້າທີ່ຮັບຜິດຊອບກ່ຽວກັບການຊຸກຍູ້ຝູງຊົນໃຫ້ຮ່ວມໃນການນະມັສການພຣະເຈົ້າ, ຄະນະປົກຄອງຕ້ອງຈັດຕຽມໃຫ້ມີຄຣິສຕະສຶກສາ ຫລືໂຮງຮຽນວັນອາທິດໃນເວລານະມັສການ ໂດຍໃຫ້ແທດເໝາະກັບອາຍຸ, ຄວາມສົນໃຈ, ແລະສະພາບ ແວດລ້ອມຂອງສະມາຊິກໃນຄຣິສຕະຈັກ.(W-3.5202; W-6.2000;G-



10.0102c,d,e). ຄະນະປົກຄອງ ຄວນຈັດຫາການຮ່ຳຮຽນໜັງສືເຫຼັ້ມນີ້ຢ່າງສະໝ່ຳສເມີ ໃນເວລາໃຫ້ການສຶກສາກ່ຽວກັບວຽກງານແກ່ເຈົ້າໜ້າທີ່ຄຣິສຕະຈັກ.

## ວ່າດ້ວຍຄວາມສາມາດໃນການຊີ້ແຈງ ຕໍ່ສະພາເພຣັສໄບເທີຣີ: W-1.4008

ເພື່ອເຮັດໃຫ້ໜ້າທີ່ຮັບຜິດຊອບກ່ຽວກັບການນະມັສການໃຫ້ສົມບູນຍິ່ງຂຶ້ນ, ອາຈານ ແລະຄະນະປົກຄອງ ຕ້ອງມີຄວາມສາມາດຊີ້ແຈງຕໍ່ທາງສະພາ ໃນກົດທັມມະນູນກ່ຽວກັບການເບິ່ງແຍງສະມາຊິກຂອງຕົນ. (G-11.0502)

## ວ່າດ້ວຍໜ້າທີ່ຮັບຜິດຊອບຂອງພາກ ກ່ຽວກັບການສຶກສາ: W-1.4009

ໃນການຊຸກຍູ້ສົ່ງເສີມ, ຊີ້ນຳ ນຳພາ, ແລະໃນການເປັນແລ່ງແຫ່ງການນະມັສການຂອງຄຣິສຕະຈັກທັ້ງມວນ, ພາກເພຣັສໄບເທີຣີຕ້ອງມີການຈັດຫາການສຶກສາທີ່ເໝາະສົມ. ພວກເຂົາຄວນຈັດຫາການສຶກສາ ໃນການນະມັສການ ໂດຍຜ່ານການເຮັດໄປຕາມປື້ມແນະນຳເຫລັ້ມນີ້ຢ່າງເປັນປະຈຳ ເພື່ອເປັນຈຸດໃນການກວດສອບບັນດາຜູ້ຕຽມຮັບການສະຖາປະນາ ທັງຫຼາຍ ແລະພວກຜູ້ຮັບໃຊ້ ພຣະເຈົ້າຄົນອື່ນໆ. ໃນການສືບຕໍ່ເປັນສະມາຊິກຂອງພາກ. (G-11.0103f; G-14.0402; G-14.0508)

# ພາກສອງ Chapter II.
# ອຸປກອນ ໃນການນະມັສການພຣະເຈົ້າຂອງຄຣິສຕຽນ

# The Elements of Christian Worship
# W-2.0000

## 1. ການອະທິຖານ W-2.1000

### ວ່າດ້ວຍການອະທິຖານຂອງຄຣິສຕຽນ: W-2.1001

ການອະທິຖານ ຄືຫົວໃຈຂອງການນະມັສການພຣະເຈົ້າ. ໂດຍອາສັຍພຣະວິນຍານບໍຣິສຸດ, ຜູ້ນະມັສການພຣະເຈົ້າ ໄດ້ພົບພຣະເຈົ້າອົງທ່ຽງແທ້ອົງດຽວທີ່ຊົງປາກົດໃຫ້ເຫັນໂດຍທາງພຣະເຢຊູຄຣິສ. ພວກເຂົາເຊື່ອຟັງ ແລະລໍຄອຍ ພຣະເຈົ້າ, ເອີ້ນຮຽກພຣະອົງຕາມຊື່ຂອງພຣະອົງ, ຣະນຶກເຖິງພຣະຄຸນຂອງພຣະອົງດ້ວຍກິຈການຂອງເຂົາ ແລະຖວາຍຕົວເຂົາເອງຕໍ່ພຣະເຈົ້າ. ການອະທິຖານ ອາດໃຊ້ ດ້ວຍວິທີປາກເວົ້າ, ດ້ວຍການຮ້ອງເພັງ, ດ້ວຍການໃຊ້ວິທີງຽບສງົບ, ຫຼືດ້ວຍການຂັບຕາມ ພຣະບັນຍັດ. ການອະທິຖານ ເຕີບໃຫຍ່ມາຈາກຈຸດກາງແຫ່ງຊີວິດຂອງຄົນຜູ້ນຶ່ງ ທີ່ທຳການຕອບຮັບຕໍ່ພຣະເຈົ້າ. ການອະທິຖານ ຖືກປະກອບຂຶ້ນດ້ວຍພຣະຄຳຂອງພຣະເຈົ້າໃນພຣະຄຳພີ ແລະໂດຍຊີວິດຂອງຊຸມຊົນທີ່ມີຄວາມເຊື່ອ. ການອະທິຖານ ສະແດງ ອອກເຖິງການອຸທິດຕົວເອງ ໃນການເຂົ້າຮ່ວມການທຳງານຂອງ ພຣະເຈົ້າໃນໂລກ.

### ວ່າດ້ວຍເນື້ອໃນຂອງການອະທິຖານ: W-2.1002

ໃນການອະທິຖານ, ພວກເຮົາໄດ້ເອີ້ນຕອບພຣະເຈົ້າໃນຫຼາຍວິທີທາງ. ໃນການໃຫ້ຄວາມເຄົາຣົບບູຊາຕໍ່ພຣະເຈົ້າ ພວກເຮົາໄດ້ທຳການສັຣເສີນພຣະອົງໃນຄວາມເປັນ ພຣະເຈົ້າຂອງພຣະອົງ. ໃນການຂອບພຣະຄຸນພຣະເຈົ້າ ພວກເຮົາສະແດງຄວາມກະຕັນຍູ ຮູ້ບຸນຄຸນໃນສິ່ງທີ່ພຣະອົງໄດ້ກະທຳມາ. ໃນການສາຣະພາບຍອມຮັບ ພວກເຮົາຍອມຮັບເອົາການຄືນດີກັນກັບພຣະອົງ ແບບສະເພາະບຸກຄົນ ຫຼືໂດຍທົ່ວໄປ



ໃນການກະທຳຂອງເຮົາ ທີ່ຜ່ານມາ ຫຼືທີ່ຍັງບໍ່ໄດ້ກະທຳ. ໃນການ ອ້ອນວອນຮ້ອງຂໍກັບພຣະອົງ ພວກເຮົາອ້ອນວອນເພື່ອພວກເຮົາເອງ ແລະເພື່ອກຸ່ມຊົນທີ່ຮ່ວມ. ໃນການຮ້ອງຂໍເພື່ອຄົນອື່ນ ພວກເຮົາ ເປັນຕົວແທນຂອງຄົນອື່ນ ແລະຊາວໂລກທັງມວນ ເພື່ອທຳການຮ້ອງຂໍຕໍ່ພຣະເຈົ້າ. ໃນການອຸທິດຕົນເອງນັ້ນ ພວກເຮົາໄດ້ຖວາຍຕົວເຮົາເອງ ເພື່ອຈຸດປະສົງ ເປົ້າໝາຍ ແລະການເທີດທູນຍ້ອງຍໍພຣະກຽດພຣະອົງ.

### ວ່າດ້ວຍການດົນຕຣີ ທີ່ໃຊ້ໃນການອະທິຖານ: ການຖວາຍເພັງ W-2.1003

ບົດເພັງສັຣເສີນ ເປັນສິ່ງທີ່ຕອບຮັບພຣະເຈົ້າ ໃນການອະທິຖານ. ບົດເພັງໄດ້ເຕົ້າໂຮມພວກຄົນທີ່ຄວາມເຊື່ອ ເຂົ້າກັນໃນການອະທິຖານ ບໍ່ວ່າຍາມໃດສະຖານທີ່ໃດ, ຈະເປັນໂບດ, ເປັນບ້ານເຮືອນ ຫຼືບ່ອນອື່ນໆກໍຕາມ. ສັນຍາຂອງມະນຸດ ຕໍ່ພຣະເຈົ້າ ມັກຈະໃຊ້ເພັງສັຣເສີນ ໃນການອະທິຖານ. ພຣະທັມເພັງສັຣເສີນ ກໍໄດ້ຖືກຳເນີດ ມາຈາກບົດເພັງຂອງບັນດາ ພວກຄົນທີ່ເຊື່ອ ເພື່ອໃຊ້ໃນການຕອບຮັບພຣະເຈົ້າ. ດັ່ງນັ້ນ ເພັງສັຣເສີນ ອາດຖືກນຳມາ ອ່ານສລັບກັນຫຼືອ່ານພ້ອມກັນ, ໃນເວລາພວກເຂົາໄດ້ຮ້ອງເພັງນັ້ນ ມັນໄດ້ສະແດງໃຫ້ເຫັນເຖິງຣິດອຳນາດຂອງພຣະເຈົ້າທີ່ ໄດ້ຊົງປາກົດແກ່ເຂົາ. ການເພີ່ມເຕີມກັບ ພຣະທັມເພັງສັຣເສີນ, ຄຣິສຕະຈັກໃນພຣະສັນຍາໃໝ່ ໄດ້ມີການຮ້ອງບົດເພັງສັຣເສີນແລະບົດເພັງແຫ່ງພຣະວິນຍານ. ຜ່ານຫຼາຍຊົ່ວອາຍຸຄົນ ແລະຜ່ານຫຼາຍປະເພນີວັທນະທັມ, ຄຣິສຕະຈັກໄດ້ມີການເພີ່ມເຕີມບົດເພັງສັຣເສີນ ເພື່ອການຮ້ອງສັຣເສີນພຣະເຈົ້າໃນເວລາອະທິຖານ. ຄຣິສຈະຈັກ ໄດ້ຖືກຊຸກຍູ້ໃຫ້ນຳໃຊ້ ດົນຕຣີຕ່າງໆທີ່ເປັນລັກສະນະຊາດຂອງຕົນເອງ ໃນການອະທິຖານ.

## ວ່າດ້ວຍການໃຊ້ດົນຕຣີ ໃນການອະທິຖານ: ຄະນະນັກຮ້ອງ ແລະເຄື່ອງເສບ W-2.1004

ໃນການນຳພາການນະມັສການເພື່ອທຳການຮ້ອງເພັງອະທິຖານ ຕ້ອງແມ່ນໜ້າທີ່ຂອງຄະນະນັກຮ້ອງ ແລະນັກດົນຕຣີ ອື່ນໆ. ພວກເຂົາກໍອາດຕ້ອງ ອະທິຖານໃນນາມຂອງທີ່ຊຸມນຸມ ດ້ວຍບົດເພັງສັຣເສີນ, ດ້ວຍບົດອ່ານສະລັບກັນ, ແລະດ້ວຍການດົນຕຣີອື່ນໆ. ເຄື່ອງເສບ ກໍແມ່ນອຸປກອນໃນການອະທິຖານອັນນຶ່ງ ໃນເວລາທີ່ພຣະຄຳບໍ່ຈຳເປັນຕ້ອງນຳມາໃຊ້ ໃນເວລາອະທິຖານນັ້ນ. ການນະມັສການໃນດ້ານການດົນຕຣີ ບໍ່ແມ່ນສິ່ງທີ່ເອົາມາສະແດງເພື່ອໃຫ້ຄວາມມ່ວນຊື່ນແບບສິລປະອື່ນໆ. ແຕ່ຈະຕ້ອງມີການກອດກາ ສຶກສາຄັກແນ່. ການດົນຕຣີ ຕ້ອງນຳມາໃຊ້ຢ່າງເໝາະສົມໃນການຖວາຍກຽດແດ່ພຣະເຈົ້າ ໃນນາມຂອງ ກຸ່ມຊົນ (ໃຫ້ເບິ່ງໃນ W-2.2008; W-3.3101)

## ວ່າດ້ວຍຣະບຽບຂອງການອະທິຖານ: W-2.1005

ໃນພຣະຄຳພີໃໝ່ ແລະໂດຍຜ່ານຍຸກສະໄໝຕ່າງໆ ໄພ່ພົນຂອງພຣະເຈົ້າໄດ້ສະແດງການອະທິຖານກັບພຣະອົງ ດ້ວຍການກະທຳ ເຊັ່ນດຽວກັນ ກັບການປາກເວົ້າ ແລະຮ້ອງເພັງ. ດັ່ງນັ້ນ ໃນການນະມັສການສະໄໝປັດຈຸບັນ ມັນກໍເປັນການ ສົມຄວນທີ່ຕ້ອງທຳດັ່ງນີ້:

- ຄຸເຂົ່າ, ໂນ້ມຕົວ, ຢືນ, ຍົກມືອະທິຖານ;
- ຟ້ອນຣຳ, ຕົບມື, ໂອບກອດດ້ວຍຄວາມຊົມຊື່ນຍິນດີ ແລະສັຣເສີນ;
- ເຈີມດ້ວຍນ້ຳມັນຫອມ ແລະວາງມື ໃນການອ້ອນວອນ, ໃນການໄຫວ້ວອນຂໍ, ໃນການມອບໝາຍໜ້າທີ່ ແລະໃນການສະຖາປະນາ.



## **2. ການອ່ານພຣະຄຳ ແລະການປະກາດ: W-2.2000**

## ວ່າດ້ວຍເນື້ອໃນຈຸດໃຈກາງຂອງພຣະຄຳ: W-2.2001

ຄຣິສຕະຈັກຕ້ອງຍອມຮັບວ່າ ພຣະຄຳພີ ຄືສິ່ງທີ່ມາຈາກພຣະເຈົ້າ ຊຶ່ງເປັນພະຍານໃນການສະເດັດມາປາກົດ ຂອງພຣະອົງ. ບ່ອນໃດກໍຕາມ ທີ່ອ່ານ ແລະປະກາດກໍຕ້ອງເປັນພະຍານກ່ຽວກັບພຣະທັມ ຄືພຣະເຢຊູຄຣິສທີ່ມາ ເກີດເປັນມານຸດໂດຍທາງ ພຣະວິນຍານບໍຣິສຸດ. ດ້ວຍເຫດຜົນນີ້ເອງ ການອ່ານ, ການຟັງ, ການເທສນາ, ແລະການ ສາຣະພາບຍອມຮັບເອົາ ພຣະຄຳຂອງພຣະເຈົ້າ ຈຶ່ງເປັນຈຸດກາງຂອງການ ນະມັສການພຣະເຈົ້າຂອງຄຣິສຕຽນ. ຄະນະປົກຄອງຕ້ອງຮັປກັນວ່າ ໃນການນະມັສການພຣະເຈົ້າໃນທີ່ສາທາຣະນະ ພຣະຄຳຕ້ອງຖືກອ່ານແລະປະກາດຢ່າງ ເປັນປະຈຳ ຕາມພາສາທີ່ນິຍົມໃຊ້ ໃນຄຣິສຕະຈັກໃດນຶ່ງ.

## ວ່າດ້ວຍການເລືອກຂໍ້ພຣະຄຳ: W-2.2002

ອາຈານ ຕ້ອງເປັນຜູ້ຮັບຜິດຊອບໃນການເລືອກເຟັ້ນເອົາຂໍ້ພຣະຄຳທີ່ຈະອ່ານໃນການນະມັສການ ແລະຕ້ອງເປັນຜູ້ ເອົາໃຈໃສ່ ເພື່ອໃນໄລຍະ ເວລາໃດນຶ່ງ ຜູ້ມານະມັສການຈະໄດ້ຍິນພຣະຄຳທັງໝົດຂອງພຣະເຈົ້າ. ເປັນການເໝາະ ສົມທີ່ໃນການນະມັສການ ພຣະເຈົ້າ ໃນວັນຂອງ ພຣະອົງ ຈະໃຫ້ມີການອ່ານພຣະຄຳ ທັ້ງພຣະຄຳພີເດີມ, ພຣະກິຈຕິ ຄຸນຂອງພຣະເຢຊູຄຣິສ ແລະຈົດໝາຍ ຂອງເຫຼົ່າອັກຄະສາວົກໃນພຣະຄຳພີໃໝ່. ບົດເພັງສັຣເສີນ ກໍຄວນນຳມາໃຊ້ ໃນການນະມັສການເຊັ່ນກັນ.

## ວ່າດ້ວຍຂໍ້ພຣະຄຳຕ່າງໆ ທີ່ຕັດອອກມາຈາກພຣະຄຳພີເພື່ອອ່ານ: W-2.2003

ການເລືອກພຣະຄຳທີ່ຈະອ່ານໃນທີ່ສາທາຣະນະ ຄວນອີງໃສ່ການນຳພາຈາກປື້ມຣະດູການນະມັສການຂອງ ຄຣິສຕະຈັກ, ອີງໃສ່ການເປັນຫ່ວງເປັນໃຍຂອງອາຈານຕໍ່ຄຣິສຕະຈັກນຶ່ງໆ, ອີງໃສ່ເຫດການຫຼືຣາຍການທີ່ ສຳຄັນຕ່າງໆ, ແລະອີງໃສ່ສະພາບ ການຂອງໂລກ ພ້ອມທັງຣາຍການ ພິເສດທີທາງຄຣິສຕະຈັກໄດ້ຈັດຂຶ້ນ. ການຂັດ ເອົາຂໍ້ພຣະຄຳພີທີ່ຈະອ່ານຂອງຄຣິສຕະຈັກ ຕ້ອງຮັປກັນໃຫ້ໄດ້ເນື້ອໃນຂອງການອ່ານ ແລະແຫດເໝາະກັບຄຣິສຕະຈັກ ສາກົນທົ່ວໄປ.

## ວ່າດ້ວຍຣະບຽບວິນັຍຂອງການອ່ານ: W-2.2004

ໄພ່ພົນຂອງພຣະເຈົ້າ ຄວນມີການເລືອກສັນ ໃນການອ່ານພຣະຄຳຕາມໃຈມັກໃນເວລາອ່ານໃນຄອບຄົວ ແລະໃນການ ນະມັສການສ່ວນຕົວ. (W-5.3000) ຄວາມຮັບຜິດຊອບໃນການສິດສອນ ແລະເທສນາພຣະຄຳ ຈະຕ້ອງມີລັກສະນະພິເສດ ເພື່ອຮັປກັນ ການນະມັສການສ່ວນຕົວຂອງເຂົານັ້ນ ຈະມີການສັງເກດກ່ຽວກັບຣະບຽບວິນັຍ ຂອງການອ່ານ ໃນພຣະຄຣິສຕະທັມຄຳພີທັງໝົດ.

## ວ່າດ້ວຍພາບພົດຂອງການອ່ານພຣະຄຳ: W-2.2005

ອາຈານ ຕ້ອງຮັບຜິດຊອບໃນການເລືອກສັນຂໍ້ ຕອນ ຂອງພຣະຄຳ ທີ່ຈະອ່ານໃນທີ່ສາທາຣະນະ. ຫາກຕອນນຶ່ງ ຂອງຂໍ້ພຣະຄຳຖືກນຳມາໃຊ້, ຫາກມີການຮັບເອົາຂໍ້ຕອນນັ້ນໆເກີດຂຶ້ນ, ຫຼືການແປຂໍ້ພຣະຄຳແບບໃໝ່ໆໄດ້ຖືກ ຈັດຫາມາ, ອາຈານຄວນສເນີໃຫ້ທາງຄະນະປົກຄອງໄດ້ຊາບນຳ.

## ວ່າດ້ວຍການອ່ານໃນສາທາຣະນະ ແລະການໄດ້ຟັງພຣະຄຳ: W-2.2006



ການອ່ານພຣະຄຳໃນທີ່ສາທາຣະນະ ຄວນຈະແຈ້ງ, ໄດ້ຍິນດີ, ແລະດຶງດູດຄວາມສົນໃຈໃນຄວາມໝາຍ ຂອງບົດອ່ານ, ແລະຜູ້ທີ່ອ່ານ ຕ້ອງເປັນຜູ້ທີ່ເຊື່ອຖືໄດ້. ການຟັງພຣະຄຳ ຕ້ອງຟັງຢ່າງມີຄວາມຫວັງ ແລະຕັ້ງໃຈ ແລະອາດມີການພິມແຈກຈ່າຍ ບົດອ່ານນັ້ນໆໃຫ້ແກ່ຜູ້ຟັງ. ທີ່ປະຊຸມອາດຕ້ອງອ່ານພຣະຄຳພີ ແບບສະລັບກັນ, ແບບກາບກອນ, ຫຼືແບບພ້ອມໆກັນ ຊຶ່ງເປັນພາກສ່ວນນຶ່ງຂອງການນະມັສການ.

## ວ່າດ້ວຍການເທສນາທັມ: W-2.2007

ການເທສນາ ຄວນອີງໃສ່ຂໍ້ພຣະຄຳທີ່ຂຽນໄວ້ໃນພຣະຄຳພີ . ເປັນການປະກາດພຣະທັມຂອງພຣະອົງ ໂດຍໝັ້ນໃຈວ່າ ໂດຍຜ່ານພຣະວິນຍານ ບໍຣິສຸດ ພຣະເຢຊູຄຣິສ ໄດ້ສະຖິດຢູ່ນຳພວກທີ່ເຕົ້າໂຮມກັນ, ພວກທີ່ ຖວາຍກຽດ ແລະພວກທີ່ເອີ້ນຮຽກ ໃຫ້ເຊື່ອຟັງພຣະອົງ. ການເທສນາ ຮຽກຮ້ອງໃຫ້ມີຄວາມຂຍັນໝັ່ນພຽນ ແລະການມອງກວ້າງເຫັນໄກ ໃນການຮ່ຳຮຽນພຣະຄຳ ຂອງພຣະເຈົ້າ, ໃນຣະບຽບວິນັຍຂອງການອະທິຖານ ປະຈຳວັນ, ເພີ່ມພູນກ້າວໜ້າໃນເຫດການກໍຣະນີຕ່າງໆ ແລະເປັນສິ່ງ ສະທ້ອນຕໍ່ຊີວິດຂອງຄົນ ແລະເປັນການຊັກນຳຄົນໃຫ້ເຊື່ອຟັງພຣະຄຣິສ. ບົດເທດຄວນປະກອບດ້ວຍ ພຣະຄຳທີ່ງ່າຍໆ ແລະຈະແຈ້ງ, ໃນພາສາທີ່ສາມາດເຂົ້າໃຈໄດ້. ເທດພົນ ແລະຄວາມເປັນຣະບຽບຮຽບຮ້ອຍໃນການ ເທສນາແມ່ນຂຶ້ນກັບອາຈານ. ຜູ້ນຳດ້ານພຣະຄຳຄົນອື່ນໆ ທີ່ທາງພາກຮັບຮູ້ ອາຈານ ສາມາດເຊີນມາເທດໄດ້ ຫາກໂບດນັ້ນໆ ບໍ່ມີອາຈານ ແລະໄດ້ຮັບການເຫັນດີຈາກຄະນະປົກຄອງແລ້ວ. ບາງຄົນອາດຖືກສົ່ງໄປຈາກພາກ ເພື່ອໃຫ້ເປັນຜູ້ເທດ (WG-6.0304); G-11.0103g,k; G-11.0502f; G-14.0307; G-14.0513; G-14.0516)

### ວ່າດ້ວຍຮູບແບບການປະກາດອື່ນໆ: W-2.2008

ພຣະຄຳອາດຖືກປະກາດດ້ວຍເພັງສວດໃນໂບດ ແລະເພັງຄູ່ງວ ອີງໃສ່ບົດພຣະຄຳທີ່ໃຊ້, ການຮ້ອງເພັງປະສານສຽງ ແລະເພັງແຫ່ງພຣະຄຳ ທີ່ກ່າວເຖິງເຣື້ອງຣາວໃນພຣະຄຳພີ, ໃນບົດເພັງສັຣເສີນ ແລະເພັງປະສານ, ເພັງຝ່າຍ ພຣະວິນຍານທີ່ສະແດງໃຫ້ເຫັນເຖິງຄວາມເຊື່ອ. ການຮ້ອງເພັງໃນເວລານະມັສການ ອາດເປັນການຕອບສນອງ ຂອງກຸ່ມຊຸມນະມັສການ ຕໍ່ກັບພຣະຄຳທີ່ອ່ານ, ຕໍ່ບົດເພັງສັຣເສີນ, ຕໍ່ກົດຣະບຽບະ, ຫຼືຕໍ່ການປະກາດ. ການເສບ ແລະຟ້ອນຣຳ, ກາບກອນໂຄງສານ, ແລະທຸກສິລປະຂອງມະນຸດ ສາມາດນຳມາໃຊ້ໃນການນະມັສການພຣະເຈົ້າ. ການໃຊ້ສິ່ງດັ່ງກ່າວ ຄວນມີການສຶກສາດູແລ ເພື່ອການໃຊ້ນັ້ນ ຈະສາມາດສະແດງເຖິງຄວາມເຊື່ອຂອງຜູ້ນະມັສການ ພຣະເຈົ້າ.

### ວ່າດ້ວຍ ຫຼັກຄວາມເຊື່ອ ແລະການສາຣະພາບຍອມຮັບ: W-2.2009

ບຸກຄົນນຶ່ງໄດ້ຕອບຮັບການອ່ານພຣະຄຳຕາມຫຼັກແຫ່ງຄວາມເຊື່ອ ແລະຕາມຫຼັກການສາຣະພາບຍອມຮັບ. ຄຣິສຕະຈັກຍອມ ຮັບຫຼັກຄວາມເຊື່ອ ຂອງຕົນເພາະ:

- ມີການພົວພັນກັບຄຣິສຕະຈັກສາກົນ,
- ຍ້ອນປະວັດສາດແຫ່ງການສືບທອດກັນມາຂອງຄຣິສຕະຈັກນັ້ນໆ,
- ສະພາບແວດລ້ອມຂອງທ້ອງຖິ່ນ.

ຄຣິສຕະຈັກ ຮັບຄວາມເຊື່ອ ໃນເວລາທີ່ມີການຮັບສິນບັບຕິສມາ ແລະໃນການທຳພິທີສິນມະຫາສະໜິດ, ຫຼັກຄວາມເຊື່ອ ຂອງສາກົນຄວນນຳມາໃຊ້. ພຣະຄຳແຫ່ງການສາຣະພາບຍອມຮັບໄດ້ເປັນສິ່ງທີ່ຕ້ອງພິສູດໂດຍ ພຣະຄຳອັນມີ



ຊີວິດ, ຄືພຣະເຢຊູຄຣິສ ຊຶ່ງພຣະອົງໄດ້ຊົງເປັນພະຍານຢູ່ໃນພຣະທັມຂອງພຣະອົງນັ້ນ.

### ວ່າດ້ວຍ ການຟັງພຣະຄຳ: W-2.2010

ຄົນທີ່ມີສ່ວນໃນການປະກາດພຣະຄຳຂອງພຣະເຈົ້າ ຕ້ອງມີສ່ວນໃນການໄດ້ຟັງເພື່ອ:

- ສາມາດມອງເຫັນພຣະເຢຊູຄຣິສ,
- ຮັບເອົາພຣະຄຸນຂອງພຣະອົງ,
- ຮັບຕອບການຊົງເອີ້ນຂອງພຣະອົງ ໂດຍການເຊື່ອຟັງ.

ການປະກອບສ່ວນດັ່ງກ່າວ ຕ້ອງຂຶ້ນກັບການຊີ້ແຈງຂອງພຣະວິນຍານບໍຣິສຸດ ຊຶ່ງຈະເຫັນໄດ້ດ້ວຍການອະທິຖານ. ຄຳທີ່ວ່າ "ຟັງ" ຫຼື "ໄດ້ຍິນ" ບໍ່ໄດ້ມີຄວາມໝາຍທີ່ນອກອອກໄປຈາກກິຈການແຫ່ງການສຳພັດທັງຫ້າຂອງມະນຸດ.

## **3. ການຮັບສິນບັບຕິສມາ. W-2.3000**

### ວ່າດ້ວຍ ພຣະເຢຊູຄຣິສແລະການຮັບບັບຕິສມາ: W-2.3001

ບັບຕິສມາ ແມ່ນສັນຍາລັກ ແລະການປະທັບຕາ ແຫ່ງການເຂົ້າຮ່ວມແອກກັບພຣະຄຣິສ. ພຣະເຢຊູຄຣິສ, ໃນການຮັບ ບັບຕິສມາຂອງພຣະອົງ ໄດ້ຖືກປະກາດທ່າມກາງຄົນຜິດບາບທັງຫຼາຍ ເພື່ອຈະໃຫ້ມີຄວາມຊອບທັມ ແກ່ໝົດທຸກຄົນ. ໃນການຮັບບັບຕິສມາ ພຣະອົງຊົງຖືກເອີ້ນວ່າ ເປັນບຸດ ຈາກພຣະບິດາຂອງພຣະອົງ ແລະໄດ້ຊົງ ຖືກເຈີມດ້ວຍພຣະ ວິນຍານບໍຣິສຸດ ເພື່ອນຳໄປສູ່ການເປັນຜູ້ຮັບໃຊ້ຂອງພຣະບິດາ ດ້ວຍການສະແດງອອກໃນການທີ່ຊົງຮັບທຸກທໍຣະມານ, ວາຍພຣະຊົນ,

ແລະຄືນພຣະຊົນ. ການຄືນພຣະຊົນຂອງພຣະເຢຊູຄຣິສ ໄດ້ເປັນການຮັບປະກັນ ຕໍ່ພວກຜູ້ຕິດຕາມພຣະອົງວ່າ ພຣະອົງຊົງສະຖິດຢູ່ກັບເຂົາຕລອດເວລາ ແລະດ້ວຍຣິດອຳນາດຂອງພຣະອົງ, ພຣະອົງໄດ້ ສົ່ງພວກເຂົາອອກໄປ ທົ່ວໂລກເພື່ອທຳການສັ່ງສອນ ແລະໃຫ້ບັບຕິສມາພວກເຂົາໂດຍພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ. ເຫຼົ່າອັຄສາວົກ ໄດ້ຮັບພຣະຣາຊທານພຣະວິນຍານບໍຣິສຸດ ເພື່ອດຳເນີນງານໃນຊີວິດຮັບໃຊ້ພຣະອົງ ແລະເປັນຜູ້ຮວບຮວມ ກໍ່ຕັ້ງກຸ່ມຊົນນະມັສການ, ແບ່ງປັນຊີວິດແຫ່ງຄວາມຮັກ, ຄວາມຍຸຕິທັມ, ແລະຄວາມເມດຕາກະຣຸນາອັນອຸດົມສົມບູນໃນໂລກ.

## ວ່າດ້ວຍ ການຕາຍ ແລະເປັນຄືນມາ ໃນການຮັບບັບຕິສມາ:

W-2.3002

ໃນການຮັບສົນບັບຕິສມາ, ພວກເຮົາໄດ້ມີສ່ວນຮ່ວມໃນການວາຍພຣະຊົນ ແລະຄືນພຣະຊົນຂອງພຣະເຢຊູຄຣິສ. ໃນການຮັບບັບຕິສມາ ພວກເຮົາໄດ້ຕາຍໄປຈາກສິ່ງທີ່ເຮັດໃຫ້ພວກເຮົາແຍກຈາກພຣະເຈົ້າ ແລະໄດ້ຄືນມາມີຊີວິດໃໝ່ ດ້ວຍກັນກັບພຣະຄຣິສ. ບັບຕິສມາ ໄດ້ເຮັດ ໃຫ້ພວກເຮົາກັບຄືນຫາພຣະຄຸນຂອງພຣະເຈົ້າທີ່ສະແດງອອກໃນພຣະ ເຢຊູຄຣິສ, ຜູ້ຊຶ່ງວາຍພຣະຊົນເພື່ອເຮົາ ແລະຄືນພຣະຊົນເພື່ອເຮົາ. ບັບຕິສມາ,ເປັນການເດີນໄປເບື້ອງໜ້າດ້ວຍກັນ ກັບພຣະຄຣິສຜູ້ຊຶ່ງເຮັດໃຫ້ເປົ້າໝາຍ ແຫ່ງພຣະສັນຍາຂອງພຣະເຈົ້າສຳເຣັດຜົນໃນອານາຄົດ.

## ວ່າດ້ວຍ ພຣະສັນຍາ ແລະນ້ຳ ໃນການຮັບບັບຕິສມາ:

W-2.3003



ໃນການຮັບບັບຕິສມາ, ພຣະວິນຍານບໍຣິສຸດ ໄດ້ນຳພາຄຣິສຈັກໃຫ້ເຂົ້າສູ່ຣະສັນຍາ ຕໍ່ພຣະເຈົ້າ. ນ້ຳທີ່ໃຊ້ໃນ ການຮັບ ບັບຕິສມາ ເປັນສັນຍາລັກທ່ງນ່ນ້ຳຂອງການຊົງສ້າງ, ສັນຍາລັກແຫ່ງນ້ຳຖ້ວມ, ແລະການອົພຍົບອອກຈາກປະເທດເອຢິບ. ດັ່ງນັ້ນ ນ້ຳແຫ່ງບັບຕິສມາ ຈຶ່ງສາມາດນຳເຮົາຂົ້າສູ່ວາມດີອງພຣະເຈົ້າຜູ້ຊົງສ້າງ ແລະສູ່ ພຣະຄຸນແຫ່ງພຣະສັນຍາຂອງພຣະອົງ ທີ່ມີຕໍ່ທ່ານໂນອາ ແລະຊາວອິສຣາເອນ. ໃນທ່າມກາງຄວາມລົ້ມເຫຼວໃນຍຸກ ຂອງພວກເຂົານການປະຕິບັດຕາມພຣະສັນຍາ ຂອງພຣະເຈົ້າ, ນ້ຳນັ້ນ ໄດ້ເອີ້ນພວກເຂົາ ໃຫ້ເຂົ້າສູ່ຄວາມຍຸຕິທັມ ແລະຄວາມຊອບທັມຂອງພຣະອົງ (ອາໂມດ 5:24) ໃຫ້ພວກເຂົາໄດ້ເຫັນ ຄວາມສົດຊື່ນ ໃນພຣະຄຸນ ແລະຄວາມດີ ຂອງພຣະອົງ. ພຣະສັນຍາສັນຍາໃໝ່ ໄດ້ນຳພາພວກເຂົາ ໂດຍການທົດສົງຈາກນ້ຳອັນບໍຣິສຸດ. ໃນການທຳງານຂອງພຣະເຢຊູຄຣິສ, ພຣະອົງໄດ້ຊົງ ຍິນດີ ມອບນ້ຳແຫ່ງຊີວິດແກ່ເຮົາ. ດັ່ງນັ້ນ ການຮັບບັບຕິສມາ ຈຶ່ງເປັນເຄື່ອງໝາຍ ແລະການປະທັບຕາແຫ່ງພຣະຄຸນພຣະເຈົ້າ ແລະຂໍ້ສັນຍາໃນພຣະຄຣິສ.

## ວ່າດ້ວຍ ການມີສ່ວນຮ່ວມ ໃນພຣະສັນຍາ ແຫ່ງພຣະຄຸນພຣະເຈົ້າ:

W-2.3004

ພິທີຕັດ ເປັນເຄື່ອງໝາຍ ແລະສັນຍາລັກ ແຫ່ງການມີສ່ວນຮ່ວມໃນພຣະຄຸນ ແລະພຣະສັນຍາຂອງພຣະເຈົ້າ ຕໍ່ພວກອິສຣາເອນ. ດັ່ງດຽວກັນ ການຮ່ວມເຂົ້າດ້ວຍກັນກັບພຣະຄຣິສ ຕ້ອງດ້ວຍທາງຄວາມເຊື່ອໃນພຣະຄຣິສ, ດັ່ງນັ້ນ ບັບຕິສມາຈຶ່ງເປັນເຄື່ອງໝາຍ ແລະສັນຍາລັກ ໃນການເຂົ້າຮ່ວມໃນພຣະຄຸນພຣະເຈົ້າ ແລະຄຳສັນຍາຂອງ ພຣະອົງຕໍ່ ຄຣິສຕະຈັກ. ດັ່ງໄດ້ກ່າວມາ ບັບຕິສມາ ມີຄວາມໝາຍດັ່ງນີ້:

- ເປັນການເຊື່ອໝັ້ນໃນພຣະເຈົ້າຢ່າງແທ້ຈິງ
- ເປັນການຊຳຣະລ້າງຄວາມຜິດບາບ
- ບັງເກີດໃໝ່
- ສວມພຣະກາຍຂອງພຣະຄຣິສ (ມີຊີວິດຢູ່ເພື່ອພຣະຄຣິສ)
- ຖືກປະທັບຕາໝາຍໄວ້ ດ້ວຍພຣະວິນຍານຂອງພຣະເຈົ້າ
- ຖືກຮັບເຂົ້າສູ່ຄອບຄົວແຫ່ງພຣະສັນຍາ ແຫ່ງຄຣິສຕະຈັກຂອງພຣະເຈົ້າ
- ຟື້ນຄືນມາ ແລະເປັນແສງສວ່າງໃນພຣະຄຣິສ.

## ວ່າດ້ວຍ ການຮວມກັນເປັນອັນນຶ່ງອັນດຽວກັນກັບພຣະຄຣິສ ແລະຄົນອື່ນໆ: W-2.3005

ພຣະກາຍຂອງພຣະຄຣິສ ມີພຣະກາຍດຽວ, ແລະບັບຕິສມາ ເປັນເຄື່ອງຜູກມັດໃນການເປັນອັນນຶ່ງອັນດຽວກັນກັບ ພຣະຄຣິສ. ພວກເຂົາເຂົ້າຮ່ວມເປັນອັນນຶ່ງອັນດຽວກັບພຣະຄຣິສໂດຍທາງຄວາມເຊື່ອ, ການບັບຕິສມາ ກໍເປັນການ ນຳຄົນໃຫ້ເປັນອັນນຶ່ງ ອັນດຽວກັນ ກັບຄົນອື່ນໆ ແລະກັບຄຣິສຕະຈັກ ໃນທຸກເວລາ ແລະທຸກສະຖານທີ່. ມັນຈະຢູ່ເໜືອກວ່າ ການຂີດຂັ້ນຣະຫວ່າງ ເຊື້ອຊາດຜິວພັນ, ອາຍຸເພດວັຍ. ແລະກໍຢູ່ເໜືອກວ່າ ຊາດ, ປະວັດສາດ, ແລະກິຈການອື່ນໆ.

## ວ່າດ້ວຍບັບຕິສມາ: ພຣະຄຸນ, ການກັບໃຈເສັຽໃໝ່, ການຊົງມອບໝາຍ W-2.3006



ບັບຕິສມາ ເປັນກົດໝາຍ ແລະການປະທັບຕາ ໃນສິ່ງທີ່ພຣະທັມຂອງພຣະເຈົ້າໄດ້ປະກາດໄວ້. ການໄຖ່ໃຫ້ພົ້ນ ຂອງພຣະເຈົ້າ ໄດ້ຖືກປະທານ ແກ່ທຸກຄົນ. ບັບຕິສມາ ເປັນຂອງພຣະທານ ແຫ່ງພຣະຄຸນຂອງພຣະເຈົ້າ ແລະເປັນການ ເອີ້ນໃຫ້ຮັບເອົາພຣະຄຸນ ຂອງພຣະອົງ. ບັບຕິສມາ ຮຽກຮ້ອງໃຫ້ຕ້ອງມີການກັບໃຈເສັຽໃໝ່, ມີຄວາມເຊື່ອ, ແລະກາຍເປັນຜູ້ຕິດຕາມຮັບໃຊ້ພຣະເຈົ້າ. ບັບຕິສມາ ໄດ້ໃຫ້ບຸກຄະລິພາບ ຂອງຄຣິສຕະຈັກ ແລະຊົງມອບໝາຍໃຫ້ ຄຣິສຕະຈັກນັ້ນໆ ທຳງານຂອງພຣະເຈົ້າໃນໂລກ.

## ວ່າດ້ວຍ ສັນຍາລັກ ແລະການປະທັບຕາ ຂອງຜູ້ທີ່ເຊື່ອໃນພຣະເຈົ້າ: W-2.3007

ການເຊື່ອພຣະເຈົ້າ ຕ້ອງສະແດງອອກໃນການຮັບບັບຕິສມາ ຊຶ່ງເປັນການຕາຍຕົວ ແລະແນ່ນອນ, ເຖິງແມ່ນຄວາມ ເຊື່ອ ຂອງມະນຸດຕໍ່ພຣະເຈົ້າ ຈະບໍ່ມີກຳຕານ ແຕ່ຫາກມີຄວາມເຊື່ອເກີດຂຶ້ນ ການສະແດງອອກຕ້ອງດ້ວຍການບັບຕິສມາ. ບັບຕິສມາຈະຮັບໄດ້ພຽງຄັ້ງດຽວ. ປະສິດທິພາບແຫ່ງ ການບັບຕິສມາ ບໍ່ແມ່ນຂຶ້ນກັບໃນເວລາທີ່ເຮັດນັ້ນ ເພາະການ ບັບຕິສມາ ເປັນຈຸດເລີ່ມຕົ້ນແຫ່ງການດຳຣົງຊີວິດໃນພຣະຄຣິສ ແຕ່ບໍ່ທັນສິ້ນສຸດ. ການເອີ້ນຮຽກໃຫ້ຖິ້ມໃຈເກົ່າເອົາ ໃຈໃໝ່ ແລະການມີ ຊີວິດໃໝ່ ຈະຕ້ອງເປັນການທຳງານຂອງພຣະຄຸນຂອງພຣະເຈົ້າຢ່າງສມ່ຳສເມີ. ຄວາມສັດຊື່ຂອງ ພຣະເຈົ້າ ບໍ່ຈຳເປັນຕ້ອງເຣີ່ມ ຄືນໃໝ່. ແຕ່ຄວາມສັດຊື່ຂອງມະນຸດ ຕ້ອງເຣີ່ມຄືນຢູ່ເປັນປະຈຳ. ບັບຕິສມາຮຽກຮ້ອງ

ໃຫ້ມີການຕັດສິນໃຈໄດ້ໃນທຸກກໍຣະນີ ແຫ່ງຊີວິດ, ທັ້ງຄົນທີ່ຕັດສິນໃຈດ້ວຍຕົນເອງ ແລະພວກທີ່ໃຫຍ່ຂື້ນມາໃນ ຄອບຄົວແຫ່ງຄວາມເຊື່ອ.

## ວ່າດ້ວຍ "ບັບຕິສມາດຽວ" ແລະຄວາມໝາຍ

W-2.3008

ພວກຄົນທີ່ມີຄວາມເຊື່ອ ທັງຜູ້ນ້ອຍ ແລະຜູ້ໃຫຍ່ ລ້ວນມີສ່ວນໃນພຣະສັນຍາຂອງພຣະເຈົ້າ. ເດັກຂອງພວກທີ່ເຊື່ອ ບໍ່ຄວນຊັກຊ້າ ໃນການໃຫ້ຮັບບັບຕິສມາ, ແຕ່ກໍບໍ່ເຮັ່ງຮີບຈົນເກີນໄປ. ບັບຕິສມາ ບໍ່ວ່າຈະເຮັດໃຫ້ຜູ້ທີ່ຕັດສິນໃຈເອງ ຫຼືເດັກ ກໍເປັນພິທີສິນ ແບບດຽວກັນ.

ການໃຫ້ບັບຕິສມາແກ່ເດັກ ເປັນພະຍານເຖິງຄວາມຮັກຂອງພຣະເຈົ້າທີ່ມີຕໍ່ມະນຸດ ແມ້ກະທັ້ງໃນເວລາທີ່ບໍ່ທັນ ສາມາດປະກາດ  ຄວາມເຊື່ອ ດ້ວຍຕົນເອງເທື່ອ.

ການໃຫ້ບັບຕິສມາແກ່ພວກທີ່ເຊື່ອດ້ວຍການຕັດສິນໃນໂດຍຕົນເອງ ໄດ້ເປັນພະຍານເຖິງຂອງປະທານທີ່ມາ ແຕ່ພຣະເຈົ້າ ໃນຄວາມຮັກ ແລະຄວາມຊອບທັມຂອງພຣະອົງ ທີ່ມີຕໍ່ມະນຸດ.

## ວ່າດ້ວຍການຣະນຶກເຖິງ ບັບຕິສມາຂອງຄົນຜູ້ນຶ່ງ:

W-2.3009

ບັບຕິສມາ ຕ້ອງຮັບໄດ້ພຽງເທື່ອດຽວ. ໃນເມື່ອພວກທີ່ເຊື່ອ ໝັ້ນໃຈວ່າ ພຣະຄຸນຂອງພຣະເຈົ້າຊົງທຳງານ ຢູ່ຕລອດເວລາ ການນະມັສການ ກໍຕ້ອງມີຕລອດໄປ. ໃນການປະກອບສ່ວນ ເວລາມີການຮັບບັບຕິສມາ, ພວກເຂົາ ຕ້ອງຢືນຢັດຮ່ວມພິທີສິນ ມະຫາສະໜິດເພື່ອການເຕີບໃຫຍ່ ຂອງພວກເຂົາ,



ແລະນັ້ນກໍເປັນການສະແດງໃຫ້ເຫັນ ເຖິງຄວາມຕ້ອງການພຣະຄຸນພຣະເຈົ້າ ຂອງພວກເຂົາ ແລະເປັນການຟື້ນຟູວິນຍານຈິດ ຂື້ນໃໝ່ໃນພຣະຄຣິສ.

## ວ່າດ້ວຍຮ່າງກາຍດຽວ ບັບຕິສມາດຽວ:

W-1.3010

ມີກາຍດຽວ ກໍມີບັບຕິສມາດຽວ (ເອເຟໂຊ 4:4-6). ຄະນະເພຣັສໄບທີຣຽນ ຍອມຮັບເອົາບັບຕິສມາທັງໝົດທີ່ໃຊ້ ດ້ວຍນ້ຳ ໂດຍເຮັດໃນ ພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ ທີ່ທາງຄຣິສຕະຈັກອື່ນໆ ໄດ້ເຮັດ.

## ວ່າດ້ວຍຄວາມຮັບຜິດຊອບ ໃນການໃຫ້ບັບຕິສມາ:

W-1.3011

ເພື່ອຄວາມເປັນຣະບຽບຮຽບຮ້ອຍ, ການໃຫ້ບັບຕິສມາ ຕ້ອງຖືກອະນຸຍາດຈາກຄະນະປົກຄອງ, ນຳພາເຮັດໂດຍ ອາຈານ, ແລະໂດຍຄຽງຄູ່ກັບການອ່ານ ແລະການປະກາດພຣະຄຳຂອງພຣະເຈົ້າ(G-11.0103p; W-3.3602-3608). ບັບຕິສມາຕ້ອງເຮັດ ໃນເວລາມີການນະມັສການໃນທີ່ສາທາຣະນະ. ໃນສະພາບທີ່ເປັນກໍຣະນີພິເສດ ອາດຮຽກຮ້ອງ ໃຫ້ມີການ ໃຫ້ສິນທີ່ຢູ່ນອກເວລານະມັສການ. ໃນກໍຣະນີແບບນີ້ ການເບິ່ງແຍງດູແລຄວນມີດັ່ງນີ້:

- ທີ່ປະຊຸມຕ້ອງມີສະມາຊິກ ຫຼືຄະນະປົກຄອງເຂົ້າຮ່ວມຢ່າງນ້ອຍນຶ່ງຄົນຂື້ນໄປ.
- ຄວາມເຂົ້າໃຈທີ່ຖືກຕ້ອງກ່ຽວກັບບັບຕິສມາ ຕ້ອງຖືກອະທິບາຍຈາກອາຈານ;
- ຄະນະປົກຄອງຄວນໃຫ້ຄຳປຶກສາຫາລືຕາງທາງຄວນ;

- ບັບຕິສມາຕ້ອງຖືກຣາຍງານຈາກອາຈານທີ່ຖືກມອບໝາຍໃຫ້ທຳ ແລະຄະນະປົກຄອງຕ້ອງຈົດບັນທຶກໄວ້.

ອົງການປົກຄອງ ຄວນອະນຸມັດໃຫ້ມີການຮັບສິນບັບຕິສມາໂດຍອະນຸສາສນາຈານ ຫຼືອາຈານອື່ນໆທີ່ຮັບໃຊ້ວຽກງານ ພຣະເຈົ້າ ຢູ່ຕາມໂຮງໝໍ ຄຸກ, ໂຮງຮຽນ, ແລະຕາມສະຖານຕ່າງໆທີ່ທາງອົງການປົກຄອງໄດ້ອະນຸມັດໃຫ້ມີການ ທຳງານຮັບໃຊ້ພຣະເຈົ້າ ເຊັ່ນທຳໂດຍ ອະນຸສານາຈານ ໃນກອງທັບ ແລະຄອບຄົວທະຫານ, ແລະໂດຍອາຈານທີ່ ຮັບຜິດຊອບກ່ຽວກັບການປັບປຸງ ຄຣິສຕະຈັກໃໝ່ໂດຍພາຍໃຕ້ການຄວບຄຸມຂອງ ອົງການປົກຄອງ. ໃນການໃຫ້ສິນ ບັບຕິສມາ ອາຈານຕ້ອງເປັນຜູ້ຮັບຜິດຊອບ ໃຫ້ຜູ້ຮັບສິນໃໝ່ນັ້ນ ຈົດຊື່ຕົນເອງເຂົ້າໃນທະບຽນພົນຂອງ ຄຣິສຕະຈັກ. ການລົງທະບຽນນັ້ນ ອາດຕ້ອງຈັດຕຽມລ່ວງໜ້າ ແລະທ້າງຫາໂດຍຄະນະປົກຄອງ ຫຼືການລົງທະບຽນນັ້ນ ອາດຖືກເບິ່ງ ກາຍໂດຍ ທາງອົງການປົກຄອງ ທີ່ຈະໃຫ້ຜູ້ກ່ຽວນັ້ນຂຶ້ນກັບ ທະບຽນພົນຂອງຄຣິສຈັກໃດນຶ່ງ ຈົນກວ່າການກໍ່ຕັ້ງ ຄຣິສຕະຈັກໃໝ່ຈະເກີດຂຶ້ນ.

## ວ່າດ້ວຍຄະນະປົກຄອງ ແລະໜ້າທີ່ຮັບຜິດຊອບ:

W-2.3012

ໜ້າທີ່ຮັບຜິດຊອບຂອງຄະນະປົກຄອງ ກ່ຽວກັບບັບຕິສມາມີດັ່ງນີ້:

- ຊຸກຍູ້ໃຫ້ພໍ່ແມ່ ນຳເດັກມາຮັບສິນ, ເຕືອນສະຕິພວກເຂົາໃຫ້ຮູ້ວ່າ ເດັກຂອງພວກທີ່ມີຄວາມເຊື່ອ ຕ້ອງໄດ້ຮັບບັບຕິສມາ ໂດຍບໍ່ຕ້ອງລໍຊ້າ, ແລະໃຫ້ການອະນຸມັດແກ່ພວກທີ່ສເນີຮັບສິນນັ້ນໆ.(W-2.3014)
- ປະກາດການຮັບສິນ ຫຼັງຈາກມີການໃຫ້ການສຶກສາແລະທົດສອບຮຽບຮ້ອຍແລ້ວ ສຳຣັບພວກທີ່ເຊື່ອໃໝ່ ທີ່ຕ້ອງການຮັບບັບຕິສມາ.



- ເອົາຊື່ທຸກຄົນທີ່ຮັບສິນແລ້ວນັ້ນ ໄວ້ໃນທະບຽນພົນຂອງຄຣິສຕະຈັກ, ໃນບ່ອນທີ່ເໝາະສົມ
- ຕ້ອງແນ່ໃຈວ່າ ພວກຮັບສິນນັ້ນ ໄດ້ເຂົ້າໃຈເຖິງເນື້ອໃນແລະຄວາມໝາຍຂອງການຮັບສິນນັ້ນ, ແລະໃນ ພິທີສິນມະຫາສະໜິດ, ແລະພວກເຂົາເຫຼົ່ານັ້ນ ໄດ້ຖືກຫ້ອມລ້ອມ ແລະໃຫ້ການສະໜັບສະໜູນຈາກ ຄຣິສຕຽນຄົນອື່ນໆ. (G-10.0102 a,c,d; G-10.0302; W-2.3011)

## ວ່າດ້ວຍຄວາມຮັບຜິດຊອບຂອງຄຣິສຕະຈັກ:

W-2.3013

ທີ່ປະຊຸມທັງໝົດ, ໃນນາມຂອງຄຣິສຕະຈັກສາກົນ, ມີຄວາມຮັບຜິດຊອບໃນການຊ່ວຍໃຫ້ຜູ້ຮັບສິນໃໝ່ ເຕີບໃຫຍ່ຂຶ້ນໃນ ຊີວິດຄຣິສຕຽນ. ການການປະຕິບັດນີ້, ທາງຄະນະປົກຄອງ ອາດບົງການໃຫ້ສະມາຊິກຜູ້ໃດຜູ້ນຶ່ງ ເປັນຜູ້ຮັບຜິດຊອບໃນການເຕີບໃຫຍ່ຂອງຜູ້ ຮັບສິນໃໝ່ນັ້ນ. ໃຜກໍຕາມທີ່ຮັບບັບຕິສມາ, ຈະຕ້ອງມີຜູ້ອຸປຖັມ (ສະປອນເຊີ) ຊື່ງຖືກເລືອກໂດຍຄະນະປົກຄອງ ໃນການໃຫ້ຄຳແນະນຳ ເປັນທີ່ປຶກສາແກ່ພວກ ຄົນທີ່ຕັດສິນໃຈ ດ້ວຍຕົນເອງ ຫຼືສຳຣັບລູກໆຂອງເຂົາ ໃນການຮັບບັບຕິສມານັ້ນ ແລະທາງຄະນະປົກຄອງ ຕ້ອງໃຫ້ບົດບາດແກ່ເຂົາ ໃນການ ຊ່ວຍເຫຼືອພວກເຊື່ອໃໝ່ນັ້ນໃຫ້ເຕີບໃຫຍ່ຂຶ້ນໃນພຣະຄຣິສ. (W-6.2001; W-6.2005)

## ວ່າດ້ວຍໜ້າທີ່ຮັບຜິດຊອບຂອງພໍ່ແມ່:

W-2.3014

ໃນເວລາທີ່ສເນີເດັກໃນການຮັບບັບຕິສມາ ຜູ້ເປັນພໍ່ແມ່ ຫຼືຜູ້ປົກຄອງເດັກ ຕ້ອງເປັນສະມາຊິກທີ່ຫ້າວຫັນ ຂອງຄຣິສຕະຈັກ. ພວກທີ່ສເນີ ເດັກໃຫ້ຮັບສິນນັ້ນ ຕ້ອງເປັນຜູ້ຮັບຜິດຊອບ ໃນການເຮັດໃຫ້ເດັກນັ້ນເຕີບໃຫຍ່ ຂຶ້ນໃນຄວາມເຊື່ອ ແລະນຳພາເດັກ ເຂົ້າສູ່ກຸ່ມຊົນແຫ່ງຄວາມເຊື່ອ ຈົນກວ່າເດັກນັ້ນຈະສາມາດຕັດສິນໃຈໃນຄວາມ ເຊື່ອດ້ວຍຕົນເອງໄດ້ ແລະກາຍເປັນສະມາຊິກ ທີ່ຫ້າວຫັນ ຂອງຄຣິສຕະຈັກ. (W-4.2002; W-6.2005) ຄະນະປົກຄອງຄວນພິຈາຣະນາ ໃຫ້ການຮັບສິນ ບັບຕິສມາແກ່ ລູກທີ່ມີພໍ່ແມ່ເປັນສະມາຊິກທີ່ ຫ້າວຫັນ ທີ່ສັງກັດ ຢູ່ໃນຄຣິສຕະຈັກອື່ນໆດ້ວຍ. ຫາກຄະນະປົກຄອງເຫັນດີ ໃຫ້ກະທຳໄດ້ ຄວນປຶກສາກັບອົງການປົກຄອງຂອງ ຄຣິສຕະຈັກ ນັ້ນໆເສັຽກ່ອນ ແລະຄວນບອກໃຫ້ເຂົາຮູ້ໃນເວລາທີ່ການທຳ ພິທີໄດ້ເກີດຂຶ້ນ.

## **4. ພິທີສິນມະຫາສະໜິດ:**

**W-2.4000**

### ວ່າດ້ວຍພຣະເຢຊູຄຣິສ ແລະພິທີສິນມະຫາສະໜິດ:

W-2.4001

ພິທີສິນມະຫາສະໜິດ ເປັນສັນຍາລັກ ແລະການປະທັບກາ ແຫ່ງການກິນ ແລະການດື່ມ ໃນການມີສ່ວນຮ່ວມກັບ ການອາຍພຣະຊົນ ແລະຄືນພຣະຊົນຂອງພຣະເຈົ້າ. ໃນການປະບັດບັດງານໃນໂລກມະນຸດ, ພຣະເຢຊູຄຣິສ ໄດ້ຮ່ວມຮັປທານ ອາຫານ ກັບບັນດາເຫຼົ່າອັກຄະສາວົກ ເພື່ອເປັນສັນຍາລັກແຫ່ງການເປັນກຸ່ມຊົນ, ການຮັບຮູ້ສິ່ງນັ້ນ, ແລະເປັນການປະກາດ ຂ່າວປະເສີດຂອງພຣະອົງ. ພຣະອົງຍັງຊົງຮ່ວມສເລີມ



ສລອງວັນງານຂອງພວກອິສຣາ ໃນການຣະນຶກເຖິງພຣະສັນຍາ ຂອງພຣະເຈົ້າອີກດ້ວຍ.

ໃນອາຫານຄາບສຸດທ້າຍ, ກ່ອນທີ່ພຣະອົງຈະອາຍພຣະຊົນ, ພຣະເຢຊູຄຣິສ ໄດ້ແບ່ງປັນເຂົ້າຈີ່ ແລະນໍ້າອະງຸ່ນ ກັບສາວົກ ຂອງພຣະອົງ ໂດຍເວົ້າວ່າ ນັ້ນເປັນເໜືອນກາຍແລະເລືອດຂອງພຣະອົງ, ເປັນສັນຍາລັກແຫ່ງພັນທະ ສັນຍາໃໝ່. ພຣະອົງຊົງສັ່ງວ່າ ໃນການຫັກເຂົ້າຈີ່ ແລະດື່ມຈາກຈອກເວລາໃດ ກໍເປັນການຣະນຶກເຖິງພຣະອົງ ແລະເປັນກາດປະກາດເຖິງການ ອາຍພຣະຊົນຂອງພຣະອົງ.

ໃນວັນແຫ່ງການຄືນພຣະຊົນ, ພຣະອົງໄດ້ຊົງປາກົດແກ່ສາວົກຂອງພຣະອົງໃນການຫັກເຂົ້າຈີ່ ແລະດື່ມນໍ້າອະງຸ່ນ. ພຣະອົງຊົງ ສືບຕໍ່ປາກົດຕົວ ແກ່ບັນດາຄົນທີ່ເຊື່ອທັງຫຼາຍ ດ້ວຍການໃຫ້ພອນ ແລະຫັກເຂົ້າຈີ່, ດ້ວຍການຈັດຕຽມ, ຮັບໃຊ້, ແລະຮ່ວມຮັປທານກັບເຂົາ.

### ວ່າດ້ວຍຄຣິສຕະຈັກໃນພຣະສັນຍາໃໝ່:

W-2.4002

ຄຣິສຕະຈັກໃນພັນທະສັນຍາໃໝ່ ໄດ້ອຸທິດຕົນເດີນຕາມຄຳສອນຂອງເຫຼົ່າອັກຄະສາວົກ, ໃນການຕິດຕາມພຣະອົງ, ອະທິຖານ, ແລະຮັປທານຮ່ວມກັນ. ອາຈານເປົາໂລ ໄດ້ນຳເອົາປະເພນີ ທີ່ທ່ານໄດ້ຮັບຈາກພຣະເຈົ້າ ມາສູ່ຄຣິສຕະຈັກ ຕ່າງໆ ໃນການທີ່ດື່ມ ແລະກິນເຂົ້າຈີ່ເວລາໃດ ເປັນປະກາດການອາຍພຣະຊົນຂອງພຣະອົງ ຈົນກວ່າພຣະອົງຈະສະເດັດ ມາ. ພຣະຄຳພີໃໝ່ໄດ້ບອກວ່າ ການຮັປທານ

ນັ້ນເປັນການມີສ່ວນໃນພຣະຄຣິສ ແລະມີສ່ວນຕໍ່ກັນແລະກັນ ໃນຄວາມ ຫວັງວ່າ
ຈະໄດ້ຮ່ວມກັນໃນ ງານລ້ຽງທີ່ແຜ່ນດິນສວັນຂອງພຣະເຈົ້າ.

## ວ່າດ້ວຍການຂອບພຣະຄຸນ

W-2.4002

ໃນການທຳພິທີສິນມະຫາສະໜິດ,
ຄຣິສຕະຈັກໄດ້ເຕົ້າໂຮມກັນເພື່ອນະມັສການດັ່ງນີ້:

- ພຣະພອນພຣະເຈົ້າ ໃນທຸກສິ່ງທີ່ພຣະອົງຊົງສ້າງ, ການໄຖ່ໃຫ້ພົ້ນ,
ແລະຄວາມສັກສິດຂອງພຣະອົງ
- ຂອບຄຸນໃນການທຳງານຂອງພຣະເຈົ້າໃນໂລກ ແລະໃນຄຣິສຕະຈັກ
ໃນໂທດກັມແຫ່ງຄວາມບາບ
ຂອງມະນຸດ
- ຮ່ວມໃນການເຮັດໃຫ້ການປະກາດກ່ຽວເລື້ອງຣາຊອານາຈັກຂອງພຣະເຈົ້າ
ທີ່ພຣະເຢຊູຊົງປະກາດນັ້ນສຳ
ເຣັດຜົນ ແລະອຸທິດຕົນເອງ ໃນການເຊື່ອຟັງ ແລະຮັບໃຊ້ພຣະອົງ.

ທີ່ໂຕະຂອງພຣະເຈົ້າ ຄຣິສຕະຈັກໄດ້ມີປາກົດການດັ່ງນີ້:

- ຟື້ນຟູ ແລະເພີ່ມພະລັງ ໃນການຊົງຈຳຊີວິດຂອງພຣະຄຣິສ, ການວາຍພຣະຊົນ,
ການຄືນພຣະຊົນ, ແລະສັນຍາທີ່ພຣະອົງຈະກັບມາ
- ຢືນຢັດຢູ່ໃນຄວາມຮັກອັນຕລອດໄປເປັນນິດຂອງພຣະເຈົ້າ ຊ
ົ່ງປາກົດໃນໄພ່ພົນຂອງພຣະອົງຕລອດເວລາ
- ປະທັບຕາ ໃນພຣະສັນຍາຂອງພຣະເຈົ້າ ໃນພຣະຄຸນຂອງພຣະອົງ ທີ່ຊ
ົງສະຣະພຣະອົງເອງເປັນເຄື່ອງບູຊາ ເພື່ອໄຖ່ມະນຸດ.



ໃນການຣະນຶກນີ້, ຜູ້ທີ່ເຊື່ອ ຕ້ອງໄດ້ຮັບ
ແລະໝັ້ນໃຈໃນຄວາມຮັກຂອງພຣະເຈົ້າທີ່ມີໃນພວກເຂົາ ແລະໃນໂລກ.
ພວກເຂົາໄດ້ສເລີມສລອງ ຄວາມຈິງໃນພຣະສັນຍາແຫ່ງພຣະຄຸນຂອງພຣະເຈົ້າ
ໃນການຄືນດີກັບພຣະອົງ, ແລະພວກເຂົາໄດ້ ປະກາດເຖິງຣິດອຳນາດຂອງພຣະຄຣິສ
ໃນການປ່ຽນແປງໂລກ ໃຫ້ມີຄວາມຊອບທັມ ແລະສັນຕິສຸກ.

## ວ່າດ້ວຍຄຳອ້ອນວອນ

W-2.4005

ໄພ່ພົນຂອງພຣະອົງ, ໃນການຂໍພອນ ແລະຂອບພຣະຄຸນພຣະເຈົ້າພຣະບິດາ
ແລະຣະນຶກເຖິງພຣະບຸດ ຄືພຣະເຢຊູ ຄຣິສ, ພວກເຂົາໄດ້ເອີ້ນຮຽກ
ຫາພຣະວິນຍາບໍຣິສຸດ ເພື່ອ:

- ນຳພາພວກເຂົາເຂົ້າສູ່ ການສະຖິດຢູ່ນຳຂອງພຣະຄຣິສ;
- ຍອມຮັບພວກເຂົາໃນການຖວາຍເຂົ້າຈີ່ ແລະເຫຼົ້າອະງຸ່ນ
- ໃນການຫັກເຂົ້າຈີ່ ແລະດື່ມ ເປັນການມີສ່ວນ ໃນພຣະກາຍ
ແລະພຣະໂລຫິດຂອງພຣະເຢຊູຄຣິສ;
- ເພື່ອໃຫ້ພວກເຂົາເຂົ້າສະໜິດກັບພຣະຄຣິສ ແລະສະໜິດຊຶ່ງກັນແລະກັນ;
- ເພື່ອເຂົາເປັນອັນນຶ່ງອັນດຽວກັນ ບໍ່ວ່າໃນສວັນ ກໍຄືທີ່ແຜ່ນດິນໂລກ;
- ລ້ຽງເຂົາດ້ວຍພຣະກາຍ ແລະພຣະໂລຫິດຂອງພຣະຄຣິສ
ພວກເຂົາຈະໃຫຍ່ຂຶ້ນໃນພຣະຄຣິສຢ່າງເຕັມປ່ຽມ;
- ໃຫ້ເຂົາມີຄວາມເຊື່ອແລະວາງໃຈ ເໝືອນດັ່ງພຣະກາຍຂອງພຣະຄຣິສ,
ປະກາດເຣື້ອງພຣະຄຣິສ ແລະທຳງານພຣະເຈົ້າໃນໂລກ.

## ວ່າດ້ວຍ ການຮ່ວມກັນດ້ວຍຄວາມເຊື່ອ:

W-2.4006

ຈ້ອນໂຕະຂອງພຣະເຈົ້າ, ໄພ່ພົນຂອງພຣະເຈົ້າ
ໄດ້ເຂົ້າຮ່ວມກັບພຣະຄຣິສພ້ອມກັນກັບທຸກໆຄົນທີ່ເປັນ ຂອງພຣະອົງ.
ການຄືນດີກັນ ກັບພຣະອົງ ກໍເປັນການຄືນດີຊຶ່ງກັນແລະກັນດ້ວຍ.
ທຸກຄົນທີ່ຮັບສິນແລ້ວ ກໍຖືກເຊີນ ເຂົ້າສູ່ໂຕະຂອງພຣະເຈົ້າ, ແລະຈະບໍ່ມີຍົກເວັ້ນຜູ້ໃດ
ໂດຍອົງໃສ່ເຊື້ອຊາດຜິວພັນ, ເພດວັຍ, ຖານະເສດຖະກິດ, ຊັ້ນ ວັນນະ, ເສັ້ງອົງຄະ,
ຕ່າງພາສາວັທນະທັມ, ຫຼືສິ່ງໃດໆທີ່ມະນຸດສ້າງຂຶ້ນທີ່ບໍ່ຍຸຕິທັມ.
ເຂົ້າຫາໂຕະຂອງພຣະເຈົ້າ, ໄພ່ພົນຂອງພຣະອົງຫາກມີການຜິດຂ້ອງຕ້ອງຖຽງກັນ
ບໍ່ເຂົ້າໃຈກັນກັບເພື່ອນບ້ານ
ຕ້ອງຊອກຫາ ຄວາມເຂົ້າອົກ ເຂົ້າໃຈກັນ ຄືນດີກັນເສັຽກ່ອນ.
ຄວາມໝາຍທີ່ເຂົາເຂົ້າສູ່ໂຕະຂອງພຣະເຈົ້າແຕ່ລະຄັ້ງ ນັ້ນຄື:

- ຮ່ວມເປັນອັນນຶ່ງອັນດຽວກັນກັບຄຣິສຕະຈັກໃນທຸກບ່ອນທຸກທີ່ ແລະຕໍ່ຄຣິສຕະຈັກທັງໝົດທີ່ມີຢູ່;
- ຮ່ວມກັບພວກທີ່ເຊື່ອໃນສວັນ ແລະແຜ່ນດິນໂລກ ໃນການຂອບພຣະຄຸນ ຕໍ່ສານພຣະພາກພຣະເຈົ້າ;
- ຟື້ນຟູຄືນໃໝ່ ໃນຄຳສາບານທີ່ໃຫ້ໄວ້ ໃນເວລາຮັບບັບຕິສມານັ້ນ; ແລະພວກເຂົາ ອຸທິດ ຕົວເອງ ໃຫ້ຮັກຊຶ່ງກັນແລະກັນ ແລະຮັບໃຊ້ພຣະເຈົ້າ, ຮັບໃຊ້ຊຶ່ງກັນແລະກັນ, ແລະເພື່ອນບ້ານໃນໂລກ.



## ວ່າດ້ວຍ ການທຳນອຍກ່ຽວກັບອາຫານໃນຣາຊ ອານາຈັກຂອງພຣະເຈົ້າ W-2.4007

ໃນການຮັປທານອາຫານ ໄພ່ພົນຂອງພຣະອົງ
ໄດ້ສເລີມສລອງງານລ້ຽງຂອງພຣະເຈົ້າ ແລະການແຕ່ງງານຂອງ ແກະຂອງພຣະອົງ.
ໂດຍການ ຊົງນຳຂອງພຣະວິນຍານບໍຣິສຸດ, ຄຣິສຕະຈັກ
ໄດ້ມີຄວາມກະຕືລືລົ້ນໃນຄວາມຫວັງໃຈ
ແລະການອະທິຖານ ສຳຣັບວັນເວລາທີ່ພຣະຄຣິສ
ຈະສະເດັດກັບມາດ້ວຍຣິດທານຸພາບຂອງພຣະອົງ
ແລະພຣະເຈົ້າຈະເປັນ ພຣະເຈົ້າຂອງທຸກສິ່ງ.
ດ້ວຍການເຕີບໃຫຍ່ຈາກໂຕະຂອງພຣະເຈົ້າ ໂດຍການຊົງນຳຂອງ
ພຣະວິນຍານບໍຣິສຸດ, ໄພ່ພົນຂອງ
ພຣະອົງໄດ້ອອກໄປທົ່ວໂລກເພື່ອປະກາດພຣະຄຳຂອງພຣະອົງ, ປະຕິບັດຄວາມ
ເມດຕາປານີ, ໃນການທຳງານເພື່ອສັນຕິ ແລະຄວາມຍຸຕິທັມ ຈົນກວ່າຣາຊ
ອານາຈັກຂອງພຣະຄຣິສຈະລົງມາໃນ ທີ່ສຸດນັ້ນ.

## ວ່າດ້ວຍພຣະຄຳ ແລະພິທີສິນ:

W-2.4008

ໃນຊີວິດທີ່ທຳການນະມັສການຂອງທີ່ຊຸມນຸມ. ພຣະຄຳ ແລະພິທີສິນ
ຈະຕ້ອງມີການສະສົມປະສານກັນ. ໃນເວລາ ໃດກໍຕາມ ຫາກໃມີການ
ທຳພິທີສິນມະຫາສະໜິດ, ຈະຕ້ອງດຳເນີນໄປດ້ວຍການອ່ານພຣະຄຳ
ແລະປະກາດພຣະຄຳ ຂອງພຣະເຈົ້າ. W-1.1005)

## ວ່າດ້ວຍ ເວລາ, ສະຖານທີ່ ແລະໄລຍະໃນການທຳພິທີສິນມະຫາສະໜິດ: W-2.4009

ພິທີສິນມະຫາສະໜິດຄວນເຮັດໃນວັນຂອງພຣະເຈົ້າ, ໃນສະຖານທີ່ ທີ່ນະມັສການພຣະອົງຢ່າງເປັນປະຈຳ, ແລະໃນກໍຣະນີທີ່ເໝາະສົມ ກັບສະພາບໂອກາດ ແລະຄຣິສຕະຈັກນັ້ນໆ. ເປັນການເໝາະສົມທີ່ຄວນມີການ ສເລີມສລອງ ພິທີສິນນີ້ ໃນທຸກໆວັນສິນຂອງພຣະເຈົ້າ. ຈະຕ້ອງມີການສເລີມສລອງຢ່າງເປັນປະຈຳ ເພື່ອໃຫ້ສອດ ຄ່ອງກັນ ໃນວຽກງານທີ່ກະທຳກັນໃນວັນສິນ ຂອງພຣະເຈົ້າ.

## ວ່າດ້ວຍການທຳພິທີ ເນື່ອງໃນໂອກາດພິເສດ:

W-2.4010

ເປັນການເໝາະສົມເຊັ່ນກັນ ທີ່ຈະມີການທຳພິທີ ເນື່ອງໃນໂອກາດພິເສດໃດນຶ່ງຊຶ່ງມີຄວາມໝາຍຕໍ່ຊີວິດຂອງ ຄຣິສຕຽນ ໃນເວລາທີ່ ການທຳນັ້ນ ເປີດກວ້າງແກ່ກຸ່ມຊົນແຫ່ງຄວາມເຊື່ອ. ສິນມະຫາສະໜິດ ອາດທຳໃນເວລາ ຢ້ຽມຢາມຄົນເຈັບ ແລະພວກທີ່ຢູ່ຫ່າງໄກຈາກບ່ອນ ນະມັສການສາທາຣະນະ ຊຶ່ງນັ້ນໝາຍເຖິງການຂະຫຍາຍການຮັບໃຊ້ ພຣະເຈົ້າໄປສູ່ ພວກເຂົາເຫຼົ່ານັ້ນ. ທຸກບ່ອນທີ່ມີການທຳພິທີ ພຣະທັມຂອງ ພຣະເຈົ້າຕ້ອງຖືກອ່ານ ແລະຖືກປະກາດ ເຖິງແມ່ນບ່ອນນັ້ນຈະມີ ຄົນຮ່ວມໜ້ອຍຫຼືຫຼາຍກໍຕາມ. ການທຳຕ້ອງມີອາຈານ, ຫຼືຜູ້ທີ່ຖືກອະນຸມັດຈາກ ພາກ, ຫຼືຢ່າງມີສະມາຊິກຫຼາຍກວ່າຄົນນຶ່ງທີ່ຖືກ ແຕ່ງຕັ້ງຈາກຄະນະປົກຄອງ ຮ່ວມຢູ່ດ້ວຍ. (W-2.4012; W-3.3609; W-3.6204).



## ວ່າດ້ວຍບຸກຄົນທີ່ມີສິດຮັບສິນມະຫາສະໜິດ:

W-2.4011

ທຸກຄົນທີ່ໄດຮັບບັບຕິສມາແລ້ວ ມີສິດຮັບໄດ້. ຈົ່ງຈຳສເມີວ່າ ການກ້າວໄປສູ່ໂຕະຂອງພຣະເຈົ້າ ແມ່ນສິດທິພິເສດ ທີ່ໃຫ້ແກ່ບັນດາພວກຄົນ ທີ່ເຂົ້າໄປດ້ວຍຄວາມເຊື່ອ, ດ້ວຍການກັບໃຈເສັຽໃໝ່, ແລະດ້ວຍຄວາມຮັກ. ໃນການຈັດຕຽມ ເພື່ອຮັບເອົາພຣະຄຣິສ ໃນທາງພິທີສິນ, ພວກທີ່ເຊື່ອ ໄດ້ຍອມຮັບສາຣະພາບເຖິງຄວາມຜິດບາບ ແລະການແຕກແຍກຈາກ ພຣະເຈົ້າຂອງຕົນ, ຊອກຫາເສັ້ນທາງໃນການຄືນດີກັນກັບ ພຣະເຈົ້າ ແລະຄືນດີ ກັບເພື່ອນບ້ານ, ແລະໄວ້ວາງໃຈໃນ ພຣະເຢຊູຄຣິສ ໃນການຊຳຣະລ້າງ ແລະການເປັນຄົນໃໝ່. ແມ້ນແຕ່ຄົນທີ່ ຍັງສົງໃສ ແລະມີຄວາມເຊື່ອເຄິ່ງໆກາງໆ ກໍສາມາດ ເຂົ້າສູ່ໂຕະຂອງພຣະເຈົ້າໄດ້ ເພື່ອຈະຖືກມີຄວາມເຊື່ອໝັ້ນ ໃນຄວາມຮັກຂອງພຣະເຈົ້າ ພຣະພຣະຄຸນຂອງພຣະເຢຊູຄຣິສ ທີ່ມີຕໍ່ເຂົາ. (W-4.2002)

## ວ່າດ້ວຍໜ້າທີ່ຮັບຜິດຊອບ:

W-2.4012

ຄະນະປົກຄອງ ຕ້ອງເປັນຜູ້ຮັບຜິດຊອບໃນການອະນຸມັດ ໃຫ້ມີພິທີສິນມະຫາສະໜິດຂອງຄຣີສຕະຈັກໃດນຶ່ງ ແລະຕ້ອງຮັປກັນ ການທຳເປັນປະຈຳ ຊຶ່ງບາງຄັ້ງ ຢ່າງນ້ອຍ ສາມເດືອນເທື່ອນຶ່ງ. ແລະອົງການປົກຄອງອື່ນໆ ຂອງຄຣິສຕະຈັກ ກໍມີສິດ ໃນການເລືອກເອົາເວລາ ໃນການທຳພິທີ ອົງການປົກຄອງ ສາມາດອະນຸມັດໃຫ້ມີພິທີສິນ ທີ່ຮ່ວມກັບການນະມັສການ ຂອງສາທາຣະນະ ໃນກໍຣະນີທີ່ກຸ່ມຊົນນັ້ນ ບໍ່ມີອາຈານ.

ອົງການປົກຄອງ ຄວນສົ່ງຜູ້ ຕາງໜ້າເຂົ້າຮ່ວມ ເພື່ອເປັນການສັງເກດການໃນຄະນະຂອງກຸ່ມທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.

ອະນຸສາສນາຈານ ຫຼືອາຈານຄົນອື່ນໆ ທີ່ຮັບໃຊ້ໃນໂຮງໝໍ, ໃນຄຸກ, ໂຮງຮຽນ, ຫຼືບ່ອນອື່ນໆ, ແລະບັນດາ ອະນຸສາສນາຈານ ທີ່ຮັບໃຊ້ ໃນກຸ່ມ ຄອບຄົວທະຫານ ຄວນນຳພິທີການໄດ້ ຫາກໄດ້ຮັບອະນຸຍາດແລ້ວ. ໄລຍະເວລາໃນການທຳນັ້ນຕ້ອງຖືກບົ່ງໄວ້ໃນ ໄລຍະທີ່ອາຈານນັ້ນໄດ້ຖືກ ເອີ້ນມາຮັບໃຊ້ ແລະຂຶ້ນກັບການສເນີ.

ກ່ຽວກັບຣະບຽບຂອງພິທີສິນ ການນຳພາທຳພິທີ ຄວນນຳໂດຍອາຈານ. ໃນກໍຣະນີຍົກເວັ້ນ ຄວາມໄດ້ຮັບການ ເອົາໃຈໃສ່ ແລະອະນຸມັດຈາກພາກເສັຽກ່ອນ. (G-11.0103 k,p,z; G-14.0516).

## 5. ການຖວາຍຕົວ

**W-2.5000**

### ວ່າດ້ວຍການຕອບຮັບພຣະເຈົ້າ

W-2.5001

ຊີວິດຂອງຄຣິສຕຽນ ເປັນຊີວິດທີ່ຖວາຍແດ່ພຣະເຈົ້າ. ໃນການນະມັສການພຣະເຈົ້າ ຜູ້ທີ່ເຊື່ອ ໄດ້ເຂົ້າຮ່ວມກັບການ ຖວາຍຕົວເອງຢ່າງມີຄຸນຄ່າຂອງພຣະເຢຊູຄຣິສ, ເປັນການຖືກເອີ້ນ ແລະເຮັດໃຫ້ເປັນອິສະຣະໂດຍພຣະອົງ, ແລະນຳໄປສູ່ ການຖວາຍຊ ີວິດຂອງພວກເຂົາເອງ, ຖວາຍຂອງປະທານສຳຣັບຕົວ, ຄວາມສາມາດ, ແລະວັດຖຸສິ່ງຂອງ ອັນມີຄ່າ ຂອງຕົນແດ່ພຣະເຈົ້າ.

### ວ່າດ້ວຍການຖວາຍຂອງປະທານທາງດ້ານຈິດວິນຍານ

W-2.5002



ການນະມັສການພຣະເຈົ້າ ຕ້ອງເປັນການຕອບຮັບຄຳເອີ້ນຮຽກຂອງພຣະເຈົ້າ ເພື່ອໃຫ້ເປັນສາວົກຂອງພຣະອົງ ໂດຍການ ປະກາດຄວາມເຊື່ອ, ເຂົ້າເປັນສາວົກຂອງພຣະອົງ, ຮວມກັນເຂົ້າສູ່ຄຣິສຕະຈັກຂອງພຣະເຈົ້າ, ແລະເຊີດຊູການທຳງານ ຮັບໃຊ້ພຣະເຈົ້າ, ແລະພ້ອມກັນກໍເປັນການໃຫ້ໂອກາດແກ່ສາວົກຂອງພຣະອົງໃນການຟື້ນຟູໃນການ ອຸທິດຊີວິດຂອງພວກເຂົາຕໍ່ພຣະຄຣິສ ແລະຕໍ່ພາຣະກິດຂອງພຣະອົງໃນໂລກ. ດັ່ງທີ່ພຣະວິນຍານບໍຣິສຸດ ໄດ້ຊ ົງໃຫ້ ຂອງປະທານແກ່ທຸກຄົນ ໃນການເພີ່ມພະລັງແກ່ວຽກງານຂອງພຣະຄຣິສ, ດັ່ງນັ້ນ ການນະມັສການພຣະເຈົ້າ ຄວນເປັນ ການຮັບຮູ້ເຖິງຂອງປະທານອັນນີ້ ແລະເພື່ອໃຫ້ພວກເຂົາຮັບໃຊ້ພຣະເຈົ້າ ພາຍໃນຄຣິສຕະຈັກ ແລະໃນໂລກອີກດ້ວຍ.

### ວ່າດ້ວຍການຖວາຍຂອງຖວາຍດ້ານວັດຖຸ ແລະຊັບສິນ

W-2.5003

ການຖວາຍດ້ານວັດຖຸ ໃນເວລານະມັສການພຣະເຈົ້າ ເປັນການສະແດງອອກເຖິງການອຸທິດຕົນເອງ ໃນການຕອບ ຮັບພຣະເຈົ້າ. ເປັນການ ສະແດງເຖິງການຂອບພຣະຄຸນແດ່ພຣະເຈົ້າ ຜູ້ຊົງປະທານຊີວິດ ແລະສິ່ງຂອງຕ່າງໆ, ຜູ້ຊົງ ໄຖ່ໂທດຄວາມຜິດບາບ ແລະນານຮ້າຍຈາກເຮົາ. ເປັນການປະກາດ ຢືນຢັນຈາກອັກຄະສາວົກຂອງພຣະຄຣິສໃນ:

- ການອຸທິດຕົວຂອງພວກເຂົາ ໃນການເປັນຜູ້ດູແລສິ່ງທີ່ຊົງສ້າງ;
- ຄວາມຮັບຜິດຊອບຂອງພວກເຂົາ ໃນການຢູ່ຮ່ວມໂລກ ແລະໃຫ້ການເບິ່ງແຍງມະນຸດທຸກຄົນ;
- ການເລືອກຂອງພວກເຂົາທີ່ຈະແບ່ງປັນຂອງປະທານຈາກພຣະເຈົ້າ ກັບພວກຄົນທີ່ເຊື່ອທີ່ສັງກັດໃນ ຄຣິສຈັກຫຼືໂລກ;

- ການເປັນອັນນຶ່ງອັນດຽວກັນໃນພຣະກາຍຂອງພຣະຄຣິສ.

ໃນພຣະຄຳພີເດີມ ຊົນຊາດອິສຣາເອນ ຖືກກຳໜົດໃຫ້ນຳ ນຶ່ງສ່ວນສິບຂອງຣາຍໄດ້ຂອງຕົນ ເພື່ອການສະໜັບ ສະໜູນ ວຽກງານໃນວິຫານຂອງພຣະເຈົ້າ ແລະພວກທີ່ຮັບໃຊ້ພຣະເຈົ້າໃນທີ່ນັ້ນ. ໃນພຣະສັນຍາໃໝ່ ເຫຼົ່າອັຄະສາວົກໄດ້ຍອມຮັບຮູ້ວ່າ ການທຳງານຂອງພຣະເຈົ້າ ໃນຄຣິສຕະຈັກ ຕ້ອງມີຣະບຽບວິນັຍ ໃນການສະໜັບ ສະໜູນວຽກງານນັ້ນ. ທັງພວກທີ່ຢູ່ໃນອິສຣາເອນ ແລະບັນດາຄຣິສຕະຈັກ ໃນພຣະສັນຍາເດີມ ໄດ້ມີການຊຸກຍູ້ ໃຫ້ມີການຖວາຍເພື່ອການຊ່ວຍເຫຼືອຄົນທຸກຍາກ. ພຣະເຈົ້າໄດ້ຊົງເອີ້ນມະນຸດໃນປັດຈຸບັນ ໃຫ້ມີວິນັຍ ແລະການ ຖວາຍທີ່ມີໃຈກວ້າງຂວາງ ເພື່ອການຊ່ວຍເຫຼືອວຽກງານຂອງ ພຣະເຈົ້າໃນຄຣິສຕະຈັກ.(W-5.5004)

ໃນເວລາມີການນະມັສການໃນທີ່ສາທາຣະນະ ການຖວາຍນຶ່ງສ່ວນສິບ ແລະການຖວາຍອື່ນໆ ຄວນຈັດໃຫ້ມີ ໃນເວລາທີ່ ເໝາະສົມ ແລະເພື່ອ ເປັນການຖວາຍຂອບພຣະຄຸນແດ່ພຣະເຈົ້າ.

## 6. ການພົວພັນຊຶ່ງກັນແລະກັນ ແລະພຣະຄຳຂອງພຣະເຈົ້າ:

**W-2.6000**

ວ່າດ້ວຍ ຄວາມເປັນຫ່ວງເປັນໃຍຕໍ່ກຸ່ມຊົນ:

W-2.6001

ການນະມັສການ ເປັນກິຈການແຫ່ງຊີວິດຂອງໄພ່ພົນຂອງພຣະເຈົ້າ ໃນການເບິ່ງແຍງດູແລ ເຊິ່ງກັນແລະກັນ ຂອງສະມາຊິກ ແລະເພື່ອສະແດງເຖິງປະສິດທິພາບແຫ່ງຊີວິດ ແລະການຮັບໃຊ້ພຣະເຈົ້າຮ່ວມກັນ ຊຶ່ງສະແດງອອກ ໃນຄວາມຈິງແຫ່ງ ຣິດອຳນາດຂອງພຣະເຈົ້າ ໃນການຊົງສ້າງ



ແລະການຮວມກັນຊອງຊຸມຊົນ ຢູ່ທ່າມກາງໂລກແຫ່ງ ຄວາມຜິດບາບນີ້. ດັ່ງທີ່ພຣະເຈົ້າ ໄດ້ຊົງເປັນຫ່ວງໃນຊີວິດປະຈຳວັນ ຂອງຊຸມຊົນ, ໃນການນະມັສການຈຶ່ງເປັນການ ເໝາະສົມທີ່ ຈະສະແດງອອກ ໃຫ້ເຫັນເຖິງການເປັນຫ່ວງເປັນໃຍຊຶ່ງກັນແລະກັນ ແລະເພື່ອການ ປະຕິບັດງານຮັບໃຊ້ ພຣະເຈົ້າໃນໂລກ.

ອວຍພອນ ໃນເວລາທີ່ພວກເຂົາ:

- ໃຫ້ພອນຊຶ່ງກັນແລະກັນ ແລະຕ້ອງຖືກອວຍພອນຈາກຜູ້ທີ່ນຳເຂົາເຂົ້າສູ່ການນະມັສການ;
- ຕ້ອນຮັບແຂກ, ບັນທຶກການມາຮ່ວມຂອງເຂົາ, ແລະ ໃນການພັກພາແບບຄຣິສຕຽນຕໍ່ເຂົາ;

ຄືນດີກັນໃນເວລາທີ່ພວກເຂົາ:

- ຊອກຫາເວລາເໝາະສົມໃນການຄືນດີ ແລະໃຫ້ອະພັຍແກ່ຜູ້ເຮັດຮ້າຍ, ສ້າງຄວາມບໍ່ເຂົ້າໃຈ, ທັບມ້າງສາຍສຳພັນ;
- ຕອບຮັບພຣະເຈົ້າດ້ວຍການຄືນດີດ້ວຍການແລກປ່ຽນສັນຍາລັກ ແລະຄຳເວົ້າໃນການຄືນດີ ແລະມີສັນຕິສຸກໃນພຣະຄຣິສ

ຍຽມການອະທິຖານ ໃນເວລາທີ່ພວກເຂົາ:

-

ຍຽມການອະທິຖານໃນນາມແຫ່ງຄວາມຫ່ວງໃຍຕໍ່ຜູ້ມີຄວາມຕ້ອງການໃນຄຣິສຕະຈັກ ແລະໃນໂລກ

- ຖວາຍໂມທະນາພຣະຄຸນໃນຊີວິດ ແລະການປ່ຽນແປງແຫ່ງຊີວິດ.
ຍິນດີກັບຜູ້ມີຄວາມຍິນດີ
ໂສກເສົ້າກັບຜູ້ທີ່ໂສກເສົ້າ.
ທຳການແປໃນເວລາທີ່ພວກເຂົາ:
- ນຳໃຊ້ພຣະທັມຂອງພຣະເຈົ້າໃນຊີວິດປະຈຳວັນຂອງເຂົາ
- ອະທິບາຍວຽກງານຮັບໃຊ້ ແລະການທຳງານຂອງຄຣິສຕະຈັກ
- ໃຫ້ການເປັນພະຍານໃນຄວາມເຊື່ອ ແລະການຮັບໃຊ້
ຮັບໃຊ້ພຣະເຈົ້າ ໃນເວລາທີ່ພວກເຂົາ:
- ສ້າງ ແລະຟື້ນຄືນສັນຍາກັບພຣະເຈົ້າ,
- ອຸທິດຕົວເອງ ແລະແຕ່ງຕັ້ງໃຫ້ເປັນຜູ້ທຳງານສະເພາະ
ແລະວຽກງານສ່ວນບຸກຄົນກ່ຽວກັບ
ຄວາມເມດຕາ, ຄວາມຍຸຕິທັມ, ຜູ້ສ້າງສັນຕິ, ການຄືນດີ,
ແລະເປັນພະຍານພາກສາມ.

# Chapter III.
# ຣະບຽບ ການນະມັສການພຣະເຈົ້າ ຂອງຄຣິສຕຽນ



# The Ordering Of Christian Worship
# W-3.0000

## 1. ຄວາມສຳຄັນອັນດັບແຣກ ແລະທີ່ມາຂອງຣະບຽບການນະມັສການ:

**W-3.1000**

### ວ່າດ້ວຍ ພຣະຄຳພີ ແລະປະວັດການເປັນມາ:

W-3.1001
ໜ້າທີ່ຮັບຜິດຊອບທັງໝົດກ່ຽວກັບຣະບຽບຂອງການນະມັສການພຣະເຈົ້າ ຄວນເປັນໄປດ້ວຍຄວາມເຊື່ອໝັ້ນ ໃນຣິດອຳນາດແຫ່ງພຣະວິນຍານບໍຣິສຸດ ໂດຍຜ່ານພຣະຄຳພີ. ນອກເໜືອຈາກພຣະຄຳພີແລ້ວ ບໍ່ມີສິ່ງໃດຈະ ສາມາດມາເປັນຣະບຽບການ ແຫ່ງການນະມັສການໄດ້.
ແຕ່ການນະມັສການພຣະເຈົ້າໄດ້ຖືກປະກອບຂຶ້ນ ແລະກໍ່ຮ່າງຂຶ້ນ ມາຈາກປະວັດສາດ, ວັທນະທັມ, ແລະຄວາມຮຽກຮ້ອງຕ້ອງການຂອງຍຸກສະໄໝ.
ການນະມັສການພຣະເຈົ້າຂອງຄະນະ ເພຣັສໄບທີຣຽນ ແຫ່ງອາເມຣິກາ ຕ້ອງຖືກນຳພາຈາກປະສົບການ ໃນປະວັດສາດຂອງຄຣິສຕະຈັກ ໃນການ ນະມັສການ ພຣະເຈົ້າໃນຍຸກສະໄໝຕ່າງໆ ໂດຍສະເພາະ ຢູ່ໃນປະເພນີຂອງພວກປະຕິຮູບ.

### ວ່າດ້ວຍ ຮູບແບບ ແລະອິສະຣະພາບໃນການນະມັສການ:

W-3.1002
ຄຣິສຕະຈັກ ມັກມີການຂັດແຍ່ງກັນເປັນປະຈຳຣະຫວ່າງ ຮູບແບບ ແລະອິສະຣະພາບ ໃນການນະມັສການພຣະເຈົ້າ. ໃນປະວັດສາດຂອງ ຄຣິສຕະຈັກ ມີບາງຄົນໄດ້ສ້າງຣະບຽບແບບແຜນໃນການນະມັສການ ໂດຍອີງໃສ່ພຣະຄຳ

ຂອງພຣະເຈົ້າ.  ບາງຄົນກໍ ພະຍາຍາມທີ່ຈະເຮັດ ໂດຍເໜັ້ນໜັກຕາມພຣະຄໍາ ຊຶ່ງໄດ້ທໍາການຂັດຄ້ານຕໍ່ຮູບແບບ ການນະມັສການຂອງພອກທີ່ ທໍາການປ່ຽນແປງການນະມັສການນັ້ນໆ. ຄະນະເພຣັສໄບທີຣຽນແຫ່ງອາເມຣິກາ ຍອມຮັບຮູ້ອ່າ ທຸກຮູບແບບໃນການນະມັສການ ພຣະເຈົ້າ ໄດ້ຖືກຈັດຫາມາ ແລະອີງໃສ່ຫຼັກການປະຕິຮູບ.  ໃນຣະບຽບການນະມັສການ ຄຣິສຕະຈັກ ຈະຕ້ອງມີຫືອຄິດປະດິດສ້າງ ອີງຕາມການຊົງນໍາຂອງພຣະອິນຍານບໍຣິສຸດ.

ການເປີດເຜີຍຂອງພຣະອິນຍານໃນເອລານະມັສການ ໄດ້ນໍາພາຄຣິສຕະຈັກໄປສູ່ແສງສອ່າງ ແລະຄອາມສໍາເຣັດ.  ຫາກການນະມັສການນັ້ນ ສະແດງໃຫ້ເຫັນອ່າ ເປັນການສະແດງອອກຂອງສ່ອນບຸກຄົນເພື່ອດຶງດູດຄົນອື່ນໆເທົ່ານັ້ນ ການນະມັສການນັ້ນກໍບໍ່ຖືກຕ້ອງ ແລະຮຽກຮ້ອງໃຫ້ຕ້ອງມີການຊີ້ນໍາແລະນໍາພາຈາກຄະນະປົກຄອງ.

## ອ່າດ້ອຍ ການປະກອບສ່ອນ ແລະການນໍາພາ:

W-3.1003

ຣະບຽບການນະມັສການ ຕ້ອງໃຫ້ເປັນໄປຕາມຮູບແບບແລະແທດເໝາະກັບປະເພນີ ອັທນະທັມຂອງກຸ່ມຊົນ ແລະອີງໃສ່ສະພາບແອດລ້ອມ ອ້ອມຂ້າງ ແລະຄອາມຕ້ອງການຂອງກຸ່ມຊົນນັ້ນໆ. ໃນເອລາທີ່ ການນະມັສການ ພຣະເຈົ້າ ຕ້ອງອີງໃສ່ສະພາບການດັ່ງກ່າອມານັ້ນ (G-6.0202; G-10.0102 c; W-1.4000)  ພ້ອມທັງການນໍາ ໃນການນະມັສການ



ຈະຕ້ອງອີງໃສ່ ຂອງປະທານ, ການຝຶກຫັດ, ແລະການອະນຸຍາດ (W-1.4003). ການນະມັສການ ຕ້ອງມີການຊຸກຍູ້ໃຫ້ທຸກຄົນ ສາມາດມີສ່ອນປະກອບໄດ້.

## ອ່າດ້ອຍ ເດັກ ໃນການນະມັສການພຣະເຈົ້າ.

W-3.1004

ເດັກ ໄດ້ນໍາຂອງປະທານພິເສດ ມາສູ່ການນະມັສການພຣະເຈົ້າ ແລະຄອາມເຊື່ອຂອງເຂົາກໍເຕີບໃຫຍ່ຂຶ້ນ ຍ້ອນການເຂົ້າຮ່ອມ ຢ່າງເປັນປະຈໍາ ໃນການນະມັສການນະມັສການພຣະເຈົ້າຂອງຄຣິສຕະຈັກໃດນຶ່ງ.  ຜູ້ທີ່ຮັບຜິດຊອບໃນການ ປະກອບສ່ອນຂອງເດັກຕໍ່ການນະມັສການ ຄອນຈັດໃຫ້ແທດເໝາະກັບຣະດັບຄອາມຮັບຮູ້ຂອງເດັກ.  ຕ້ອງຫຼີກລ່ຽງ ແບບລັກສະນະທີ່ເປັນ ທາງການເກີນໄປ ແລະມີການອາງຕົອເກີນຄອນ.  ຄະນະປົກຄອງ ຄອນຮັປກັນອ່າ ຣາຍການອັນເປັນປະຈໍາ ຂອງຄຣິສ ຕະຈັກ ຈະບໍ່ເປັນການຂັດຂອາງເດັກໃນການມີສ່ອນກັບການນະມັສການພຣະເຈົ້າ ຂອງຄຣິສຕະຈັກ ທັ້ງທາງພຣະຄໍາ ແລະພິທີສິນ ແລະໃນອັນສັກສິດຕ່າງໆຂອງພຣະເຈົ້າ.(W-3.3201; W-3.5202; W-6.2001; W-6.2006).

## 2. ອ່າດ້ອຍ ອັນ ແລະຣະດູການຕ່າງໆ:

**W-3.2000**

## ວ່າດ້ວຍ ວັນ:

W-3.2001
ພຣະເຈົ້າໄດ້ຊົງຈັດເອົາ ວັນນຶ່ງ ໃນຈຳນວນເຈັດວັນນັ້ນ ໃຫ້ເປັນວັນບໍຣິສຸດຂອງພຣະອົງ ແລະຕັ້ງເປັນວັນທີ່ໃຫ້ ໂອກາດແກ່ ມະນຸດ ໃນການເຂົ້າເຝົ້າພຣະເຈົ້າ. ນອກນັ້ນ ພຣະອົງຍັງຊົງໃຫ້ມີການນະມັສການພຣະອົງ ປະຈຳວັນອີກ ດ້ວຍ ບໍ່ວ່າຈະມີການ ໂຮມກັນຢູ່ສະຖານທີ່ໃດນຶ່ງ ຫຼືໃນບ້ານເຮືອນ.
(W-1.3011 - W-1.3012; W-5.5001)

## ວ່າດ້ວຍ ການນະມັສການປະຈຳປີຂອງຄຣິສຕະຈັກ:

W-3.2002
ພຣະເຈົ້າໄດ້ຊົງຈັດໃຫ້ມີກົດເກນແຫ່ງຣະດູການ ເພື່ອກຳນົດຊີວິດ ແລະມີສ່ວນໃນການນະມັສການພຣະເຈົ້າຂອງ ຄຣິສຕະຈັກ. ກິຈການ ຂອງພຣະອົງໄດ້ຊົງປາກົດໃນພຣະເຢຊູຄຣິສ ຊຶ່ງ ໄດ້ໃຫ້ຄຣິສຕະຈັກ ກາຍເປັນສູນກາງ ໃນການນະມັສການພຣະເຈົ້າ ແລະການພົວພັນ ຊຶ່ງກັນແລະກັນ ຂອງພຣະເຢຊູ ຄຣິສເອງ ແລະໄພ່ພົນຂອງພຣະເຈົ້າ. ດັ່ງນັ້ນ ຄຣິສຕະຈັກຄວນໃຫ້ການ ສັງຣະດູການໃນການນະມັສການດັ່ງນີ້:

- ການສະເດັດມາບັງເກີດ, ເປັນຣະດູການແຫ່ງຄວາມຫວັງ ໃນການສະເດັດມາປະສູດຂອງພຣະເຢຊູຄຣິສ ແລະການສະເດັດມາຄັ້ງ ທີສອງຂອງພຣະອົງ; (Advent)
- ວັນຄຣິສມາດ, ສເລີມສລອງການປະສູດຂອງພຣະເຢຊູຄຣິສ; (Christmas)
- ການສະເດັດມາປາກົດຂອງພຣະເຈົ້າຕໍ່ມະນຸດ (Epiphany)



- ຣະດູການ ແຫ່ງການເຂົ້າສູ່ຣະບຽບການແຫ່ງຈິດວິນຍານ ແລະການຈັດຖຽນ (ການບວດ) ເພື່ອມີສ່ວນຮ່ວມ ໃນການອາຍພຣະຊົນ ແລະການຄືນພຣະຊົນຂອງພຣະເຢຊູຄຣິສ. (Lent)
- ອາທິດບໍຣິສຸດຂອງພຣະເຈົ້າ ເປັນເວລາແຫ່ງຄວາມຊົງຈຳ ແລະການປະກາດກ່ຽວເຣື້ອງ ການຮັບທຸກ ທໍຣະມານ ແລະການອາຍພຣະຊົນຂອງພຣະເຢຊູຄຣິສ. (Holy Week)
- ວັນຄືນພຣະຊົນຂອງພຣະເຢຊູຄຣິສ ຣະດູການນີ້ ໄດ້ມີການສເລີມສລອງ ໃນພະຣາກິດຂອງພຣະອົງ ຈົນເຖິງວັນທີ່ ພຣະອົງສະເດັດ ຂຶ້ນສູ່ສວັນສະຖານ ແລະຈະມີການສເລີມສລອງໄປເລື້ອຍໆ ຈົນຮອດວັນ ເພັນເຕຄອສ.(Easter)
- ວັນເພັນເຕຄອສ, ເປັນການສເລີມສລອງການປະທານພຣະວິນຍານບໍຣິສຸດ ແກ່ຄຣິສຕະຈັກຂອງພຣະເຈົ້າ. (Pentecost)

ຄຣິສຕະຈັກ ຄວນເອົາໃຈໃສ່ໃນວັນອື່ນໆອີກເຊັ່ນກັນ ເຊັ່ນ: ວັນຮັບບັບຕິສມາຂອງພຣະເຢຊູຄຣິສ, ວັນປ່ຽນ ລັກສະນະພຣະກາຍຂອງພຣະອົງ, ວັນອາທິດແຫ່ງຕຣີເອກະນຸພາບຂອງພຣະເຈົ້າ, ວັນສັກສິດອື່ນໆ, ແລະວັນແຫ່ງ ກະສັດຄືພຣະເຢຊູຄຣິສ.

## ວ່າດ້ວຍ ຣະດູການອື່ນໆ:

W-3.2003
ຊີວິດມະນຸດ ໄດ້ມີການເຄື່ອນໄຫວໄປມາຕາມຣະດູການ ແລະນັ້ນກໍເປັນພົນສະທ້ອນໃນຊີວິດການນະມັສການ ພຣະເຈົ້າ ຂອງຄຣິສຖຽນເຊ

ນກັນ. ນອກຈາກນັ້ນແລ້ວ ຊີວິດມະນຸດ ກໍຍັງມີຣະດູການອື່ນໆອີກເຊັ່ນ ວັນຄົບຮອບ ໃດນຶ່ງ, ວັນແຫ່ງການ ປູກຝັງ, ໂຮງຮຽນ, ແລະວັນກ່ຽວກັບຊີວິດ ແຫ່ງການທຳງານ, ວັນພິເສດພາຍໃນຄອບຄົວ ແລະວັນສເລີມສລອງອື່ນໆ, ແລະວັນກ່ຽວກັບປະເພນີວັທນະທັມຕ່າງໆ. ຄຣິສຕະຈັກ ໄດ້ມີກິຈການຂອງຕົນ ພ້ອມດຽວກັນ ກໍມີຫົວຄິດປະດິດສ້າງໃນ ກິຈການອື່ນໆ ເພື່ອການປະກາດ, ຈັດຣາຍການໃຫ້ຖືກຕ້ອງເໝາະສົມ, ແລະໃຫ້ການສັງເກດການແລະເອົາໃຈໃສ່ໃນວັນຕ່າງໆ. ໃນເວລາ ວັນຕ່າງໆນັ້ນ ຫາກເໝາະສົມໃນການເອົາ ພິທີການຂອງຄຣິສຕຽນເຂົ້າໄປ ຄຣິສຕະຈັກຄວນຮັບເອົາມາໃຊ້ ແຕ່ຕ້ອງຮັປກັນບໍ່ໃຫ້ລົບລ້າງການປະກາດ ໃນວັນສັກສິດຂອງພຣະເຈົ້າ.

## ૩. ການຮັບໃຊ້ພຣະເຈົ້າ ໃນວັນສັກສິດຂອງພຣະເຈົ້າ:

**W-3.3000**

### ກ. ວ່າດ້ວຍກິຈການ ທີ່ເໝາະສົມທີ່ຄວນນຳມາໃຊ້:

W-3.3001

### ໃນວັນສັກສິດຂອງພຣະເຈົ້າ:

W-3.3002

ພຣະຄຳພີຄວນຕ້ອງຖືກນຳມາອ່ານ ແລະປະກາດ(W-2.2001). ບົດຮຽນຄວນອ່ານໃນພຣະຄຳພີເດີມ ແລະຄຳພີໃໝ່ (W-2.2002). ພຣະຄຳພີ ຄວນນຳມາບັລຍາຍ ອະທິບາຍ ໃນບົດເທສນາ ແລະບົດອື່ນໆ. (W-2.2007-2.2008).

ໃນການອະທິຖານ.(W-2.1001) ການອະທິຖານ ຄວນອະທິຖານ ໃນນາມຂອງທີ່ປະຊຸມ ຊຶ່ງພວກທີ່ມາຮ່ວມ ຄວນໃຫ້ການຕອບຮັບດ້ວຍຄຳວ່າ



"ອາແມນ". ຮູບແບບວິທີການອະທິຖານ ສາມາດເປັນສິ່ງຊຸກຍູ້ພວກນະມັສການ ດ້ວຍວິທີການ ອະທິຖານຮ່ວມໝູ່, ດ້ວຍການອ່ານສະລັບກັນ, ດ້ວຍຄຳສັ່ງ ແລະການປ່ຽນຜຽນກັນອະທິຖານ. ເວລາແຫ່ງການ ທຳຄວາມສງົບ ຄວນໃຊ້ ໃນເວລາອະທິຖານ ແລະເວລາໃຊ້ຄວາມຄຶດໄຕ່ຕອງ. (W-2.1000)

ການດົນຕຣີ ອາດນຳມາໃຊ້ ໃນການແນະນຳ ແລະການອະທິບາຍຂໍ້ພຣະຄຳພີ ເໝືອນໃຊ້ໃນການຕອບຮັບເອົາ ພຣະຄຳ, ແລະການອະທິຖານ, ໂດຍຜ່ານບົດເພັງສັຣເສີນ ແລະເພັງນະມັສການ, ແລະເພັງຝ່າຍພຣະວິນຍານ. (W-2.1003-2.1004; W-2.2008)

ພິທີສົມບັບຕິສມາ ຈະຕ້ອງໃຫ້ມີຂຶ້ນ ໃນເວລາທີ່ ຄົນນຶ່ງຄົນໃດ ສເນີເດັກ ຫຼືຕົວເຂົາເອງ ເພື່ອມີສ່ວນໃນ ຄຣິສຕະຈັກ (W-2.3000)

ການຖວາຍນຶ່ງສ່ວນສິບ ແລະການຖວາຍອື່ນໆ ຂອງຄົນນຶ່ງຄົນໃດ ຄວນຕ້ອງຖືກເກັບກຳຮວບຮວມຮັບເອົາໄວ້. (W-2.5000)

ເວລາແຫ່ງການຮວມຊຸມນຸມ, ອວຍພອນ, ແລະການເອີ້ນຮຽກເຂົ້າສູ່ການນະມັສການ ຕ້ອງເປັນເວລາທີ່ມີການ ແບ່ງເບົາເລື້ອງ ລາວນຳກັນ, ແລະເປັນເວລາແຫ່ງການອວຍພອນຊຶ່ງກັນແລະກັນ ແລະແຫ່ງການອອກໄປປະກາດ. ເວລາດັ່ງກ່າວ ຄວນຈັດຂຶ້ນ ຢ່າງແທດເໝາະກັບສະພາບ ຂອງຄຣິສຕະຈັກນັ້ນໆ. (W-2.6000)

ກິຈການໃນການຕ້ອນຮັບເອົາສະມາຊິກໃໝ່, ການສະຖາປະນາ, ການແຕ່ງຕັ້ງ, ແລະການມອບໝາຍໜ້າທີ່ ເປັນການທຳສັນຍາ ແລະຟື້ນຟູ ສັນຍານັ້ນກັບພຣະເຈົ້າ, ເປັນການຮູ້ຈັກຈົດຈຳ ແລະແບ່ງປັນແຫ່ງການປ່ຽນແປງຂອງ ຊີວິດ. ສິ່ງດັ່ງກ່າວຕ້ອງຈັດ ໃຫ້ມີຂຶ້ນ ຊຶ່ງມັນເປັນຊີວິດຈິດໃຈ ຂອງຄຣິສຕະຈັກ. (W-2.5000-2.6000; W-4.0000)

## ຂ. ວ່າດ້ວຍຣະບຽບການ ຂອງກິຈການໃນວັນສັກສິດຂອງພຣະເຈົ້າ:

W-3.3200

## ວ່າດ້ວຍ ຣະບຽບການຈັດຕັ້ງ ການນະມັສການພຣະເຈົ້າ

W-3.3201

ໃນຣະບຽບການຈັດຕັ້ງ ການນະມັສການໃນວັນສັກສິດຂອງພຣະເຈົ້າ, ອາຈານ, ໂດຍການເຫັນດີເຫັນພ້ອມຂອງ ຄະນະປຶກຄອງ, ຕ້ອງໃຫ້ໂອກາດແກ່ກຸ່ມຄົນບໍ່ວ່ານ້ອຍຫຼືໃຫຍ່ ໃນການປະກອບສ່ວນຖວາຍການຂອບພຣະຄຸນ ແລະສັຣເສີນພຣະເຈົ້າ ແລະເພື່ອໃຫ້ພວກເຂົາ ສາມາດໄດ້ຍິນພຣະຄໍາພຣະເຈົ້າ ແລະຕອບຮັບພຣະອົງ. ມີຢູ່ໃນ
(W-1.4004- 1.4007; W-3.1004)

## ວ່າດ້ວຍການສເນີແນະ ກ່ຽວກັບຣະບຽບການ:

W-3.3202

ຣະບຽບການທີ່ຈະກ່າວນີ້ ມີກົກເຄົ້າມາຈາກພຣະສັນຍາໃໝ່, ແລະມີຜົນສະທ້ອນຕໍ່ປະເພນີວັທນະທັມຂອງ ຄຣິສຕະຈັກສາກົນ ແລະຈາກນໍຣະດົກ ຕົກທອດຂອງຄະນະປະຕິຮູບ. ຣະບຽບການແບບອື່ນໆ ກໍອາດສາມາດຕອບ ສນອງຄວາມຮຽກຮ້ອງ ຕ້ອງການຂອງຄຣິສຕະຈັກທ້ອງຖິ່ນໃດນຶ່ງ ກໍເປັນໄດ້ ຫາກຣະບຽບການນັ້ນ ໄດ້ເຮັດຕາມຄວາມ ເຊື່ອໃນພຣະຄໍາພີ, ແລະອີງໃສ່ ຄວາມຈິງໃນຈຸດປະວັດສາດທີ່ສໍາຄັນຂອງພຣະຄໍາພີ. ຣະບຽບການດັ່ງລຸ່ມນີ້ ໄດ້ຊີ້ ບອກເຖິງ ກິຈການຫ້າຢ່າງ ຊຶ່ງເປັນຈຸດສໍາຄັນ ໃນພຣະຄໍາຂອງພຣະເຈົ້າ ຊຶ່ງມີຄື:



- ໂຮມຊຸມນຸມກັນ ຢູ່ຖ່າມກາງພຣະຄໍາ.
- ປະກາດພຣະຄໍາ.
- ຕອບຮັບພຣະຄໍາ.
- ປະທັບກາດ້ວຍພຣະຄໍາ ຫຼືຕິດສະໜິດກັບພຣະຄໍາ.
- ຖືຮັກສາພຣະຄໍາ ແລະນໍາພຣະຄໍາ ໄປສູ່ໂລກ.

## ການໂຮມຊຸມນຸມກັນຖ່າມກາງການໃຊ້ພຣະຄໍາ

W-3.3400

## ວ່າດ້ວຍການໂຮມກັນ:

W-3.3401

ການນະມັສການເກີດຂຶ້ນ ໃນເວລາທີ່ຄົນເຕົ້າໂຮມກັນ. ຄົນນຶ່ງ ຫຼືຫຼາຍຄົນທີ່ມີກິຈການ ຫຼືການກະທໍາທີ່ ເໝາະສົມດັ່ງນີ້: ອວຍພອນຊຶ່ງກັນ ແລະກັນ, ອະທິຖານແບບງຽບສງົບ ຫຼືອະທິຖານໃນໃຈ, ປະກາດເຖິງສິ່ງທີ່ຄວນເປັນຫ່ວງຕໍ່ຄຣິສຕະຈັກ ຫຼືດົນຕຣີ ອາດຖືກນໍາມາໃຊ້.

ຄົນທີ່ຖືກເອີ້ນ ໃຫ້ທໍາການນະມັສການພຣະເຈົ້າ. ຂໍ້ພຣະຄໍາພີຕ້ອງຖືກນໍາມາອ່ານ ຫຼືມີການຮ້ອງເພັງ ເພື່ອປະກາດ ເຖິງ ພຣະເຈົ້າ ແລະສິ່ງທີ່ພຣະອົງຊົງກະທໍາ.

ການອະທິຖານ ແລະເພັງແຫ່ງຄວາມເຫຼື້ອມໃສສັດທາໃນພຣະເຈົ້າ ແລະບົດເພັງສັຣເສີນຄວນນໍາມາໃຊ້.

ການອະທິຖານແບບສາຣະພາບຍອມຮັບໃນຄວາມຈິງແຫ່ງຄວາມຜິດບາບດ້ວຍຕົນເອງ ແລະເພື່ອຊີວິດຂອງ ຕົນເອງໃນ ໂອກາດຕໍ່ໄປ.
ໃນການປະກາດຮຽກຮ້ອງການອະພັຍ, ພຣະຄໍາພີຈະຕ້ອງຖືກນໍາມາປະກາດ

ແລະການອະພັຍ ໂທດຕ້ອງປະກາດ ໃນພຣະນາມແຫ່ງພຣະເຢຊູຄຣິສ. ການຊົງໄຖ່ຂອງພຣະເຈົ້າ ແລະການຊົງຮຽກຮ້ອງຂອງພຣະເຈົ້າ ຕໍ່ຊີວິດຂອງມະນຸດ ຄວນມີການຈະຣຶກໃນເວລານັ້ນ.

ມະນຸດ ໃຫ້ການຍົກຍໍພຣະເຈົ້າ, ແລະໃນເວລານີ້ ເຂົາຄວນໄດ້ຮັບສັນຍາລັກແຫ່ງການຄືນດີກັນກັບພຣະອົງ ແລະສັນຕິສຸກ ໃນພຣະຄຣິສ.

## ການປະກາດພຣະຄຳ:

W-3.3400

## ວ່າດ້ວຍ ການປະກາດ

W-3.3401

ໃນການຈັດຕຽມ ການອ່ານ, ການປະກາດ, ແລະການຮັບຟັງພຣະຄຳ, ຕ້ອງມີການອະທິຖານ ຂໍແສງສວ່າງ ເປີດຈິດໃຈຈາກ ພຣະວິນຍານບໍຣິສຸດ

ຂໍ້ພຣະຄຳ ທີ່ແທດເໝາະໃນການນະມັສການນັ້ນໆ ຕ້ອງຖືກອ່ານໂດຍອາຈານ, ສະມາຊິກຂອງຄຣິສຕະຈັກ, ຫຼືໂດຍການອ່ານແບບສະລັບກັນ, ແບບບົດກະວີ, ຫຼືແບບອ່ານພ້ອມກັນ. (W-2.2006)

ເພັງສັຣເສີນ ແລະເພັງນະມັສການ, ແລະການດົນຕຣີອື່ນໆ ຫຼືສິລປະອື່ນໆ ທີ່ຖືກນຳມາປະກາດເຜີຍແຜ່ ແລະນຳມາເພື່ອບັລຍາຍ ພຣະຄຳພີ ຄວນນຳມາໃຊ້ພ້ອມດຽວກັບເວລາອ່ານພຣະຄຳພີນັ້ນ.

ພຣະຄຳຄວນມີການແປ ແລະອະທິບາຍໃນບົດເທສນາ ທີ່ເທດໂດຍອາຈານ, ຫຼືຜູ້ທີ່ຖືກອະນຸດມັດຈາກຄະນະປົກຄອງ ແລະອາຈານ ແລ້ວ.(W-1.4004-1.4006; W-2.2007-W-2.2008) ການປະກາດແບບນີ້ ຕ້ອງລົງທ້າຍ ດ້ວຍການອະທິຖານ,



ການຮ້ອງໂຮສມັບສມູນ, ຫຼືດ້ວຍການລົງຄວາມເຫັນພ້ອມກັນສັຣເສີນ. ແລະກໍເປັນການເໝາະສົມ ທີ່ຈະເອີ້ນຮຽກ ໃຫ້ຄົນ ເຂົ້າສູ່ການເປັນສາວົກຂອງພຣະເຈົ້າ.(W-2.2007; W-2.2009)

## ການຕອບຮັບພຣະຄຳ:

W-3.3500

## ວ່າດ້ວຍການຕອບຮັບ ແບບມີການປະກາດຢືນຢັນ:

W-3.3501

ການຕອບຮັບ ຕໍ່ການປະກາດພຣະຄຳ ໄດ້ສະແດງເຖິງການຢືນຢັນໃນຄວາມເຊື່ອ ແລະການອຸທິດຕົນຂອງຄົນຜູ້ນຶ່ງ. ການຢືນຢັນ ໂດຍທົ່ວໄປ ອາດນຳພາໂດຍຄຣິສຕະຈັກ ໂດຍຜ່ານການຮ້ອງເພັງສັຣເສີນ ຫຼືການດົນຕຣີທີ່ເໝາະສົມ, ຫຼືໂດຍຜ່ານການຮ້ອງເພັງແຫ່ງຫຼັກຄວາມເຊື່ອຂອງຄຣິສຕະຈັກ. ຄະນະນັກຮ້ອງສາມາດນຳພາທີ່ປະຊຸມໂດຍການ ຮ້ອງເພັງ ນະມັສການ ຫຼືແບບການດົນຕຣີທີ່ເປັນລັກສະນະຢັ້ງຢືນຢືນຢັນ. ການຕອບຮັບ ຂອງສ່ວນບຸກຄົນ ອາດກະທຳໄດ້ໃນ ໂອກາດນີ້ເຊັ່ນກັນ.

## ວ່າດ້ວຍການຢືນຢັນ ແລະການຢ້ຳຄືນໃນຂໍ້ຜູກມັດຕ່າງໆ:

W-3.3502

ການຕອບຮັບພຣະຄຳ ຕ້ອງປະກອບດ້ວຍການກະທຳທີ່ມີການໃຫ້ຂໍ້ຜູກມັດ ແລະມີການຮັບຮອງເຊັ່ນກັນ. ພິທີສິນບັບຕິສມາ ກໍເປັນສິ່ງນຶ່ງ ໃນກິຈການນີ້ເຊັ່ນກັນ.(W-3.3601-3.3607) ຜູ້ທີ່ເຊື່ອແລະຮັບບັບຕິສມາແລ້ວ ອາດຮັບເຂົ້າເປັນ ສະມາຊິກຂອງຄຣິສຕະຈັກ ໃດນຶ່ງໄດ້ ຫາກເຂົາປະກາດຢືນຢັນຄວາມເຊ

ືອຂອງເຂົາຄັ້ງທຳອິດ, ຫຼືຫາກເຂົາຢ້ຳເຖິງຄວາມເຊື່ອ ຂອງເຂົາຄືນໃໝ່, ຫຼືຖືກໂອນຍ້າຍມາ. (ໃນການເຮັດພິທີຕ້ອນຮັບນັ້ນ ໃຫ້ເບິ່ງ W-4.2000; W-4.3000; G-5.0000; G-10.0102). ເປັນການເໝາະສົມເຊັ່ນກັນ ຫາກມີການອະນຸຍາດໃຫ້ສ່ວນບຸກຄົນ ຫຼືພວກທີ່ເຂົ້າຮ່ວມປະຊຸມ ໃຫ້ມີຮັບຮອງໃນເວລາມີການຢ້ຳຄືນເຖິງການ ຂໍ້ຜູກມັດຕ່າງໆໃນເວລາຮັບສົມບັບຕິສມານັ້ນ. (W-4.2005)

## ວ່າດ້ວຍ ການກະທຳທີ່ເປັນຂໍຜູກມັດອື່ນໆ:

ກິຈການແຫ່ງຂໍ້ຜູ້ມັດກອື່ນໆທີ່ເປັນການເໝາະສົມກັບການຕອບຮັບພຣະຄຳຂອງພຣະເຈົ້າມີດັ່ງນີ້:

- ການແຕ່ງງານແບບຄຣິສຕຽນ (W-4.9000)
- ການສະຖາປະນາ ແລະແຕ່ງຕັ້ງ ເຈົ້າໜ້າທີ່ຄຣິສຕະຈັກ (W-4.4000; G-14.0206-14.0209; G-14.0405; G-14.0510)
- ການມອບໝາຍໜ້າທີ່ໃນການຮັບໃຊ້ພຣະເຈົ້າ ໃນກໍຣະນີຂອງການເປັນຜູ້ອຳນວຍການການສຶກສາ, ຄູສອນ, ເຈົ້າໜ້າທີ່ອົງການ, ກຸ່ມທີ່ປຶກສາ. (W-4.3000; W-3.3701)

### ວ່າດ້ວຍ ກິຈການໃນການຈາຣຶກແລະຈົດຈຳ:

W-3.3504

ເປັນການເໝາະສົມ ທີ່ຈະຕອບຮັບພຣະຄຳໂດຍການ ຈາຣຶກຈົດຈຳ ແລະການຂອບພຣະຄຸນສຳຣັບຊີວິດ ແລະການປ່ຽນແປງ ຂອງຊີວິດ.



- ພິທີຣະນຶກເຖິງເຫດການຕ່າງໆໃນຊີວິດຂອງສ່ວນບຸກົນ ແລະຂອງກຸ່ມຊົນ,
- ສເລີມສລອງການຢູ່ຮ່ວມກັນ ແລະການຈາກກັນ,
- ບັນທຶກ ແລະຈົດຈຳ ຊີວິດຂອງຜູ້ທີ່ເສັຽຊີວິດໄປແລ້ວນັ້ນ.(W-4.5000; W-4.7000; W-4.8000)

### ວ່າດ້ວຍວຽກງານແຫ່ງການເປັນຫ່ວງເປັນໃຍ:

W-3.3505

ການເປັນພະຍານຂອງຄວາມເຊື່ອ ແລະການຮັບໃຊ້ພ້ອມທັງການອະທິບາຍກ່ຽວກັບການປະກາດ ແລະຣາຍການຂອງ ຄຣິສຕະຈັກຄວນໃຫ້ມີ ໃນເວລາມີກິຈການ ເພື່ອເປັນການຕອບຮັບພຣະຄຳພຣະເຈົ້າ. ນັ້ນເປັນການສະແດງໃຫ້ເຫັນ ຜົນສະທ້ອນຂອງການຕອບຮັບ ແລະສາມາດເປັນການຕຽມພ້ອມການອະທິຖານເພື່ອກັນແລະກັນ ແລະການອະທິຖານອ້ອນວອນຂໍ ແລະການຖວາຍຕົວຂອງສ່ວນບຸກຄົນ ໃນການສະໜັບ ສະໜູນວຽກງານຂອງຄຣິສຕະຈັກ.

### ວ່າດ້ວຍການອະທິຖານ:

W-3.3506

ໃນການຕອບຮັບພຣະທັມ ການອະທິຖານເພື່ອກັນແລະກັນຈະຕ້ອງໃຫ້ມີຂຶ້ນເພື່ອ:

- ຄຣິສຕະຈັກສາກົນ, ການຮັບໃຊ້ພຣະເຈົ້າ ແລະບັນດາອາຈານ, ເພື່ອໂລກຈະເຊືອພຣະເຈົ້າ,
- ຊາວໂລກ, ຜູ້ເສົ້າໂສກ ຫຼືມີຄວາມຕ້ອງການ, ແລະຜູ້ກຳອຳນາດປົກຄອງທັງຫຼາຍ, ເພື່ອສັນຕິ ແລະຄວາມຍຸຕິທັມ ຈະເກີດຂຶ້ນທົ່ວໄປ

- ປະເທດ, ຣັດ, ກຸ່ມຊົນທ້ອງຖິ່ນ, ແລະພວກຜູ້ປົກຄອງສິ່ງດັ່ງກ່າວ, ເພື່ອເຂົາຈະມີຄວາມຮັບຮູ້ ແລະກ້າທີ່ຈະເຮັດ ໃນສິ່ງທີ່ຖືກຕ້ອງ.

ການອະທິຖານອ້ອນວອນຈະຕ້ອງໃຫ້ມີຂຶ້ນເພື່ອ:

- ຄຣິສຕະຈັກທ້ອງຖິ່ນ, ຈະມີປັນຍາແຫ່ງພຣະຄຣິສ ໃນການພະເຊີນບັນຫາ ແລະຄວາມຈຳເປັນຕ່າງໆ.
- ຜູ້ທີ່ມີບັນຫາກັບຄວາມເຊື່ອຂອງຕົນ ເພື່ອເຂົາຈະມີການຮັປກັນແລະໝັ້ນໃຈ
- ພວກທີ່ຢູ່ທ່າມກາງການປ່ຽນແປງແຫ່ງຊີວິດ, ເພື່ອເຂົາຈະໄດ້ຮັບການນຳພາ ແລະສະໜັບສະໜູນ
- ພວກທີ່ພະເຊີນກັບບັນຫາແຫ່ງການຕັດສິນໃຈໃດນຶ່ງ, ເພື່ອພວກເຂົາຈະມີອິສະຣະພາບໃນການຕັດສິນ ບັນຫານັ້ນໆ
- ພວກທີ່ເຈັບປ່ວຍ, ໂສກເສົ້າເສັຽໃຈ, ເປົ່າປ່ຽວ, ແລະກະວົນກະວາຍ, ເພື່ອເຂົາຈະໄດ້ຮັບການເລົ້າໂລມໃຈ ແລະຖືກປິ່ນປົວ.

ສະມາຊິກທຸກຄົນ, ເພື່ອເຂົາຈະປະຕິບັດຕາມພຣະຄຸນຂອງພຣະເຈົ້າ ໃນພຣະປະສົງຂອງພຣະອົງ.
(W-2.1000)

ການອະທິຖານສາຣະພາບຍອມຮັບ ຄວນມີຂຶ້ນໃນເວລານັ້ນດ້ວຍ. ໃນເວລາທີ່ພິທີການນັ້ນຫາກບໍ່ມີການທຳພິທີສິນ ມະຫາສະໜິດ, ການອະທິຖານຂອບພຣະຄຸນພຣະເຈົ້າກໍຄວນມີ ແລະການອະທິຖານນັ້ນ ຄວນປະກອບດ້ວຍ ຄຳ ອະທິຖານທີ່ ພຣະເຢຊູຊົງສອນ(W-3.3613)



## ວ່າດ້ວຍ ການຖວາຍ:

W-3.3507

ການຖວາຍນຶ່ງສ່ວນສິບ ຫຼືການຖວາຍອື່ນໆຂອງບັນດາໄພ່ພົນຂອງພຣະເຈົ້າ ຈະຕ້ອງມີການຮິບໂຮມ ແລະຮັບເອົາ ໄວ້ໂດຍການ ອະທິຖານ, ໂດຍຖ້ອຍຄຳເວົ້າ, ຫຼືໂດຍສຽງເພັງ(W-2.5003). ຫາກສິ່ງດັ່ງກ່າວ ບໍ່ໄດ້ເຮັດໄປຕາມການ ຍິນຍອມຕອບຮັບຕໍ່ ພຣະຄຳຂອງພຣະເຈົ້າ ບໍ່ຮັປກັນການອະພັຍ ໂທດຈາກພຣະເຈົ້າ, ການຄືນດີ ແລະສັນຕິສຸກ ກໍຈະບໍ່ເກີດຂຶ້ນ (W-3.3301).
ໃນເວລາທີ່ມີການສເລີມສລອງ ພິທີສິນມະຫາສະໜິດ ເຂົ້າຈີ່ ແລະນ້ຳອະງຸ່ນ ອາດນຳມາເທິງໂຕະຂອງພຣະເຈົ້າ ໃນການຂອບ ພຣະຄຸນຕໍ່ພຣະຄຳຂອງພຣະອົງ.
(W-2.4003; W-3.3609)

## ການປະທັບຕາດ້ວຍພຣະຄຳ: ພິທີສິນຕ່າງໆ:

W-3.3600

## ວ່າດ້ວຍ ການໃຊ້ພິທີສິນ ເປັນຕາປະທັບ:

W-3.3601

ບັບຕິສມາ ແລະສິນມະຫາສະໜິດແມ່ນກິຈກຳທີ່ມາແຕ່ພຣະເຈົ້າ ເພື່ອການຕອກຢ້ຳເຖິງສັນຍາດ້ວຍຄວາມເຊື່ອຂອງ ກຸ່ມຊົນທີ່ມີຄວາມເຊື່ອ ຊື່ງໝາຍເຖິງກຸ່ມນະມັສການ ຊື່ງປະກອບດ້ວຍການ ຕອບຮັບດ້ວຍຄວາມເຊື່ອໃນພຣະຄຳ ທີ່ປະກາດ ແລະການປະຕິບັດໃນພິທີສິນ.

## ວ່າດ້ວຍ ພິທີສິນບັບຕິສມາ:

W-3.3602

ບັບຕິສມາ ເປັນສັນຍາລັກ ແລະການປະທັບຕາຂອງພຣະເຈົ້າ ແລະການຕອບຮັບຂອງເຮົາ, ເປັນພື້ນຖານແຫ່ງ ການຈົດຈຳ ຂອງຄຣິສຕຽນ

ໃນການໃຫ້ການປະຕິຍານຕໍ່ພຣະເຈົ້າ. ການສເລີນສລອງ ຄວນປະກອບດ້ວຍການອ່ານ ແລະປະກາດພຣະຄຳ, ແລະຕ້ອງປະກອບດ້ວຍ ຂໍ້ພຣະຄຳທີ່ໃຫ້ຄວາມໝາຍກ່ຽວກັບການຮັບສີນບັບຕິສມາ. ໜ້າທີ່ຮັບ ຜິດຊອບໃນການຕັດສິ້ນຮັບ ບັບຕິສມານີ້ ຂື້ນກັບບັນດາຜູ້ທີ່ຕ້ອງການຮັບ ສຳຮັບຕົນເອງ ຫຼືເດັກໆຂອງພວກເຂົາ, ແລະໂດຍການໃຫ້ຄວາມລ້ຽງເກືອ ໂດຍຄຣິສຕະຈັກ.

## ວ່າດ້ວຍຂໍ້ຜູກມັດ ແລະຄຳປະຕິຍານ

W-3.3603

ຜູ້ທີ່ເລືອກການຮັບບັບຕິສມາໃຫ້ເດັກຂອງຕົນ ຫຼືໃຫ້ຕົນເອງ ຈະຕ້ອງມີຄຳປະຕິຍານທີ່:

- ສະແດງຄວາມເຊື່ອຂອງຕົນໃນພຣະເຢຊູຄຣິສ ໃຫ້ເປັນພຣະຜູ້ຊ່ອຍໃຫ້ລອດ,
- ປະຕິເສດຜີມານ ແລະເຂົ້າສູ່ການພົວພັນກັບພຣະເຈົ້າ,
- ປະກາດການຕັ້ງໃຈຂອງພວກເຂົາ ໃນການປະກອບສ່ວນ ນະມັສການ ແລະການຮັບໃຊ້ພຣະເຈົ້າຂອງ ຄຣິສຕະຈັກ.

ທີ່ປະຊຸມຄວນທຳດັ່ງນີ້:

- ສະແດງຄວາມເຊື່ອອອກໂດຍໃຊ້ ຫຼັກຄວາມເຊື່ອຕາມເຫຼົ່າອັຄສາວົກ,
- ອອກສຽງສະໜັບສະໜູນຕໍ່ພວກທີ່ຮັບສີນ,
- ສະແດງ ຄວາມຈິງໃຈທີ່ຈະຮັບເອົາໜ້າທີ່ຮັບຜິດຊອບ ໃນການລ້ຽງເກືອຜູ້ທີ່ຮັບສີນ.

ຜູ້ປົກຄອງຄົນນຶ່ງ ອາດມາເປັນຜູ້ນຳພາທີ່ປະຊຸມໃນການສະແດງສິ່ງດັ່ງກ່າວ ແລະເພື່ອເປັນການຢັ້ງຢືນ ໃນສິ່ງທີ່ກ່າວມານັ້ນ.



## ວ່າດ້ວຍການອະທິຖານ:

W-3.3604

ອາຈານ ເປັນຜູ້ໃຫ້ການອະທິຖານສຳຮັບການຮັບສີນບັບຕິນານັ້ນ. ການອະທິຖານນັ້ນຕ້ອງ:

- ສະແດງການຂອບຄຸນພຣະເຈົ້າ ໃນພຣະສັນຍາຂອງພຣະອົງ,
- ສັຣເສີນພຣະເຈົ້າ ໃນການເປັນຜູ້ນຳພາໃຫ້ເຮົາສາມາດຄືນດີກັນກັບພຣະອົງ,
- ຂໍຮ້ອງພຣະວິນຍານບໍຣິສຸດ

    ສະຖິດນຳ ແລະໃຫ້ຣິດອຳນາດແກ່ຜູ້ຮັບສີນ
    ໃຫ້ນ້ຳທີ່ໃຊ້ ເປັນນ້ຳແຫ່ງການໄຖ່ໃຫ້ພົ້ນ ແລະການບັງເກີດໃໝ່,
    ເຮັດໃຫ້ຄຣິສຕະຈັກມີຄວາມເຊື່ອໝັ້ນຍິ່ງຂື້ນ.

## ວ່າດ້ວຍ ນ້ຳ:

W-3.3605

ນ້ຳທີ່ໃຊ້ໃນການໃຫ້ສີນບັບຕິສມາ ຕ້ອງເປັນສິ່ງທີ່ທ້ອງຖິ່ນນັ້ນມັກໃຊ້ກັນ ແລະຄວນໃຊ້ໂດຍການ ຫົດ, ພົມ, ຫຼືດ້ວຍການຈຸ່ມ. ຈະເປັນແບບໃດກໍຕາມ ການໃຊ້ນ້ຳນັ້ນ ຕ້ອງໃຊ້ຢ່າງເປີດເຜີຍ ແລະຢ່າງກວ້າງຂວາງ.

## ວ່າດ້ວຍ ຄຳເວົ້າທີ່ໃຊ້ໃນການໃຫ້ສີນບັບຕິສມາ:

W-3.3606

ອາຈານຄວນເອີ້ນຊື່ຂອງບຸກຄົນຜູ້ທີ່ຮັບສິນນັ້ນ
ແລະກໍຄວນໃຫ້ສິນໂດຍພຣະນາມແຫ່ງພຣະເຈົ້າຕຣີເອກະນຸພາບ. ແບບວິທີ
ໃນການເຮັດດັ່ງນີ້:
"ທ່ານ................, ຂ້າພະເຈົ້າ ໃຫ້ບັບຕິສມາທ່ານ
ໃນພຣະນາມແຫ່ງພຣະບິດາ, ພຣະບຸດ, ແລະພຣະວິນຍານ ບໍຣິສຸດ."

## ວ່າດ້ວຍ ກິຈການອື່ນໆ:

W-3.3607

ຈຸດສູນກາງອັນສຳຄັນ ໃນການຮັບສິນບັບຕິສມາຄວນຖືກເອົາໃຈໃສ່.
ກິຈການອື່ນໆ ທີ່ປະວັດສາດຂອງການ ຮັບສິນໄດ້ທຳມາ ອາດຖືກນຳເອົາມາໃຊ້ ເຊັ່ນ
ການວາງມືໃນການໃຫ້ພອນ, ອະທິຖານຂໍການຊົງນຳຈາກພຣະວິນຍານ ບໍຣິສຸດ,
ເຈີມດ້ວຍ ນ້ຳມັນຫອມ, ແລະການສະເໜີຜູ້ຮັບສິນໃໝ່ ຕໍ່ໜ້າທີ່ປະຊ
ຸມອາດຖືກນຳມາໃຊ້. ຫາກກິຈການ ຕ່າງໆເຫຼົ່ານີ້ຖືກນຳມາໃຊ້,
ຄວນໃຫ້ມີການອະທິບາຍຄັກແນ່ ເພື່ອບໍ່ໃຫ້ມີການເຂົ້າໃຈຜິດ
ຫຼືມີການຕີຄວາມໝາຍ ທີ່ຜິດພາດ.

## ວ່າດ້ວຍ ການຍິນດີຕ້ອນຮັບ:

W-3.3608

ການປະກາດ ຄວນມີ ສຳຮັບຜູ້ທີ່ຮັບສິນ ແລະເຂົ້າເປັນສະມາຊ
ິກຂອງຄຣິສຕະຈັກພຣະເຢຊູຄຣິສ. ທີ່ປະຊຸມ ຄວນສະແດງການ ຕ້ອນຮັບຢ່າງດີ.
ຫຼັງຈາກພິທີສຳເຣັດແລ້ວ ການທຳພິທີສິນມະຫາສະໜິດຄວນໃຫ້ມີ.



## ວ່າດ້ວຍ ພິທີສິນມະຫາສະໜິດ ແລະການຈັດຕຽມ:

W-3.3609

ທີ່ປະຊຸມ
ຄວນມີການຕຽມພ້ອມໃນການປະກອບສ່ວນໃນພິທີສິນມະຫາສະໜິດ.(W-2.4006;
W-2.4011;
W-5.2001) ຫາກພິທີນີ້ ບໍ່ໄດ້ທຳເລື້ອຍໆ ໃນວັນສັກສິດຂອງພຣະເຈົ້າ,
ການປະກາດໃຫ້ມະຫາຊົນຮັບຮູ້ ຄວນມີກ່ອນ ນຶ່ງອາທິດ. ໃນເວລາທີ່ ພິທີສິນນີ້
ໄດ້ຖືກນຳມາສເລີມສລອງ, ຄວນມີການຈັດຕຽມໂຕະກ່ອນການນະມັສການ
ຈະເລີ່ມຕົ້ນ ຫຼືເຮັດໃນເວລາ ມີການຖວາຍຊົ່ພ

## ວ່າດ້ວຍ ເຂົ້າຈີ່ທີ່ໃຊ້ໃນພິທີ:

W-3.3610

ເຂົ້າຈີ່ ທີ່ນິຍົມໃຊ້ໃນກຸ່ມຊົນນັ້ນໆ ຄວນນຳມາໃຊ
້ໂດຍບຸກຄົນຜູ້ທີ່ນຳໃນພິທີການນັ້ນ. ການໃຊ້ເຂົ້າຈີ່ກ້ອນດຽວ
ໝາຍເຖິງການເປັນອັນນຶ່ງອັນດຽວກັນໃນພຣະກາຍຂອງພຣະຄຣິສ. ການຮັບເຂົ້າຈີ່
ທີ່ປະຊຸມອາດບິເອົາຈາກເຂົ້າຈີ່ ກ້ອນດຽວກັນ ຫຼືອາດຈັດຕຽມ ເປັນຊິ້ນເລັກຊ
ິ້ນນ້ອຍກ່ອນ ເພື່ອການສະດວກໃນການແຈກຢາຍ.

## ວ່າດ້ວຍ ຈອກ:

W-3.3611

ຈອກ ແລະຂັນ (ໂຖ)ຄວນຈັດຫາມາໃຫ້ຜູ້ນຳພິທີ ເພື່ອການສະເໜີ
ໃນເວລາຮັບສິນ. ຈອກທີ່ໃຊ້ກັນທົ່ວໄປ ສະແດງເຖິງລັກສະນະ ທັມມະຊ
າດຂອງພິທີສິນ ແລະມີຜົນສະທ້ອນເຖິງການສອດຄ້ອງກັນກັບພຣະຄຳພີໃໝ່

ທີ່ກ່າວເຖິງ ການໃຊ້ຈອກດຽວກັນ. ການຖອກນ້ຳອະງຸ່ນ ໃສ່ຈອກ
ປຽບເໝືອນເລືອດຂອງພຣະຄຣິສ ທີ່ຫຼັ່ງໄຫຼ ເພື່ອມະນຸດ. ການແຈກຢາຍນີ້
ອາດອີງໃສ່ຄວາມສະດວກຂອງຄຣິສຕະຈັກທ້ອງຖິ່ນ ອາດໃຊ້ຈອກດຽວ ຫຼືຫຼາຍຈອກ
ກໍໄດ້. ຄະນະປົກຄອງ ຈະເປັນຜູ້ຊີ້ຂາດວ່າ ຈະໃຊ້ນ້ຳອະງຸ່ນແບບໃດ.
ໃນການຕັດສິນນີ້ ຄະນະປົກຄອງຄວນ ອີງໃສ່ພຣະຄຳພີເປັນຫຼັກ, ອີງໃສ່
ປະວັດສາດຂອງຄຣິສຕະຈັກ, ການນິຍົມໃຊ້ໂດຍທົ່ວໆໄປ, ປະເພນີວັທນະທັມ
ທ້ອງຖິ່ນ, ແລະຄວາມຣະວັງກ່ຽວກັບສຸຂພາບ ແລະສະຕິຮັບຜິດຊອບຂອງສະມາຊ
ິກໃນຄຣິສຕະຈັກ. ເວລາໃດກໍຕາມ ຫາກມີການໃຊ້ເຫຼົ້າອະງຸ່ນໃນພິທີສິນ
ນ້ຳອະງຸ່ນທັມມະດາ ກໍຄວນນຳມາໃຊ້ເຊັ່ນກັນ ເພື່ອພວກຄົນທີ່ຕ້ອງການ.

## ວ່າດ້ວຍ ການເຊີນຊວນ:

W-3.3612

ອາຈານ ຫຼືຜູ້ທີ່ນຳໃນພິທີ ຄວນເຊີນຊວນໃຫ້ມະຫາຊົນ
ເຂົ້າຮ່ວມໂຕະຂອງພຣະເຈົ້າ ໂດຍການໃຊ້ຂໍ້ພຣະຄຳ ທີ່ເໝາະສົມ. 7 0ຊ
ຝໃຖຂຂປ8ໃ ພຣະທັມທີ່ໃຊ້ໃນການສອນ (1 ໂກຣິນໂທ 11:23-26
ຫຼືພຣະຄຳທີ່ເວົ້າ ແບບດຽວກັນ) ບໍ່ຄວນນຳໃຊ້ ໃນເວລາຫັກເຂົ້າຈີ່ ຫຼືເອົາມາໃຊ
້ໃນເວລາອະທິຖານຂອບພຣະຄຸນ, ພຣະຄຳດັ່ງກ່າວ ຄວນນຳມາໃຊ້ ໃນເວລາມີການ
ເຊີນຊວນນັ້ນ.

## ວ່າດ້ວຍ ການອະທິຖານ:

W-3.3613



ຜູ້ນຳໃນພິທີ ຕ້ອງເປັນຜູ້ນຳພາຝູງຊົນໃນການອະທິຖານເຊັ່ນກັນ.
ການອະທິຖານຄວນປະກອບດ້ວຍ:

- ຂອບພຣະຄຸນພຣະເຈົ້າຜູ້ຊົງສ້າງ, ຜູ້ຊົງຈັດຕຽມ, ຜູ້ໃຫ້ສັນຍາ
ແລະຜູ້ໃຫ້ພຣະພອນ ຊຶ່ງຄວນທຳດ້ວຍການ ຍ້ອງຍໍສັຣະເສີນ
- ຈາຣຶກເຖິງກິຈການທີ່ພຣະອົງໄດ້ຊ
ົງກະທຳໃນການໄຖ່ມະນຸດໃຫ້ພົ້ນໂດຍທາງພຣະເຢຊູຄຣິສ ,
ການກຳເນີດຂອງພຣະອົງ, ຊີວິດຂອງພຣະອົງ, ການວາຍພຣະຊົນ, ຄືນພຣະຊົນ,
ແລະພຣະສັນຍາທີ່
ພຣະອົງຈະກັບມາ ແລະການຊົງຕັ້ງໃຫ້ມີພິທີສິນນີ້.
- ເອີ້ນຮຽກຫາພຣະວິນຍານບໍຣິສຸດ ເພື່ອຈະນຳພາມະນຸດ
ໃຫ້ມີສ່ວນໃນການຄືນພຣະຊົນຂອງພຣະຄຣິສ
ເພື່ອພວກເຂົາຈະໄດ້
    ຮັບການຊົງລ້ຽງເກື້ອ,
    ມີສ່ວນໃນຄອບຄົວແຫ່ງໄພ່ພົນຂອງພຣະອົງ ແລະການຄືນພຣະຊ
ົນຂອງພຣະອົງ, ແລະ
    ຖືກສົ່ງອອກໄປ ໃຫ້ເປັນສາວົກຜູ້ຮັບໃຊ້ຂອງພຣະອົງ
ປະຕິບັດພາຣະກິດຂອງພຣະອົງ ສັຣເສີນ
ພຣະເຈົ້າ ຕຣີເອກະນຸພາບ
- ໃຊ້ການອະທິຖານທີ່ພຣະເຢຊູຊົງສອນ.

## ວ່າດ້ວຍ ການຫັກເຂົ້າຈີ່:

W-3.3614

ຜູ້ນຳ ຈະຈັບເຂົ້າຈີ່ມາ ແລ້ວກໍຫັກເຂົ້າຈີ່ນັ້ນຢູ່ຕໍ່ໜ້າຝູງຊົນ. ຫາກພຣະຄຳທີ່ຈະໃຊ້ໃນພິທີ ບໍ່ໄດ້ໃຊ້ໃນເວລານີ ການເຊີນຊວນ ຫຼືໃນເວລາອະທິຖານ ກໍຄວນນຳມາໃຊ້ໃນເວລານີ້ 1 ໂກຣິນໂທ 11:23,24.

## ວ່າດ້ວຍ ການສເນີຈອກ:

W-3.3615

ຫຼັງຈາກທອກນ້ຳອະງຸ່ນໃສ່ຈອກແລ້ວ, ຜູ້ນຳຕ້ອງຍົກສເນີແກ່ທີ່ປະຊຸມໃຫ້ທຸກຄົນໄດ້ເຫັນ. ຫາກຂໍ້ພຣະຄຳທີ່ ເອົ້າກ່ຽວກັບ ພິທີນີ້ ບໍ່ໄດ້ເອົ້າກ່ອນ ກໍຄວນນຳມາເອົ້າໃນເວລານີ້ 1ໂກຣິນໂທ 11:25-26

## ວ່າດ້ວຍການແຈກຢາຍເຂົ້າຈີ່ ແລະຈອກ:

W-3.3616

ການແຈກຢາຍນີ້
ຄວນເຮັດໄປຕາມການເໝາະສົມຂອງໂອກາດແລະສະຖານທີ່ໃນເວລາປະຊຸມ.
ການກະທຳ ອາດເຮັດໄດ້ດັ່ງນີ້:

- ນາຫາຊົນ ອາດຍ່າງມາຫາໂຕະເພື່ອຮັບເຂົ້າຈີ່ ແລະນ້ຳອະງຸ່ນ ທີ່ໂຕະຊຶ່ງຜູ້ແຈກຢາຍຈະຢືນລໍຮັບໃຊ້ຢູ່
ທີ່ໂຕະນັ້ນເລີຍ.
- ເຂົ້າຈີ່ ອາດຫັກຢູ່ທີ່ໂຕະນັ້ນ ແລ້ວຈຶ່ງປັນໃສ່ມືຂອງຜູ້ທີ່ມາຮັບຢູ່ໂຕະນັ້ນ,
ນະຫາຊົນອາດປິດເອົາ
ເຂົ້າຈີ່ທີ່ຫັກແລ້ວນັ້ນ ດ້ວຍຕົນເອງ ຫຼືຈັບເຂົ້າຈີ່ແບບອື່ນໆ ທີ່ຖືກຈັດຫາມາຮັບໃຊ້ໃນພິທີ.



- ຕ້ອງໃຊ້ຈອກອັນນຶ່ງຕໍ່ກັບທຸກຄົນທີ່ເຂົ້າຮ່ວມພິທີ, ອາດມີຈອກທົກເຈັດໜ່ອຍ
ແລ້ວແບ່ງປັນກັນ, ຫຼືໃຫ້
ຈອກແຕ່ລະບຸກຄົນ. ຫາກໃຊ້ຈອກດຽວ, ແທນທີ່ຈະດື່ມຈາກຈອກນັ້ນ,
ຜູ້ມາຮ່ວມຄວນໃຊ້ວິທີ ເອົາເຂົ້າຈີ່ ຈຸ່ມລົງນ້ຳໃນຈອກນັ້ນ.
- ເຂົ້າຈີ່ ແລະຈອກ ຄວນຖືກນຳມາຮັບໃຊ້
ໂດຍເຈົ້າໜ້າທີ່ຄຣິສຕະຈັກທີ່ຖືກສະຖາປະນາແລ້ວ, ຫຼືຈາກ
ສະມາຊິກ ຂອງຄຣິສຕະຈັກອື່ນໆທີ່ຖືກເຊີນມາໂດຍຄະນະປົກຄອງ
ຫຼືຖືກອະນຸຍາດຈາກອົງການປົກຄອງ.

## ວ່າດ້ວຍ ການຮັບທານ

W-3.3617

ໃນເວລາທີ່ເຂົ້າຈີ່ ແລະຈອກຖືກນຳມາແຈກຢາຍແລ້ວ,

- ຝູງຊົນອາດຮ້ອງເພັງສັຣເສີນ, ເພັງນະມັສການ, ເພັງແຫ່ງພຣະວິນຍານ,
ຫຼືເພັງອື່ນໆທີ່ເໝາະສົມ.
- ຄະນະນັກຮ້ອງອາດຮ້ອງເພັງອ້ອນວອນ ຫຼືການເສບດົນຕຣີອື່ນໆທີ່ເໝາະສົມ,
- ເຄື່ອງດົນຕຣີທີ່ເໝາະສົມອາດຖືກນຳມາໃຊ້ໃນບາງໂອກາດ.
- ຂໍ້ພຣະຄຳພີທີ່ເໝາະສົມ ອາດນຳມາອ່ານ ຫຼື
- ຝູງຊົນອາດໃຊ້ວິທີ ອະທິຖານແບບງຽບໆ.

## ວ່າດ້ວຍ ການໃຫ້ພອນ ຫຼັງຮັບທານ:

W-3.3618

ຫຼັງຈາກທຸກສິ່ງໄດ້ຖືກແຈກຢາຍ ແລະໄດ້ຮັປທານແລ້ວ
ພ້ອມທັງສິ່ງທີ່ເຫຼືອກໍນຳມາໄວ້ຍັງໂຕະພິທີແລ້ວ, ຜູ້ນຳຈະທຳການ ນຳພາມະຫາຊົນ
ອະທິຖານ, ຂອບພຣະຄຸນພຣະເຈົ້າ ສະຣັບການປະທານພຣະເຢຊູຄຣິສ, ຂໍພຣະຄຸນ
ແລະສັນຕິສຸກຂອງພຣະເຈົ້າ ຢູ່ກັບຜູ້ທີ່ທຳການຖວາຍ ໃນເວລາຮັປທານນັ້ນ,
ແລະອະທິຖານສຳຣັບການຈະຊົງມາປາກົດ ຂອງຣາຊອານາຈັກຂອງພຣະເຈົ້າ. ທີ່ປະຊຸມອາດຮ້ອງບົດເພງສັຣເສີນ, ເພງນະມັສການ, ເພງແຫ່ງພຣະວິນຍານ,
ຫຼືເພງຟື້ນຟູຈິດວິນຍານອື່ນໆ.

## ວ່າດ້ວຍ ການເກັບມ້ຽນອຸປກອນຕ່າງໆ:

W-3.3619

ໃນເວລາທີ່ພິທີໄດ້ຖືກສຳເຣັດແລ້ວ ອຸປກອນທີ່ນຳມາໃຊ້
ຄວນເອົາອອກຈາກໂຕະພິທີ ແລະນຳໄປໃຊ້ ຫຼືເອົາຖິ້ມ
ຕາມການຕົກລົງຂອງຄະນະປົກຄອງ,
ແລະຕ້ອງສອດຄ່ອງກັບຮູບແບບຄວາມເຂົ້າໃຈຂອງຄະນະປະຕິຮູບກ່ຽວກັບ ພິທີສິນ
ແລະຄວາມສຳຄັນແຫ່ງການຖວາຍ.

## ຖືຮັກສາພຣະຄຳ ແລະນຳພຣະຄຳໄປສູ່ໂລກ:

W-3.3700

## ວ່າດ້ວຍ ກິຈການກ່ຽວກັບຂໍ້ຜູກມັດ ແລະການຍອມຮັບ:

W-3.3701

ຂໍ້ຜູກມັດໃນການເປັນຜູ້ຮັບໃຊ້ພຣະເຈົ້າ,
ການປະກາດເລື້ອງຄວາມຕ້ອງການຮັບສິນບັບຕິສມາ, ແລະການຢ້ຳຄືນ ເຖິງ



ຄຳປະຕິຍານໃນເວລາຮັບສິນບັບຕິສມານັ້ນ
ເປັນການຕອບຮັບທີ່ເໝາະສົມແລະຖືກຕ້ອງ ໃນພຣະຄຳຂອງພຣະ ເຈົ້າ
ໃນເວລາຮັບສິນ. ໃນເວລາທີ່ມີພິທີການນັ້ນມາເຖິງທີ່ ສິ້ນສຸດລົງ ກິຈການອື່ນໆ
ກ່ຽວກັບການຍອມ ອຸທິດຕົວ ແລະການຍອມຮັບ ຂອງບຸກຄົນໃດນຶ່ງ. ຝູງຊົນອາດທຳການ ປະຕິຍານສັນຍາ ໃຫ້ຂໍ້ຜູກມັດ ແລະຄອນນີການ ແຕ່ງຕັ້ງ
ເພື່ອບຸກຄົນນັ້ນໆ ຈະໄດ້ ອອກໄປປະກາດ, ນຳຄວາມເມດຕາ, ຄວາມຍຸຕິທັມ,
ການຄືນດີກັນ, ແລະສ້າງສັນຕິ ສູ່ໂລກ.

ພວກທີ່ອອກຈາກຄຣິສຕະຈັກໃດນຶ່ງໄປ ອາດມີເຫດຜົນດັ່ງນີ້:

- ອອກໄປເພື່ອທຳງານຮັບໃຊ້ພຣະເຈົ້າ, ຫຼື
- ຍົກຍ້າຍອອກໄປຢູ່ບ່ອນອື່ນເນື່ອງຈາກເຫດຜົນດ້ານການສຶກສາ, ການຮັບໃຊ້ຊາດ, ອາຊີພການງານ,

ສະພາບຄອບຄົວ ຫຼືສຸຂພາບ ພວກນີ້ ອາດຕ້ອງມີການທຳພິທີ ລ້ຽງສົ່ງ.
ແລະເວລານີ້ ກໍເປັນເວລາ
ເໝາະສົມໃນການຣະນຶກເຖິງຜູ້ທີ່ລ່ວງລັບໄປແລ້ວນັ້ນ.

## ວ່າດ້ວຍ ການເລີກລາ(ຈົບພິທີ)

## ໂດຍພຣະນາມຂອງສາມພຣະພາກພຣະເຈົ້າ: W-3.3702

ພິທີການຕ້ອງສິ້ນສຸດລົງຢ່າງມີຣະບົບຣະບຽບ. ການສິ້ນສຸດນີ້ ອາດປະກອບດ້ວຍ
ການມອບໝາຍໜ້າທີ່ໃນມາຫາ
ຊົນນັ້ນ ອອກໄປສູ່ໂລກ ໃນພຣະນາມແຫ່ງພຣະເຢຊູຄຣິສເຈົ້າ. ການສິ້ນສຸດພິທີ
ຄວນໃຫ້ທີການອວຍພອນ, ໂດຍການໃຊ້ ພຣະນາມແຫ່ງສາມພຣະພາກພຣະເຈົ້າ,
ຫຼືໂດຍການໃຊ້ພຣະຄຳໃນພຣະຄຳພີ ເຊັ່ນການໃຊ້ ການອວຍພອນແບບສາວົກ

ໃນພຣະທັມ 2 ໂກຣິນໂທ 13:14. ການແລກປ່ຽນ ສັນຍາລັກແຫ່ງການ ຄືນດີກັນ ແລະສັນຍາລັກແຫ່ງສັນຕິສຸກ ຄວນນຳມາໃຊ້ ໃນເວລາຈາກກັນໄປ.

## 4. ພິທີການ ໃນການອະທິຖານປະຈຳວັນ:

**W-3.4000**

### ວ່າດ້ວຍ ການອະທິຖານປະຈຳວັນ:

W-3.4001

ການອະທິຖານປະຈຳວັນ ກໍເປັນການນະມັສການແບບທົ່ວໄປເຊັ່ນກັນ ຊຶ່ງໄດ້ມີການກະທຳເປັນປະຈຳພາຍໃນ ອາທິດນຶ່ງ. ພິທີນີ້ ອາດທຳໃນຕອນເຊົ້າ, ຕອນທ່ຽງ, ຄ້າຍແລງ, ຕອນແລງ, ຫຼືຕອນຄ່ຳ ອີງໃສ່ຄວາມຮຽກຮ້ອງຕ້ອງການຂອງຄຣິສຕະຈັກ ແລະຂອງກຸ່ມຊົນ. ການທຳພິທີນີ້ ຄວນປະກອບດ້ວຍການອ່ານ ການຟັງພຣະຄຳ ແລະການອະທິຖານ.

### ວ່າດ້ວຍ ຂໍ້ພຣະຄຳທີ່ນຳມາໃຊ້:

W-3.4002

ບົດຮຽນແຫ່ງພຣະຄຳພີຕ້ອງຖືກນຳມາອ່ານ, ແລະມີເວລາໃນການຄົ້ນຄວ້າພຣະຄຳນັ້ນ ແລະໄຕ່ຕອງໄຄ່ຄວນໃນ ພຣະຄຳນັ້ນ. ການເປີດເຜີຍ ໄຈ້ແຍກພຣະຄຳຈະຕ້ອງໃຫ້ມີຂຶ້ນ.(W-1.3012; W-3.2001) ພຣະຄຳອາດສະແດງອອກ ມາໃນທາງ ດົນຕຣີ, ລຳພື້ນເມືອງ, ຫຼືການຟ້ອນ. ບົດເພັງສັຣເສີນ ແລະເພັງນະມັສການ ເປັນສິ່ງເໝາະສົມໃນການ ນຳມາໃຊ້ເວລາອະທິຖານປະຈຳວັນ ເພາະເປັນສິ່ງນຳໃຫ້ຜູ້ນະມັສການພຣະເຈົ້າ ສາມາດສະແດງພຣະຄຳອອກມາໄດ້ ແລະຍັງເປັນການ ຕອບຮັບຂອງຜູ້ນະມັສການພຣະເຈົ້າຕໍ່ພຣະຄຳອີກດ້ວຍ.(W-2.2000)



### ວ່າດ້ວຍການອະທິຖານ:

W-3.4003

ການອະທິຖານ ອາດໃຊ້ວິທີອອກສຽງ, ຮ້ອງເພັງ, ສະແດງອາການໃດນຶ່ງ, ແລະດ້ວຍວິທີມິດງຽບ. ການອະທິຖານ ປະຈຳວັນ ສາມາດໃຊ້ ເປັນວິທີນຶ່ງວິທີດຽວໃນການອະທິຖານແບບມິດງຽບ ແລະການສະມາທິໄຄ່ຄວນຮື່ນຕອງ ຊຶ່ງໃຊ້ພາຍໃນກຸ່ມຊົນ. ການອະທິຖານທຸກຢ່າງ ຄວນມີການໄຄ່ຄວນເຖິງຄວາມຮຽກຮ້ອງຕ້ອງການຂອງກຸ່ມຊົນ. (W-2.1000)

### ວ່າດ້ວຍຣະບຽບການຕ່າງໆ:

W-3.4004

ຣະບຽບຂອງການອະທິຖານປະຈຳວັນຄວນມີດັ່ງນີ້:

- ສັຣເສີນ,
- ອ່ານ ແລະຟັງພຣະຄຳ,
- ຕອບຮັບພຣະຄຳດ້ວຍການສະມາທິ ໄຄ່ຄວນຮື່ນຕອງ, ອະທິຖານ, ແລະຮ້ອງເພັງ,
- ມຸ້ງໄປຂ້າງໜ້າດ້ວຍພຣະນາມແຫ່ງພຣະມະຫາເຢຊູຄຣິສເຈົ້າ.

### ວ່າດ້ວຍ ການນຳພາ:

W-3.4005

ພິທີການ ຄວນຖືກອະນຸມັດໂດຍຄະນະປົກຄອງ ແລະຕ້ອງມີການຂໍຄຳປຶກສາຫາລືກັບອາຈານ ຫຼືອາດຄວນຖືກ ນຳພາໂດຍ ເຈົ້າໜ້າທີ່ ຫຼືສະມາຊິກໃນໂບດອື່ນ ທີ່ເໝາະສົມ.

## 5. ຕາຕະລາງທົ່ວໆໄປອື່ນໆ ກ່ຽວກັບການນະມັສການ

**W-3.5000**

### ກ. ການນະມັສການວັນອາທິດ

W-3.5100

### ວ່າດ້ວຍ ການນະມັສການ ໃນວັນອາທິດ:

W-3.5101

ຈຸດຕົ້ນຕໍໃນການນະມັສການວັນອາທິດ ເພາະເປັນວັນຂອງພຣະເຈົ້າ ແລະຕ້ອງມີການວາງຕາຕະລາງເວລາໃຫ້ ແທດເໝາະ ເພື່ອທຸກຄົນຈະສາມາດປະກອບສ່ວນໄດ້. ການນະມັສການທົ່ວໄປ ໃນວັນອາທິດອື່ນໆອາດເຮັດໃນ ເວລາເຊົ້າ, ສວາຍ, ຫຼືແລງກໍໄດ້. ເວລາ ແລະແບບວິທີການເຮັດຄວນຂຶ້ນກັບການຕົກລົງຂອງຄະນະປົກຄອງ ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການຂອງມະຫາຊົນ. ໃນແຜນການນະມັສການ ຄວນເອົາໃຈໃສ່ ໃຫ້ການນະ ມັສການນັ້ນມີຄວາມໝາຍໃນວັນຂອງພຣະເຈົ້າ.

### ວ່າດ້ວຍ ອຸປກອນທີ່ນຳມາໃຊ້:

W-3.5102

ພິທີການ ຄວນມີການອ່ານ ແລະຟັງພຣະຄຳ, ມີການອະທິຖານ, ແລະໃຫ້ໂອກາດແກ່ການຖວາຍຕົວຂອງບຸກຄົນ ແລະສຳຣັບ ການພົວພັນ ຊຶ່ງກັນແລະກັນໃນຄຣິສຕະຈັກ ແລະໃນໂລກ.(W-2.1000-2.2000; W-2.5000-2.6000) ອາດມີສະຖານທີ່ສະເພາະ ໃນການອະທິຖານ, ການຮ້ອງເພັງ, ການສອນພຣະຄຳພີ, ແລະການອະທິບາຍພຣະຄຳ ໂດຍຜ່ານ ການສິລປະຕ່າງໆ. ພິທີການດັ່ງກ່າວອາດຄວນມີ ການເທສນາທັມ, ຫຼືແບບວິທີການປະກາດອື່ນໆ ຊຶ່ງຖືກ



ອະນຸມັດໂດຍອາຈານ ແລະຄະນະປົກຄອງ.(W-1.4000; W-2.2000; W-3.3400). ໃນໂອກາດດັ່ງກ່າວ ພິທີສິນອາດ ສາມາດ ນຳມາໃຊ້ໄດ້.

### ວ່າດ້ວຍ ຣະບຽບການ:

W-3.5103

ຣະບຽບການຂອງແຕ່ລະພິທີການ ຄວນສະແດງໃຫ້ເຫັນເຖິງເນື້ອໃນໃຈຄວາມຂອງການນະມັສການພຣະເຈົ້າ ດັ່ງທີ່ປຶ້ມເຫຼັ້ມນີ້ ໄດ້ບັນທຶກໄວ້ ເພື່ອໃຫ້ສອດຄ່ອງກັບກະລາໂອກາດຕ່າງໆ ໃນການນະມັສການພຣະເຈົ້າ.

### ຂ. ໂຮງຮຽນຂອງຄຣິສຕະຈັກ:

W-3.5200

### ວ່າດ້ວຍໂຮງຮຽນຂອງຄຣິສຕະຈັກ:

W-3.5201

ໂຮງຮຽນຄຣິສຕະຈັກ ອາດແບ່ງເປັນຫຼາຍຫ້ອງໃນເວລານະມັສການ ຄວນຕ້ອງມີໂອກາດໃນການ ອະທິຖານ, ຮ້ອງເພັງ, ແລະອ່ານ ແລະຟັງພຣະຄຳຂອງພຣະເຈົ້າ. ອາດມີບາງໂອກາດທີ່ຕ້ອງມີການຖວາຍ ທີ່ພົວພັນກັບການ ຖວາຍສ່ວນຕົວ ແລະການພົວພັນຕໍ່ໂລກ.

### ວ່າດ້ວຍ ອຸປກອນ ແລະຣະບຽບການ:

W-3.5202

ຄວນໃຫ້ໂອກາດແກ່ທຸກຫ້ອງຮຽນ ໃຫ້ມີການນະມັສການ. ການນະມັສການນັ້ນ ອາດບໍ່ຕ້ອງພິຖີພິຖັນ ຫຼືລະອຽດ ລະອໍຄືການ ນະມັສການຢູ່ໂບດ ໃຫຍ່ນັ້ນ.

ແຕ່ແນວໃດກໍຕາມ ການນະມັສການກໍຄວນປະກອບດ້ວຍ ການອະທິຖານ ແລະການຮ້ອງເພັງ ທີ່ກ່ຽວພັນກັບພຣະຄໍາພີ. ອາດປະກອບດ້ວຍ ກິຈການ ແລະການຖວາຍ ພ້ອມດ້ວຍການໃຫ້ ຄໍາສັນຍາ ຊຶ່ງອາດນໍາໄປສູ່:

- ການຮ້ອງຂໍບັບຕິສມາຂອງບຸກຄົນ
- ການຮ່ວມພິທີສິນມະຫາສະໜິດ
- ຢໍ້າຄືນເຖິງຄໍາສັນຍາ ທີ່ເວົ້າໃນເວລາຮັບບັບຕິສມາ.

ການນະມັສການ ໃນໂຮງຮຽນຄຣິສຈັກ ບໍ່ສາມາດຖືເປັນການທົດແທນໃຫ້ແກ່ການນະມັສການໃນໂບດໃຫຍ່ໄດ້ (W-3.1004; W-3.3201; W-6.2001)

## ຄ. ການໂຮມກັນເພື່ອການອະທິຖານ:

W-3.5300

### ວ່າດ້ວຍ ການຊຸມນຸມອະທິຖານ:

W-3.5301

ໃນຊີວິດຂອງຄຣິສຕະຈັກໃດນຶ່ງ ຄວນມີການໂຮມຊຸມກັນເພື່ອອະທິຖານ. ຄະນະປົກຄອງຄວນເປັນຜູ້ຮັບຜິດຊອບ ຕໍ່ການ ອະນຸມັດສິ່ງນີ້. ຕາຕະຣາງທົ່ວໆໄປໃນການອະທິຖານເພື່ອເປີດກວ້າງແກ່ຄົນມາຮ່ວມ ຄວນເຮັດໃຫ້ມີຫຼາຍແບບ, ຊຶ່ງປະກອບດ້ວຍ ພິທີການຂອງຕອນແລງ ອັນນຶ່ງໃນກາງອາທິດ, ໃນຕອນເຊົ້າ, ຕອນທ່ຽງ, ຫຼືຕອນບ່າຍ, ແລະການອະທິຖານ ໃນຄາບອາຫານເຊົ້າ ແລະອາຫານທ່ຽງ. ອາດມີການໂຮມກັນ ຂອງກຸ່ມນ້ອຍໆຢ່າງສມໍ່າສເມີ, ຈັດເປັນກຸ່ມອະທິຖານ, ກຸ່ມນະມັສການ, ແລະກຸ່ມແຫ່ງພຣະສັນຍາ. ນື້ພິເສດຂອງກຸ່ມຊົນໃດນຶ່ງ, ອັນຊາດ, ແລະອັນແຫ່ງຄຣິສຕະຈັກສາກົນ ອາດເປັນສິ່ງທີ່ນໍາຄົນໃຫ້ມາຮ່ວມກັນ ໃນພິທີການອະທິຖານນີ້.



### ວ່າດ້ວຍ ອຸປກອນ:

W-3.5302

ພິທີການນີ້ ພຣະຄໍາຕ້ອງນໍາມາອ່ານ ແລະຟັງ, ແລະອາດນໍາມາປະກາດ, ສອນ, ແລະໂອ້ລົມ, ຫຼືອາດມີການ ສະແດງອອກ ໂດຍທາງດົນຕຣີ ແລະການສິລປະ. ການອະທິຖານຄວນມີການອອກສຽງ, ຮ້ອງເພັງ, ການກະທໍາ ໃດນຶ່ງ, ຫຼືໂດຍວິທີມິດງຽບ. ຄວນມີໂອກາດໃນການ ຮັບຮູ້ ແລະຖວາຍ ແລະການໃຫ້ສັນຍາໃນການດໍາຣົງຊີວິດ ຢ່າງພຣະຄຣິສ. ການເປັນຫ່ວງເປັນໃຍ ຊ
ຶ່ງກັນແລະກັນ ອາດສະແດງອອກໃນຄໍາເວົ້າ ແລະການຕ້ອນຮັບ, ການຄືນດີກັນ, ແລະຮັບໃຊ້ຊຶ່ງກັນແລະກັນ. ການເປັນຫ່ວງ ຕໍ່ໂລກ ສະແດງອອກໃນການອະທິຖານ ແລະການຮັບໃຊ້ ພຣະເຈົ້າ ໃນຄວາມກະຣຸນາ, ຄວາມຍຸຕິທັມ, ການສ້າງຄວາມສງົບສຸກສັນຕິ ແລະໂດຍການເປັນພະຍານ.

## ງ. ພິທີ ກ່ຽວກັບການປິ່ນປົວສຸຂພາບ:

W-3.5400

### ວ່າດ້ວຍ ພິທີການປິ່ນປົວພະຍາດ:

W-3.5401

ການປິ່ນປົວ ເປັນພາກສ່ວນນຶ່ງຂອງການທໍາງານຂອງພຣະຄຣິສ ຊ
ຶ່ງຮຽກຮ້ອງໃຫ້ຄຣິສຕະຈັກຕ້ອງມີການສືບຕໍ່ ໃນການ ສະແດງຄວາມເປັນຫ່ວງຕໍ່ສຸຂພາບຂອງຄົນ. ໂດຍຜ່ານພິທີການກ່ຽວກັບສຸຂພາບ, ຄຣິສຕະຈັກໄດ້ທໍາ ການສະແດງອອກ ດ້ວຍການຮັບໃຊ້ ໃນທາງປິ່ນປົວຊຸມຊົນ

### ວ່າດ້ວຍ ການອະນຸມັດ:

W-3.5402

ພິທີການກ່ຽວກັບການປິ່ນປົວນີ້ ຄວນໄດ້ຮັບອະນຸມັດຈາກຄະນະປົກຄອງ
ແລະໂດຍການການຊີ້ແນະຈາກອາຈານ. ພິທີການດັ່ງກ່າວ ອາດໃຊ
້ໃນເວລານະມັສການທົ່ວໄປ, ເປັນບາງໂອກາດ,
ຫຼືເປັນພາກສ່ວນນຶ່ງຂອງການນະມັສການ ໃນວັນຂອງພຣະເຈົ້າ. (W-3.3506)
ພິທີການນີ້ ຄວນເປີດກວ້າງແກ່ທຸກຄົນ
ບໍ່ຄວນສະເພາະເຈາະຈົງໃສ່ແຕ່ພວກເຈັບທີ່ຕ້ອງການປົວເທົ່ານັ້ນ ຫຼືສະເພາະພວກທີ່
ຕົນເອງເປັນຫ່ວງ ເທົ່ານັ້ນ. ພິທີການ ຄວນເຮັດໃນທີ່ ຊ
ຶ່ງທຸກຄົນທີ່ຢາກປິ່ນປົວສາມາດຮ່ວມໄດ້.

## ວ່າດ້ວຍ ແບບວິທີໃນການອະທິຖານ:

W-3.5403

ອຸປກອນທີ່ນຳມາໃຊ້ໃນພິທີນີ້ ກໍຄືການອະທິຖານ ໃນຄວາມເຊື່ອຕໍ່ພຣະເຈົ້າ.
ຂອບຄຸນພຣະເຈົ້າໃນພຣະສັນຍາ ຂອງພຣະອົງ ກ່ຽວກັບສຸຂພາບ ການຍື່ນມືກ່ຽວຂ້ອງ
ແລະການອ້ອນວອນຂໍອາດປະກອບເຂົ້ານຳດ້ວຍ. ຄວນມີການ
ອະທິຖານແບບມິດງຽບ ພ້ອມກັບການອະທິຖານແບບອອກສຽງ
ແລະແບບການຮ້ອງເພັງ. ການອະທິຖານຄວນມີການ ວາງມື
ຫຼືເຈີມດ້ວຍນ້ຳມັນທອນ ອາດນຳມາໃຊ້. ການນຳພາ ຄວນແມ່ນອາຈານ ພ້ອມດ້ວຍ
ຝຸງຄົນທີ່ມີຄວາມເຊື່ອ ທັງຫຼາຍ.

## ວ່າດ້ວຍ ພຣະຄຳ ແລະພິທີສິນ:

W-3.5403

ການອະທິຖານ ຄວນເປັນສິ່ງຕອບຮັບຕາມພຣະຄຳທີ່ໄດ້ອ່ານ
ແລະປະກາດອອກມານັ້ນ. ອາດມີການເໜັ້ນໜັກ ໃນເວລາປະກາດ



ພຣະຄຳທີ່ເວົ້າກ່ຽກັບການປິ່ນປົວໂດຍທາງພຣະຄຣິສ.
ການສະໜິດກັບພຣະສັນຍາຂອງພຣະເຈົ້າ ໂດຍພິທີ ສິນມະຫາສະໜິດອາດນຳມາໃຊ້,
ແລະຄວນຕິດຕາມດ້ວຍການອະທິຖານ ແລະວາງມື. ອາດມີໂອກາດໃນ ການຖວາຍ
ແລະໂອກາດໃນການຄືນດີ ແລະການຟື້ນຟູຄຳສັນຍາ ໃນການຮັບໃຊ
້ພຣະຄຣິສໃນໂລກ.

## ວ່າດ້ວຍ ທີ່ມາແຫ່ງການປິ່ນປົວ:

W-3.5404

ເວລາໃດພິທີການປິ່ນປົວນີ້ ຫາກມີການເຈີມດ້ວຍນ້ຳມັນ ຫຼືມີການວາງມື,
ການອະທິຖານທີ່ໃຊ້ ຄວນມີການ ຣະມັດຣະວັງ ໃຫ້ມີຣະບຽບ
ເພື່ອຫຼີກເວັ້ນຄວາມເຂົ້າໃຈຜິດ. ການປິ່ນປົວຕ້ອງໃຫ້ເຂົ້າໃຈວ່າ
ບໍ່ແມ່ນການເຮັດໃຫ້ ບໍຣິສຸດ, ເຮັດໃຫ້ ເກີນມະນຸດ, ຫຼືມີຄວາມຊຳນິຊຳນານ
ຂອງຜູ້ທີ່ອະທິຖານໃຫ້ນັ້ນ, ຫຼືໂດຍຄວາມເຊື່ອຂອງຜູ້ທີ່ ຕ້ອງການປິ່ນປົວ,
ແຕ່ເປັນຂອງ ປະທານທີ່ມາແຕ່ພຣະເຈົ້າ ໂດຍຜ່ານຣິດເດດຂອງພຣະວິຍານບໍຣິສຸດ.

## ຈ. ພິທີ ໃນການປະກາດເຜີຍແຜ່

W-3.5500

## ວ່າດ້ວຍ ການເຊີນຊວນ ໃຫ້ຮັບໃຊ້ພຣະເຈົ້າ:

W-3.5501

ການເຊີນຊວນໃຫ້ຮັບເອົາພຣະເຢຊູຄຣິສ ຄວນໃຫ້ມີ ແລະຢ່າງເປັນປະຈຳ
ໃນການນະມັສການພຣະເຈົ້າໃນວັນ ອັນສັກສິດຂອງພຣະອົງ.
ເປັນການສົມຄວນທີ່ຄະນະປົກຄອງ ຄວນອະນຸມັດໃຫ້ມີພິທີການນັ້ນ

ໃນຈຸດປະສົງແຫ່ງ ການເຜີຍແຜ່, ແລະໃນການຈັດຕັ້ງການນະມັສການ
ໃນຣະດູການນະມັສການໂດຍທົ່ວໆໄປ.

## ວ່າດ້ວຍ ຣະບຽບການ:

W-3.5502

ຈຸດກາງຂອງອຸປກອນໃນພິທີການນະມັສການ ເພື່ອການປະກາດເຜີຍແຜ່
ຄືການປະກາດຕໍ່ໂລກ, ໂດຍເໜັ້ນໜັກ ເຖິງການ ໄຖ່ໃຫ້ພົ້ນ ໂດຍ
ພຣະຄຸນຂອງພຣະຄຣິສ, ການຊົງກູ້ເອົາຊີວິດມະນຸດຂອງພຣະເຢຊູຄຣິສ,
ແລະການເຊີນ
ຊວນຂອງພຣະອົງ ໃຫ້ເປັນຜູ້ຮັບໃຊ້ ດ້ວຍຣິດເດດແຫ່ງ ພຣະວິນຍານບໍຣິສຸດ.
ການປະກາດນີ້ ຕ້ອງປະກອບດ້ວຍ:

- ການອ່ານ ແລະຟັງພຣະຄຳ
- ເທສນາທັມ ແລະເປັນພະຍານ
- ຮ້ອງເພັງ, ຂັບຕາມບັນຍັດ, ແລະສາຣະພາບ

ຈຸດກາງໃນການປະກາດນີ້ ຄວນອ້ອນຮອບດ້ວຍ:

- ການກະກຽມໃນພິທີການ
- ໃນເວລາທຳພິທີ ຄວນມີການສັຣເສີນ, ຂອບພຣະຄຸນ, ສາຣະພາບ, ການໄກ່ເກັ່ຽ, ແລະການອ້ອນວອນ,



- ຫຼັງພິທີ ຄວນມີການສະໜັບສະໜູນພວກທີ່ເປັນສາວົກໃໝ່ໃນຄຳສັນຍາຂອງເຂົາ ແລະການມີຊີວິດຮ່ວມ
ກັບຄຣິສຕະຈັກ.

## ວ່າດ້ວຍ ຄຳຜູກມັດສັນຍາ:

W-3.5503

ພິທີການ ຄວນມີການເຊີນຊວນໃຫ້ມີການໃຫ້ສັດສັນຍາຢ່າງຈະແຈ້ງ
ຫຼືການຟື້ນຟູຄຳສັນຍາທີ່ໃຫ້ພຣະຄຣິສ ເປັນພຣະຜູ້ຊ່ວຍ ໃຫ້ລອດນັ້ນ ແລະຊ
ີວິດທີ່ຕ້ອງພົວພັນກັບກຸ່ມຊົນທີ່ເປັນຮ່າງກາຍຂອງພຣະຄຣິສ. ຂໍ້ຜູກມັດດັ່ງກ່າວ
ໄດ້ກາຍເປັນສັນຍາລັກ ແຫ່ງພຣະຄຸນ ແລະກິຈກຳ ທີ່ຄວນກະທຳໃນ:

- ການພົວພັນຊຶ່ງກັນແລະກັນແບບໃໝ່
- ການປະທານ ໃນການຮັບໃຊ້ພຣະເຈົ້າແບບໃໝ່
- ການພົວພັນ ໃນການໄຖ່ໃຫ້ພົ້ນຂອງພຣະເຈົ້າ

ແລະກິຈກຳຂອງພຣະຄຣິສໃນໂລກ.

## ວ່າດ້ວຍການຕອບຮັບ ໃນຂໍ້ຜູກມັດສັນຍາອັນໃໝ່:

W-3.5504

ຜູ້ຕອບຮັບການເຊີນຊວນ
ຄວນມີການໃຫ້ຄຳແນະນຳເພື່ອສະໜັບສະໜູນໃຫ້ເຂົາປະຕິບັດຕາມຄຳໝັ້ນ
ສັນຍາຂອງເຂົາ ທີ່ມີຕໍ່ພຣະເຈົ້າ ແລະເພື່ອປະກອບສ່ວນໃນຊີວິດຮັບໃຊ
້ພຣະເຈົ້າຂອງເຂົາ. ຜູ້ທີ່ໃຫ້ຄຳໝັ້ນສັນຍາ ຄັ້ງທຳອິດ ຄວນປະກາດອອກ
ຖ່າມກາງມະຫາຊົນໃນເວລາ ມີການນະມັສການໃນວັນແຫ່ງພຣະເຈົ້າ

ພ້ອມດຽວກັນກັບ ພວກທີ່ຕຽມຮັບສິນບັບຕິສມານັ້ນ. ພວກທີ່ຟື້ນຟູຄຳໝັ້ນສັນຍາຄືນໃໝ່ນັ້ນຄວນໃຫ້ ມີການຮັບຮູ້ການສາຣະພາບ ຂອງເຂົາຈາກມະຫາຊົນໃນອັນ ຂອງພຣະເຈົ້າ. (W-3.3502; W-34.200)

## ສ. ຣາຍການ ແລະວຽກງານການອະທິບາຍ

W-3.5600

### ວ່າດ້ວຍ ພິທີການທີ່ເໜັ້ນໜັກໃສ່ວຽກງານ

W-3.5601

ການອະທິບາຍຣາຍການ ແລະວຽກງານຂອງຄຣິສຕະຈັກ ຈະມີຂຶ້ນໃນເວລານະມັສການ ໃນເປົ້າໝາຍທີ່ໃຫ້ເໝາະສົມ ກັບຣະດູການ ໃນການນະມັສການປະຈຳປີ.(W-3.2003) ໃນພິທີການ ຄະນະປົກຄອງ ຄວນອະນຸມັດໃນການມີການ ນະມັສການພິເສດ. ແນວໃດກໍຕາມ ຈຸດກາງໃນການ ຄວນຢ້ຳເຖິງ ຄືຕ້ອງໃຫ້ມີການພົວພັນກັບໂລກ ແລະຊຶ່ງກັນ ແລະກັນ. (W-2.6000)

### ວ່າດ້ວຍອຸປກອນ:

W-3.5602

ພຣະຄຳຄວນນຳມາອ່ານ ແລະຟັງ. ການອະທິຖານເພື່ອຂອບພຣະຄຸນ, ອ້ອນວອນຂໍ, ເພື່ອຄົນອື່ນ ຄວນໃຫ້ມີຂຶ້ນ ເພື່ອການອະທິບາຍ ວຽກງານການຮັບໃຊ້ ນັ້ນ. ໂອກາດໃນການຖວາຍຊັພສິນ ແລະຄຳສັນຍາແຫ່ງຊີວິດ ຄວນເອົາມາ ໃຊ້ ດ້ວຍ.



## ຊ. ກຸ່ມພິເສດ ໃນຄຣິສຕະຈັກໃດນຶ່ງ:

W-3.5700

### ວ່າດ້ວຍ ກຸ່ມພິເສດ:

W-3.5701

ໃນແຕ່ລະຄຣິສຕະຈັກ ຕ້ອງມີກຸ່ມພິເສດ ໂດຍອີງໃສ່ອາຍຸຄົນ, ເພດ, ແລະຄວາມສົນໃຈ ທີ່ມີການປະຊຸມກັນ ເປັນປະຈຳ. ໃນນະມັສການ ອາດມີຂຶ້ນໃນທຸກຄັ້ງທີ່ມີການປະຊຸມ ແລະຄວນມີຜົນສະທ້ອນຈະວິທີການສຳຄັນ ທີ່ບັນທຶກໄວ້ໃນປຶ້ມເຫຼັ້ມນີ້. ອຸປກອນໃນການນະມັສການ ທຸກຢ່າງທີ່ສເນີໃນພາກທີສອງ ຄວນນຳມາໃຊ້ໃຫ້ ເໝາະສົມ, ນອກຈາກການທຳພິທີສິນ ຊຶ່ງຕ້ອງຖືກອະນຸມັດຈາກຄະນະປົກຄອງ ແລະໃຊ້ ໃນການນະມັສການໃນ ໂບດໃຫຍ່.

## **6. ການໂຮມຊຸມນຸມ ແບບພິເສດ:**

**W-3.6000**

### ກ. ອົງການປົກຄອງ:

W-3.6100

### ວ່າດ້ວຍ ການນະມັສການພາຍໃນອົງການປົກຄອງ:

W-3.6101

ອົງການປົກຄອງຄວນມີການນະມັສການຢ່າງເປັນປະຈຳ ແລະຄວນເຮັດຕາມຈຸດໃຫຍ່ໃຈຄວາມຂອງປຶ້ມເຫຼັ້ມນີ້. ອົງການ ປົກຄອງແຕ່ລະບ່ອນ ຄວນສ້າງຕັ້ງກຸ່ມທີ່ຮັບຜິດຊອບແລະເບິ່ງແຍງການນະມັສການນີ້. ການນະມັສການ ອາດມີການ ຮັບເອົາການ ພິຈະຣະນາວຽກງານ ແລະໃນເວລາມີ ການປະຊຸມຕ່າງໆ.

## ວ່າດ້ວຍ ພຣະຄໍາ ແລະພິທີສິນ:

W-3.6102

ອົງການປົກຄອງ ທີ່ຢູ່ເໜືອຄະນະປົກຄອງ, ການນະມັສການຄວນມີການອ່ານ, ການປະກາດ, ແລະການຮັບຟັງ ພຣະຄໍາ, ແລະມີການຮັບສິນມະຫາສະໜິດເປັນປະຈໍາ.(G-9.0301)

## ວ່າດ້ວຍ ການອະທິຖານ:

W-3.6103

ການປະຊຸມທຸກຄັ້ງຂອງອົງການປົກຄອງ ຄວນເປີດແລະປິດດ້ວຍການອະທິຖານ (G-9.0301). ຄວນໃຫ້ມີໂອກາດ ອະທິຖານໃນເວລາມີການພິຈາຣະນາບັນຫາໃດນຶ່ງ. ການອະທິຖານຄວນປະກອບດ້ວຍ ການຂອບພຣະຄຸນ ແລະສັຣເສີນ, ການສາຣະພາບ, ການອ້ອນວອນ, ແລະການຍື່ນມືຊ່ວຍຄົນອື່ນ ໃນການທີ່ຈະເຮັດໃຫ້ອົງການປົກຄອງ ກ້າວໜ້າຕໍ່ໄປ.

## ຂ. ການພັກຟື້ນ, ການຊຸມນຸມໃນແຄ້ມ, ກອງປະຊຸມ, ແລະການໂຮມຊຸມນຸມພິເສດອື່ນໆ W-3.6200

## ວ່າດ້ວຍການນະມັສການ ໃນເວລາພັກຟື້ນ ແລະ ໃນກອງປະຊຸມໃຫຍ່: W-3.6201

ອົງການປົກຄອງ ມີໜ້າທີ່ຮັບຜິດຊອບໃນການ ໃຫ້ອະນຸມັດໃຫ້ມີການນະມັສການພິເສດ ຢູ່ພາຍໃຕ້ອໍານາດ ການຕັດສິນ ຂອງຕົນ.



ການນະມັສການ ຕ້ອງເປັນພາກສ່ວນນຶ່ງຂອງການພັກຟື້ນ, ການຊຸມນຸມທີ່ແຄ້ມ, ແລະກອງ ປະຊຸມໃຫຍ່. ໃນພິທີການນະມັສການນັ້ນ ຄວນເຮັດຕາມ ຈຸດສໍາຄັນຕົ້ນຕໍຂອງປຶ້ມເຫຼັ້ມນີ້ ແລະຕາມການແບບວິທີ ທີ່ສ້າງຂຶ້ນມາໂດຍອົງການ ປົກຄອງທີ່ກ່ຽວຂ້ອງ.

## ວ່າດ້ວຍ ຣະບຽບການ:

W-3.6202

ຄຸນສົມບັດ ແລະເປົ້າໝາຍ ໃນການນະມັສການ ອາດຂຶ້ນກັບຮູບແບບຂອງການໂຮມຊຸມນຸມກັນ, ຈຸດປະສົງຂອງການຊຸມນຸມ, ພວກຄົນທີ່ເຂົ້າ ມາຮ່ວມ, ສະຖານທີ່, ຣະດູການ, ແລະຕາມຈັງຫວະ ແລະຣະບຽບການຂອງກອງປະຊຸມນັ້ນໆ. ການນະມັສການ ອາດໃຊ້ແບບວິທີ ອະທິຖານປະຈໍາວັນ(W-3.4000), ເຮັດຕາມແບບເຮັດໃນວັນຂອງພຣະເຈົ້າ (W-3.3000) . ຫຼືເຮັດຕາມແບບອື່ນໆ ທີ່ບັນທຶກໃນປຶ້ມນີ້.(W-3.5000)

## ວ່າດ້ວຍອຸປກອນ:

W-3.6203

ອຸປກອນໃນການນະມັສການທີ່ເໝາະສົມກັບທຸກການນະມັສການ ກໍຄືການອະທິຖານ, ອ່ານ ແລະຟັງພຣະຄໍາ, ການຖວາຍ, ແລະການພົວພັນຊຶ່ງກັນແລະກັນ ແລະຕໍ່ໂລກ.(W-2.1000; W-2.2000; W-2.5000; W-2.6000) ອຸປກອນແບບຕ່າງກັນ ທີ່ນໍາມາໃຊ້ໃນການນະມັສການ ຄວນເໜັ້ນໜັກຮູບການທີ່ແຕກຕ່າງການນັ້ນ.

- ການພັກຟື້ນ ສໍາຣັບການອະທິຖານແບບງຽບ ຫຼືການແຕ່ງງານ

- ການໄປແຄ້ນໃນທັມະຊາດ ຫຼືການຮັບໃຊ້ພຣະເຈົ້າແບບເດີນທາງຈາກບ່ອນນຶ່ງໄປຫາບ່ອນນຶ່ງ
- ຜູ້ນຳຊາວໜຸ່ມ ຫຼືກອງປະຊຸມການດົນຕຣີ.

ແນ່ນອນ ໃນແຕ່ລະກໍຣະນີ, ຕ້ອງໃຫ້ມີການສະແດງພຣະທັມຂອງພຣະເຈົ້າ ແລະການອະທິຖານທີ່ ເໝາະສົມຕ້ອງນຳມາໃຊ້. (W-2.1000; W-2.6000)

## ວ່າດ້ວຍ ສິນມະຫາສະໜິດ ໃນເວລາໂຮມຊຸມນຸມພິເສດ:

W-3.6204

ພິທີສິນມະຫາສະໜິດ ເປັນສິ່ງເໝາະສົມສຳຣັບທຸກການໂຮມຊຸມນຸມກັນແບບພິເສດ ແຕ່ການທຳນັ້ນຕ້ອງມີດັ່ງນີ້:

- ຖືກອະນຸມັດໂດຍອີງການປົກຄອງ ທີ່ຮັບຜິດຊອບກອງປະຊຸມນັ້ນ
- ນຳໂດຍອາຈານ ແລະເຈົ້າໜ້າທີ່ອື່ນໆຂອງຄຣິສຕະຈັກຮ່ວມຢູ່ດ້ວຍ
- ໃນເວລາມີການນະມັສການທີ່ປະກອບດ້ວຍການເທສນາທັມ ຫຼືຮູບແບບການປະກາດອື່ນໆ ຊຶ່ງອະນຸມັດ ໂດຍອີງການປົກຄອງນັ້ນໆ
- ໃນເວລາທີ່ສິ່ງດັ່ງກ່າວສາມາດຮັບໃຊ້ພວກຄົນທີ່ມາຮ່ວມ ແລະຮັບໃຊ້ມະຫາຊົນທີ່ມີຄວາມເຊື່ອຈຳນວນ ຫຼາຍບໍ່ແມ່ນຈຳນວນນ້ອຍ.

ຄຣິສຕະຈັກ ຄວນເປັນພະຍານທີ່ແຂງແຮງ ໃນການເປັນອັນນຶ່ງອັນດຽວກັນໃນພຣະກາຍຂອງພຣະຄຣິສ ໃນເວລາທີ່ມີການໂຮມຊຸມນຸມກັບ ຄຣິສຕະຈັກອື່ນໆ ຫຼືກັບກຸ່ມຊົນຊາດຊົນເຜົ່າທີ່ຕ່າງກັນ ຫຼືກັບວັທນະທັມທີ່ຕ່າງກັນ, ຫຼືໃນເວລາທີ່ມີການໂຮມຊຸມນຸມກັນຂອງບັນດາສະຫະພັນ ທີ່ຮັບໃຊ້ພຣະເຈົ້າເພື່ອຮັບພິທີສິນມະຫາສະໜິດ. (W-2.4006)



## ວ່າດ້ວຍ ພິທີສິນມະຫາສະໜິດທີ່ເປັນອັນນຶ່ງອັນດຽວກັນ:

W-3.6205

ອາຈານ ຕ້ອງເປັນຜູ້ເຊີນຊວນ ໃຫ້ມີການສເລີມສລອງ ຫຼືປະກອບສ່ວນໃນພິທີສິນມະຫາສະໜິດ ໃນແບບວິທີທີ່ທຸກບ່ອນ ໄດ້ທຳກັນ ເພື່ອວ່າຈະໄດ້ຂະຫຍາຍການປະກອບສ່ວນຂອງຜູ້ມາຮ່ວມອອກໄປ ແລະເພື່ອບໍ່ເປັນການຂັດແຍ່ງກັບແນວຄິດ ແລະຄວາມເຂົ້າໃຈ ໃນພິທີສິນມະຫາສະໜິດ ຂອງກຸ່ມປະຕິຮູບ.

# ພາກທີສີ່ Chapter IV

# ຣະບຽບການນະມັສການ ໃນກໍຣະນີ ພິເສດ

# Ordering Worship for Special Purposes W-4.0000

## 1. ເນື້ອງໃນໂອກາດພິເສດ ແລະພິທີການປະກາດຮັບຮູ້

**W-4.1000**

## ວ່າດ້ວຍ ພິທີການ ໃນໂອກາດພິເສດ ແລະຈຸດປະສົງພິເສດ:

W-4.1001

ມີໂອກາດພິເສດ ຫຼາຍຢ່າງ ແລະການປ່ຽນແປງແຫ່ງຊີວິດຂອງຄຣິສຕະຈັກ ແລະຊີວິດຂອງສະມາຊິກ ຊຶ່ງເປັນການ ສົມຄວນ ແກ່ການຈັດທຳພິທີຣະນຶກຮັບຮູ້ຄຸນງາມຄວາມດີນັ້ນໆ ດ້ວຍການນະມັສການ.
ສ່ວນຫຼາຍພິທີການດັ່ງກ່າວ ອາດກະທຳໃນ ຕອນໃດຕອນນຶ່ງ ໃນເວລາສເລີມສລອງວັນຂອງພຣະເຈົ້ານັ້ນ. ນອກນັ້ນ ພິທີການນີ້ ອາດນຳມາເຮັດ ໃນເວລານະມັສການໃນວັນຂອງພຣະເຈົ້າ ຫຼືໃນຣາຍການທັມະດາທົ່ວໄປ

ຫຼືໃນພິທີການທີ່ຖືກຈັດຂຶ້ນພິເສດ ເນື່ອງໃນໂອກາດໃດນຶ່ງ. ຈະບໍ່ມີພິທີການຮັບຮູ້ຫຍັງ ທີ່ທຳຂຶ້ນໃນວັນຂອງພຣະເຈົ້າໄດ້ ຫາກສິ່ງນັ້ນຈະເປັນສິ່ງເຮັດຄວາມສຳຄັນຂອງວັນນັ້ນມີຄວາມໝາຍນ້ອຍລົງ. (W-1.3011)

## 2. ພິທີການ ຕ້ອນຮັບ ແລະພິທີການຮັບຮອງ:

**W-4.2000**

### ວ່າດ້ວຍ ການຮັບບັບຕິສມາ ແລະການເປັນສະມາຊິກ:

W-4.2001

ການຮັບບັບຕິສມາ ເປັນການເຮັດໃຫ້ບຸກຄົນນັ້ນຖືກປະທັບຕາໄວ້ແລ້ວໂດຍພຣະວິນຍານບໍຣິສຸດ. ເປັນການ ໃຫ້ເອກກະລັກ ແກ່ບຸກຄົນ ເພື່ອເປັນສະມາຊິກຂອງຄຣິສຕະຈັກ, ຮ່ວມໂຕະຂອງພຣະເຈົ້າ ແລະມີຊີວິດຢ່າງຄຣິສຕຽນ. (W-3.3602-3.3608; W-3.5504) ຮູບການ ໃນການບັບຕິສມານີ້ໄດ້ສະແດງອອກໃນເວລາທີ່ມີການ ເຊີນຊວນ ເຂົ້າຮ່ວມໂຕະຂອງພຣະເຈົ້າ, ເພື່ອເປັນການຟື້ນຟູ ແລະມອບໝາຍ, ແລະເປັນເວລາຕ້ອນຮັບເອົາສະມາຊິກໃໝ່. ໂອກາດແບບນີ້ ມັກຈະທຳກັນໃນວັນຂອງພຣະເຈົ້າ ຊຶ່ງເປັນການຂັບຕາມພຣະຄຳຂອງພຣະອົງ.

### ວ່າດ້ວຍ ການເຊີນຊວນເຂົ້າຮ່ວມໂຕະຂອງພຣະເຈົ້າ:

W-4.2002

ເປັນໜ້າທີ່ຮັບຜິດຊອບຂອງທັງໝົດຄຣິສຕະຈັກ, ໂດຍຜ່ານຄະນະປົກຄອງ, ເພື່ອເຮັດໃຫ້ຜູ້ທີ່ຮັບບັບຕິສມາ ນັ້ນເຕີບໃຫຍ່ຂຶ້ນ, ຕ້ອງມີການເຊີນຊວນໃຫ້ພວກເຫຼົ່ານີ້ ເຂົ້າຮ່ວມໂຕະຂອງພຣະເຈົ້າໃນພິທີສິນມະຫາສະໜິດ. ໃນເວລາທີ່ເດັກຮັບບັບຕິສມາ, ຄະນະປົກຄອງຄວນໃຫ້ການສະໜັບສະໜູນພໍ່ແມ່ຂອງເດັກ ຫຼືຜູ້ທີ່ເປັນຜູ້ປົກຄອງ ເດັກນັ້ນ



ເພື່ອໃຫ້ເດັກນັ້ນມີສ່ວນໃນ ພິທີສິນມະຫາສະໜິດນັ້ນ. ຫາກເດັກມີຄວາມຕ້ອງການຈະຮັບສິນນີ້, ຄະນະປົກຄອງຄວນບັນທຶກໄວ້ ແລະເຊີນຊວນພວກເຂົາ ໃຫ້ຮ່ວມເຊັ່ນກັນ.

### ວ່າດ້ວຍ ການຢືນຢັນ ແລະການແຕ່ງຕັ້ງ:

W-4.2003

ຄຣິສຕະຈັກ ເພື່ອໃຫ້ພວກທີ່ຮັບສິນຕອນຍັງເດັກຢູ່ນັ້ນ ໃຫ້ເຕີບໃຫຍ່ຂຶ້ນຕ້ອງມີການເຊີນຊວນໃຫ້ເຂົາ ປະກາດຄວາມເຊື່ອ, ການຍອມຮັບເອົາຄວາມຮັບຜິດຊອບຕໍ່ຄຣິສຕະຈັກ ດ້ວຍຕົວຂອງເຂົາເອງ. ໃນເວລາພວກນີ້ຫາກຽມພ້ອມແລ້ວ, ພວກເຂົາຄວນໄດ້ຖືກທົດສອບຈາກຄະນະປົກຄອງ. ຫຼັງຈາກຄະນະປົກຄອງໄດ້ຮັບເຂົາເປັນ ສະມາຊິກທີ່ຫ້າວຫັນແລ້ວ ຄວນນຳພວກເຂົາມາສເນີຕໍ່ທີ່ປະຊຸມໃນເວລານະມັສການທົ່ວໄປນັ້ນ.
ໃນການນະມັສການນັ້ນ
ຄຣິສຕະຈັກຄວນຢືນຢັນເຖິງເອກກະລັກຂອງເຂົາໃນເວລາເຂົາຮັບບັບຕິສມານັ້ນ.
ພວກເຂົາ ຄວນຢືນຢັນ ຄືນອີກ ໃນຂໍ້ຜູກມັດທີ່ເຂົາກ່າວໃນເວລາຮັບສິນດ້ວຍການ:

- ປະກາດຄວາມເຊື່ອຂອງເຂົາໃນການຮັບເອົາພຣະເຢຊູຄຣິສ ເປັນພຣະຜູ້ຊ່ວຍໃຫ້ລອດ
- ປະຕິເສດຜີມານ ແລະຢືນຢັນໃນການພົວພັນຂອງພວກເຂົາຕໍ່ພຣະເຈົ້າ
- ປະກາດຄວາມຕັ້ງໃຈຂອງເຂົາ ທີ່ຈະປະກອບສ່ວນໃນການນະມັສການແລະໃນວຽກງານຄຣິສຕະຈັກ. (W-3.3603)

ພວກເຂົາຕ້ອງຖືກແຕ່ງຕັ້ງໃຫ້ມີຄວາມຮັບຜິດຊອບຢ່າງເຕັມບໍຣິບູນໃນການປະກອບສ່ວນໃນວົງການປົກຄອງ ຄຣິສຕະຈັກ

ແລະຄວນໄດ້ຮັບການຕ້ອນຮັບເປັນຢ່າງດີຈາກທາງຄຣິສຕະຈັກ. (W-3.3502;W-3.3602-3.3608; W-3.301)

## ວ່າດ້ວຍ ການຮັບຮອງເອົາສະມາຊິກອື່ນໆ:

W-4.2004

ພິທີການຮັບຮອງສະມາຊິກເຂົ້າສູ່ຄຣິສຕະຈັກໂດຍໜັງສືໂອນຍ້າຍ, ຫຼືໂດຍການຢືນຢັນຄືນໃນຄວາມເຊື່ອ ໂອກາດນີ້ ກໍເປັນໂອກາດທີ່ຟື້ນຟູ ຄວາມຊົງຈຳໃນການຮັບບັບຕິສມາ, ການປະກາດຄວາມເຊື່ອ, ແລະການໃຫ້ຄຳໝັ້ນສັນຍາ ຮັບໃຊ້ ພຣະເຈົ້າຂອງພວກເຂົາ. ຫຼັງຈາກການ ກົດສອບ ແລະຮັບຮອງເອົາໂດຍຄະນະປົກຄອງແລ້ວ, ສະມາຊິກໃໝ່ ເຫຼົ່ານີ້ ຄວນໃຫ້ມີ ການປະກາດຮັບຮູ້ ໃນເວລານະມັສການທົ່ງໄປ. ເປັນການສົມຄວນທີ່ພວກນີ້ ຄວນປະກາດຢືນຢັນ ຂໍ້ຜູກມັດຂອງຕົນໃນເວລາ ຮັບບັບຕິສມານັ້ນ ຕໍ່ໜ້າຝູງຊົນ ເພື່ອຢືນຢັນເຖິງຄວາມເຊື່ອຂອງຕົນ ຕໍ່ໜ້າຝູງຊົນອີກໃໝ່ ແລະເພື່ອຢືນຢັນເຖິງຄວາມຕັ້ງໃຈ ທີ່ຈະປະກອບສ່ວນໃນວຽກງານຄຣິສຕະຈັກຂອງພວກເຂົາ. ພວກເຂົາຄວນຖືກ ຕ້ອນຮັບ ເຂົ້າສູ່ການດຳຣົງຊີວິດຂອງຄຣິສຕະຈັກ ແລະແຕ່ງຕັ້ງເຂົາໃຫ້ຮັບໃຊ້ພຣະເຈົ້າ ໃນຖານະທີ່ເປັນສະມາຊິກ.

## ວ່າດ້ວຍ ການຢືນຢັນຄືນໃໝ່ອີກຄັ້ງ ຂອງທຸກໆຄົນ:

W-4.2005

ໃນເວລາທີ່ມີການຮັບສະມາຊິກ ຊຶ່ງພວກເຂົາໄດ້ທຳການປະກາດຄວາມເຊື່ອຂອງພວກເຂົາຕໍ່ໜ້າມະຫາຊົນນັ້ນ, ກໍເປັນການ ສົມຄວນທີ່ທຸກຄົນ ທີ່ຮັບບັບຕິສມາແລ້ວນັ້ນ ຄວນມີການຢືນຢັນຄືນອີກໃໝ່ ໃນຂໍ້ຜູກມັດສັນຍາ



ຂອງຕົນກັບພຣະເຈົ້າ ໃນເວລາຮັບສົມນັ້ນເຊັ່ນກັນ.

## ວ່າດ້ວຍ ຟື້ນຟູຄຳສັນຍາ ແລະເຮັດໃຫ້ສິ່ງນັ້ນມີຊີວິດຊີວາ:

W-4.2006

ໃນຊີວິດຂອງຜູ້ທີ່ເຊື່ອພຣະເຈົ້າ ຈະຕ້ອງມີເວລາທີ່ຈະຕ້ອງມີການປັບປຸງ, ຟື້ນຟູ,ແລະເຮັດໃຫ້ມີຊີວິດຊີວາ ໃນຄຳສັນຍາ ຂອງຕົນຕໍ່ພຣະເຈົ້າ ເພື່ອໃຫ້ມະຫາຊົນໄດ້ສະແດງຄວາມ ຮັບຮູ້, ແລະສເລີມສລອງ. ມະຫາຊົນຄວນ ຖືກສະໜັບສະໜູນໃຫ້ມີ ສ່ວນຮ່ວມກັບອາຈານ ແລະຄະນະປົກຄອງໃນໂອກາດແຫ່ງການຕັດສິນໃຈ ແລະໜ້າຕື່ນເຕັ້ນ ແຫ່ງພຣະວິນຍານບໍຣິສຸດນີ້. ເປັນການສົມຄວນທີ່ຈະຕ້ອງເຮັດພິທີ ນີ້ຢູ່ ຕໍ່ໜ້າມະຫາຊົນໃນເວລາມີການນະມັສການ, ເພື່ອໃຫ້ຄຣິສຕະຈັກຮັບຮູ້ໂດຍການ ອະທິຖານ ແລະການຂອບພຣະຄຸນ. (W-3.3502; W-3.3701)

## ວ່າດ້ວຍ ການຕ້ອນຮັບ ແລະພິທີສະແດງຄວາມຮັບຮູ້:

W-4.2007

ພິທີການຕ້ອນຮັບ, ຮັບຮູ້, ໃຫ້ສັນຍາ, ຄວນສະແດງອອກດ້ວຍການກະທຳ ແລະດ້ວຍຄຳເວົ້າ. ການກະທຳຄວນ ປະກອບດ້ວຍສິ່ງດັ່ງນີ້:

- ແບ່ງປັນສັນຕິສຸກແຫ່ງພຣະຄຣິສ,
- ຍິນດີຕ້ອນຮັບດ້ວຍການຈັບໄມ້ຈັບມື,
- ເຈີມ
- ໂອບກອດ

ແລະວິທີການອື່ນໆ
ທີ່ແທດເໝາະກັບປະເພນີວັທນະທັມຂອງຜູ້ທີ່ປະກອບສ່ວນນັ້ນ.

## 3. ການມອບໝາຍໜ້າທີ່ ສຳຣັບກິຈກຳພິເສດຂອງສາວົກໃດນຶ່ງ:

**W-4.3000**

### ວ່າດ້ວຍການຮັບຮູ້ການເປັນສາວົກ:

W-4.3001

ໃນຊີວິດຂອງຄຣິສຕຽນທີ່ເປັນໄພ່ພົນຂອງພຣະເຈົ້າ. ພຣະອົງຊ
ົງເອີ້ນໃຫ້ມີການກະທຳກິຈກຳສະເພາະໃນການ ເປັນສາວົກ ຂອງພຣະອົງ ໂດຍໃຊ
້ຂອງປະທານສ່ວນຕົວຂອງເຂົາໃນການຮັບໃຊ້ພຣະເຈົ້າໃນຄຣິສຕະຈັກ
ແລະໃນໂລກ. ກິຈກຳພິເສດ ເຫຼົ່ານີ້ ອາດໄດ້ຮັບການເພີ່ມພະລັງ
ແລະຢັ້ງຢືນດ້ວຍພິທີການສະແດງຄວາມຮັບຮູ້ໃນ ເວລານະມັສການ.

ພວກສາວົກຄວນມີການສະແດງອອກດັ່ງນີ້:

- ພາຍໃນຄຣິສຕະຈັກທ້ອງຖິ່ນ ເຂົາຄວນມີການຮັບໃຊ
້ພຣະເຈົ້າໂດຍການເປັນຄຣູໃນໂຮງຮຽນຄຣິສຕະຈັກ, ສະມາຊິກ ນັກຮ້ອງ, ເປັນເຈົ້າໜ້າທີ່ໃນອົງການຈັດຕັ້ງຂອງຄິຣສຕະຈັກ, ເປັນທີ່ປຶກສາ ແລະຜູ້ຊ່ວຍຕໍ່ຄຣິສຕະຈັກ
ອື່ນໆດ້ວຍ.
- ເຮັດວຽກຮັບໃຊ້ພຣະເຈົ້າ ໃນນາມຂອງຄິຣສຕະຈັກທ້ອງຖິ່ນ ແລະໃນນາມຂອງກຸ່ມຊົນ.
- ຕໍ່ຄຣິສຕະຈັກໃຫຍ່ໆ ອາດຮັບໃຊ້ການພາກ, ສະພາຕໍ່າ, ແລະສະພາສູງ ແລະຮ່ວມກັບກຸ່ມປະກາດ



ແລະອົງການອື່ນໆ.

- ນອກຈາກຄຣິສຕະຈັກແລ້ວ ຍັງໃຫ້ຄວາມຮ່ວມໄມ້ຮ່ວມມື ກັບວຽກງານອື່ນໆ
ທີ່ກ່ຽວກັບຄວາມເມດຕາ
ແລະການຖືກຕ້ອງປອງດອງກັນ. (W-7.3000-7.4000)

ການສະແດງຄວາມຮັບຮູ້ ແລະການມອບໝາຍໜ້າທີ່
ສຳຣັບຄົນທີ່ຖືກເອີ້ນມາຮັບໃຊ້ວຽກງານດັ່ງກ່າວນັ້ນ ຄວນໃຫ້ມີຂຶ້ນ
ໃນວັນຂອງພຣະເຈົ້າ ເພື່ອເປັນການຕອບຮັບການປະກາດພຣະທັມຂອງພຣະອົງ(W-3.3500) ຫຼືເປັນການນຳພຣະຄຳຂອງ ພຣະອົງໄປສູ່ໂລກ. ການສະແດງຄວາມຮັບຮູ້
ແລະການມອບໝາຍໜ້າທີ່ ສຳຣັບກິຈກຳ ພິເສດນີ້ ອາດຈັດຂຶ້ນດ້ວຍການ
ນະມັສການທີ່ພິເສດເພື່ອວຽກງານນີ້ ຫຼືໃນການ ນະມັສການອື່ນໆທີ່ເໝາະສົມ.
(W-3.5100; W-3.5300; W-3.5600)

## 4. ການສະຖາປະນາ ແລະການແຕ່ງຕັ້ງ:

**W-4.4000**

### ວ່າດ້ວຍ ການສະຖາປະນາ ແລະການແຕ່ງຕັ້ງ:

W-3.4001

ໃນການສະຖາປະນາ ຄຣິສຕະຈັກຕ້ອງມີການອະທິຖານ
ແລະວາງມືໃສ່ພວກທີ່ຖືກເອີ້ນມາຮັບໃຊ້ ໂດຍຜ່ານການ ຄັດເລືອກ ຈາກຄຣິສຕະຈັກ
ໃຫ້ມາຮັບໃຊ້ເປັນ ນັກຄະນາຍົກ, ຜູ້ປົກຄອງ, ແລະອາຈານ. (W-2.1005) .
ການແຕ່ງຕັ້ງ ທາງຄຣິສຕະຈັກຕ້ອງມີການອະທິຖານ
ສຳຣັບຜູ້ທີ່ໄດ້ຖືກສະຖາປະນາໃຫ້ຮັບໃຊ້ໃນຫ້ອງການຂອງ ຄຣິສຕະຈັກເຊັ່ນ

ນັກຄະນາຍົກ, ຜູ້ປົກຄອງ, ແລະອາຈານ ຊຶ່ງເປັນການເອີ້ນອີກຄັ້ງ ໃຫ້ຮັບໃຊ້ໃນຫ້ອງການນັ້ນໆ.

## ວ່າດ້ວຍ ການຈັດຕັ້ງພິທີ:

W-3.4002

ພິທີການສະຖາປະນາ ແລະການແຕ່ງຕັ້ງອາດທຳໃນວັນຂອງພຣະເຈົ້າເພື່ອເປັນການຕອບສນອງການປະກາດພຣະທັມ.

ການສະຖາປະນາ ແລະການແຕ່ງຕັ້ງ ອາດທຳໃນພິທີການພິເສດ ເພື່ອເລັ້ງໃສ່ພຣະເຢຊູຄຣິສ ແລະການເຜີຍແຜ່ພຣະຄຳ ແລະການຮັບໃຊ້ໃນຄຣິສຕະຈັກ ຊຶ່ງຈະຕ້ອງປະກອບດ້ວຍການປະກາດພຣະຄຳ.

## ວ່າດ້ວຍ ແບບວິທີ ແລະຣະບຽບການ:

W-4.4003

ໃນພິທີການດັ່ງກ່າວ, ຜູ້ຄວບຄຸມດູແລ ຄວນເອົ້າກ່ຽວກັບຫຼັກການ ແລະເປົ້າໝາຍໃນການທຳພິທີນັ້ນ ແລະໃຊ້ການ ຖາມຄຳຖາມ ໃນກົດທັມມະນູນຕໍ່ຜູ້ທີ່ສມັກນັ້ນ (G-14.0207 and G-14.0405) ຜູ້ປົກຄອງຄົນນຶ່ງ ອາດໃຊ້ຄຳຖາມ ຕາມກົດທັມະນູນຖາມທີ່ປະຊຸມ (G-14.0208 & G-14.0510) ຜູ້ສມັກແລະທີ່ປະຊຸມ ຕ້ອງຕອບຄຳຖາມນັ້ນໃນທາງບວກ ຫຼັງຈາກນັ້ນ ຜູ້ທີ່ຈະຖືກສະຖາປະນາ ຕ້ອງຄຸກເຂົ່າລົງ, ຖ້າສາມາດທຳໄດ້, ເພື່ອການອະທິຖານ ແລະວາງມື.

(G-14.0209; G-14.0405; G-14.5010; W-2.1005).

ພວກທີ່ໄດ້ຮັບການສະຖາປະນາມາກ່ອນແລ້ວນັ້ນ ແລະຈະຖືກ ແຕ່ງຕັ້ງຄວນຢືນ, ຖ້າສາມາດທຳໄດ້, ເພື່ອການອະທິຖານ. ຫຼັງຈາກອະທິຖານແລ້ວ, ຜູ້ຄວບຄຸມດູແລ ຄວນທຳການ ປະກາດການ ສະຖາປະນາແລະການແຕ່ງຕັ້ງນັ້ນ. ຜູ້ທີ່ຖືກສະຖາປະນາ ແລະຖືກແຕ່ງຕັ້ງນັ້ນ ຄວນໄດ້ມີການຕ້ອນຮັບ ເຂົ້າສູ່ຫ້ອງການ. (W-4.2007) ການມອບໝາຍແບບສັ້ນໆຄວນເອົ້າ ເພື່ອມອບໃຫ້ແກ່ຜູ້ຖືກແຕ່ງຕັ້ງໃໝ່ແລະຄຣິສຕະຈັກ. ໃນຕອນທ້າຍ ຂອງພິທີການ ຜູ້ຖືກສະຖາປະນາ ແລະແຕ່ງຕັ້ງໃໝ່ ໃຫ້ເປັນອາຈານອາດມີການ ກ່າວຄຳປາສັຍນ້ອຍນຶ່ງ ແລະທຳການຂໍພຣະພອນ.



# 5. ການປ່ຽນແປງ ໃນການຮັບໃຊ້ພຣະເຈົ້າ:

**W-4.5000**

## ວ່າດ້ວຍ ການສະແດງຄວາມຮັບຮູ້ໃນການປ່ຽນແປງ:

W-4.5001

ໃນເວລາທີ່ ພວກຮັບໃຊ້ພຣະເຈົ້າໃນກິຈກຳໃດນຶ່ງ, ພວກທີ່ຖືກສະຖາປະນາໃຫ້ເປັນ ນັກຄະນາຍົກ, ຜູ້ປົກຄອງ ຫຼືອາຈານ, ຫຼືຄົນອື່ນໆ ທີ່ຮັບໃຊ້ວຽກງານໃນຄຣິສຕະຈັກ ໄດ້ໝົດອາຍຸການຮັບໃຊ້ລົງ, ມັນເປັນການສົມຄວນທີ່ ທາງຄຣິສຕະຈັກ ແລະອົງການທີ່ກ່ຽວຂ້ອງ ຄວນຈັດໃຫ້ມີການສະແດງຄວາມຮັບຮູ້ ຮູ້ບຸນຄຸນທີ່ຜູ້ກ່ຽວໄດ້ທຳມາ.

## ວ່າດ້ວຍ ຮູບແບບວິທີໃນການສະແດງຄວາມຮັບຮູ້:

W-4.5002

ການສະແດງຄວາມຮັບຮູ້ຜົນງານນີ້ ອາດທຳໃນການນະມັສການພຣະເຈົ້າໃນວັນຂອງພຣະອົງເພື່ອເປັນການ ຕອບສນອງພຣະທັມຂອງພຣະເຈົ້າ ແລະການນຳພຣະຄຳນັ້ນໄປສູ່ໂລກ

ຫຼືອາດທຳໄດ້ໃນພິທີການອື່ນໆ ທີ່ໄດ້ກຳໜົດ ໄວ້. ພິທີການນັ້ນ ອາດປະກອບດ້ວຍ ການຍົກຍ້ອງຊົມເຊີຍ ແລະການສະແດງຄວາມຮູ້ບຸນຄຸນຕໍ່ບຸກຄົນນັ້ນໆ, ແລະຄວນປະກອບດ້ວຍການ ອະທິຖານຂອບພຣະຄຸນ ແລະອ້ອນວອນຕໍ່ພຣະເຈົ້າໃນນາມຂອງເຂົາ ໃນການປ່ຽນແປງ ການຮັບໃຊ້ພຣະເຈົ້າຂອງພວກເຂົານັ້ນ.

## 6. ການຕຳໜິ ແລະການປັບປຸງແກ້ໄຂ:

**W-4.6000**

### ວ່າດ້ວຍ ການຕຳໜິ ແລະການປັບປຸງແກ້ໄຂ:

W-4.6001

ແບບວິທີການຕຳໜິ ແລະການປັບປຸງແກ້ໄຂ ໄດ້ຕັ້ງຂຶ້ນ ຢູ່ໃນກົດຣະບຽບການຂອງປຶ້ມທັມະນູນນີ້. (D-10.0200; D-10.0300; D-10.0500; D-11.0500; D-11.0600) ໃນການໃຊ້ແບບວິທີການນີ້ ຄວນມີການ ໃຫ້ຄວາມເບິ່ງແຍງ ດູແລ ເພື່ອການເຮັດການກະທຳນັ້ນຈະທຳດ້ວຍຄວາມສວຍງາມ ແລະໃນພາຍໃຕ້ເນື້ອໃນແຫ່ງການນະມັສການ ພາຍໃນກຸ່ມຊົນ ທີ່ກ່ຽວຂ້ອງ.

## 7. ການສະແດງຄວາມຮັບຮູ້ ໃນການຮັບໃຊ້ກຸ່ມຊົນ:

**W-4.7000**

### ວ່າດ້ວຍ ພິທີການສະແດງຄວາມຮັບຮູ້:

W-4.7001

ການຮັບໃຊ້ກຸ່ມຊົນ ທີ່ນອກເໜືອຈາກວຽກງານຮັບໃຊ້ພຣະເຈົ້າຂອງຄຣິສຕະຈັກ ຕ້ອງສົມຄວນທີ່ຈະມີການ ສະແດງຄວາມຮັບຮູ້ ເປັນສິ່ງນຶ່ງທີ່ສະແດງເຖິງ



ການເປັນສາວົກຂອງຄຣິສຕຽນ ພິທີການຄວນປະກອບດ້ວຍການ ອະທິຖານ ແລະການຂອບພຣະຄຸນ ໃຊ້ໃນເວລາທີ່ເໝາະສົມ ໃນໂອກາດການນະມັສການໃດນຶ່ງ. ການໄດ້ຮັບຜົນ ສຳເຣັດໃນວຽກງານໃດນຶ່ງຂອງຄຣິສຕຽນ ຫຼືການ ໄດ້ຮັບກຽດໃດນຶ່ງ ຫຼືແບບການຮັບຮູ້ຜົນງານໃດນຶ່ງຂອງຄຣິສຕຽນ ຄວນນຳມາສເລີມສລອງກັນ ໃນກຸ່ມທີ່ມີ ຄວາມເຊື່ອດ້ວຍ.

## 8. ພິທີການ ຕອບຮັບ ແລະການຄືນດີ:

**W-4.8000**

### ວ່າດ້ວຍ ການແຕກຫັກ ແລະການປິ່ນປົວ:

W-4.8001

ຄຣິສຕຽນ ຄືຜູ້ທີ່ໄດ້ຊົງຖືກໄຖ່ໂທດບາບແລ້ວ ແຕ່ຍັງດຳຣົງຢູ່ອິດຢູ່ທ່າມກາງໂລກແຫ່ງຄວາມຜິດບາບນີ້, ພວກເຂົາໄດ້ມີສ່ວນ ໃນການແຕກຫັກ ຊຶ່ງເຂົາໄດ້ຮັບຄວາມທຸກທໍຣະມານ, ແລະຄວາມແຕກຫັກທີ່ເກີດຂຶ້ນ ຍ້ອນພວກເຂົາເປັນຕົ້ນເຫດ. ໃນຄວາມຈິງກ່ຽວກັບບັນຫານີ້ ສິ່ງດຽວທີ່ທຳໃຫ້ເຂົາຫາຍດີໄດ້ ກໍຄືການຍອມຮັບຮູ້ ແລະຮູ້ຈັກ ການແຕກຫັກຂອງຕົນເອງ ແລະການລົ້ມເຫຼວຕໍ່ການພົວພັນກັບ

- ເພື່ອນຝູງ ແລະຊີວິດແຕ່ງງານ
- ພາຍໃນຄອບຄົວ ແລະພາຍໃນຄຣິສຕະຈັກ
- ໃນບ່ອນເຮັດວຽກ ແລະໃນໂຮງຮຽນ
- ຕໍ່ເພື່ອນບ້ານໃກ້ຄຽງ, ໃນກຸ່ມຊົນ, ແລະໃນໂລກ.

## ວ່າດ້ວຍ ພິທີການ ຍອມຮັບ ແລະການຄືນດີ:

W-4.8002

ນອກເໜືອຈາກກຸ່ມຄຣິສຕຽນແລ້ວ ຕ້ອງຍອມຮັບຮູ້ວ່າ ໄດ້ມີສ່ວນຮ່ວມກັບການຜິດບາບ, ການແຕກຫັກ, ແລະການແຕກມ້າງ ດ້ານການພົວພັນ ຊຶ່ງກັນແລະກັນ. ເປັນການສົມຄວນ ທີ່ຈະຕ້ອງມີການນະມັສການພິເສດ ໃນການຍອມຮັບຮູ້ ຄວາມລົ້ມເຫຼວ ດ້ານສາຍພົວພັນ, ເພື່ອຄວາມ ໂສກເສົ້ານຳກັນໃນການສູນເສັຽສາຍພົວພັນນັ້ນ, ແລະເພື່ອຮ່ວມກັນຂໍການອະພັຍໂທດ ແລະສ້າງຄວາມຖືກຕ້ອງປອງດອງກັນພາຍໃນ ກຸ່ມແຫ່ງຄວາມເຊື່ອ. (W-2.6001; W-3.3301; W-3.5400; W-6.3011; W-7.4004)

## ວ່າດ້ວຍ ຮູບແບບຂອງພິທີການ:

W-4.8003

ພິທີການດັ່ງກ່າວຄວນປະກອບດ້ວຍ:

- ອ່ານຂໍພຣະຄຳທີ່ກ່ຽວກັບພຣະຄຸນຂອງພຣະເຈົ້າ
- ອະທິຖານສະຣະພາບ, ໄກ່ເກັ່ຽ, ແລະການອ້ອນວອນຂໍ ແລະການຄືນດີ
- ປະກາດການມີຂໍ້ຜູກມັດສັນຍາ ແລະຄືນດີກັນ.

# ໑. ການແຕ່ງງານ:

**W-4.9000**

## ວ່າດ້ວຍ ການແຕ່ງງານແບບຄຣິສຕຽນ:

W-4.9001



ການແຕ່ງງານ ເປັນຂອງປະທານທີ່ມາຈາກພຣະເຈົ້າ ຊຶ່ງໃຫ້ແກ່ມະນຸດທຸກຄົນ ເພື່ອການເປັນຄອບຄົວທີ່ຖືກຕ້ອງ ຂອງມະນຸດ. ການແຕ່ງງານ ເປັນການໃຫ້ສັນຍາກັນຂອງພົລເຮືອນຣະຫວ່າງຜູ້ຍິງແລະຜູ້ຊາຍ. ການແຕ່ງງານແບບ ຄຣິສຕຽນ ເປັນການໃຫ້ ສັນຍາແກ່ກັນແລະກັນ ຊຶ່ງໝາຍເຖິງການດຳຣົງຊີວິດຢູ່ນຳກັນຕໍ່ໜ້າພຣະເຈົ້າ ແລະ ໃນຊີວິດ ແຫ່ງການເປັນສາວົກຂອງພຣະອົງ. ໃນພິທີການແຕ່ງງານຂອງຄຣິສຕຽນ ຕ້ອງມີການສັນຍາທີ່ຈະມີຊີວິດຮ່ວມກັນ ຢ່າງຍາວນານ ຣະຫວ່າງ ຍິງແລະຊາຍ ໂດຍທ່າມກາງການເປັນພະຍານຂອງມະຫາຊົນ ແລະການຍອມຮັບຮູ້ ຂອງກຸ່ມຊົນແຫ່ງຄວາມເຊື່ອ.

## ວ່າດ້ວຍ ການຈັດຕຽມການແຕ່ງງານ:

W-4.9002

ການກະກຽມນີ້, ອາຈານ ທີ່ຖືກເຊີນໃຫ້ເປັນຜູ້ນຳໃນພິທີ ຄວນມີການໂອ້ລົມກັບຄູ່ບ່າວສາວທີ່ຈະເຂົ້າສູ່ວິວາກ່ຽວກັບ:

- ຂໍ້ສັນຍາແຫ່ງການເປັນຄຣິສຕຽນຂອງເຂົາ, ໝັ້ນໃຈວ່າ ຢ່າງນ້ອຍຜູ້ນຶ່ງຕ້ອງເປັນຄຣິສຕຽນຢ່າງສົມບູນ
- ການກະທຳທີ່ຖືກຕ້ອງຕາມກົດໝາຍແຫ່ງຣັຖ
- ສິດທິ ແລະຄວາມຮັບຜິດຊອບຂອງຄຣິສຕຽນໃນການແຕ່ງງານ
- ແບບວິທີ ແລະຣະບຽບການ ໃນການແຕ່ງງານ
- ຄຳປະຕິຍານ ແລະຂໍ້ຜູກມັດ ຊຶ່ງພວກເຂົາຈະຖືກຖາມ
- ການພົວພັນໃນຂໍ້ສັນຍາເຫຼົ່ານັ້ນ ຕໍ່ຊີວິດການເປັນສາວົກຂອງພຣະເຈົ້າ

- ຫຼັກແຫ່ງຄວາມເຊື່ອ ແລະກຸ່ມຄຣິສຕຽນທີ່ຊ
່ອຍເຫຼືອພວກເຂົາໃນການຕັດສິນໃຈແຕ່ງງານນັ້ນ.
ການໂອ້ລົມເປັນສິ່ງສຳຄັນຕໍ່ການແຕ່ງງານຄັ້ງທຳອິດ,
ຫຼັງຈາກການຕາຍຂອງຄູ່ຜົວຫຼືເມັຽ, ແລະການແຕ່ງງານຫຼັງຈາກຢ່າຮ້າງ.
ຫາກອາຈານ ໄດ້ມີຄວາມເຊື່ອໝັ້ນວ່າ ຂໍ້ສັນຍາ, ຄວາມຮັບຜິດຊອບ,
ຄວາມເປັນຜູ້ໃຫຍ່, ຫຼືການເຂົ້າໃຈໃນຊີວິດ ຄຣິສຕຽນ ຍັງບໍ່ທັນພຽງພໍ,
ຫຼັງຈາກໄດ້ໂອ້ລົມກັບຄູ່ຈະເຂົ້າວິວານັ້ນແລ້ວ, ອາຈານນັ້ນບໍ່ຄວນເຮັດພິທີໃຫ້ເທື່ອ
ເພື່ອໃຫ້ທາງຄຣິສຕະຈັກ ສືບຕໍ່ ໃຫ້ການເບິ່ງແຍງອົບຮົມ ອີກຕໍ່ໄປ.
ການຕັດສິນບັນຫາແບບນີ້ ອາຈານຄວນ ຂໍຄຳປຶກສາຈາກຄະນະປົກຄອງດ້ວຍ.

## ວ່າດ້ວຍ ເວລາ ແລະສະຖານທີ່ ໃນການທຳພິທີ:

W-4.9003

ການແຕ່ງງານຂອງຄຣິສຕຽນ ຄວນທຳໃນສະຖານທີ່ ທີ່ກຸ່ມຊຸມນຸມນັ້ນໃຊ
້ນະມັສການພຣະເຈົ້າ. ໃນພິທີການ ຄວນໃຫ້ຢູ່ໃຕ້ການ ຊ
ີ້ແນະຈາກອາຈານໂດຍຢູ່ໃນການດູແລຂອງຄະນະປົກຄອງ(W-1.4004-1.4006) .
ການແຕ່ງງານ ໂດຍທັມມະດາ ແລ້ວ ຕ້ອງມີຂຶ້ນໃນກໍຣະນີພິເສດ ທີ່ເລັ່ງໃສ່
ຂອງປະທານທີ່ມາຈາກພຣະເຈົ້າ ແລະການສະແດງອອກ ເຖິງ ຊີວິດຄຣິສຕຽນ.
ການສເລີມສລອງພິທີສິນ ມະຫາສະໜິດໃນເວລາແຕ່ງງານ
ຕ້ອງໄດ້ຮັບການເຫັນດີຈາກ ຄະນະປົກຄອງ ເສັຽກ່ອນ ແລະໄຕ້ການ
ເບິ່ງແຍງໃຫ້ທົ່ວເຖິງໃນບັນດາສະມາຊິກ ທີ່ໄດ້ຮັບສິນແລ້ວ ຊຶ່ງມີໜ້າໃນ ທີ່ນັ້ນ.
ການແຕ່ງງານ ອາດມີຂຶ້ນໃນວັນຂອງພຣະເຈົ້າ ໂດຍການອະນຸມັດຈາກຄະນະປົກຄອງ.
ອາດມີຂຶ້ນເພື່ອ ການປະກາດພຣະຄຳຂອງພຣະເຈົ້າ ແລະອາດຕິດຕາມດ້ວຍກັບຮັບສິນ
ມະຫາສະໜິດດ້ວຍ. (W-2.4010; W-3.3503)



## ວ່າດ້ວຍ ແບບວິທີ ແລະຣະບຽບການ:

W-4.9004

ພິທີການຕ້ອງເລີ່ມດ້ວຍການອ່ານຂໍ້ພຣະຄຳ ແລະການປາສັຍສັ້ນໆ
ກ່ຽວກັບຈຸດປະສົງຂອງພິທີນັ້ນ. ຍິງ ແລະຊາຍ ຕ້ອງປະກາດຕົນເອງ
ທີ່ຈະເຂົ້າສູ່ການແຕ່ງງານແບບຄຣິສຕຽນນັ້ນ
ແລະຕ້ອງແລກປ່ຽນຄຳປະຕິຍານຕໍ່ກັນແລະກັນດ້ວຍ ຄວາມຮັກ ແລະຄວາມເຊື່ອໝັ້ນ.
ພິທີການຈະປະກອບດ້ວຍ ຂໍ້ພຣະຄຳພີຕອນທີ່ເໝາະສົມ ຊຶ່ງອະທິບາຍເຖິງການ
ແຕ່ງງານນີ້. ຄວນມີການ ອະທິຖານສຳຣັບຄູ່ບ່າວສາວ, ສຳຣັບກຸ່ມຊ
ຸມທີ່ໃຫ້ການສະໜັບສະໜູນ , ແລະເພື່ອທຸກຄົນທີ່ ຕ້ອງການດຳຣົງຊີວິດ
ຢູ່ນຳກັນດ້ວຍ ຄວາມເຊື່ອ. ອາຈານຄວນປະກາດທ່າມກາງ ຕໍ່ໜ້າມະຫາຊົນ
ໃນການເປັນຄູ່ ຜົວເມັຽຂອງເຂົາ ໃນພຣະນາມແຫ່ງ ສາມພຣະພາກ ຂອງພຣະເຈົ້າ.
ການມອບໝາຍຄວາມຮັບຜິດຊອບອາດມີຂຶ້ນ ກິຈການອື່ນໆມີນິຍົມທຳໃນກຸ່ມຊົນ
ແລະຕາມປະເພນີວັທນະທັມ ທີ່ເໝາະສົມອາດນຳມາໃຊ້ ຖ້າຫາກການກະທຳນັ້ນ
ບໍ່ເປັນການຫຼຸດຄຸນຄ່າຂອງຄຣິສຕຽນກ່ຽວກັບການແຕ່ງງານນີ້ລົງ. ພິທີການ
ຕ້ອງສິ້ນສຸດລົງດ້ວຍການຂໍພຣະພອນ.

## ວ່າດ້ວຍ ການດົນຕຣີ ແລະການຕົບແຕ່ງ:

W-4.9005

ດົນຕຣີທີ່ເໝາະສົມທີ່ໃຊ້ໃນງານວິວາ
ເປັນການດຶງດູດຄວາມສົນໃຈໂດຍກົງຈາກພຣະເຈົ້າ ແລະສະແດງອອກເຖິງ
ຄວາມເຊື່ອ ຂອງຄຣິສຕະຈັກ ທີ່ປະຊຸມອາດຮ່ວມພິທີໂດຍການຮ້ອງເພັງ

ແລະການດົນຕຣີອື່ນໆທີ່ສັຣເສີນພຣະເຈົ້າ ແລະການອະທິຖານ ຕໍ່ພຣະອົງ. ດອກໄມ້, ການຕົບແຕ່ງ, ແລະເອ້ປ້ອງອື່ນໆ ຄວນຈັດໃຫ້ມີໃນສະຖານນະມັສການ ເພື່ອເຮັດໃຫ້ຜູ້ທີ່ຮ່ວມ ນະມັສການຮູ້ສຶກກ່ຽວກັບການຊົງສະຖິດຢູ່ນຳຂອງພຣະເຈົ້າ ແລະຊຶ່ງເປັນການສະແດງເຖິງ ການເປັນອັນນຶ່ງອັນດຽວກັນ ແລະຄວາມບໍຣິສຸດໃຈຂອງຄຣິສຕຽງ. (W-1.3034; W-1.4004-1.4005; W-5.5006).

## ວ່າດ້ວຍ ການສະແດງຄວາມຮັບຮູ້ ການແຕ່ງງານແບບພົລເຮືອນ(ແບບໂລກ) W-4.9006

ພິທີການນະມັສການ ຮັບຮູ້ການແຕ່ງງານແບບຊາວໂລກ ແລະນຳມາຢັ້ງຢືນອີກຄັ້ງ ໃນກຸ່ມແຫ່ງຄວາມເຊື່ອ ອາດສາມາດ ທຳໄດ້ ຫາກຄູ່ແຕ່ງງານນັ້ນຮ້ອງຂໍ. ພິທີການ ຈະທຳເໝືອນການແຕ່ງງານແບບຄຣິສຕຽນທົ່ວໄປ ຍົກເວັ້ນ ການໃຊ້ປະໂຫຍກ ເລີ່ມຕົ້ນຂອງພິທີ, ການປະກາດກ່ຽວກັບເປົ້າໝາຍການແຕ່ງງານ (ປະກາດເປັນຄູ່ຜົວເມັຽ) ການແລກປ່ຽນຄຳປະຕິຍານ ຣະຫວ່າງຄູ່ຜົວເມັຽ, ແລະການປະກາດ ຂອງອາຈານຕໍ່ໜ້າຊຸມຊົນທີ່ຈະເປັນພົນສະທ້ອນເຖິງ ການແຕ່ງງານມາແລ້ວຂອງ ຄູ່ຜົວເມັຽນັ້ນ ຕາມກົດໝາຍແຫ່ງຣັດ.

# 10. ພິທີການ ກ່ຽວກັບການສິ້ນຊີວິດ:

**W-4.10000**

## ວ່າດ້ວຍ ຄຣິສຕຽນ ແລະການສິ້ນຊີວິດ:

W-4.10001

ການຄືນມາຈາກຕາຍ ເປັນຈຸດສູນກາງແຫ່ງທິສດີຄວາມເຊື່ອຂອງຊາວຄຣິສຕຽນ ແລະເປັນສິ່ງທີ່ປັບປຸງສະພາບ ທັສນະຄະຕິ ຂອງຄຣິສຕຽນ



ແລະເປັນການໃຫ້ຄຳຕອບກ່ຽວກັບບັນຫາການສິ້ນຊີວິດ. ການຕາຍ ໄດ້ນຳມາຊຶ່ງການ ສູນເສັຽ, ຄວາມໂສກເສົ້າ ເສັຍໃຈ, ແລະຄວາມທຸກອາລັຍ ແກ່ໝົດທຸກຄົນ. ໃນການພະເຊີນໜ້າກັບຄວາມຕາຍນີ້ ຄຣິສຕຽນມີການປະກາດດ້ວຍນ້ຳຕາ ແລະຄວາມປິ້ນປີຕິຍິນດີໃນຄວາມຫວັງ ແຫ່ງພຣະຄຳພີ. ຄຣິສຕຽນຈະບໍ່ ຫອບຫິ້ວເອົາຄວາມສູນເສັຽພຽງຢ່າງດຽວ ແຕ່ພວກເຂົາ ໄດ້ຮັບການຊ່ອຍເຫຼືອຈາກຣິດອຳນາດແຫ່ງ ພຣະວິນຍານ ບໍຣິສຸດ ແລະຈາກກຸ່ມຊົນແຫ່ງຄວາມເຊື່ອດຽວກັນ. ຄຣິສຕະຈັກ ຕ້ອງໃຫ້ການຮັບໃຊ້ໃນດ້ານຄວາມຮັກ ແລະຄວາມຫວັງ ແກ່ຜູ້ທີ່ໄດ້ຮັບຄວາມໂສກເສົ້ານີ້. (W-6.3006).

## ວ່າດ້ວຍ ແຜນການ ແລະການກະກຽມ:

W-4.10002

ເພາະເປັນການຍຸ້ງຍາກ ພາຍໃຕ້ຄວາມທຸກໂສກ ໃນການທີ່ຈະວາງແຜນການໃດນຶ່ງໄດ້, ທາງຄະນະປົກຄອງຄວນໃຫ້ ກຳລັງໃຈແກ່ສະມາຊິກ ໃນການປຶກສາຫາລື ວາງແຜນການໄວ້ລ່ວງໜ້າ ຊຶ່ງຈະເປັນສິ່ງຈຳເປັນ ໃນເວລາທີ່ການ ຕາຍນັ້ນ ຫາກເກີດຂຶ້ນ, ແຜນການນັ້ນ ຄວນປະກອບດ້ວຍ ການສົ່ງສະການແບບຝັງຂອງຄຣິສຕຽນ, ແບບເຜົາ, ຫຼືການໃຫ້ເປັນຂອງທານແກ່ການຄົ້ນຄວ້າທາງດ້ານແພດສຶກສາ. ແຜນການດັ່ງກ່າວ ຕ້ອງກະກຽມໃຫ້ເປັນແບບງ່າຍໆ ຊຶ່ງຕ້ອງເປັນການໃຫ້ພະຍານເຖິງ ຄວາມຫວັງໃຈການການເປັນຄືນມາຈາກຕາຍ, ແລະໃນສິ່ງທີ່ເປັນຈຸດກາງ ຂອງຄວາມເຊື່ອຂອງຄຣິສຕຽນ. ຄະນະປົກຄອງ ເປັນຜູ້ຮັບຜິດຊອບໃນການສ້າງຕັ້ງນະໂຍບາຍທົ່ວໆໄປ ກ່ຽວກັບການ ຕາຍນີ້. (W-1.4004)

## ວ່າດ້ວຍ ການຈັດຕັ້ງພິທີການ:

W-4.10003

ພິທີການສຳຣັບການຕາຍນີ້ ສ່ວນນາກຈະທຳກັນໃນສະຖານນະມັສການພຣະເຈົ້າ ເພື່ອໃຫ້ກຸ່ມຊົນແຫ່ງຄວາມເຊື່ອ ໄດ້ມີໂອກາດເຂົ້າຮ່ວມ ແລະເປັນພະຍານເຖິງຄວາມເຊື່ອໃນຊີວິດຂອງເຂົາ ແລະການຄືນມາຈາກຕາຍ. ພິທີການ ຄວນໃຫ້ຢູ່ໃຕ້ ການຊີ້ແນະຂອງອາຈານ. ຜູ້ອື່ນໆ ອາດເປັນຜູ້ຖືກເຊ ິນໃຫ້ຮ່ວມເປັນຜູ້ນຳໃນພິທີການໄດ້ ຫາກອາຈານ ໄດ້ໃຫ້ການໄຕ່ຕອງ ຮອບຮອບໃນຕົວບຸກຄົນນັ້ນໆແລ້ວ. ພິທີການນີ້ ອາດທຳໄດ້ໃນວັນໃດວັນນຶ່ງກໍໄດ້. ການຮ້ອງ ຂໍໃຫ້ທຳພິທີການນີ້ ໃຫ້ເປັນພາກສ່ວນນຶ່ງ ໃນເວລານະມັສການໃນວັນຂອງພຣະເຈົ້າ ຫຼືຈະມີການ ທຳພິທີສິນມະຫາ ສະໜິດໃນເວລາມີການຕາຍນີ້ ຕ້ອງໃຫ້ໄດ້ຮັບການເຫັນດີຈາກຄະນະປຶກສາຄອງເສັ່ງກ່ອນ.

## ວ່າດ້ວຍ ຣະບຽບ ແລະແບບວິທີໃນການທຳພິທີ:

W-4.10004

ພິທີການຄວນເລີ່ມຕົ້ນດ້ວຍປະໂຫຍກທີ່ກ່ຽວກັບພຣະວິນຍານ. ເປັນການສົມຄວນທີ່ຜູ້ມາຮ່ວມພິທີການ ຕ້ອງຮ້ອງເພັງ ນະມັສການ, ເພັງສັຣເສີນ, ເພັງແຫ່ງພຣະວິນຍານ ທີ່ຢັ້ງຢືນເຖິງຣິດອຳນາດຂອງພຣະເຈົ້າທີ່ເອົາຊະນະ ຄວາມຕາຍ, ຄວາມເຊື່ອ ກ່ຽວກັບການຄືນມາຈາກຕາຍ ເພື່ອນຳໄປສູ່ການມີຊ ີວິດອັນຕລອດໄປເປັນນິດ, ແລະການຮັບ ປະກັນຂອງທຸກຄົນທີ່ ເຂົ້າຮ່ວມໃນຄວາມສັກສິດນັ້ນ. ພຣະຄຳຄວນນຳມາອ່ານ; ການເທສນາ ຫຼືການອະທິບາຍ ພຣະຄຳອື່ນໆ ຄວນນຳມາປະກາດ; ແລະການຢັ້ງຢືນໃນຫຼັກແຫ່ງຄວາມເຊື່ອ ຄວາມນຳມາເອົ້າໂດຍຝູງຊົນນັ້ນ.



ຄວາມດີຂອງຜູ້ທີ່ສູນເສັຽໄປນັ້ນ ອາດນຳມາເອົ້າ. ການອະທິຖານຄວນເປັນແບບຂອບພຣະຄຸນພຣະເຈົ້າສຳຣັບ:

- ຊີວິດໃນພຣະເຢຊູຄຣິສ ແລະພຣະສັນຍາຂອງພຣະອົງ
- ພຣະພອນແຫ່ງຊີວິດຂອງຜູ້ທີ່ຈາກໄປ
- ການເລົ້າໂລມໃຈຈາກພຣະວິນຍານບໍຣິສຸດ
- ກຸ່ມຊົນແຫ່ງຄວາມເຊື່ອ

ຈາກນັ້ນຕ້ອງມີການອະທິຖານເພື່ອ:

- ຄອບຄົວ ແລະຄົນຮັກແພງອື່ນໆ ທີ່ກຳລັງໂສກເສົ້າໃນເວລານັ້ນ
- ພວກທີ່ຮັບໃຊ້ໃນການຊາປະນາກິຈສົພນັ້ນ
- ທຸກຄົນທີ່ໄດ້ຮັບການສູນເສັຽໃນຄັ້ງນັ້ນ

ຕ້ອງອ້ອນວອນຂໍເພື່ອ:

- ຄວາມເຊື່ອ ແລະຄວາມກະຣຸນາຄຸນ ຂອງພວກທີ່ມາຮ່ວມນັ້ນ

ການອະທິຖານຄວນລົງທ້າຍດ້ວຍ ຄຳອະທິຖານທີ່ພຣະເຢຊູຊົງສອນ. ພິທີການ ຄວນສິ້ນສຸດລົງ ດ້ວຍການມອບຜູ້ທີ່ຕາຍໄປນັ້ນ ໄວ້ໃນການເບິ່ງແຍງຂອງພຣະເຈົ້າອົງສູງສຸດ ແລະຂໍພຣະພອນ ສຳຣັບຄົນມາຮ່ວມ.

## ວ່າດ້ວຍ ການເລືອກ ແລະຂັດເອົາແບບພິທີການ:

W-4.10005

ພິທີການນີ້ ອາດທຳກ່ອນ ຫຼືຫຼັງການສົ່ງສົພ. ເພື່ອພິທີການນັ້ນ ຈະເປັນໄປຕາມພິທີການຂອງພຣະເຈົ້າ, ເວລາສະເນີໂລງ ສົພນັ້ນ ຄວນປິດຝາ. ອາດປົກຫຸ້ມດ້ວຍ ຜ້າປົກສົພ. ພິທີການອາດປະກອບດ້ວຍຣາຍການອື່ນໆ

ອິກທີ່ນິຍົມກັນ ທຳພາຍໃນກຸ່ມຊົນແຫ່ງຄວາມເຊື່ອ ຊຶ່ງປະກອບດ້ວຍ
ຮີດຄອງປະເພນີແລະວັທນະທັມ
ຫາກການກະທຳນັ້ນ ບໍ່ລົບລ້າງ ຄວາມໝາຍແຫ່ງຄວາມເຂົ້າໃຈຂອງຊາວຄຣິສຕຽນ
ກ່ຽວກັບການຕາຍ ແລະການຟື້ນຄືນ ມາຈາກຕາຍ. ພິທີການນີ້ ຄວນສິ້ນສຸດ
ລົງພາຍໃນຂອບເຂດຂອງມັນເອງ, ສ່ວນເຫດການອື່ນໆ ເຊັ່ນໂຮມກຸ່ມ
ຊຸມຊົນ ອື່ນໆ, ການເຮັດແບບໂລກ, ຫຼືການທຳ ແບບທະຫານ ຄວນທຳຕ່າງຫາກ.
ຫາກມີເຫດຜົນສຳຄັນທີ່ບໍ່ທຳພິທີ ໃນສະຖານນະມັສການໄດ້, ພິທີການນີ້
ອາດທຳຢູ່ບ່ອນ ນຶ່ງບ່ອນໃດທີ່ເໝາະສົມເຊັ່ນ ຢູ່ບ້ານເຮືອນ, ສະຖານທີ່ປົງສົພ, ປ່າຊ້າ, ຫຼືທີ່ຫຼຸມຝັງສົພ.

ວ່າດ້ວຍ ພິທີການສົ່ງສົພ:

W-4.10006

ສະມາຊິກ ແລະເພື່ອນຝູງ ຍາດມິດຂອງຄອບຄົວຂອງຜູ້ທີ່ເສັຽຊີວິດໄປນັ້ນ
ຄວນມາອ້ອມທີ່ຫຼຸມຝັງສົພ ເພື່ອການທຳ ພິທີ ການສົ່ງສົພ ດ້ວຍພິທີການທີ່ງ່າຍໆ,
ໃຫ້ກຽດ, ແລະກະທັດຮັດ (ສັ້ນໆ) ພິທີການຄວນປະກອບດ້ວຍ ການອ່ານ
ພຣະຄຳພີ, ອະທິຖານ, ຄຳເວົ້າກ່ຽວກັບການສົ່ງສົພ, ແລະການຂໍພອນ. ຊີ້ງບອກເຖິງຄວາມຈິງຂອງການຕາຍ, ແລະໄວ້ວາງໃຈວ່າ ຜູ້ກ່ຽວໄດ້ຢູ່ພາຍໃຕ້ການຊົງດູແລຈາກພຣະເຈົ້າ ແລະຈະເປັນຄືນມາໃນວັນສຸດທ້າຍນັ້ນ.



# ພາກທີ້າ Chapter V
# ການະມັສການ ແລະວິນັຍຂອງສ່ວນບຸກຄົນ
# Worship and Personal Discipline W-5.0000

## 1. ການນະມັສການສ່ວນຕົວ, ການເປັນສາວົກ, ແລະກຸ່ມຊົນແຫ່ງຄວາມເຊື່ອ: **W-5.0000**

### ວ່າດ້ວຍ ການນະມັສການສ່ວນຕົວ ແລະສ່ວນລວມ:

W-5.1001

ຄຣິສຕຽນ ຕອບຮັບເອົາພຣະເຈົ້າ ດ້ວຍການນະມັສການແລະຮັບໃຊ້ພຣະອົງ
ໂດຍທາງສ່ວນລວມ ແລະດ້ວຍການນະ ມັສການ ສ່ວນຕົວ
ແລະເປັນສາວົກຂອງພຣະອົງ. ຊີວິດຄຣິສຕຽນ ຕ້ອງເປັນຊີວິດທີ່ອອກມາຈາກການນະມັສການ ພຣະເຈົ້າ ໃນສະຖານທີ່ນະມັສການພຣະອົງ, ຊຶ່ງເປັນບ່ອນທີ່ຊີ້ບອກເຖິງຄວາມເຊື່ອຂອງຕົນເອງ ແລະເປັນບ່ອນທີ່ສ້າງ
ຕົນໃຫ້ເປັນສາວົກ ຂອງພຣະເຈົ້າດ້ວຍການສະແດງອອກໃນການ ນະມັສການ
ແລະການຮັບໃຊ້ພຣະອົງ. (W-1.1006; W-2.1001)

### ວ່າດ້ວຍ ການນະມັສການ ແລະຊີວິດ:

W-5.1002

ໂດຍຜ່ານການນະມັສການ ພຣະເຈົ້າໄດ້ຊົງສະຖິດຢູ່ກັບມະນຸດ. ຈາກຊີວິດຄຣິສຕຽນທີ່ຍັງຕ້ອງອາໄສຢູ່ກັບໂລກ ມັນເປັນສິ່ງຈຳເປັນທີ່ຕ້ອງເຂົ້າສູ່ການນະມັສການພຣະເຈົ້າ. ໃນການນະມັສການພຣະອົງເຮັດໃຫ້ເຮົາເຫັນ ແສງສວ່າງແຫ່ງ ພຣະຄຸນຂອງ ພຣະເຈົ້າຕໍ່ໂລກ, ຈາກການນະມັສການເຮັດໃຫ້ເຮົາມີພະລັງ ແລະເປົ້າໝາຍ ໃນການດຳຣົງຊີວິດຢູ່ໃນໂລກ.

## ວ່າດ້ວຍ ການນະມັສການ ແລະການຮັບໃຊ້:

W-5.1003

ພຣະຄຳຂອງພຣະເຈົ້າ ໄດ້ຖືກປະກາດ ແລະຮັບເອົາໃນເວລາມີການນະມັສການພຣະອົງ. ນີ້ເປັນການເອີ້ນຮຽກໃຫ້ ຄຣິສຕຽນທີ່ເຊື່ອທັງຫຼາຍ ໄດ້ກາຍເປັນສາວົກທີ່ຊື່ສັດຂອງພຣະອົງໃນໂລກ. ໃນພິທີການນັ້ນສາວົກຂອງພຣະອົງ ໄດ້ພາກັນ ຂອບພຣະຄຸນ, ສາຣະພາບ, ຊ່ວຍເຫຼືອກັນໃນການຮັບຟັງພຣະທັມຂອງພຣະເຈົ້າ ແລະການຊົງໃຊ້ຂອງພຣະອົງ. ຊີວິດຂອງຜູ້ທີ່ເຊື່ອ ໄດ້ເຄື່ອນໄຫວໄປມາ ໃນຣະຫວ່າງ ການນະມັສການ ໄປສູ່ການຮັບໃຊ້ ແລະຈາກການຮັບໃຊ້ ໄປສູ່ການນະມັສການ.

## ວ່າດ້ວຍ ການນະມັສການ ແລະການເປັນສາວົກ:

W-5.1004

ຊີວິດຂອງຄຣິສຕຽນ ມີພະລັງອຳນາດໂດຍພຣະຄຸນພຣະເຈົ້າ ຊຶ່ງສະແດງອອກດ້ວຍການເຊື່ອຟັງພຣະອົງ, ແລະໂດຍການ ຮັບໃຊ້ພຣະອົງ. ພຣະເຈົ້າໄດ້ໃຫ້ພຣະຄຸນຂອງພຣະອົງ ເປັນອຸປກອນສຳຣັບການນະມັສການພຣະອົງບໍ່ວ່າພາຍໃນຄອບຄົວ, ສ່ວນຕົວ, ຫຼືໃນຄຣິສຕະຈັກ. ຄະນະປົກຄອງຄວນໃຫ້ການຊ



ຸກຍູ້ຝູງຊົນໃຫ້ໃຊ້ ວິນັຍຊຶ່ງ ບັນທຶກໄວ້ໃນປຶ້ມນີ້ ໃນການສະແດງ ການເຊື່ອຟັງ ແລະເປັນສາວົກຂອງພຣະອົງ ແລະໃນການໃຫ້ຄວາມໝາຍກ່ຽວກັບ ການດຳຣົງຊີວິດ ແລະການເຕີບໃຫຍ່ ໃນພຣະຄຸນພຣະເຈົ້າ.(W-5.2000-5.5000)

## 2. ວິນັຍຂອງການນະມັສການປະຈຳວັນຂອງສ່ວນບຸກຄົນ:

**W-5.2000**

## ວ່າດ້ວຍ ການນະມັສການປະຈຳວັນ ຂອງສ່ວນບຸກຄົນ:

W-5.2001

ການນະມັສການປະຈຳວັນຂອງສ່ວນບຸກຄົນ ເປັນວິນັຍ ໃນການເຂົ້າຫາພຣະເຈົ້າ ແລະຮັບເອົາພຣະຄຸນຂອງພຣະອົງ. ການທ້າທາຍ ໃນການຕິດຕາມພຣະອົງ ປະຈຳວັນ ຮຽກຮ້ອງໃຫ້ມີການນະມັສການພຣະອົງ. ການນະມັສການປາຈຳວັນ ຂອງສ່ວນບຸກຄົນ ສາມາດເກີດຂຶ້ນໄດ້ ໃນເວລາທີ່ມີການໂຮມກັນຂອງກຸ່ມຊົນແຫ່ງຄວາມເຊື່ອ, ໃນສະມາຊິກຂອງ ຄອບຄົວ, ແລະຄອບຄົວອື່ນໆ, ຫຼືດ້ວຍສ່ວນຕົວ. ພຣະຄຳພີ, ອະທິຖານ, ການຖວາຍ, ແລະການໃຫ້ຂໍ້ຜູກມັດໃນການຮັບໃຊ້ພຣະເຈົ້າ, ເປັນອຸປກອນໃນການນະມັສການນີ້. ບັບຕິສມາ ແລະສິນມະຫາສະໜິດ ເປັນງານທີ່ໃຊ້ໃນເວລາ ໂຮມຊຸມນຸມລວມໝູ່, ແຕ່ການກະກຽມ ແລະການຣະນຶກເຖິງ ພິທີສິນດັ່ງກ່າວ ເປັນສິ່ງສຳຄັນ ໃນການນະມັສການ ປະຈຳວັນຂອງສ່ວນບຸກຄົນ.

ລັກສະນະຂອງວິນັຍໃນການນະມັສການນີ້ ສາມາດເຫັນໄດ້ ໃນເວລາທີ່ ການນະມັສການ ນັ້ນ ເປັນການເໜັ້ນໜັກໃສ່ ການຊົງສະຖິດຢູ່ນຳຂອງພຣະເຈົ້າ,

ຍິນພຣະຄຳຂອງພຣະອົງ, ແລະຕອບຮັບພຣະຄຸນຂອງ ພຣະອົງ ໂດຍການອະທິຖານ, ການຖວາຍ, ແລະການໃຫ້ສັດສັນຍາໃນການຮັບໃຊ້ພຣະອົງ.

## ໓. ພຣະຄຳ ໃນການນະມັສການສ່ວນຕົວ:

**W-5.3000**

### ວ່າດ້ວຍ ພຣະຄຳພີ:

W-5.3001

ພຣະຄຳພີ ເປັນສິ່ງບັນທຶກການຊົງສະແດງພຣະອົງເອງຂອງພຣະເຈົ້າ ໂດຍຜ່ານການຊົງໂອ້ລົມ ໂດຍພຣະວິນຍານບໍຣິສຸດ ຊຶ່ງເປັນພະຍານໃຫ້ ພຣະເຢຊູຄຣິສ ແລະເປັນຜູ້ຊີ້ນຳນຳພາໃນຊີວິດແຫ່ງຄວາມເຊື່ອ.

ຈຸດສຳຄັນໃນການນະມັສການ ພຣະເຈົ້າສ່ວງນບຸກຄົນ ຄືບຸກຄົນນັ້ນ ມີການອ່ານ ແລະຟັງພຣະວິນຍານຂອງພຣະເຈົ້າທີ່ ໂອ້ລົມກັບເຂົາ. (W-2.2000)

### ວ່າດ້ວຍ ການໃຊ້ພຣະຄຳພີ:

W-5.3002

ບຸກຄົນນັ້ນອາດອ່ານພຣະຄຳພີ ເພື່ອເປັນສິ່ງນຳພາ, ຊຸກຍູ້, ເລົ້າໂລມ, ໃຫ້ກຳລັງໃຈ, ແລະໃຫ້ການທ້າທາຍກັບ ພຣະຄຳ ຂອງພຣະເຈົ້າ ທີ່ໄດ້ບົ່ງໄວ້.

ບຸກຄົນນັ້ນ ອາດທຳການຄົ້ນຄວ້າພຣະຄຳ ເພື່ອຄວາມເຂົ້າໃຈຕາມການອ່ານຂອງເຂົາ ແລະຕາມປະສົບການດ້ານ ປະວັດສາດ ແລະວັທນະທັມ ຂອງເຂົາ ເພື່ອການສາມາດໄດ້ຍິນພຣະຄຳຂອງພຣະອົງຢ່າງແຈ່ມແຈ້ງ ແລະຂັບຕາມ ຢ່າງເຊື່ອໝັ້ນ.



ບຸນຄົນນັ້ນອາດມີການໄຄ່ຄວນ ໄຕ່ຕອງພຣະຄຳດັ່ງນີ້:

- ເປີດເຜີຍບົດຕອນໃນພຣະຄຳພີເພື່ອການຈົດຈຳ
- ຣະນຶກເຖິງ ແລະພິຈາຣະນາ ກ່ຽວກັບການຊົງສະແດງພຣະອົງເອງຂອງພຣະເຈົ້າ
- ຄົ້ນຄວ້າໄຈ້ແຍກ ແລະໃຫ້ການສົນທຽບ ເນື້ອໃນຂອງພຣະຄຳພີ, ຮູບພາບ, ແລະແບບວິທີ
- ຊອກຫາຈຸດສຳຄັນ ແລະນຳມາເປີດເຜີຍໃຫ້ເຫັນສາຍພົວພັນຣະຫວ່າງພຣະຄຳ ແລະຊີວິດຂອງມະນຸດ.
- ນຳຮູບພາບເຫຼົ່ານັ້ນ ເຂົ້າສູ່ໂລກ ແລະກິຈການຕ່າງໆທີ່ບັນທຶກໄວ້ໃນພຣະຄຳພີ ເພື່ອມີສ່ວນປະກອບ ໃນສິ່ງທີ່ ພຣະອົງໄດ້ທຳ ແລະພຣະສັນຍາຂອງພຣະອົງໃນໂລກ.
- ຕໍ່ສູ້ກັບການທ້າທາຍ ແລະຄວາມຕ້ອງການທຸກຢ່າງ ທີ່ບົ່ງໄວ້ໃນພຣະຄຳພີ
- ຖວາຍຕົນເອງ ເປັນເຄື່ອງບູຊາທີ່ມີຊີວິດ ໃນການຕອບຮັບພຣະເຈົ້າ.

### ວ່າດ້ວຍ ການຊ່ວຍເຫຼືອການການໃຊ້ພຣະຄຳພີ:

W-5.3003

ຄວນມີການບັນທຶກ ໃນຂໍ້ຄິດເຫັນ ແລະຄວາມຮັບຮູ້ຂອງບຸກຄົນໃດນຶ່ງຕໍ່ການອ່ານ, ການຮ່ຳຮຽນ, ແລະການໄຕ່ ຕອງໄຄ່ຄວນ ຕໍ່ພຣະຄຳຂອງພຣະເຈົ້າ ຫຼືມີການແບ່ງປັນສິ່ງນັ້ນກັບຄົນອື່ນໆ. ການຂຽນໃນລັກສະນະຖອດຄວາມ, ແບບສລູບ, ແລະແບບ ສະແດງໃຫ້ເຫັນສັ້ນໆ ສາມາດເຮັດໃຫ້ມີຄຳຕອບທີ່ມີປະສິດທິພາບ ແລະອາດເກັບກຳເປັນ ວາຣະສານຂອງພວກສາວົກ ເພື່ອຊ່ວຍໃນການຕອບຮັບພຣະຄຳຂອງພຣະເຈົ້າ ໃນປຶ້ມພຣະຄຳພີ. ເປັນການສຳຄັນ ສຳຮັບຜູ້ນະມັສການດ້ວຍຕົນເອງ

ທີ່ຕ້ອງອ່ານພຣະຄຳຢ່າງກວ້າງຂວາງ. ການໃຊ້ໜັງສືຮອບຮອນ ສ່ວນຕ່າງໆທີ່ຂັດອອກມາຈາກພຣະຄຳພີ ແລະການແປອື່ນໆ ພ້ອມທັງການຖອດເນື້ອຄວາມ ເປັນສິ່ງຊ່ວຍໃນການໄດ້ຍິນພຣະຄຳຢ່າງ ຄົບຖ້ວນ.

## 4. ການອະທິຖານ ໃນເວລານະມັສການສ່ວນບຸກຄົນ

**W-5.4000**

### ວ່າດ້ວຍ ການອະທິຖານ

W-5.4001

ການອະທິຖານ ເປັນການເປີດຈິດສຳນຶກຂອງບຸກຄົນໃດນຶ່ງ ຕໍ່ພຣະເຈົ້າ ຜູ້ຊົງຕ້ອງການທີ່ຈະມາຮ່ວມ ແລະພົວພັນ ກັບເຮົາ. ການອະທິຖານ ເປັນການຮັບແລະຕອບ, ເປັນການປາກເວົ້າ ແລະຮັບຟັງ, ເປັນການລໍຖ້າ ແລະການກະທຳໃນການຊົງສະຖິດ ຢູ່ນຳຂອງພຣະເຈົ້າ. ໃນການອະທິຖານ ພວກເຮົາໄດ້ຕອບຮັບພຣະເຈົ້າ ດ້ວຍຄວາມຊົມຊື່ນຍິນດີ, ຂອບພຣະຄຸນ, ສາຣະພາບ, ອ້ອນວອນ, ແລະຍື່ນມືເຂົ້າຂໍຄວາມກະຣຸນາ, ແລະການຖວາຍ. (W-2.1000)

### ວ່າດ້ວຍ ການສະແດງອອກໃນການອະທິຖານ

W-5.4002

ການອະທິຖານ ໃນການນະມັສການສ່ວນຕົວ ອາດສະແດງອອກດ້ວຍຫຼາຍວິທີ. ບຸກຄົນນຶ່ງ ອາດໃຊ້ສະຕິຄວາມ ຮູ້ສຶກຂອງຕົນ ໂອ້ລົມກັບພຣະເຈົ້າ, ອາດໃຊ້ຄຳເວົ້າອອກມາ ໃນເວລາບຸກຄົນນັ້ນມີຄວາມມ່ວນຊື່ນ ແລະທ່ວງໃຍ, ໃນເວລາຢ້ານແລະ ມີຄວາມຫວັງ, ເວລາມີຄວາມຕ້ອງການ ແລະການມີຊີວິດຍືນນານ.



ບຸກຄົນນັ້ນ ອາດລໍຖ້າພຣະເຈົ້າດ້ວຍຄວາມຕັ້ງໃຈ ແລະດ້ວຍຄວາມຫວັງໃຈຢ່າງມິດງຽບ.

ບຸກຄົນນັ້ນ ອາດໄຄ່ຄວນເຖິງ ພຣະພອນຂອງພຣະເຈົ້າ, ກິຈກຳ, ພຣະຄຳ, ແລະພຣະລັກສະນະຂອງພຣະອົງ.

ບຸກຄົນນັ້ນ ຕຶກຕອງກ່ຽວກັບພຣະເຈົ້າ, ອາດຜ່ານຂ້າມການໃຊ້ຄຳເວົ້າຫຼືແນວຄຶດໄປສູ່ການໃຫ້ຈິດວິນຍານ ຂອງຕົນພົວພັນກັບພຣະເຈົ້າ.

ບຸກຄົນນັ້ນ ອາດເຂົ້າໃກ້ພຣະເຈົ້າດ້ວຍການຢູ່ໂດດດ່ຽວ

ບຸກຄົນນັ້ນ ອາດອະທິຖານດ້ວຍພາສາແປກໆ ໃນຖານະສ່ວນຕົວ ແລະດ້ວຍວິນັຍສະເພາະ

ບຸກຄົນນັ້ນ ອາດມີວິນັຍຂອງຕົນເອງທີ່ສະແດງອອກໃນການອະທິຖານໂດຍຜ່ານການຟ້ອນຮຳ, ອອກກຳລັງກາຍ, ດົນຕຣີ, ແລະອື່ນໆ ທີ່ເປັນການກະທຳເພື່ອຖວາຍກຽດສະໜອງພຣະຄຸນພຣະເຈົ້າ.

ບຸກຄົນນັ້ນ ອາດທຳການອະທິທານ ໃນຖານະເປັນພະຍານຕໍ່ສາທາຣະນະ ໂດຍການຮັກສາພົມມະຈາຣີ, ໃນການພົວພັນສັງຄົມ, ຫຼືໃນການກະທຳທີ່ບົ່ງບອກເຖິງການເປັນສາວົກຂອງພຣະເຈົ້າ.

ບຸກຄົນນັ້ນ ອາດຍອມຮັບວິນັຍການລົງໂທດຕໍ່ໜ້າພຣະເຈົ້າໃນການພົວພັນກັບມະນຸດດ້ວຍກັນ, ການຄ້າຂາຍ, ຫຼືການດຳຣົງຊີວິດອື່ນໆ

ບຸກຄົນນັ້ນ ເຂົ້າສູ່ການອະທິຖານສັນຍາ
ແລະຕ້ອງເຂົ້າໃນວິນັຍແຫ່ງການອະທິຖານທຸກວັນ

ຄຣິສຕຽນໄດ້ຖືກເອີ້ນໃຫ້ມີຊີວິດຢູ່ດ້ວຍການອະທິຖານ, ແລະອະທິຖານຢ່າງບໍ່ຢຸດບໍ່ເຊົາ. ໂຣມ 12:12
1ເທຊະໂລນິກ 5:17

ວິນັຍແຫ່ງການອະທິຖານໃນເວລານະມັສການສ່ວນຕົວນີ້ ບຸກຄົນຄວນຖືກຊ່ວຍເຫຼືອຕາມແບບແຜນ ແລະມີ ເນື້ອໃນ ໃນການອະທິຖານດັ່ງນີ້

- ພຣະຄຳພີ, ໂດຍສະເພາະຄຳອະທິຖານທີ່ພຣະເຢຊູຊົງສອນ ຫຼືຄຳອະທິຖານອື່ນໆ, ເພັງສັຣເສີນ ແລະບົດເພັງແຫ່ງ ພຣະຄຳພີອື່ນໆ
- ເພັງນະມັສການ, ເພັງແຫ່ງພຣະວິນຍານ, ແລະເພັງອື່ນໆ
- ປື້ມຣາຍການ, ປື້ມອະທິຖານ, ແລະປື້ມການຊ່ວຍໃນການນະມັສການອື່ນໆ
- ນໍຣະດົກແຫ່ງການອະທິຖານ ແລະການນະມັສການນ້ອຍໆ ສະແດງອອກໃນວັນນະຄະດີ ແລະໃນສິລປະ ທີ່ສາມາດ ເຫັນໄດ້.

ທີ່ມາດັ່ງກ່າວ ສາມາດຊ່ວຍໃຫ້ບຸກຄົນນັ້ນ ຮູ້ຈັກໂອກາດ ແລະເປົ້າໝາຍໃນການອະທິຖານຂອງຕົນ. ຂ່າວສານປະຈຳ ວັນ ແລະຣາຍການຂອງຄຣິສຕະຈັກ ໃນການແປເອກກະສານ ກໍເປັນສິ່ງສາມາຊ່ວຍໃຫ້ການນະມັສການສ່ວນຕົວໄດ້ ຮັບຜົນດີ.



## 5. ວິນັຍອື່ນໆ ໃນການນະມັສການສ່ວນບຸກຄົນ ແລະການເປັນສາວົກ: **W-5.5000**

### ວ່າດ້ວຍ ວັນຂອງພຣະເຈົ້າ:

W-5.5001

ພຣະເຈົ້າໄດ້ຊົງໃຫ້ຄວາມໝາຍແຫ່ງພຣະຄຸນຂອງພຣະອົງ ຢູ່ເໜືອພຣະຄຳ, ພິທີສິນ, ແລະການອະທິຖານ.

ຄຣິສຕຽນ ໄດ້ຮັບເອົາວັນຂອງພຣະເຈົ້າ ໃຫ້ເປັນວັນບໍຣິສຸດສຳຣັບພຣະອົງ. (W-1.3011; W-3.2001) ວັນນັ້ນ ໄດ້ກາຍເປັນວັນເລີ່ມຕົ້ນອາທິດຂອງຄົນທີ່ມີຄວາມເຊື່ອ ແລະເປັນວັນທີ່ປະກອບໂຄງຮ່າງໃຫ້ກັບຊີວິດແຫ່ງສາວົກຂອງພຣະອົງ. ວິນັຍໃນພິທີ ຂອງວັນເຫຼົ່ານີ້ ຈະຕ້ອງປະກອບດ້ວຍການກະກຽມຂອງສ່ວນບຸກຄົນເພື່ອ:

- ການປະກອບສ່ວນກັບການນະມັສການຮວມໝູ່
- ຮັປກັນໃນວຽກງານການເປັນພະຍານ, ການຮັບໃຊ້, ແລະຄວາມເມດຕາ
- ມີການພ່ອນຊື່ນ ແລະພັກຜ່ອນຈາກການທຳງານຕລອດວັນນາ.

ໃນການປະຕິບັດວິນັຍນີ້ ຄຣິສຕຽນທີ່ມີວຽກເຮັດງານທຳໃນວັນອາທິດ ຄວນໃຊ້ການແຍກເອົາວັນອື່ນ ພາຍໃນອາທິດ ເພື່ອປະຕິບັດວິນັຍນີ້.

### ວ່າດ້ວຍ ຣະດູການ:

W-5.5002

ຣະດູການປະຈຳປີຂອງຊາວຄຣິສຕຽນ ໄດ້ກາຍເປັນກົດເຄື່ອນໄຫວ ແລະເນື້ອໃນຂອງການນະມັສການສ່ວນບຸກຄົນ

ແລະການເປັນສາວົກ. (W-1.3013; W-3.2002) ຣະດູການພິເສດ, ໂອກາດພິເສດ, ການປ່ຽນແປງແຫ່ງຊີວິດ
ຂອງ ບຸກຄົນໃດນຶ່ງ ເປັນເຫດໃຫ້ມີການນະມັສການສ່ວນບຸກຄົນໄດ້ເຊັ່ນກັນ.

### ວ່າດ້ວຍ ວິນັຍແຫ່ງການອົດອາຫານ ແລະການອະທິຖານ:

W-5.5003

ຄຣິສຕຽນ ໄດ້ໃຫ້ການສັງເກດການ ກ່ຽວກັບເວລາ ແລະຣະດູການສຳຣັບການປະຕິບັດພິທີສິນອົດອາຫານ, ຮັກສາພິນມະຈັນ, ແລະແບບວິທີ ການອະທິຖານອື່ນໆ.  ເປັນການສົມຄວນທີ່ຈະຕ້ອງ ໃຫ້ການສັງເກດວິນັຍນີ້ ໃນທຸກຄັ້ງທີ່ທຳພິທີ , ໂດຍສະເພາະເວລາມີການກະກຽມ ໃນການ ກະທຳກິຈກຳສະເພາະອັນໃດອັນນຶ່ງໃນການເປັນ ສາວົກ ແລະກິຈກຳໃນການສາຣະພາບ ຜິດບາບ, ການຄືນດີ, ການສ້າງຄວາມສງົບສຸກ, ການຂັດຄ້ານໃນວຽກງານດ້ານ ສັງຄົມ, ແລະວຽກງານແຫ່ງຄວາມກະຣຸນາ.

### ວ່າດ້ວຍ ການໃຫ້ທານແບບຄຣິສຕຽນ:

W-5.5004

ການໃຫ້ທານ ເປັນສັນຍາລັກຂອງຄຣິສຕຽນ ກ່ຽວກັບພັນທະສັນຍາ ແລະການເປັນສາວົກ.  ວິທີທີ່ຄົນທີ່ມີຄວາມເຊື່ອ ໄດ້ໃຊ້ຂອງປະທານ ທີ່ມາຈາກພຣະເຈົ້າໃນດ້ານວັດຖຸ, ຄວາມສາມາດ, ແລະເວລາ ໃນກັບວຽກງານຂອງພຣະອົງ ເປັນ ຜົນສິ່ງສະທ້ອນໃຫ້ເຫັນເຖິງ ຄວາມເຊື່ອໝັ້ນຂອງເຂົາທີ່ມີຕໍ່ພຣະເຈົ້າ.  ເປັນການຕອບຮັບທີ່ພຣະເຈົ້າໄດ້ຊົງຖວາຍ ພຣະອົງເອງໃນພຣະເຢຊູຄຣິສ ແລະໃນພຣະຄຣິສນັ້ນເອງ



ພວກເຮົາໄດ້ຖືກເອີ້ນໃຫ້ມາຮັບໃຊ້ຊຶ່ງກັນແລະກັນ ແລະຮັບ ໃຊ້ໂລກ ອີກດ້ວຍ. ການໃຫ້ນຶ່ງສ່ວນສິບ ເປັນຈຸດຕົ້ນຕໍສຳຄັນ ທີ່ສະແດງເຖິງ ວິນັຍຂອງຄຣິສຕຽນ ໃນການຖວາຍ. (W-1.3030; W-2.5000)

### ວ່າດ້ວຍ ຊີວິດໃນການຖວາຍ:

W-5.5005

ພວກທີ່ຕິດຕາມ ວິນັຍຂອງຄຣິສຕຽນໃນການຖວາຍ ຈະພົບຕົນເອງວ່າ ພຣະເຈົ້າໄດ້ຊົງເອີ້ນໃຫ້ມີການດຳຣົງຊີວິດ ແບບງ່າຍໆ, ເອື້ອເຟື້ອເພື່ອແຜ່, ຊື່ສັດ, ໂອບອ້ອມອາຣີ, ມີຄວາມເມດຕາ, ຕ້ອນຮັບ, ແລະເປັນຫ່ວງຕໍ່ໂລກ ແລະສິ່ງທີ່ພຣະອົງ ຊົງສ້າງມານັ້ນ.

## 6. ພາຣະໜ້າທີ່ຂອງຄຣິສຕຽນ

**W-5.6000**

### ວ່າດ້ວຍ ການຊົງເອີ້ນຂອງພຣະເຈົ້າ:

W-5.6001

ພຣະເຈົ້າຊົງເອີ້ນບຸກຄົນໃດນຶ່ງເພື່ອ ເຊື່ອໃນພຣະເຢຊູຄຣິສເຈົ້າ ໃຫ້ພຣະອົງເປັນພຣະຜູ້ຊ່ວຍໃຫ້ລອດ ຕິດຕາມພຣະເຢຊູໄປ ໂດຍການເປັນສາວົກທີ່ຟັງຄວາມ ໃຫ້ໃຊ້ຂອງປະທານ ແລະຄວາມສາມາດທີ່ພຣະອົງຊົງໃຫ້ນັ້ນ, ຖວາຍກຽດ ແລະຮັບໃຊ້ພຣະອົງ

- ໃນຊີວິດສ່ວນຕົວ,
- ໃນພວກຄົນທີ່ຢູ່ເຮືອນດຽວກັນ ແລະຄອບຄົວ,

- ໃນການທຳງານປະຈຳວັນ,
- ໃນກຸ່ມຊົນ, ປະເທດ ແລະໃນໂລກ.

### ວ່າດ້ວຍ ການຕອບຮັບຂອງເຮົາ ຕໍ່ການຊົງເອີ້ນນັ້ນ:

W-5.6002

ບຸກຄົນນຶ່ງ ຈະຕອບຮັບການເອີ້ນຮຽກຂອງພຣະເຈົ້າໃຫ້ເຊື່ອພຣະເຢຊູຄຣິສ ສະແດງອອກໂດຍຜ່ານການ ຮັບບັບຕິສມາ ແລະໂດຍຜ່ານຊີວິດ ແລະການນະມັສການພຣະເຈົ້າ ໃນກຸ່ມຊົນແຫ່ງຄວາມເຊື່ອນັ້ນ.

ບຸກຄົນທີ່ຕອບຮັບການຊົງເອີ້ນໃຫ້ເປັນສາວົກຂອງພຣະອົງດ້ວຍການ ທຳງານຮັບໃຊ້ພຣະອົງໃນກຸ່ມຊົນ ແລະໃນໂລກ.

ບຸກຄົນທີ່ຕອບຮັບການເອີ້ນຂອງພຣະເຈົ້າ ໃນການຖວາຍກຽດ ແລະຮັບໃຊ້ພຣະອົງ ໃນທຸກແງ່ແຫ່ງການດຳຣົງຊີວິດ

- ໃນບ່ອນທຳງານ ແລະບ່ອນຫຼິ້ນ
- ໃນຄວາມຄິດແລະການກະທຳ
- ໃນການພົວພັນສະເພາະສ່ວນຕົວ ແລະສ່ວນລວມ

### ວ່າດ້ວຍ ການນະມັສການ ແລະການທຳງານ:

W-5.6003

ພຣະເຈົ້າໄດ້ເຮັດໃຫ້ຊີວິດທຸກວັນສັກສິດ, ແລະຊ
ີວິດທຸກວັນມີໂອກາດສຳຣັບການດຳຣົງຊີວິດຢ່າງບໍຣິສຸດ. ໃນຖານະທີ່ເປັນຄຣິສຕຽນ ທີ່ຖວາຍກຽດ ແລະຮັບໃຊ້ພຣະເຈົ້າ, ໃນຊີວິດປະຈຳວັນ



ເຂົາຕ້ອງນະມັສການພຣະອົງ. ສຳຣັບຄຣິສຕຽນ ການທຳງານ ແລະການນະມັສການ ບໍ່ສາມາດແຍກອອກຈາກກັນໄດ້.

## 7. ການນະມັສການພຣະເຈົ້າ ພາຍໃນຄອບຄົວ ແລະຜູ້ອາສັຍຢູ່ບ້ານດຽວກັນ: W-5.7000

### ວ່າດ້ວຍ ການນະມັສການກັບຜູ້ທີ່ອາສັຍຢູ່ບ້ານດຽວກັນ:

W-5.7001

ໃນເວລາທີ່ຄຣິສຕຽນດຳຣົງຊີວິດຢູ່ນຳກັນພາຍໃນຄອບຄົວ ຫຼືໃນເຮືອນໃດນຶ່ງ ພວກເຂົາຄວນມີການໃຊ້ເວລາ ໃດນຶ່ງ ໃນການນະມັສການ ພຣະເຈົ້າຮ່ວມກັນ. ຫາກສາມາດນະມັສການຮ່ວມກັນທຸກວັນໄດ້ ຄົນພາຍໃນເຮືອນນັ້ນ ຄວນທຳດັ່ງນີ້:

- ຈັດໂຕະແຫ່ງການອະທິຖານ ຊຶ່ງປະກອບດ້ວຍການອ່ານພຣະຄຳ ແລະຮ້ອງເພັງ
- ອະທິຖານ ພາກເຊົ້າແລະຄ່ຳ
- ອ່ານພຣະຄຳພີ, ຮ່ຳຮຽນ, ຄົ້ນຄວ້າ, ແລະຈົດຈຳ
- ຮ້ອງເພັງສັຣເສີນ, ເພັງນະມັສການ, ເພັງແຫ່ງພຣະວິນຍານ, ແລະເພັງອື່ນໆ
- ສະແດງການຖວາຍ ແລະການແບ່ງປັນຊຶ່ງກັນແລະກັນ.

ຫາກມີການຍຸ້ງຍາກໃນຕາຕະຣາງ ແລະການແຍກກັນເນື່ອງດ້ວຍວຽກງານປະຈຳວັນ ກໍຍິ່ງເປັນການສຳຄັນທີ່ຄວນໃຫ້ມີວິນັຍ

ໃນການນະມັສການຢ່າງເປັນປະຈຳຂອງພວກທີ່ຢູ່ບ້ານດຽວກັນ. ໃນເວລາທີ່ ສະມາຊ
ິກທີ່ຢູ່ເຮືອນນັ້ນ ບໍ່ສາມາດຮ່ວມນະມັສການໄດ້, ເຖິງຢ່າງນັ້ນກໍຕາມ ພວກເຂົາຄວນມີເວລາສ່ວນຕົວ ທີ່ຈະ ສາມາດນະມັສການຮ່ວມກັນ ໂດຍການ ອ່ານພຣະຄຳຮ່ວມກັນ ແລະອະທິຖານຮ່ວມກັນ.

### ວ່າດ້ວຍ ເດັກ ໃນການນະມັສການ ພາຍໃນເຮືອນ:

W-5.7002

ພໍ່ແມ່ ຫຼືຜູ້ປົກຄອງ ມີໜ້າທີ່ໃນການສັ່ງສອນເດັກໆຂອງພວກເຂົາ ກ່ຽວກັບການນະມັສການຂອງຄຣິສຕຽນ ໂດຍການເປັນຕົວຢ່າງ, ເຮັດໃຫ້ມີການນະມັສການພາຍໃນເຮືອນ, ແລະໂດຍການໂອ້ລົມ ແລະສັ່ງສອນ. ເດັກທີ່ຮ່ວມ ນະມັສການຄວນມີດັ່ງນີ້:

- ອະທິຖານ ແລະຮ້ອງເພັງ
- ໃຫ້ເຂົາຮັບຟັງ ແລະເລົ່າເລື້ອງລາວໃນພຣະຄຳພີ
- ອ່ານ ແລະທ່ອງຈຳ
- ນຳພາ ແລະແບ່ງປັນ
- ສະແດງບົດບາດ ແລະຕອບຮັບ.

ເດັກຄວນຖືກສອນ ດ້ວຍອຸປກອນທີ່ເໝາະສົມໃນການນະມັສການ ຊຶ່ງມີຍົນໃຊ້ໃນວັນຂອງພຣະເຈົ້າ. (W-2.3012; W-2.3013; W-3.1004; W-3.3100; W-3.5202; W-6.2000)

### ວ່າດ້ວຍ ເນື່ອງໃນໂອກາດພິເສດແລະຣະດູການ:

W-5.7003

ການນະມັສການປະຈຳບ້ານ ຄວນໃຫ້ມີຜົນສະທ້ອນຕໍ່ໂອກາດຕ່າງໆ ແລະການສເລີມສລອງ ອັນໃດນຶ່ງທີ່ເກີດຂຶ້ນໃນ ຊີວິດຂອງຄຣິສຕະຈັກ ແລະໃນຊີວິດຂອງສະມາຊິກໃນເຮືອນນັ້ນ. ວັນເກີດ, ວັນບັບຕິສມາ, ແລະວັນຄອບຮອບອື່ນໆ ເຫຼົ່ານີ້ ເປັນສິ່ງເໝາະສົມທີ່ຈະມີການນະມັສການ. ເປັນການສຳຄັນ ໃນການນະມັສການປະຈຳເຮືອນ ທີ່ໃຫ້ມີການປະກອບສ່ວນ ແລະຣະນຶກເຖິງວັນຂອງພຣະເຈົ້າ ແລະການສເລີມ ສລອງພິທີສິນ ບັບຕິສມາ



ແລະສິນມະຫາສະໜິດ. ຣະດູການປະຈຳປີຂອງຄຣິສຕຽນ ເປັນສິ່ງຊີ້ແນະ ທິດທາງ ແລະນຳໃຫ້ມີການ ນະມັສການປະຈຳເຮືອນ ເຊັ່ນ ຣະດູການກ່ອນພຣະເຈົ້າມາເກີດ, ວັນຄຣິສມາດ, ວັນອາຍພຣະຊົນ ແລະຄືນພຣະຊົນ. ພິທີການໃນວັນເຫຼົ່ານີ້ ກໍຖືເປັນປະເພນີ ຂອງກຸ່ມຊົນ, ຂອງຊາດ, ແລະຂອງໂລກ ອີກດ້ວຍ. ຣະດູການດັ່ງກ່າວ ກໍເປັນການເຕືອນພວກຄົນທີ່ເຊື່ອ ໃຫ້ຄຶດເຖິງ ການຊົງເອີ້ນພວກເຂົາ ໃຫ້ດຳຣົງຊີວິດ ຢ່າງສາວົກຂອງພຣະເຢຊູຄຣິສ ໃນໂລກນີ້. (W-2.3014; W-3.2000; W-3.3600)

# ພາກຫົກ Chapter VI

# ການະມັສການ ແລະການຮັບໃຊ້ພຣະເຈົ້າ ພາຍໃນກຸ່ມຊຸມແຫ່ງຄວາມເຊື່ອ

## Worship and Ministry within the Community of Faith W-6.0000

### 1. ການພ້ອມກັນທຳງານພຣະເຈົ້າໃນຄຣິສຕະຈັກ:

**W-6.1000**

### ວ່າດ້ວຍ ການຕອບຮັບພຣະເຈົ້າ ໃນການຮັບໃຊ້ພຣະອົງ

W-6.1001

ໂດຍທາງສ່ວນຮວມ ແລະສ່ວນຕົວ ໃນການນະມັສການພຣະເຈົ້າ ໄດ້ຮຽກຮ້ອງໃຫ້ພວກເຮົາມີຄວາມເຊື່ອ ແລະກາຍເປັນສາວົກ ຂອງພຣະອົງ. ການຕອບຮັບສິ່ງເຫຼົ່ານີ້ ສະແດງອອກດ້ວຍການຖວາຍຕົວ ແລະຂອງປະທານ ທີ່ພຣະເຈົ້າຊົງໃຫ້ມານັ້ນ ເພື່ອໃຊ້ໃນວຽກງານຂອງພຣະອົງ ເຂົ້າໃນກຸ່ມຊຸ

ິນແຫ່ງຄວາມເຊື່ອ ໃນການທຳງານພຣະເຈົ້າ ຕໍ່ໂລກ ແລະຕໍ່ຊຶ່ງກັນແລະກັນ. (W-1.1000; W-5.1000; G-3.0300; G-4.0200; G-4.0400).

## ວ່າດ້ວຍ ການພ້ອມກັນຮັບໃຊ້ພຣະເຈົ້າໃນຄຣິສຕະຈັກ:

W-6.1002

ການພ້ອມກັນຮັບໃຊ້ພຣະເຈົ້າຕໍ່ຜູ້ອື່ນໆ ພາຍໃນຄຣິສຕະຈັກ ແຕກອອກມາ ແລະຂະຫຍາຍອອກ ຈາກການປະກາດ ແລະ ໄດ້ຍິນພຣະຄຳ, ຈາກພິທີສິນ ໃນການສເລີມສລອງ ແລະຍອມຮັບ, ແລະຈາກການອະທິຖານ ດ້ວຍການຖວາຍ ແລະການແບ່ງປັນ ໃນເວລານະມັສການ.

## ວ່າດ້ວຍ ການອົບຮົມສັ່ງສອນ ແລະວຽກງານການເບິ່ງແຍງດູແລ:

W-6.1003

ການອົບຮົມສັ່ງສອນ ແລະວຽກງານການເບິ່ງແຍງດູແລ ເປັນທົນທາງດຽວທີ່ຄຣິສຕຽນ ໄດ້ທຳການຮັບໃຊ້ພຣະເຈົ້າ ຕໍ່ກັນແລະກັນ. ການອົບຮົມສັ່ງສອນຂອງຜູ້ທີ່ເຊື່ອ ແລະເດັກໆຂອງພວກເຂົາ ພາຍໃນກຸ່ມຄຣິສຕຽນ ເປັນການນຳພາ ເຂົາ ກ້າວໄປສູ່ຄວາມສົມບູນໃນພຣະຄຣິສ. ການເບິ່ງແຍງດູແລ ເປັນການສະໜັບສະໜູນ ຊຶ່ງຊາວຄຣິສຕຽນໄດ້ ໃຫ້ແກ່ກັນແລະກັນ ໃນການດຳຣົງຊ ີວິດປະຈຳວັນ ແລະໃນເວລາທີ່ຕ້ອງການ ແລະເວລາທີ່ມີບັນຫາເກີດຂຶ້ນສຳຣັບ ບຸກຄົນ ແລະໃນຊີວິດສ່ວນຮວມ.

ສ່ວນມາກ ການອົບຮົມສັ່ງສອນ ຈະຕ້ອງປະກອບດ້ວຍການເບິ່ງແຍງດູແລ ແລະການເບິ່ງແຍງດູແລນີ້ ໄດ້ເຮັດໃຫ້ການອົບຮົມ ສັ່ງສອນຂອງຄຣິສຕຽນມີຢູ່ສືບໄປ.



# 2. ການອົບຮົມສັ່ງສອນຂອງຄຣິສຕຽນ:

**W-6.2000**

## ວ່າດ້ວຍ ການເຂົ້າສູ່ກຸ່ມຊົນ

W-6.2001

ກຸ່ມຊົນຄຣິສຕຽນ ເປັນຜູ້ໃຫ້ການອົບຮົມສັ່ງສອນແກ່ສະມາຊິກຂອງຕົນເອງ ໂດຍຜ່ານຊີວິດທັງໝົດ ແລະການ ປ່ຽນແປງ ຂອງຊີວິດນັ້ນ. ຄຣິສຕະຈັກ ໃຫ້ການອົບຮົມສັ່ງສອນແກ່ບຸກຄົນທີ່ເຂົ້າສູ່ກຸ່ມຊົນແຫ່ງຄວາມເຊື່ອດັ່ງນີ້:

- ກະກຽມໃນການໃຫ້ສິນບັບຕິສມາ
- ໃຫ້ພວກເຂົາເຂົ້າຮ່ວມໃນຊີວິດຂອງກຸ່ມຊົນ
- ຕ້ອນຮັບເອົາພວກເຂົາປະກອບສ່ວນໃນການນະມັສການ ແລະການເຂົ້າສູ່ໂຕະຂອງພຣະເຈົ້າ
- ຊ່ວຍເຫຼືອພວກເຂົາໃຫ້ມີເອກະລັກຂອງຕົນເອງ ເໝືອນດັ່ງຄົນທີ່ມີຄວາມເຊ ື່ອໃນພຣະເຢຊູຄຣິສ
- ໃຫ້ອຸປກອນແກ່ພວກເຂົາໃນການດຳຣົງຊີວິດ ຢ່າງສາວົກໃນໂລກ. (W-2.3012; W-2.3013; W-4.2002; W-4.2003)

## ວ່າດ້ວຍ ການຮັບເອົາໜ້າທີ່ ໃນການຮັບຜິດຊອບ:

W-6.2002

ຄຣິສຕະຈັກ ໃຫ້ການອົບຮົມສັ່ງສອນໃນການທີ່ຈະໃຫ້ພວກເຮົາຮັບເອົາໜ້າທີ່ຮັບຜິດຊ ອບໃນໂລກ ໂດຍການ ຊ່ວຍເຫຼືອດັ່ງນີ້:

- ໃຫ້ຮູ້ຈັກຕົນເອງ ແລະການຮັບຮູ້ໂລກ

- ຮູ້ຈັກວິນັຍຂອງຕົນເອງ ແລະການເປັນສາວົກ
- ສ້າງຂໍ້ຜູກມັດສັນຍາ ໃນດ້ານຄຸນຄ່າຂອງການປະພຶດ ແລະດ້ານສິນທັມ
- ສເນີທາງເລືອກຣະຫວ່າງການຮຽນ ແລະຕຳແໜ່ງຮັບຜິດຊອບ
- ຮູ້ຈັກໃຫ້ຂໍ້ຜູກມັດສັນຍາທີ່ສລາດຫຼັກແຫຼມ ການການພົວພັນສ່ວນຕົວ ແລະຊີວິດວິວາ.

### ວ່າດ້ວຍ ການດຳຣົງຊີວິດຢູ່ນອກການຮຽກຮ້ອງຂອງພຣະເຈົ້າ:

W-6.2003

ໃນຖານະທີ່ເປັນຜູ້ຮັບໃຊ້ພຣະເຈົ້າຕໍ່ມະນຸດ, ເປັນຜູ້ທີ່ຂັບຕາມການຊົງເອີ້ນຂອງພຣະເຈົ້າ, ດັ່ງນັ້ນ ເປັນໜ້າທີ່ ທີ່ຈະ
ຕ້ອງໃຫ້ ການອົບຮົມ ສັ່ງສອນແກ່ຜູ້ທີ່ດຳຣົງຊີວິດຢູ່ນອກການຊົງເອີ້ນຂອງພຣະອົງ.
ນີ້ເປັນການຊີ້ແນະ ແລະຊ່ວຍ
ພວກເຂົາເຫຼົ່ານັ້ນ ໃນການເປັນສາວົກທີ່ດີຂອງເຂົາ

- ໂດຍການຮັບໃຊ້ຊຶ່ງກັນແລະກັນ ພາຍໃນກຸ່ມແຫ່ງຄວາມເຊື່ອ
- ເປັນແຫຼ່ງແຫ່ງການຖວາຍວັດຖຸ,ເວລາ, ແລະພອນສວັນທີ່ຕົນມີ
- ໃນຖານະເປັນສະມາຊິກໃນຄອບຄົວ,

ໂດຍສະເພາະໃນບົດບາດທີ່ຕ້ອງແບ່ງປັນຄວາມເຊື່ອກັບຄົນອື່ນ
ພາຍໃນເຮືອນ

- ໃນຖານະ ເປັນພົລເມືອງທີ່ດີ ແລະ
- ໃນຖານະເປັນຜູ້ຮັບໃຊ້ພຣະເຈົ້າໃນໂລກ.



### ວ່າດ້ວຍການຮັບເອົາການປ່ຽນແປງ

W-6.2004

ຄຣິສຕະຈັກຈະຕ້ອງໃຫ້ການສຶກສາ ເພື່ອເປັນສິ່ງນຳພາ ແລະສະໜັບສະໜູນ
ພວກຄົນທີ່ທຳການຮັບໃຊ້ພຣະເຈົ້າ
ໂດຍການປະກອບໃຫ້ເຂົາຮູ້ເຖິງຂອບເຂດໃນການທຳງານ
ແລະສິດເສຣີພາບຂອງພວກເຂົາ.

### ວ່າດ້ວຍ ຜູ້ຈັດໃຫ້ການອົບຮົມສັ່ງສອນໃນຄຣິສຕະຈັກ:

W-6.2005

ໃນພິທີບັບຕິສມາ ຄຣິສຕະຈັກ, ດ້ວຍຄວາມເຊື່ອໃນພຣະວິນຍານບໍຣິສຸດ,
ແລະໃນນາມຂອງຄຣິສຕະຈັກສາກົນ, ຕ້ອງມີສ່ວນຮັບຜິດຊອບ
ໃນການອົບຮົມສັ່ງສອນແບບຄຣິສຕຽນ.(W-2.3013; W-3.3603) ຄະນະປຶກຄອງ
ແລະຜູ້ປົກຄອງ ເປັນຜູ້ຮັບຜິດຊອບ ໃນການຈັດຫາ ການພັທນາ ແລະການຄວບຄຸມ
ໃນໂຄງການການສຶກສາ ຂອງຄຣິສຕະຈັກ,
ເພື່ອການສຶກສາແກ່ເຈົ້າໜ້າທີ່ຄຣິສຕະຈັກ,
ແລະໃນການພັທນາການເປັນສາວົກພາຍໃນສະມາຊິກ ຂອງຄຣິສຕະຈັກ. (G-6.0304; G-10.0102 d,e,g,i,k) ອາຈານ ໃຫ້ການສັ່ງສອນກຸ່ມຊົນໂດຍຜ່ານການປະກາດ ດ້ານພຣະຄຳ ແລະພິທີສິນ,
ໂດຍການອະທິຖານຮ່ວມກັບຄຣິສຕະຈັກ, ໂດຍການສອນ
ຢ່າງເປັນທາງການຫຼືບໍ່ເປັນ ທາງການ, ແລະໂດຍການເປັນຕົວຢ່າງ. (G-6.0106; G-6.0202) ບາງຄົນໃນກຸ່ມຊົນ ອາດມີຂອງປະທານທີ່ພິເສດ ແລະການຝຶກຫັດ ຊຶ່ງຕຽມໃຫ້ພວກເຂົາເຂົ້າຮ່ວມໃນການສຶກສາ

ອາດຄວນເອີ້ນເຂົາໃນເຂົ້າສູ່ການເປັນຜູ້ນຳ ໃນການ ໃຫ້ການອົບຮົມສັ່ງສອນໄດ້. ຄຣູສອນ, ທີ່ປຶກສາ, ແລະຜູ້ອື່ນໆ ທີ່ຖືກແຕ່ງຕັ້ງໂດຍຄະນະປົກຄອງ ຈະຕ້ອງເປັນຜູ ຊີ້ແນະ, ໃຫ້ບົດຮຽນ, ແລະ ໃຫ້ອຸປກອນແກ່ຜູ້ທີ່ຢູ່ໃນຄວາມຮັບຜິດຊອບຂອງເຂົາໃນການອົບຮົມສັ່ງສອນ.

(W-3.3503) ພໍ່ແມ່ ຫຼືຜູ້ປົກຄອງ ຮັບຜິດຊອບໃນການ ແບ່ງປັນຄວາມເຊື່ອ ຂອງຄຣິສຕະຈັກຕໍ່ເດັກຂອງຕົນ.

(W-4.3002; W-5.7000)

## ວ່າດ້ວຍ ແຫຼ່ງ ແລະໂອກາດ ໃນການອົບຮົມສັ່ງສອນ:

W-6.2006

ຄວາມສຳຄັນພື້ນຖານ ແລະແຫຼ່ງ ໃນການອົບຮົມສັ່ງສອນຂອງຄຣິສຕະຈັກ ແມ່ນພຣະຄຳຂອງພຣະເຈົ້າ ໃນພຣະຄຳພີ. ຈຸດກາງສຳຄັນ ຂອງໂອກາດໃນການອົບຮົມສັ່ງສອນ ແມ່ນການນະມັສການ ໃນວັນຂອງພຣະເຈົ້າ. ໃນເວລາທີ່ພຣະຄຳ ຖືກປະກາດ ແລະພິທີສິນຖືກນຳມາສລອງ ສະມາຊິກທຸກຄົນໃນກຸ່ມຊົນ ນັບທັງຜູ້ໃຫຍ່ແລະນ້ອຍ, ເຖົ້າຫຼືໜຸ່ມ, ຕ້ອງຖືກເຊີນຊວນ ຊຸກຍູ້ໃຫ້ເຂົ້າຮ່ວມ. ກິຈການການສຶກສາ ບໍ່ຄວນເອົາໃນຕາຕະຣາງ ທີ່ປ້ອງກັນ ໃນການປະກອບສ່ວນໃນພິທີການນີ້. ສິ່ງສຳຄັນ ແລະສືບຕໍ່ໄປ ສຳຣັບຄຣິສຕຽນ ໃນການອົບຮົມສັ່ງສອນ ກໍຄືຢູ່ທີ່ ບ້ານເຮືອນ, ຊຶ່ງເປັນບ່ອນທີ່ແບ່ງປັນຄວາມເຊື່ອ ຊຶ່ງກັນແລະກັນໂດຍຜ່ານການນະມັສການ, ການສອນ, ແລະແບບຢ່າງ. ຄຣິສຕະຈັກ ຄວນຈັດຫາໂອກາດອື່ນໆ ໃນການອົບຮົມສັ່ງສອນດັ່ງນີ້:

- ໃນຫ້ອງຮຽນຂອງຄຣິສຕະຈັກ
- ໃນກຸ່ມອື່ນໆ ແລະກຸ່ມທີ່ຈັດຕັ້ງເພື່ອການສຶກສາ ແລະການອົບຮົມສັ່ງສອນ



- ໃນກຸ່ມ ແລະສະມາຄົມ ທີ່ເຕົ້າໂຮມກັນ ເພື່ອກິຈກຳໃດນຶ່ງ ແລະການປະກາດ
- ຄະນະກັມມະການ, ຄະນະອຳນວຍການ, ແລະອົງການປົກຄອງ
- ໃນການພັກຟື້ນ, ໃນແຄ໊ມ, ແລະກອງປະຊຸມໃຫຍ່.

ເອກະສານໃນການສາຣະພາບຍອມຮັບຂອງຄຣິສຕະຈັກ ເປັນສິ່ງຈັດຫາໃຫ້ການແນະນຳ ໃນການອົບຮົມສັ່ງສອນ. ຮູບແບບ ແລະເນື້ອໃນ ສຳຣັບການຮ່ຳຮຽນ ແລະສຶກສາ ໄດ້ຖືກຈັດຫາມາໃຫ້ໂດຍແຫຼ່ງດີ ໃນພິທີການນະມັສການ, ວັທນະທັມ, ແລະມູນເຊື້ອແຫ່ງສິລທັມ ຂອງຄຣິສຕະຈັກ. ອຸປກອນການສຶກສາ ຖືກພັທນາຂຶ້ນມາເພື່ອໃຊ້ເພື່ອການ ອົບຮົມສັ່ງສອນຄຣິສຕຽນ ຕ້ອງຮັບການເຫັນດີຈາກຄະນະປົກຄອງ.

# ૩. ການເບິ່ງແຍງດູແລ:

**W-6.3000**

## ວ່າດ້ວຍ ການເບິ່ງແຍງດູແລ:

W-6.3001

ກຸ່ມຄຣິສຕຽນ ໄດ້ໃຫ້ການເບິ່ງແຍງດູແລຕໍ່ສະມາຊິກຂອງຕົນເອງໃນຊີວິດສ່ວນຕົວ ແລະສ່ວນຮວມ. ຄຣິສຕະຈັກອາດ ມີການຮວມກັນ ຮັບໃຊ້ໃນການເບິ່ງແຍງດູແລນີ້ ໃນຣະດັບທີ່ແຕກຕ່າງກັນໄປ.

## ວ່າດ້ວຍ ການດູແລຈາກຄຣິສຕຽນທຸກຄົນ:

W-6.3002

ຄຣິສຕຽນທຸກຄົນຕ້ອງໃຫ້ການເບິ່ງແຍງດູແລຊຶ່ງກັນແລະກັນໃນຊີວິດປະຈຳວັນຂອງຕົນເອງ, ແບ່ງປັນຄວາມ ມ່ວນຊື່ນ ແລະໂສກເສົ້ານຳກັນ, ຊ່ອເຫຼືອຊຶ່ງກັນແລະກັນໃນເວລາໂສກເສົ້າ ແລະຕ້ອງການ, ໃຫ້ການອົບຮົມ

ສັ່ງສອນໃນການອະພັຍ ແລະຄືນດີກັນ. ການດູແລແບບນີ້ ເປັນຈຸດສຳຄັນເບື້ອງຕົ້ນຂອງການເປັນກຸ່ມຊົນແຫ່ງ ຄວາມເຊື່ອ ແລະນະມັສການ ພຣະເຈົ້າຮ່ວມກັນ. ເປັນການສະແດງອອກໃນກິຈກຳ ພາຍໃນກຸ່ມ ແລະການເຂົ້າຮ່ວມກັນແລະກັນເປັນກຸ່ມ ໃນການອັບຮົມ ສັ່ງສອນ ຫຼືເພື່ອຊ່ວຍກັນແບກຫາບວຽກງານຂອງຄຣິສຕະຈັກນຳກັນ. ຜູ້ປົກຄອງ, ນັກຄະນາຍົກ, ແລະອາຈານ ເປັນຜູ້ຮັບ ຜິດຊອບພິເສດ ໃນການໃຫ້ການເບິ່ງແຍງດູແລນີ້.(G-6.0202;
G-6.0304;G-6.0402)

## ວ່າດ້ວຍ ການເບິ່ງແຍງການການໃຫ້ຄຳແນະນຳ ປຶກສາຫາລື:

W-6.3003

ບາງຄົນໃນກຸ່ມແຫ່ງຄວາມເຊື່ອ ເປັນຜູ້ທີ່ມີພອນສວັນພິເສດ ແລະໄດ້ຮັບການຝຶກຫັດຢ່າງເໝາະສົມ, ພວກນີ້ຄວນ ເອີ້ນໃຫ້ເຂົ້າສູ່ການຮັບໃຊ້ພຣະເຈົ້າໃນຄຣິສຕະຈັກໃດນຶ່ງໃນການໃຫ້ຄຳແນະນຳປຶກສາຫາລື ແກ່ສ່ວນບຸກຄົນ ແລະກຸ່ມທີ່ ໂຮມກັນເພື່ອຈຸດປະສົງນີ້.

## ວ່າດ້ວຍ ການໃຫ້ການແນະນຳ ຊີ້ແນະ:

W-6.3004

ໃນບາງສະພາບແວດລ້ອມ ວຽກງານການເບິ່ງແຍງດູແລນີ້ ອາດຮ-ຍຮ້ອງໃຫ້ມີການແນະນຳ ໃຫ້ໄປຫາອາຈານທີ່ ມີວິຊາສະເພາະໃນດ້ານນີ້ ຫຼືຜູ້ອື່ນໆທີ່ຊຳນານ ເພື່ອໃຫ້ການແນະນຳທີ່ເໝາະສົມ ຫຼືໃຫ້ການຮັກສາ.

## ວ່າດ້ວຍ ການໃຫ້ການດູແລໃນການເຈັບເປັນ:

W-6.3005



ຄຣິສຕະຈັກ ຕ້ອງມີການໃຫ້ການເບິ່ງແຍງດູແລຕໍ່ຄົນທີ່ມີຄວາມຕ້ອງການພິເສດ ແລະມີບັນຫາຍຸ້ງຍາກໃນຊີວິດ. ໃນເວລາມີຄົນເຈັບ, ຄຣິສຕຽນຕອບຮັບດ້ວຍການອະທິຖານ, ຢ້ຽມຢາມ, ແລະການທຳກິຈກຳອື່ນໆ ທີ່ສະແດງເຖິງ ຄວາມຮັກ ແລະໃຫ້ກຳລັງໃຈ ແກ່ຜູ້ເຈັບ ແລະຜູ້ທີ່ອາສັຍໃນບ້ານເຮືອນນັ້ນ, ຄອບຄົວຂອງເຂົາ, ແລະເພື່ອນມິດ ຂອງເຂົາ. ໃນເວລາ ທີ່ການເຈັບນັ້ນ ຮ້າຍແຮງ ຫຼືຍາວນານ, ຜູ້ທີ່ໃຫ້ການ ເບິ່ງແຍງດູແລ ຄວນໃຫ້ຄວາມ
ສຳຄັນພິເສດກັບທຸກຄົນ ທີ່ມີຄວາມຕ້ອງການ ແລະເສົ້າໂສກ ຕໍ່ທຸກຄົນທີ່ເຂົ້າຮ່ວມ. ການສິ້ນສຸດ ແຫ່ງການເຈັບປ່ວຍ ຄືການມອບຄວາມ ໄວ້ວາງໃຈໄວ້ກັບພຣະເຈົ້າ, ໃຫ້ກຳລັງໃຈຜູ້ທົນທຸກນັ້ນ, ເລົ້າໂລມໃຈຜູ້ໂສກເສົ້າ, ແລະໃຫ້ ຄວາມຫວັງ ໃນເວລາທີ່ກຳລັງ ພະເຊີນໜ້າກັບຄວາມຕາຍ.

## ວ່າດ້ວຍ ການເບິ່ງແຍງດູແລ ໃນເວລາມີການສິ້ນຊີວິດ:

W-6.3006

ເວລາມີການຕາຍເກີດຂຶ້ນ, ຄຣິສຕະຈັກ ໃນການໃຫ້ການເບິ່ງແຍງດູແລນັ້ນ ຄວນເຂົ້າຮ່ວມມີໜ້າໂດຍທັນທີ. ຕ້ອງແບ່ງປັນ ຄວາມໂສກເສົ້າ ແລະການສູນເສັຽນັ້ນ. ດ້ວຍຄວາມເຊື່ອ ແລະຄວາມຫວັງໃຈ ໃນຣິດອຳນາດແຫ່ງ ການຟື້ນຄືນມາຈາກຕາຍ, ຕ້ອງສະແດງກິຈກຳແຫ່ງຄວາມຮັກ ແລະການເຫັນໃຈເບິ່ງແຍງດູແລ. ຄຣິສຕະຈັກ ຕ້ອງສືບຕໍ່ໃຫ້ການດູແລ ໃນໄລຍະແຫ່ງ ຄວາມໂສກເສົ້າແລະການປັບຕົວນີ້.(W-4.10000)

## ວ່າດ້ວຍ ການດູແລເບິ່ງແຍງ ໃນເວລາມີການສູນເສັຽ:

W-6.3007

ໃນໂອກາດອື່ນໆ ທີ່ມີການສູນເສັຽ ເຊັ່ນ:

- ການສູນເສັຽອຳນາດ
- ການຈືດຈາງ ຂອງສາຍພົວຂອງອັນສຳຄັນຂອງບຸກຄົນໃດນຶ່ງ
- ການເດີນທາງຫ່າງໄກຈາກບ້ານຂອງເດັກ
- ການສູນເສັຽວຽກງານທີ່ສຳຄັນ, ການດຳຣົງຊີວິດ, ຫຼືການເງິນ
- ການສິ້ນສຸດຂອງຊີວິດວິວາໃນການຢ່າຮ້າງ, ການເປັນໝ້າຍ

ທັງໝົດລ້ວນນຳມາຊຶ່ງຄວາມເສັຽໃຈ
ແລະຕ້ອງການດູແລຊ່ວຍເຫຼືອ.

## ວ່າດ້ວຍ ການແຕກນ້າງ ດ້ານສາຍພົບພັນ:

W-6.3008

ຄຣິສຕະຈັກຕ້ອງໃຫ້ການເບິ່ງແຍງດູແລຕໍ່ບຸກຄົນທີ່ຕ້ອງການປິ່ນປົວ ແລະຊ
ອກຫາການຊ່ວຍເຫຼືອຕໍ່ຜູ້ທີ່ຊອກ
ຊ້ຳໃຈ, ເປັນສັດຕຣູກັນ, ຂັດແຍ່ງກັນໃນການດຳຣົງຊີວິດປະຈຳວັນ, ຊຶ່ງຈະນຳມາຊ
ຶ່ງການແຕກນ້າງດ້ານສາຍພົບພັນ
ຊຶ່ງກັນແລະກັນ ພາຍໃນຄອບຄົວ, ຜູ້ອາສັຍຢູ່ ເຮືອນດຽວກັນ, ໃນໂຮງຮຽນ,
ແລະໃນບ່ອນທຳງານ, ໃນບ້ານໃກ້ ເຮືອນຄຽງ, ໃນກຸ່ມຊົນ,
ແລະໃນຄຣິສຕະຈັກ.(W-4.8000)



## ວ່າດ້ວຍ ການເບິ່ງແຍງດູແລ ໃນຄວາມຜິດບາບ ແລະການອະພັຍໂທດ:

W-6.3009

ການເບິ່ງແຍງດູແລ ເພື່ອການປິ່ນປົວ,
ຮຽກຮ້ອງໃຫ້ມີການຍອມຮັບຮູ້ຄວາມຈິງແຫ່ງຄວາມຜິດບາບຂອງບຸກຄົນ,
ຊຶ່ງເປັນຕົ້ນເຫດໃຫ້ມີ ການແຕກນ້າງກັນຂອງມະນຸດ. ກຸ່ມຊົນທີ່ມີຄວາມເຊື່ອ
ປະກາດຂ່າວປະເສີດຂອງພຣະເຈົ້າ ທີ່ບອກວ່າ ຄວາມຮັກ ໄດ້ນຳມະນຸດເຂົ້າສູ່ພຣະຄຸນ.

- ໃນການ ສາຣະພາບຜິດບາບ ແລະມີສ່ວນໃນການແຕກນ້າງນັ້ນ
- ໃນການຖິ້ມໃຈເກົ່າເອົາໃຈໃໝ່, ສະແດງຄວາມໂສກເສົ້າ
ແລະຕັ້ງໃຈທີ່ຈະປ່ຽນແປງ
- ໃນການຍອມຮັບເອົາການອະພັຍຈາກພຣະເຈົ້າ ແລະກໍໃຫ້ອະພັຍຊຶ່ງກັນແລະກັນ
- ໃຫ້ອະພັຍຜູ້ອື່ນ ແລະຍອມຮັບການອະພັຍຈາກຜູ້ອື່ນເຊັ່ນກັນ
- ທຳງານເພື່ອການຄືນດີກັນ ໃນການແຕກນ້າງນັ້ນ
- ວາງໃຈໃນຣິດອຳນາດຂອງພຣະເຈົ້າ ທີ່ນຳການປິ່ນປົວ ແລະສັນຕິສຸກມາໃຫ້ (W-4.8000)

ການຮັບເອົາການສາຣະພາບ ແລະການປະກາດການໃຫ້ອະພັຍໂທດຂອງພຣະເຈົ້າ,
ນຳພາມະນຸດໃຫ້ຄືນດີຊຶ່ງກັນ ແລະກັນ ແລະຊ່ວຍເຫຼືອກັນ ໃນການຕໍ່ສູ້ກັບຊີວິດ
ເພື່ອໃຫ້ເຂົ້າສູ່ຊີວິດໃໝ່. ເປັນການຊຸກຍູ້ຄົນເຮົາໃຫ້ມີການອະພັຍ ແລະຮັບອະພັຍ,
ແລະໃນການໄກ່ເກັ່ຽໃຫ້ຄືນດີກັນນັ້ນ ເປັນຜົນມາຈາກ
ກິຈກຳໃນການໃຫ້ການເບິ່ງແຍງດູແລນັ້ນເອງ.

## ວ່າດ້ວຍ ການເບິ່ງແຍງດູແລ ໃນເວລາຊີວິດມີການປ່ຽນແປງ:

W-6.3010

ຄຣິສຕະຈັກຕ້ອງຍອມຮັບຮູ້ເຖິງການປ່ຽນແປງ ທີ່ສາມາດນຳທັງຄວາມຊ່ອນຊື່ນ
ແລະໂສກເສົ້າມາສູ່ຊີວິດ ຂອງມະນຸດເຊັ່ນ:

- ການເກີດຂອງເດັກ, ການເຕີບໃຫຍ່, ການເປັນເອກະຣາດ,
ເຫັນວ່າອາຍຸສັງຂານຂອງພໍ່ແມ່ ກາຍມາເປັນ
ຜູ້ອາສັຍຢູ່ນຳຕົນ;
- ການເລີ່ມເຮັດວຽກຂອງຄົນ, ປ່ຽນອາຊີພການງານ, ກິນເບັ້ຽບຳນານ;
- ສະມາຊິກໃນເຮືອນເພີ່ມຂຶ້ນ, ຍ້າຍບ່ອນຢູ່ໃໝ່, ເພີ່ມ ຫຼືສູນເສັຽສະມາຊິກ;
- ຄົນຂຶ້ນກຳອຳນາດ, ຟື້ນຟູ, ການໃຫ້ຂໍ້ຜູກມັດສັນຍາໃໝ່.

ວຽກງານການດູແລນີ້ ໄດ້ຊຸກຍູ້ໃຫ້ຄົນມີການຍອມຮັບຮູ້, ຮັບເອົາ,
ແລະສເລີມສລອງ ແລະການປ່ຽນແປງນີ້ ໄດ້ເຮັດໃຫ້ເຂົາກ້າວສູ່ຊີວິດໃໝ່
ແລະການປ່ຽນແປງນີ້ ກໍເຮັດໃຫ້ເຂົາມີເອກະລັກຂອງຕົນແບບໃໝ່ເຊັ່ນກັນ.

## ວ່າດ້ວຍ ແຫຼ່ງໃນການນະມັສການສຳຣັບວຽກງານເບິ່ງແຍງດູແລ:

W-6.3011

ກຸ່ມຊົນແຫ່ງຄວາມເຊື່ອ ຕ້ອງມີຄວາມຮັບຜິດຊ
ອບໃນວຽກງານການອົບຮົມສັ່ງສອນໃນການນະມັສການ, ແລະຕໍ່ສະມາຊິກ ຂອງຕົນ
ພາຍໃຕ້ແຫຼ່ງແຫ່ງການນະມັສການ ທີ່ໃຫ້ການດູແລນີ້.

ພຣະຄຳພີ ເປັນຈຸດກາງຂອງແຫຼ່ງນັ້ນ ເພື່ອການສະໜັບສະໜູນ, ເລົ້າໂລມ,
ແລະຊີ້ນຳນຳພາ. ການປະກາດພຣະຄຳ ໃນການເທສນາ ແລະໃນບົດເພັງ
ສາມາດນຳພາໃຫ້ຮູ້ຈັກຄວາມຕ້ອງການ ແລະສາມາດເຮັດໃຫ້ມີການດູແລ
ເກີດຂຶ້ນໄດ້. (W-2.2000; W-3.3400)



ການອະທິຖານ- ແບບມິດງຽບ, ອອກສຽງ, ແລະຮ້ອງເພັງ-
ເປັນການຂອບພຣະຄຸນ, ອ້ອນວອນ, ຊ່ວຍເຫຼືອກັນ ແລະກັນ, ແລະເປັນການຮັບຮູ້
ການຊົງສະຖິດຢູ່ນຳ ແລະຣິດອຳນາດຂອງພຣະເຈົ້າ. ກິຈກຳໃນການອະທິຖານ
ໂດຍການ ວາງມື, ເຈີມດ້ວຍນ້ຳມັນ, ເປັນການເອີ້ນຮຽກຫາ
ພຣະເຈົ້າເພື່ອການປິ່ນປົວ, ຂໍຣິດອຳນາດ, ແລະການສະໜັບສະໜູນ ຊ່ວຍເຫຼືອ
ຈາກພຣະອົງ.(W-2.1000; W-3.3506; W-3.5400)

ການໃຫ້ມີພິທີສິນໃນໂຮງໝໍ ຫຼືຄົນໃນເຮືອນພາກັນສເລີມສລອງການຊ
ົງມາປາກົດຂອງພຣະຄຣິສ ເປັນການ ຂະຫຍາຍກຸ່ມ ແຫ່ງຄວາມເຊື່ອ
ນອກເໜືອຈາກທີ່ຊຸມນຸມ. (W-2.3000- 2.4000; W-3.3600)

ຄຳອະທິຖານຂອງພຣະເຈົ້າ, ເພັງສັຣເສີນ,
ເພັງແຫ່ງການສັຣເສີນ,ການຂໍພຣະພອນ ແລະສິ່ງອື່ນໆ ທີ່ເປັນແບບ ດຽວກັນກັບ
ການນະມັສການ ໃນບ່ອນນະມັສການຂອງຄຣິສຕະຈັກນັ້ນ
ສາມາດຂະຫຍາຍການສະໜັບສະໜູນ
ແລະການດູແລຂອງກຸ່ມຊົນ ໄປສູ່ພວກທີ່ມີຄວາມຕ້ອງການພິເສດ
ຫຼືພວກທີ່ສະພາບແວດລ້ອມໄດ້ໃຫ້ພວກເຂົາເຂົ້າ ອາສັຍຢູ່ໃນເຂດນັ້ນໆ.

ເວລາແຫ່ງການຊົງຈຳ, ການເປັນທ່ວງໃຍຕໍ່ຊຸມຊົນ,
ຄວນມີການອະທິຖານເພື່ອກັນແລະກັນ, ແລະໃນໂອກາດອື່ນໆ ໂດຍການປະກອບ
ການນະມັສການຂຶ້ນ ຈະສາມາດນຳເອົາກຸ່ມຊົນແຫ່ງຄວາມເຊື່ອ
ທີ່ຂາດການມາໂບດນັ້ນ ໃຫ້ມີໂອກາດຮ່ວມ ນະມັສການພຣະເຈົ້າ.(W-3.3300; W-3.3500; W-3.3700)

ອ່າດ້ອຍ ການນະມັສການ ແລະການຮັບໃຊ້ພຣະເຈົ້າ:

W-6.4000

ການນະມັສການພຣະເຈົ້າ ໃນກຸ່ມຄຣິສຕຽນ ມັນໄດ້ກາຍເປັນພື້ນຖານ ແລະເນື້ອໃນໃຈຄວາມ ແຫ່ງການຮັບໃຊ້ ພຣະເຈົ້າ ດ້ານການດູແລເບິ່ງແຍງ ເຊັ້ນດຽວກັບການຮັບໃຊ້ພຣະເຈົ້າໃນດ້ານການອົບຮົບສັ່ງສອນ ໃນຄວາມເຊື່ອຕໍ່ພຣະອົງ.

# ພາກເຈັດ Chapter VII

# ການນະມັສການ ແລະການຮັບໃຊ້ພຣະເຈົ້າຂອງຄຣິສຕະຈັກຢູ່ໃນໂລກ

## Worship and Ministry of the Church in the World W-7.0000

### 1. ການນະມັສການ ແລະການເຜີຍແຜ່:

**W-7.1000**

ອ່າດ້ອຍ ການນະມັສການ ແລະການຮັບໃຊ້:

W-7.1001

ຄຣິສຕະຈັກ ປະກອບສ່ວນໃນວຽກງານການປະກາດຂອງພຣະເຈົ້າຕໍ່ໂລກ ໂດຍຜ່ານການຮັບໃຊ້ ແລະການນະມັສການ ນັ້ນເອງ. ການນະມັສການສະແດງໃຫ້ເຫັນຄວາມຈິງແຫ່ງກົດໝາຍອັນສັກສິດ ຊຶ່ງພຣະເຈົ້າໄດ້ຊົງສັນຍາຢູ່ໃນພຣະເຢຊູຄຣິສ ໃຫ້ເປັນສິ່ງສຸດທ້າຍໃນການ ຟື້ນຟູສິ່ງທີ່ພຣະອົງຊົງສ້າງນັ້ນຄືນໃໝ່. ກຸ່ມນະມັສການ ໃນການເປັນ ອັນນຶ່ງອັນດຽວກັນ ຕໍ່ໜ້າພຣະຄຳ



ແລະການເປັນນ້ຳນຶ່ງໃຈດຽວກັນ ໃນການອະທິຖານ, ໄດ້ກາຍເປັນສັນຍາລັກໃຫ້ເຫັນການປົກຄອງຂອງພຣະເຈົ້າ ປາກົດຢູ່ສເມີ. ຄຣິສຕະຈັກ ແລະການຮັບໃຊ້ພຣະເຈົ້າຂອງຄຣິສຕະຈັກ ໄດ້ເປັນພະຍານ ໃຫ້ການປົກຄອງຂອງພຣະເຈົ້າ ໂດຍຜ່ານການປະກາດພຣະຄຳພີ, ວຽກງານຊ່ອຍເຫຼືອເພື່ອນມະນຸດ ແລະການຄືນດີ, ແລະໂດຍຜ່ານການຮັບຜິດຊອບໃນສິ່ງທີ່ ພຣະອົງຊົງສ້າງ ແລະໃນຊີວິດທັງມວນ. ສັນຍາລັກແຫ່ງການປົກຄອງ ຂອງພຣະເຈົ້າ ໄດ້ປາກົດຢູ່ໃນໂລກ ບ່ອນທີ່ພຣະວິນຍານບໍຣິສຸດ ໄດ້ນຳພາມະນຸດໃຫ້ຊອກຫາຄວາມຍຸຕິທັມ ແລະການສ້າງສັນຕິ.(G-3.0000)

ອ່າດ້ອຍ ການນະມັສການ ແລະການເຜີຍແຜ່:

W-7.1002

ພຣະເຈົ້າຊົງເອີ້ນຄຣິສຕະຈັກໃນການນະມັສການພຣະອົງ ເພື່ອຮ່ວມກັນທຳງານປະກາດເຜີຍແຜ່ຂອງພຣະເຢຊູຄຣິສ ໃນການຮັບໃຊ້ໂລກຂອງພຣະອົງ. ໃນການປະກອບສ່ວນກັບວຽກງານນີ້, ຄຣິສຕະຈັກ ໄດ້ຖືກເອີ້ນໃຫ້ທຳການ ນະມັສການພຣະເຈົ້າ ໃນພຣະນາມແຫ່ງພຣະເຢຊູຄຣິສ ຜູ້ຊົງເປັນເຈົ້າປົກຄອງຢູ່ເໜືອໂລກມະນຸດເຮົາ.(G-1.0200)

### 2. ການປະກາດ ແລະການເຜີຍແຜ່:

**W-7.2000**

ອ່າດ້ອຍ ຂອບເຂດແຫ່ງການເຜີຍແຜ່:

W-7.2001

ພຣະເຈົ້າໄດ້ໃຫ້ຄຣິສຕະຈັກ ມີຣິດອຳນາດໂດຍພຣະວິນຍານບໍຣິສຸດເພື່ອ:

- ປະກາດຂ່າວປະເສີດ ເພື່ອໃຫ້ໂລກສາມາດຄືນດີກັບພຣະເຈົ້າໂດຍທາງພຣະເຢຊູຄຣິສ
- ບອກພົລປະເທດ ແລະຝູງຄົນທັງຫຼາຍ ໃນການຊົງເອີ້ນຂອງພຣະຄຣິສ ໃນການຖິ້ມໃຈເກົ່າເອົາໃຈໃໝ່, ເຊື່ອ, ແລະຂັບຕາມພຣະອົງ
- ປະກາດພຣະປະວັດ ແລະພຣະຄຳ ກ່ຽວເລື້ອງພຣະເຢຊູຄຣິສ ໄດ້ເສັຽສະຣະພຣະອົງເອງ ເພື່ອໃຫ້ມະນຸດ ໄດ້ຮັບຄວາມລອດພົ້ນ
- ໃນພຣະນາມແຫ່ງພຣະເຢຊູຄຣິສ ຊີວິດຈະມີຄວາມຄົບຖ້ວນບໍຣິບູນ ທັງໃນປັດຈຸບັນ ແລະຕລອດໄປເປັນນິດ
- ເອີ້ນຮຽກຊາວໂລກທົ່ວທຸກບ່ອນ ໃຫ້ເຊື່ອ ແລະຕິດຕາມພຣະເຢຊູຄຣິສ ພ້ອມທັງຮັບເອົາພຣະອົງເປັນ ພຣະຜູ້ຊ່ວຍໃຫ້ລອດ
- ເຊີນຊວນພວກເຂົາເຫຼົ່ານັ້ນ ໃຫ້ເຂົ້າຮ່ວມໃນກຸ່ມຊົນແຫ່ງຄວາມເຊື່ອ ໃນການນະມັສການ ແລະຮັບໃຊ້ ພຣະເຈົ້າຕຣີເອກະນຸພາບ.

### ວ່າດ້ວຍ ເນື້ອໃນຂອງການເຜີຍແຜ່:

W-7.2002

ການນະມັສການ, ເປັນເນື້ອໃນສຳຄັນ ຊຶ່ງມະຫາຊົນໄດ້ຮັບຟັງການປະກາດພຣະຄຳຢ່າງເປັນປະຈຳ, ເປັນສິ່ງສະແດງ ໃຫ້ເຫັນ ພຣະສັນຍາ ຂອງພຣະເຈົ້າ, ເປັນການໃຫ້ໂອກາດແກ່ທຸກຄົນທີ່ຈະຕອບຮັບດ້ວຍຄວາມເຊື່ອ ແລະການກະທຳ



ໃນການອຸທິດຕົນ, ແລະເປັນບ່ອນໃຫ້ການ ເຕົ້າໂຮມກັນ ແລະເປັນບ່ອນສະໜັບສະໜູນຊຸກຍູ້ກຸ່ມຊົນ.(W-2.2000; W-2.5001; W-3.3501; W-3.3503; W-3.5500). ໃນຊີວິດຂອງຄຣິສຕະຈັກ, ການປ່ຽນແປງສະພາບ ໂດຍຣິດອຳນາດ ແຫ່ງພຣະວິນຍານບໍຣິສຸດ ເປັນສິ່ງພິສູດໃຫ້ເຫັນ ເຖິງເປັນອັນນຶ່ງອັນດຽວກັນໃນຄວາມຮັກ ແລະການຮັບໃຊ້, ໃນການຖວາຍຕົວ ແລະຍອມຮັບ, ເປັນສິ່ງດຶງດູດເອົາ ຄົນທີ່ແຕກແຍກກັນນັ້ນ ເຂົ້າສູ່ກຸ່ມຊົນແຫ່ງການແບ່ງປັນ ຄວາມເຊື່ອໃນພຣະຄຣິສ. ໃນການດຳຣົງຊີວິດປະຈຳວັນຂອງຄຣິສຕຽນໃນການທຳງານ ໃນໂລກ, ພວກເຂົາຄວນ ເຊີນຊວນ ຜູ້ຄົນທີ່ພວກເຂົາໄດ້ພົບປະນັ້ນ ໃຫ້ເຂົ້າມາ ແລະມີສ່ວນໃນຊີວິດຂອງໄພ່ພົນຂອງພຣະເຈົ້າ ແລະຮ່ວມ ນະມັສການກັບພວກຕົນ.

## ໓. ວຽກງານແຫ່ງການເຫັນອົກເຫັນໃຈ: (ການຊ່ວຍເຫຼືອ)

**W-7.3000**

### ວ່າດ້ວຍ ການຮັບໃຊ້ພຣະເຈົ້າ ໃນດ້ານການເຫັນອົກເຫັນໃຈ:

W-7.3001

ພຣະເຈົ້າໄດ້ສົ່ງຄຣິສຕະຈັກອອກໄປ ດ້ວຍຣິດເດດແຫ່ງພຣະວິນຍານບໍຣິສຸດເພື່ອທຳງານແຫ່ງຄວາມເມດຕາ ແກ່ໂລກ ເພື່ອ:

- ໃຫ້ອາຫານການກິນແກ່ພວກທີ່ອຶດຫິວ
- ເລົ້າໂລມໃຈຜູ້ເສົ້າໂສກ
- ເບິ່ງແຍງຄົນເຈັບປ່ວຍ
- ຢ້ຽມຢາມນັກໂທດ

- ໃຫ້ອິສະຣະແກ່ພວກຊະເລີຍ
- ໃຫ້ສະຖານທີ່ອາສັຍແກ່ພວກບໍ່ມີບ້ານເຮືອນຢູ່
- ເປັນເພື່ອນກັບພວກທີ່ດຽວດ່ຽວ.

## ວ່າດ້ວຍ ຄວາມເຫັນອົກເຫັນໃຈ ແລະການນະມັສການ:

W-7.3002

ພຣະເຈົ້າຊົງເອີ້ນຮຽກໃຫ້ມີການທຳງານດ້ານຄວາມເຫັນອົກເຫັນໃຈ ໃນເວລາມີການນະມັສການ. ການເອີ້ນນັ້ນ ຈະເປັນການປະກອບ ອຸປກອນ ແລະກຳລັງແກ່ຄຣິສຕະຈັກໃນການທຳງານຊ່ອຍເຫຼືອນີ້ ໂດຍການປະກາດພຣະຄຳ ແລະສເລີມສລອງພິທີສິນ. ການເອີ້ນ ຖືກຕອບຮັບ ເອົາດ້ວຍຄວາມເຊື່ອໝັ້ນ ໂດຍສະແດງອອກໃນການອະທິຖານ ສະຣະພາບ ແລະອະທິຖານເພື່ອກັນແລະກັນ, ການຖວາຍຕົວ, ແລະການຖວາຍ ວັດຖຸມີຄ່າ ເພື່ອປະກອບສ່ວນ ໃນວຽກງານການຊ່ອຍເຫຼືອນັ້ນ. (W-2.1002; W-2.5000; W-3.3505-3.3507) ພວກທີ່ຖືກເອີ້ນນັ້ນ ໄດ້ຖືກ ມອບໝາຍ ແລະສົ່ງອອກໄປໂດຍຄຣິສຕະຈັກ ເພື່ອການທຳງານດ້ານນີ້ ໃນພຣະນາມແຫ່ງພຣະເຢຊູຄຣິສ.
(W-2.6000; W-3.3701; W-4.3000)

## ວ່າດ້ວຍ ວຽກງານການຊ່ອຍເຫຼືອ ແລະການສະໜັບສະໜູນ:

W-7.3003

ກິຈການແຫ່ງການເຫັນອົກເຫັນໃຈ ຫຼືການຊ່ອຍເຫຼືອນັ້ນ, ຈະເປັນການກະທຳໂດຍການຮ່ວມມືກັນ ຫຼືໂດຍທາງສ່ວນຕົວ ກໍຕາມ, ລ້ວນເປັນການກະທຳຂອງຄຣິສຕະຈັກທີ່ເປັນພຣະກາຍຂອງພຣະຄຣິສທັງນັ້ນ. ຄຣິສຕະຈັກ ຖືກເອີ້ນມາຮັບໃຊ້ກັບຄົນ ທີ່ມີຄວາມຕ້ອງການຢ່າງ ກະທັນຫັນ



ແລະຄົນທີ່ເຈັບເປັນທໍຣະມານ. ຄຣິສຕະຈັກ ຍັງຖືກເອີ້ນໃຫ້ມີການຍຸ້ງກ່ຽວກັບໂຄງຮ່າງ ແລະຣະບອບທີ່ສ້າງ ຫຼືເປັນທີ່ມາຂອງການແຕກແຍກ ແລະຫຼອກລວງນັ້ນ. ຄຣິສຕຽນ ຕອບການເອີ້ນເຫຼົ່ານີ້ ດ້ວຍການສະແດງ ຄວາມສະໜັບສະໜູນ ແລະຊ່ອຍເຫຼືອ, ດ້ວຍການການຮ່ວມກັນທຳງານໃນວຽກງານຂອງຄຣິສຕະຈັກ, ດ້ວຍການຮ່ວມໄມ້ຮ່ວມມືກັນກັບສຳນັກງານ ແລະອົງການອື່ນໆ ທີ່ອຸທິດຕົນ ເພື່ອເຮັດໃຫ້ສິ່ງດັ່ງກ່າວນັ້ນສິ້ນສຸດລົງ.(G-3.0300)

## ວ່າດ້ວຍ ວຽກງານການຊ່ອຍເຫຼືອທີ່ເຕັມໄປດ້ວຍຄວາມເຊື່ອ:

W-7.3004

ໂດຍການຕິດຕາມແບບຢ່າງຂອງພຣະເຢຊູຄຣິສ, ສາວົກທີ່ມີຄວາມເຊື່ອ ໄດ້ສະແດງອອກເຖິງການເຫັນອົກ ເຫັນໃຈ:

- ດ້ວຍການເຄົາຣົບນັບຖື ໃນກຽດຕິຍົດຂອງຜູ້ມີຄວາມຈຳເປັນນັ້ນ
- ດ້ວຍການເປີດກວ້າງໃນການຊ່ອຍເຫຼືອ ເຖິງແມ່ນພວກນັ້ນຈະເປັນຄົນຕໍ່າຕ້ອຍປານໃດກໍຕາມ
- ດ້ວຍຄວາມຍິນດີ ທີ່ຈະສ່ຽງຕໍ່ຄວາມສະໜຸກສະບາຍ ແລະຄວາມປອດພັຍຂອງຕົນເອງ
- ດ້ວຍການຕຽມພ້ອມທີ່ຈະຮັບ ເຊັ່ນດຽວກັນກັບຕຽມພ້ອມທີ່ຈະໃຫ້
- ດ້ວຍການອະທິຖານໝັ້ນຄົງໃນການອະທິຖານໃນເວລາທຳງານຮັບໃຊ້ ທັງໝົດຕ້ອງມີການຮ່ວມຟື້ນຟູພະລັງງານ ກັບກຸ່ມຊຸມທີ່ນະມັສການພຣະເຈົ້າເປັນປະຈຳ. (G-3.0400)

## 4. ການຄືນດີ: ຄວາມຍຸຕິທັມ ແລະສັນຕິສຸກ

**W-7.4000**

### ວ່າດ້ວຍ ການຄືນດີກັນກັບພຣະຄຣິສ:

W-7.4001

ພຣະເຈົ້າໄດ້ຊົງມອບໝາຍໃຫ້ຄຣິສຕະຈັກ ດ້ວຍອຳນາດແຫ່ງພຣະວິນຍານບໍຣິສຸດ ເພື່ອແບ່ງປັນກັບພຣະຄຣິສ ໃນການສ້າງ ຄວາມຍຸຕິທັມ ແຫ່ງພຣະອົງ, ຄວາມສັນຕິສຸກ, ແລະຄວາມຮັກ ໃຫ້ຄອບຄອງໂລກ. (G-3.0300) ການຄືນດີກັນກັບພຣະເຈົ້າໂດຍທາງ ພຣະເຢຊູຄຣິສ ເປັນພື້ນຖານແຫ່ງຄວາມຍຸຕິທັມ ແລະສັນຕິສຸກ. ໃນການນະມັສການພຣະເຈົ້າ ຄຣິສຕະຈັກ ໄດ້ປະກາດ, ຍອມຮັບ, ແລະທຳກິຈກຳໃນການຄືນດີກັນກັບພຣະເຈົ້າ ໃນພຣະເຢຊູຄຣິສ ແລະອຸທິດຕົນ ໃນການດີ້ນຣົນເພື່ອຄວາມຍຸຕິທັມ ແລະສັນຕິສຸກ ໃຫ້ເກີດຂຶ້ນໃນຊີວິດຂອງ ຕົນເອງ ແລະໃນໂລກ.

### ວ່າດ້ວຍ ການປະຕິບັດຄວາມຍຸຕິທັມ:

W-7.4002

ຄວາມເປັນທັມ ແມ່ນຣະບຽບທີ່ພຣະເຈົ້າໄດ້ຕັ້ງໄວ້ພາຍໃນມະນຸດທຸກຄົນ ເພື່ອປະເຊີນໜ້າກັບຄວາມຍຸຕິທັມ ແລະຄວາມສັດຊື່ ແລະເພື່ອໃຫ້ສິດທິແກ່ພວກທີ່ບໍ່ມີອຳນາດ ໃນການຮຽກຮ້ອງສິດຂອງຕົນເອງ. ໃນທັສນະຂອງພຣະຄຳພີ ການປະຕິບັດຄວາມ ຍຸຕິທັມຮຽກຮ້ອງໃຫ້ມີດັ່ງນີ້:

- ພົວພັນກັບຄວາມສັດຊື່ໃນສ່ວນບຸກຄົນ ແລະໃນທີ່ທຳງານສາທາຣະນະ
- ປະຕິບັດສິດອຳນາດ ໃນທາງທີ່ກໍ່ໃຫ້ເກີດການດີ
- ສະໜັບສະໜູນພວກຄົນທີ່ຊອກຫາຄວາມເປັນເອກະລັກ, ອິສະຣະພາບ, ແລະການນັບຖື ຊຶ່ງສິ່ງເຫຼົ່ານີ້ ພວກເຂົາໄດ້ຖືກປະຕິເສດມາ



- ທຳງານເພື່ອໃຫ້ມີຄວາມເປັນທັມໃນກົດໝາຍ ແລະມີຄວາມຍຸຕິທັມໃນຄະນະບໍຣິຫານ ເພື່ອການປະຕິບັດກົດໝາຍ
- ຍິນດີຕ້ອນຮັບຄົນແປກໜ້າ ເຂົ້າສູ່ດິນແດນຂອງຕົນ
- ຊອກວິທີເອົາຊະນະ ຄວາມບໍ່ເທົ່າທຽມກັນຣະຫວ່າງຜູ້ທຸກ ແລະຜູ້ຮັ່ງ
- ຢືນຢັດເປັນພະຍານຕໍ່ສູ້ກັບການເນືອງທີ່ກົດຂີ່ຂູດຮີດ
- ປັບປຸງແກ້ໄຂຄວາມຜິດພາດຂອງບຸກຄົນ, ຂອງກຸ່ມ, ແລະຂອງຄົນໃນຄຣິສຕະຈັກ, ໃນປະເທດ, ແລະໃນໂລກທັງມວນ

### ວ່າດ້ວຍ ການສ້າງສັນຕິ:

W-7.4003

ຈະບໍ່ມີຄວາມສັນຕິ ຫາກປາສຈາກຄວາມຍຸຕິທັມ. ບ່ອນໃດກໍຕາມທີ່ມີການແຕກແຍກກັນ, ມີການໃຊ້ຄວາມ ຮຸນແຮງ, ແລະມີຄວາມບໍ່ຍຸຕິທັມຕໍ່ຝູງຊົນ ພຣະເຈົ້າໄດ້ຊົງເອີ້ນໃຫ້ມີການສ້າງສັນຕິເກີດຂຶ້ນໃນບ່ອນເຫຼົ່ານີ້:

- ໃນຄຣິສຕະຈັກສາກົນທີ່ມີການແຕກແຫງ ແລະແບ່ງແຍກກັນດ້ວຍເຫດຜົນທາງດ້ານປະວັດສາດ ແລະວັທນະທັມ, ໃນກຸ່ມນິກາຍຊຶ່ງພາຍໃນເຮັດໃຫ້ເກີດສະພາວະຂັດແຍ້ງກັນໂດຍການບໍ່ໄວ້ໃຈກັນ, ແລະໃນຄຣິສຕະຈັກທີ່ມີພະຍາດແຫ່ງ ການໂຕ້ຖຽງ ແລະຂັດແຍ່ງກັນ;
- ໃນໂລກ ໃນບ່ອນທີ່ປະເທດທັງຫຼາຍພາກັນເອົາຄວາມປອດພັຍຂອງຊາດເປັນສິ່ງເໜືອກວ່າສິ່ງອື່ນໃດ, ບ່ອນທີ່ມີຄວາມບ້າຄັ່ງໃນສາສນາ, ບ່ອນມີການແຂ່ງຂັນ ຫຼືແນວຄິດທີ່ກໍ່ໃຫ້ເກີດການໃຊ້ກຳລັງ, ແລະບ່ອນທີ່ມີປາຖນາ

ອັນແຮງກ້າໃນການຢາກໄດ້ ແລະຢາກມີເສດຖກິດ ຫຼືມີອຳນາດທາງດ້ານເມືອງ ຊ
ຶ່ງກໍ່ໃຫ້ເກີດການຈະຣາຈົນ ຫຼືເກີດສົງຄາມ;
- ໃນກຸ່ມຊົນທີ່ແຕກແຍກກັນຍ້ອນການອາຊຍາກັມ ແລະຄວາມຢ້ານກົວ,
ໃນໂຮງຮຽນ ແລະບ່ອນທຳງານ
ຊຶ່ງມີການແຂ່ງຂັນກັນແບບ ເປັນພິດເປັນພັຍ
ແລະມີການແຂງຂໍ່ຕໍ່ຄວາມເປັນຣະບຽບຮຽບຮ້ອຍ, ແລະໃນເຮືອນຊານ
ແລະໃນຄອບຄົວທີ່ແຕກແຍກກັນເອງ, ໃນບ່ອນທີ່ມີແຕ່ການໃຊ
້ກຳລັງຮຸນແຮງແລະບໍ່ສາມາດເຄື່ອນໄຫວໄປມາໄດ້ ເພາະຄວາມຢ້ານ.

## ວ່າດ້ວຍ ຄວາມຖືກຕ້ອງປອງດອງກັນ ແລະການນະມັສການ:

W-7.4004

ວຽກງານແຫ່ງຄວາມຖືກຕ້ອງປອງດອງກັນ, ຄວາມຍຸຕິທັມ, ແລະສັນຕິສຸກ
ຈະຕ້ອງຣິເລີ່ມ ແລະຂະຫຍາຍຂື້ນ ພາຍໃນ ຄຣິສຕະຈັກທີ່ນະມັສການພຣະເຈົ້າ.
ໃນການປະກາດພຣະຄຳຂອງພຣະເຈົ້າ ຝູງຄົນໄດ້ຮັບຄວາມເຊື່ອໝັ້ນ ໃນການ
ຮັບອິສະຣະພາບຈາກຄວາມຜິດ ແລະຄວາມຢ້ານກົວທີ່
ຂັດຂວາງພວກເຂົ້າໃຫ້ເຂົ້າຮ່ວມໃນວຽກງານນີ້. ໃນການບັບຕິສມາ
ແລະພິທີສິນມະຫາສະໜິດ ພວກຄົນທີ່ເຊື່ອ ໄດ້ເຕົ້າໂຮມກັນໃນພຣະຄຣິສ.
ພວກເຂົາໄດ້ເຮັດ ໃຫ້ເປັນອັນນຶ່ງອັນດຽວກັນ
ໃນຄຣິສຕະຈັກໂດຍພຣະວິນຍານບໍຣິສຸດ, ແລະຍອມຮັບຮູ້ຊຶ່ງກັນແລະກັນ ໂດຍການ
ມອງຂ້າມ ເສັ້ນທີ່ຂີດຂັ້ນ ແລະແຍ່ງແຍກເຂົາ
ໃນຖານະເປັນເອື້ອຍອ້າຍນ້ອງໃນຄວາມເຊື່ອ. ໃນການອະທິຖານ
ການອະທິຖານເພື່ອກັນແລະກັນສຳຮັບຜູ້ທີ່ ໄດ້ຮັບຄວາມ ແຕກນ້າງ,



ໄດ້ຮັບຄວາມຮຸນແຮງ, ແລະຄວາມບໍ່ຍຸຕິທັມ;
ພວກເຂົາໄດ້ມີການອະທິຖານຂອບພຣະຄຸນພຣະເຈົ້າສຳຣັບການ ຄືນດີກັນ, ສັນຕິສຸກ,
ແລະຄວາມຍຸຕິທັມໃນ ພຣະຄຣິສ; ແລະພວກເຂົາໄດ້ອຸທິດຕົນເອງ
ໃນເປັນຜູ້ທີ່ຖືກຕ້ອງປອງດອງກັນ ຊອກຫາຄວາມຍຸຕິທັມ ແລະຕິດຕາມ
ສັນຕິສຸກ. (W-2.1000; W-2.6000; W-3.3506; W3.3700)

## 5. ການເບິ່ງແຍງດູແລສິ່ງທີ່ຊົງສ້າງ ແລະຊີວິດ:

**W-7.5000**

## ວ່າດ້ວຍ ການມອບອຳນາດຂອງພຣະເຈົ້າ:

W-7.5001

ໃນອຳນາດແຫ່ງພຣະວິນຍານບໍຣິສຸດ ພຣະເຈົ້າໄດ້ຊົງໃຊ
້ຄຣິສຕະຈັກໃຫ້ປະກອບສ່ວນໃນວຽກງານຂອງພຣະອົງ ໃນການສ້າງ ແລະຮັກສາ.
ພຣະເຈົ້າໄດ້ຊົງໃຫ້ອຳນາດຢ່າງໜ້າເກງຂາມ ແລະທີ່ເປັນອັນຕະຣາຍແກ່ມະນຸດ
ໃນຄວາມ ຮັບຜິດຊອບ ການປົກຄອງ ແລະຄຸ້ມຄອງໂລກ, ເພື່ອສະໜັບສະໜູນ
ແລະປະຕິຮູບມັນ, ເພື່ອເສີມສ້າງແລະປັບປຸງໃໝ່

## ວ່າດ້ວຍ ການນະມັສການ ແລະການນຳໃຊ້ສິ່ງຊົງສ້າງ:

W-7.5002

ໃນການນະມັສການ, ຄຣິສຕຽນໄດ້ມີຄວາມນ່ອນຊື່ນ ແລະຂອບພຣະຄຸນພຣະເຈົ້າ
ຜູ້ທີ່ໄດ້ໃຫ້ ແລະສະໜັບສະໜູນ ການສ້າງຈັກກະວານ, ໂລກ, ຊີວິດທຸກຊີວິດ,
ແລະຂອງດີມີຄ່າຕ່າງໆ. ພວກເຂົາຮັບຮູ້ຄຳສັ່ງທີ່ພຣະເຈົ້າຊົງໃຫ້ເຂົາ

ເປັນຜູ້ຮັກສາສິ່ງເຫຼົ່ານີ້. ພວກເຂົາສາຣະພາບ ຄວາມຜິດພາດຂອງເຂົາ
ໃນການປົກປັກຮັກສາສິ່ງທີ່ພຣະອົງຊົງສ້າງມາ
ແລະຊີວິດທີ່ຢູ່ໃນນັ້ນ. ພວກເຂົາຊົມຊື່ນຍິນດີຄືນໃໝ່ ໃນພຣະສັນຍາ ແຫ່ງການຊ
່ວຍກູ້ ແລະການສ້າງຄືນໃໝ່ໃນ ພຣະເຢຊູຄຣິສ, ພວກເຂົາໄດ້ປະກາດພຣະຄຳ
ແລະຕິດສະໜິດກັບພຣະອົງດ້ວຍພິທີສິນ. ພວກເຂົາ ໄດ້ອຸທິດຕົນເອງ ເປັນຜູ້ມີຊ
ີວິດຢູ່ຢ່າງຜູ້ດູແລຮັກສາຂອງພຣະເຈົ້າ ຈົນກວ່າວັນທີ່ ພຣະເຈົ້າຈະເຮັດໃຫ້ທຸກຢ່າງ
ກາຍເປັນສິ່ງໃໝ່ໆທັງນັ້ນ.

## ວ່າດ້ວຍ ການຮັບຜິດຊອບໃນສິ່ງຊົງສ້າງ:

W-7.5003

ໃນຖານະທີ່ເປັນຜູ້ຮັກສາດູແລສິ່ງທີ່ພຣະເຈົ້າຊົງສ້າງມາ,
ຜູ້ທີ່ຢຶດຖືໂລກນີ້ໃນກຳມືດ້ວຍຄວາມເຊື່ອໝັ້ນ, ພຣະເຈົ້າ
ຊົງເອີ້ນ ໃຫ້ມີໜ້າທີ່ດັ່ງນີ້:

- ໝູນໃຊ້ແຫຼ່ງວັດຖຸໃນໂລກຢ່າງມີຄວາມຮັບຜິດຊອບ ໂດຍບໍ່ມີການຍ່ຳຍີ,
ທຳໃຫ້ເກີດພິດເສັຽຫາຍ,
ຫຼືທຳລາຍ,
- ພັທນາ ຣະບັບເຕັກໂນໂລຢີ ແລະແປຮູບມາໃຊ້ໃນການຮັກສາສະພາບແວດລ້ອມ
ແລະເພີ່ມຄຸນຄ່າແຫ່ງ
ຊີວິດ,
- ຜລິດ ແລະທຳລາຍ (ບໍຣິໂພກ) ໃນທາງທີ່
ເຮັດໃຫ້ມະນຸດມີສິ່ງພຽງພໍໃນການດຳຣົງຊີວິດຢູ່ໄດ້,



- ທຳງານດ້ວຍທັສນະຄະຕິທີ່ມີຄວາມຮັບຜິດຊ
ອບແລະກະທຳອອກໃນການໃຫ້ມີການກຳເນີດແຜ່ພັນ
ແລະຂະຫຍາຍອອກໄປເລື້ອຍໆ,
- ໃຊ້ ແລະດັດແປງສິ່ງດີໆຂອງໂລກ ເພື່ອສ້າງຄວາມສວຍງາມ,
ຄວາມເປັນຣະບຽບ, ສຸຂພາບພະລານະມັຍ,
ແລະສັນຕິສຸກໃນທາງທີ່ສະແດງເຖິງຄວາມຮັກຂອງພຣະເຈົ້າຕໍ່ທຸກສິ່ງທີ່ພຣະອົງຊ
ົງສ້າງມານັ້ນ.

ໃນການຮູ້ບຸນຄຸນຕໍ່ຂອງປະທານທີ່ພຣະອົງຊົງສ້າງມານັ້ນ,
ການນຳວັດຖຸມີຄ່າຖວາຍແດ່ພຣະເຈົ້າໃນເວລາ ນະມັສການ, ເປັນການສະແດງເຖິງ
ການສັຣເສີນ, ເປັນສັນຍາລັກແຫ່ງການຖວາຍຕົວເອງຂອງເຂົາ, ເປັນສັນຍາລັກ
ແຫ່ງການອຸທິດຕົນເອງ ໃນການມີສ່ວນໃນຂອງດີແຫ່ງໂລກ.

# 6. ຄຣິສຕະຈັກ ແລະການປົກຄອງຂອງພຣະເຈົ້າ:

**W-7.6000**

## ວ່າດ້ວຍ ຄຣິສຕະຈັກ ແລະຣາຊອານາຈັກຂອງພຣະເຈົ້າ:

W-7.6001

ໃນການນະມັສການ ແລະການຮັບໃຊ້ພຣະເຈົ້າຂອງຄຣິສຕະຈັກນັ້ນ
ໄດ້ເປັນສັນຍາລັກແຫ່ງການປົກຄອງຂອງ ພຣະເຈົ້າ, ຊຶ່ງທັງສອງ
ໄດ້ສະແດງອອກເຖິງຄວາມເປັນຈິງແລະພຣະສັນຍາ ໃນອານາຄົດຂອງພຣະເຈົ້າ.
ການນະມັສການ ແລະການຮັບໃຊ້ ຂອງຄຣິສຕະຈັກ ບໍ່ສາມາດ ເຮັດໃຫ້ຣາຊ
ອານາຈັກຂອງພຣະເຈົ້າສະເດັດລົງມາໄດ້. ໃນໂລກທີ່ເປັນປໍຣະປັກ ກັບພຣະເຈົ້ານີ້,
ການນະມັສການ ແລະການຮັບໃຊ້ພຣະເຈົ້າ, ໄດ້ເປັນສິ່ງ ທີ່ໃຫ້ຄວາມ ໝັ້ນໃຈວ່າ

ກິດປົກຄອງຂອງພຣະເຈົ້າ ໄດ້ຖືກສ້າງຂຶ້ນແລ້ວ ແລະດ້ວຍຄວາມຫວັງໃຈ ແລະຍິນດີ ໃນໄຊະນະ ຂອງພຣະອົງ.

## ວ່າດ້ວຍ ຄວາມໝັ້ນໃຈ ແລະຄວາມຫວັງ:

W-7.6002

ໃນໂລກປັດຈຸບັນ ການຮັບໃຊ້ພຣະເຈົ້າຂອງຄຣິສຕະຈັກ ໃນການເຜີຍແຜ່ຂ່າວປະເສີດ ແລະໃນການດູແລສິ່ງທີ່ຊົງສ້າງ, ໃນການຊ່ວຍເຫຼືອ ແລະສ້າງຄວາມຖືກຕ້ອງປອງດອງກັນ ໄດ້ກາຍເປັນສັນຍາລັກແຫ່ງການປົກຄອງຂອງພຣະເຈົ້າ ແລະໃຫ້ຄວາມຫວັງແກ່ຊີວິດທີ່ຢູ່ທ່າມກາງ ການປະຕິເສດນັ້ນ. ຄວາມຫວັງນັ້ນ ບໍ່ໄດ້ຂຶ້ນກັບການ ປະສົບຜົນສຳເຣັດ ໃນການຮັບໃຊ້ພຣະເຈົ້າ ຫຼືເພາະການນະມັສການທີ່ແຂງແຮງ ແຕ່ມັນໄດ້ຖືການສະໜັບສະໜູນ ຈາກອຳນາດແຫ່ງ ພຣະເຈົ້າທີ່ປາກົດຕໍ່ຄຣິສຕະຈັກ ໃນການນະມັສການ ແລະຮັບໃຊ້ພຣະອົງ.

## 7. ການນະມັສການ ດ້ວຍການສັຣເສີນ:

**W-7.7000**

## ວ່າດ້ວຍ ການໃຫ້ເຫດຜົນໃນການສັຣເສີນ:

W-7.7001

ໃນການນະມັສການ ຄຣິສຕະຈັກໄດ້ຖືກປ່ຽນແປງ ແລະຟື້ນຄືນໃໝ່, ຖືກປະກອບອຸປກອນແລະຖືກສົ່ງອອກໄປ ເພື່ອຮັບໃຊ້ ການປົກຄອງຂອງພຣະເຈົ້າຕໍ່ໂລກ. ຄຣິສຕະຈັກ ໄດ້ເຝົ້າຄອງຄອຍວັນທີ່:

ເພື່ອພຣະນາມນັ້ນ ທຸກເຂົ່າທຸກທົວເຂົ່າ ໃນສວັນ, ເທິງແຜ່ນດິນໂລກ, ແລະໃຕ້ພື້ນດິນກໍດີ ຈະຊຸລົງຂາບ ພຣະເຢຊູ



ເພື່ອລີ້ນທຸກລີ້ນຈະຍອມຮັບວ່າ "ພຣະເຢຊູຄຣິສຊົງເປັນອົງພຣະຜູ້ເປັນເຈົ້າ" ອັນເປັນການຖວາຍກຽດແກ່ ພຣະບິດາເຈົ້າ. (ຟີລິປອຍ 2:9-11)

ອັນນຶ່ງ ຈົ່ງມີພຣະກຽດ, ພຣະເດຊານຸພາບ, ພຣະອານຸພາບ, ແລະສັກດານຸພາບ ແດ່ພຣະອົງ ຜູ້ຊົງສາມາດປ້ອງກັນຮັກສາທ່ານທັງຫຼາຍບໍ່ໃຫ້ສະດຸດລົ້ມລົງ ແລະຊົງສາມາດຕັ້ງທ່ານທັງຫຼາຍໃຫ້ໝັ້ນຢູ່ຕໍ່ພຣະພັກອັນຮຸ່ງເຮືອງຂອງພຣະອົງ. (ຢູດາ 24) ອາແມນ,

ຄວາມສັຣເສີນ, ສງ່າຣາສີ, ສະຕິປັນຍາ, ຄຳໂມທະນາ, ພຣະກຽດຕິຍົດ, ອຳນາດ, ແລະຣິດເດດ

ຈົ່ງມີແດ່ພຣະເຈົ້າຂອງພວກຂ້າພະອົງທັງຫຼາຍຕລອດໄປເປັນນິດ ອາແມນ. (ພຣະນິມິດ 7:12)

# ຈົບບໍຣິບູນ